300

ພື້ນຖານ ຄວາມຮູ້ ທາງດ້ານສັງຄົມ-ການເມືອງ

# ລັດທິກອມມູນິດວິທະຍາສາດ ແມ່ນຫຍັງ?

ລ. ເຊເລຊະຍິບ,
ວ. ເຟຕີຊິບ



ພື້ນຖານຄວາມຮູ້ທາງດ້ານສັງຄົມ-ການເມືອງ

ລ. ເຊເລຊະຍົບ, ອ. ເຟຕີຊົບ

# ລັດທິກອມມູນິດວິທະຍາສາດແມ່ນຫຍັງ?

ສຳນັກພິມ "ກ້າວໜ້າ"
ມົດສະກູ

АВС социально-политических знаний.

Селезнев Л., Фетисов В.
Что такое научный коммунизм?
*на лаосском языке*

Редколлегия серии: Волков Ф. М. (ответственный редактор), Губский Е. Ф. (зам. ответсвенного редактора), Бурлацкий Ф. М., Зотов В. Д., Крапивин В. В., Попов Ю. Н., Соболев В. В., Юрлов Ф. Н.

© ສຳນັກພິມ "ກ້າວຫມ້າ", 1988

ພິມໃນສະຫະພາບໂຊວຽດ

С $\frac{0302030000-445}{014(01)-88}$ без объявл.

ISBN 5–01–000967–6

## ຄຳນຳ

ການທີ່ຈະຄົ້ນຄວ້າກ່ຽວກັບວິທະຍາສາດໃດໜຶ່ງນັ້ນ, ກ່ອນອື່ນໝົດຕ້ອງກຳນົດໃຫ້ໄດ້ເປົ້າໝາຍຂອງມັນ ວ່າມັນນຳຫຍັງມາໃຫ້ຄົນເຮົາແດ່, ໝາຍຄວາມວ່າ ໜ້າທີ່ທາງດ້ານສັງຄົມຂອງມັນມີແນວໃດ .

ຊີວິດຂອງມວນມະນຸດສະໄໝນີ້ ມີຄວາມສັບສົນເປັນພິເສດ. ບໍ່ວ່າດ້ານເສດຖະກິດ, ການເມືອງ, ວິທະຍາສາດ, ສິລະປະກຳ, ລັດ, ບຸກຄົນນັ້ນແມ່ນລ້ວນແລ້ວແຕ່ເປັນລັກສະນະສະເພາະທາງສັງຄົມທີ່ມີຫລາຍຮູບຫຼາຍສີຂອງສັງຄົມໂດຍທົ່ວໄປ. ຈາກນີ້ ຈຶ່ງພາໃຫ້ເກີດມີວິທະຍາສາດສັງຄົມຈຳນວນຫລວງຫລາຍ, ເຊິ່ງຈຳນວນໜຶ່ງ ຄົ້ນຄວ້າເຖິງ "ພາກສ່ວນ" ໃດໜຶ່ງຕ່າງຫາກຂອງອົງປະກອບທາງສັງຄົມ, ຈຳນວນໜຶ່ງອີກພັດ ຄົ້ນຄວ້າມັນແບບກວມລວມ.

ຢູ່ໃນປຶ້ມທີ່ສະເໜີຕໍ່ຜູ້ອ່ານນີ້ ແມ່ນຈະໄດ້ຄົ້ນຄວ້າເຖິງບັນຫາຕ່າງໆ ທີ່ຖືກທ້ອນໂຮມເຂົ້າເປັນຂະແໜງວິທະຍາສາດຂະແໜງໜຶ່ງນັ້ນກໍຄື ລັດທິກອມມູນິດວິທະຍາສາດ.

ຍັງມີສຸພາສິດບູຮານ ທີ່ໄດ້ເວົ້າໄວ້ຢ່າງສະຫລາດສະຫລຽວວ່າ "ມີແຕ່ທິດສະດີທີ່ດີເທົ່ານັ້ນ ຈຶ່ງມີຄຸນປະໂຫຍດ". ຄຳເວົ້າເຫລົ່ານີ້ ກໍແມ່ນເໝາະສົມກັບລັດທິກອມມູນິດວິທະຍາສາດທີ່ສຸດ. ໂດຍເປັນພາກສ່ວນປະກອບໜຶ່ງຂອງທິດສະດີມາກ-ເລນິນນັ້ນ ລັດທິກອມມູນິດວິທະຍາສາດກໍເປັນອາວຸດອັນມີອານຸພາບໃນການຮັບຮູ້ ແລະ ການດັດສ້າງສັງຄົມເພື່ອຜົນປະໂຫຍດຂອງຊາວຜູ້ອອກແຮງງານທັງຫລາຍ. ແຕ່ຫາກວ່າກໍຄືກັນກັບວິທະຍາສາດອັນສັບສົນອື່ນໆ, ເພື່ອຈະຊາບຊຶ້ງລັດທິກອມມູນິດວິທະຍາສາດໄດ້ນັ້ນມັນຮຽກຮ້ອງ

ເຖິງຄວາມບຸກບືນ, ຄວາມດຸໝັ່ນ ແລະ ຄວາມມານະອົດທົນອັນແນ່ນອນ.
ການທຸ້ມເທເຫື່ອແຮງເພື່ອກຳແໜ້ນວິທະຍາສາດດັ່ງກ່າວນັ້ນຈະເຮັດໃຫ້ຄົນ ເຮົາ ມີຄວາມປິຕິຍິນດີ ທີ່ໄດ້ຮັບຮູ້, ໄດ້ຄົ້ນພົບ, ໄດ້ເຫັນແຈ້ງບັນຫາ ອັນສັບສົນ ຂອງໂລກປະຈຸບັນ, ກໍຄື ທີ່ສາມາດສ້າງທັດສະນະຂອງຕົນເອງ ຕໍ່ການຂະຫຍາຍຕົວຂອງສັງຄົມ ແລະ ສາມາດມີການເຂົ້າຮ່ວມ ຢ່າງມີສະ-ຕິໃນການຕໍ່ສູ້ຂອງບັນດາກຳລັງທີ່ກ້າວໜ້າ ຕ້ານການກົດຂີ່ ແລະ ຄວາມບໍ່ຍຸດຕິທຳທາງສັງຄົມ.

ຜູ້ຂຽນພະຍາຍາມທີ່ສຸດ ເພື່ອວ່າເຮັດແນວໃດ ຈຶ່ງຈະອະທິບາຍ ກ່ຽວກັບຈຸດພິເສດຂອງວິທະຍາສາດນີ້ ແລະ ສະເໜີເນື້ອໃນພື້ນຖານ ຂອງມັນໃຫ້ເຂົ້າໃຈໄດ້ງ່າຍດາຍກວ່າ.

ບັດນີ້ ພວກເຮົາມາເລີ່ມຕົ້ນການຄົ້ນຄວ້ານຳກັນເບິ່ງ. ໃນເບື້ອງຕົ້ນ ພວກເຮົາຈະພາກັນທວນຄືນເບິ່ງອະດີດໜ້ອຍໜຶ່ງເສຍກ່ອນ ແລະເບິ່ງວ່າ ລັດທິກອມມູນິດວິທະຍາສາດ ໄດ້ກຳເນີດ ແລະ ເຕີບຕົວຂຶ້ນມາແນວໃດ . ຫຼັງຈາກນັ້ນ ກໍ່ຈະພະຍາຍາມຄົ້ນຄວ້າເບິ່ງບັນດາທ່ວງທ່າອັນເປັນພື້ນຖານ ຂອງຍຸກສະໄໝພວກເຮົານີ້ ແລະ ພາລະບົດບາດຂອງລັດທິກອມມູນິດວິທະຍາສາດ. ພາກສຸດທ້າຍຈະຊ່ວຍໃຫ້ພວກເຮົາຮູ້ຈັກກັບທິດສະດີ ຂອງລັດທິກອມມູນິດວິທະຍາສາດ ກ່ຽວກັບອະນາຄົດຂອງສັງຄົມມວນມະນຸດ.

## ບົດທີ ໑. ລັດທິສັງຄົມນິຍົມແບບໄຝ່ຝັນລອຍເມກ ແມ່ນການຊອກຄົ້ນຫາຄວາມຍຸດຕິທຳ

ຄົນເຮົາ ໄດ້ຮູ້ເຖິງແນວຄິດຂອງລັດທິສັງຄົມນິຍົມມາແຕ່ດົນນານ. ແນວຄິດດັ່ງກ່າວນີ້ເກີດຈາກຄວາມຝັນຢາກມີສັງຄົມທີ່ຍຸດຕິທຳ ແຕ່ຊ້ຳພັດ ເປັນການໄຝ່ຝັນແບບລອຍເມກ, ເຖິງຢ່າງໃດກໍດີ ແນວຄິດດັ່ງກ່າວນີ້ ກໍດຳລົງຄົງຕົວຢູ່ໄດ້ດົນສົມຄວນ. ຢູ່ໃນຫລາຍປະເທດມັນໄດ້ກາຍເປັນແນວຄິດທີ່ໄດ້ຮັບຄວາມນິຍົມຊົມຊອບ ແລະ ເຄົາລົບນັບຖືຂອງຜູ້ຄົນ. ໃນກາງສະຕະວັດທີ ໑໙ ແນວຄິດສັງຄົມນິຍົມໄດ້ເລີ່ມມີພື້ນຖານວິທະຍາສາດ ແລະ ແຜ່ຂະຫຍາຍໄປທົ່ວທຸກແຫ່ງຫົນຂອງໂລກ, ສຳຄັນກວ່າໝູ່ກໍ່ແມ່ນວ່າແນວຄິດ ສັງຄົມນິຍົມ ໄດ້ປະກົດອອກຢູ່ໃນພຶດຕິກຳຂອງການຕໍ່ສູ້ທາງສັງຄົມຂອງຊາວຜູ້ອອກແຮງງານຫລາຍລ້ານຄົນ. ເພື່ອໃຫ້ເຂົ້າໃຈທິດສະດີ ເຊິ່ງມີຊື່ວ່າກອມມູນິດວິທະຍາສາດນີ້ ຕ້ອງຄົ້ນຄວ້າປະຫວັດການແຫ່ງການກຳເນີດ ແລະ ກໍ່ຕັ້ງຂອງມັນ.

ແຕ່ລະວິທະຍາສາດໃຫມ່ນັ້ນ ບໍ່ແມ່ນປະກົດຕົວຂຶ້ນຈາກບ່ອນເປົ່າຫວ່າງ, ແຕ່ມັນໄດ້ອີງໃສ່ທິດສະດີທີ່ມີຢູ່ກ່ອນແລ້ວນັ້ນ. ວິທະຍາສາດໃດໜຶ່ງ ຍິ່ງມີຄວາມສຳຄັນຫລາຍເທົ່າໃດ ມັນຍິ່ງຈະຕ້ອງຊາບຊຶມ, ຖອດຖອນແລະເສີມຂະຫຍາຍທິດສະດີ ທີ່ສ້າງຂຶ້ນໂດຍບັນດານັກຄົ້ນຄິດຜູ້ກ່ອນ ເລິກເຊິ່ງ ເທົ່ານັ້ນ. ເຊັ່ນວ່າ ລັດທິກອມມູນິດວິທະຍາສາດກໍ່ແມ່ນສືບທອດມາຈາກ ແນວຄິດຂອງລັດທິສັງຄົມນິຍົມແບບໄຝ່ຝັນລອຍເມກ ນັ້ນເອງ. ການທຳຄວາມຮູ້ຈັກກັບມັນນັ້ນ ຈະຊ່ວຍໃຫ້ພວກເຮົາເຂົ້າໃຈທິດສະດີວິທະຍາສາດໄດ້ດີຂຶ້ນແລະທັງເປັນການຢັ້ງຢືນວ່າຕັ້ງແຕ່ດົນນານມາແລ້ວທີ່ຊາວຜູ້ອອກແຮງງານ, ບັນດາຜູ້ຄົນທີ່ກ້າວໜ້າຢູ່ໃນປະເທດຕ່າງໆມຸ່ງໝາຍຢາກສ້າງຕັ້ງສັງຄົມ ແບບ

ຍຸດຕິທຳ ທີ່ຕັ້ງຢູ່ບົນພື້ນຖານແຫ່ງຫລັກການສະເໝີພາບທາງສັງຄົມ, ເຊິ່ງໃນນັ້ນການອອກແຮງງານແມ່ນໜ້າທີ່ຂອງໝົດທຸກຄົນ, ມີຄວາມເຄົາລົບ ແລະ ເປັນຫ່ວງເປັນໃຍນຳແຕ່ລະຄົນ. ຄວາມໄຝ່ຝັນເຫລົ່ານີ້ ໄດ້ປະກົດອອກຢູ່ໃນລັດທິສັງຄົມນິຍົມແບບໄຝ່ຝັນລອຍເມກ ເຊິ່ງມີປະຫວັດ ທີ່ໜ້າສົນໃຈອັນເຕັມໄປດ້ວຍຄວາມເສົ້າໃຈ.

## ນັກສັງຄົມນິຍົມຜູ້ທຳອິດ ໄຝ່ຝັນເຖິງຫຍັງ ?

ຜູ້ໃຫ້ກຳເນີດລັດທິສັງຄົມນິຍົມແບບໄຝ່ຝັນລອຍເມກຜູ້ທຳອິດແມ່ນໂທມັດມໍ ( ໑໔໗໘-໑໕໓໕ ), ເປັນຄົນອັງກິດ, ເພິ່ນໄດ້ຂຽນປຶ້ມຫົວໜຶ່ງເຊິ່ງມີຊື່ສຽງວ່າ: "ອູໂຕເປຍ". ຈາກຊື່ຂອງປຶ້ມຫົວນີ້ ກໍເລີຍໄດ້ຕັ້ງຊື່ໃຫ້ ປະເພດແນວຄິດ ແລະ ຫລັກທິດສະດີທາງດ້ານສັງຄົມ-ການເມືອງຂອງສະຕະວັດທີ ໑໖-໑໗ ອັນນີ້ວ່າ ລັດທິສັງຄົມນິຍົມແບບໄຝ່ຝັນລອຍເມກ.

ຕາມວິທີຂຽນ "ອູໂຕເປຍ" ນັ້ນ ມັນເປັນການເລົ່າເລື່ອງ ຂອງນັກເດີນທະເລຜູ້ໜຶ່ງ ຊຶ່ງໄດ້ໄປພົບເຫັນເກາະແຫ່ງຄວາມສຸກບ່ອນໜຶ່ງ ທີ່ຕັ້ງຢູ່ໄກແສນໄກ. ຢູ່ໃນພາກທຳອິດຂອງປຶ້ມດັ່ງກ່າວ ແມ່ນການຕຳນິວິຈານຢ່າງຮຸນແຮງກ່ຽວກັບລະບຽບການປົກຄອງຢູ່ໃນອັງກິດໃນເວລານັ້ນຄື:ຢູ່ໃນສັງຄົມມີການກົດຂີ່ຂູດຮີດຜູ້ທຸກຈົນໂດຍພວກຮັ່ງມີ ຢ່າງບໍ່ອີດູກູນາ, ມີຄວາມໂລກມາກໂລພາແລະຄວາມອະນາຈານຂອງພວກຄົນຮັ່ງມີ.ຫລັງຈາກນັ້ນ ຜູ້ແຕ່ງໄດ້ພັນລະນາເຖິງຊີວິດອັນຢູ່ໃນເກາະອັນໄກແສນໄກຊຶ່ງເຕັມໄປ ດ້ວຍຄວາມສຸກສະບາຍ.ຢູ່ໃນຫັ້ນມີບັນດາຕົວເມືອງໃຫຍ່ແລະສວຍງາມ ທີ່ສ້າງຂຶ້ນຕາມແຜນຜັງອັນດຽວ,ຢູ່ໃນຫັ້ນຜູ້ຄົນທີ່ມີອິດສະຫລະພາບ ແລະ ມີສິດສະເໝີພາບກັນນັ້ນ ແມ່ນມີລະບຽບການແລະຮີດຄອງອັນດຽວກັນອີກ.ນອກຈາກຕົວເມືອງແລ້ວ ກໍຍັງມີເຂດຊົນນະບົດ, ພົນລະເມືອງທັງມວນອາໃສຢູ່ ໃນຕົວເມືອງ ແລະ ຊົນນະບົດສະຫລັບກັນໄປ ແລະ ທຳການອອກແຮງງານ ປະ

ເພດຕ່າງໆແບບໝູນວຽນ. ມີແຕ່ນັກປາດເທົ່ານັ້ນ ທີ່ບໍ່ຕ້ອງອອກແຮງງານ ດ້ວຍກຳລັງກາຍ.

ຢູ່ໃນເກາະແຫ່ງນັ້ນ ບໍ່ມີຜູ້ເກາະຫ້ອຍກິນແຮງງານຜູ້ອື່ນ, ໝົດທຸກຄົນ ເຮັດວຽກມື້ໜຶ່ງຫົກຊົ່ວໂມງ. ດ້ວຍເຫດນັ້ນ ແຕ່ລະຄົນຈຶ່ງມີເວລາຄົ້ນຄວ້າ ວິທະຍາສາດ ແລະ ປະດິດສ້າງສິລະປະກຳ. ຢູ່ໃນລັດດັ່ງກ່າວ ບໍ່ໃຊ້ເງິນ ແລະ ກໍບໍ່ຖືຄຳເປັນສິ່ງມີຄຸນຄ່າ. ວັດຖຸທັງໝົດທີ່ຜະລິດອອກແມ່ນຖືກຮັກສາໄວ້ຢູ່ໃນສາງສ່ວນລວມ, ແຕ່ລະຄົນ ຈະນຳເອົາວັດຖຸສິ່ງຂອງ ອອກຈາກສາງ ກໍພຽງແຕ່ໃນຈຳນວນທີ່ພໍດີກັບຄວາມຈຳເປັນຂອງຕົນ. ຢູ່ໃນຫັ້ນ ບໍ່ມີພົນລະເມືອງຜູ້ໃດທີ່ຈະມີແນວຄິດຢາກນຳເອົາຜົນຜະລິດໃດໜຶ່ງ ມາແຮໄວ້ເປັນຂອງສ່ວນຕົວ. ໃນປະເທດນັ້ນ ການແຈກຢາຍຜົນຜະລິດແມ່ນເປັນໄປຕາມຄວາມຮຽກຮ້ອງຕ້ອງການຢ່າງບໍ່ເສຍຄ່າ. ເປັນຫຍັງຈຶ່ງສາມາດເປັນໄປໄດ້ແນວນັ້ນ ? ຕໍ່ບັນຫານີ້ ທ່ານ ມໍ ໄດ້ອະທິບາຍວ່າ: ປະການ ທີໜຶ່ງ ຍ້ອນວ່າທຸກຄົນມີຄວາມສົມບູນພູນສຸກຢ່າງເຕັມປ່ຽມ ແລະ ປະການ ທີສອງ ຍ້ອນວ່າບໍ່ມີໃຜວິຕົກກັງວົນວ່າ ຈະມີຜູ້ໃດຜູ້ໜຶ່ງຮຽກຮ້ອງຕ້ອງການ ເກີນຄວາມຈຳເປັນຂອງຕົນ.

ຊາວເກາະແຫ່ງນັ້ນທັງໝົດແມ່ນຮັບປະທານອາຫານຢູ່ຕາມຮ້ານ ອາຫານສາທາລະນະ. ຄວາມຮຽກຮ້ອງຕ້ອງການຂອງພົນລະເມືອງແຕ່ລະຄົນແມ່ນບໍ່ເກີນຂອບເຂດ ແລະ ສາມາດຕອບສະໜອງໄດ້.

ໃນລັດດັ່ງກ່າວທຸກຄົນ ແມ່ນສະເໝີພາບກັນ, ຜູ້ປົກຄອງປະເທດ ກໍແມ່ນປະຊາຊົນເປັນຜູ້ຄັດເລືອກເອົາ.

ປຶ້ມຫົວນີ້ ຂອງທ່ານ ມໍ ໄດ້ກາຍເປັນການທ້າທາຍກັບລະບອບ ສັງຄົມຂອງອັງກິດ ໃນເວລານັ້ນ ເຊິ່ງມີການແບ່ງຄົນອອກເປັນຜູ້ທຸກ ແລະ ຜູ້ຮັ່ງມີ, ກຸ່ມທຳອິດນັ້ນ ເປັນຜູ້ທຸກຍາກກາກກຳ ແລະ ໄຮ້ສິດທິ, ກຸ່ມທີສອງຊ້ຳພັດຟູມເຟືອຍ ແລະ ໃຊ້ຄວາມຮຸນແຮງ.

ຊີວິດຂອງທ່ານ ມໍ ໄດ້ອະວະສານລົງຢ່າງໜ້າອະນາດ. ເພິ່ນໄດ້ຖືກປະຫານຊີວິດຕາມຄຳສັ່ງຂອງເຈົ້າຊີວິດ.

ຊີວິດຂອງນັກສັງຄົມນິຍົມແບບໄຝ່ຝັນລອຍເມກຜູ້ອື່ນໆ ກໍມີຄວາມ ໜັກໜ່ວງ ແລະ ມີຄວາມເສົ້າສະຫລົດໃຈຄືກັນ ເຊັ່ນທ່ານ ຕ.ກຳປາແນນລາ,

ດ.ອູອິນສະແຕນລີ, ຈ.ແມລິເອ, ກ.ມາບລີ, ກ.ບາເບັບ, ອາ. ແຊັງ-ຊີມົງ, ຊ.ຟູຣີເອ, ຣ.ໂອອູແອນ, ວ.ເບລິນສະກີ, ອາ.ແຮກແຊນ, ນ.ເຊີກນີເຊບສະກີ ແລະ ຜູ້ອື່ນໆ. ເຖິງແມ່ນວ່າເຂົາເຈົ້າດຳລົງຊີວິດ ຢູ່ໃນຍຸກສະໄໝແຫ່ງປະຫວັດສາດທີ່ຕ່າງກັນ ແລະ ເຂົາເຈົ້າເປັນຄົນຊົນຊາດ ຕ່າງກັນກໍຕາມ, ແຕ່ທັງໝົດລ້ວນແຕ່ມີຄວາມໄຝ່ຝັນອັນແຮງກ້າອັນດຽວກັນ ຄືຢາກສ້າງສັງຄົມໜຶ່ງຂຶ້ນ ຊຶ່ງຢູ່ໃນຂັ້ນພົ້ນພະລິດ ແມ່ນເປັນຂອງຜູ້ອອກແຮງງານເອງ, ເປັນບ່ອນທີ່ບໍ່ມີການກົດຂີ່ລະຫວ່າງຄົນກັບຄົນ, ທຸກຄົນມີສິດ ເທົ່າທຽມກັນ ແລະ ຄວາມແຕກຕ່າງກັນທາງຊົນຊັ້ນ, ຊັ້ນຄົນ, ຊົນຊາດ ແມ່ນຖືກລົບລ້າງ. ເຂົາເຈົ້າໄດ້ທົນທຸກທໍລະມານເພື່ອຊອກຫາເສັ້ນທາງກ້າວໄປຫາຊີວິດໃໝ່ ທີ່ສຸກສັນ, ພ້ອມກັນນັ້ນ ເຂົາເຈົ້າກໍໄດ້ຮຽກຮ້ອງ ໄປຍັງມວນຊົນໃຫ້ມີການລົບລ້າງຄວາມບໍ່ສະເໝີພາບ, ຄວາມທຸກຍາກ ກາກກຳ , ຄວາມບໍ່ມີສິດທິ ແລະ ຄວາມບໍ່ຍຸດຕິທຳທາງສັງຄົມນຳອີກ. ຍ້ອນສິ່ງ ດັ່ງກ່າວນີ້ ເຂົາເຈົ້າຈຶ່ງຖືກລົງໂທດຢ່າງໜັກໜ່ວງ. ຊົນຊັ້ນປົກຄອງ ຕ່າງກໍໄດ້ປາບປາມບັນດານັກຄົ້ນຄິດຜູ້ມີມະນຸດສະທຳ, ທຳການເນລະເທດ, ຈັບກຸມ ແລະ ກັກຂັງເຂົາເຈົ້າ ແລະ ຈົນເຖິງຂັ້ນປະຫານຊີວິດເຊັ່ນ ກໍລະນີຂອງທ່ານ ມໍ.

ຫຼັກທິດສະດີຂອງບັນດານັກຄົ້ນຄິດສາມຄົນຄື: ທ່ານ ອາ.ແຊັງ-ຊີມົງ, ຊ.ຟູຣີເອ, ເຊິ່ງເປັນຊາວຝະລັ່ງ ແລະ ທ່ານ ຣ.ໂອອູແອນ ຊາວອັງກິດ ນັ້ນເປັນຫຼັກທິດສະດີທີ່ມີຊື່ສຽງກວ່າໝູ່. ເປັນຍ້ອນຫຍັງ ເຂົາເຈົ້າ ຈຶ່ງເປັນຜູ້ມີບົດບາດພິເສດຢູ່ໃນປະຫວັດສາດແຫ່ງແນວຄິດສັງຄົມນິຍົມ ?

ໃນທ້າຍສະຕະວັດທີ ໑໘ ການປະຕິວັດທຶນນິຍົມ ໄດ້ເກີດຂຶ້ນຢູ່ໃນ ປະເທດຝະລັ່ງ, ຊົນຊັ້ນນາຍທຶນ ເຊິ່ງເປັນຊົນຊັ້ນໃໝ່ ໄດ້ກ້າວຂຶ້ນ ສັບປ່ຽນພວກສັກດີນາ. ນັກຄົ້ນຄິດຝະລັ່ງ ຄາວນັ້ນ ຕ່າງກໍຝາກຄວາມຫວັງ ໄວ້ກັບການປະຕິວັດດັ່ງກ່າວ. ເຂົາເຈົ້າເຊື່ອວ່າ ຍຸກແຫ່ງການຄອບຄອງຂອງສັກດີນາ ແລະ ນັກບວດ, ຍຸກແຫ່ງຄວາມບໍ່ເປັນທຳ, ວຸ້ນວາຍ ແລະໂງ່ຈ້າ ຫຼ້າຫຼັງນັ້ນ ໄດ້ພັງພິນາດລົງແລ້ວ, ມາບັດນີ້ດວງຕາເວັນ ພຸ່ງຂຶ້ນ ແລະ ໃຕ້ແສງສະຫວ່າງຂອງມັນຢູ່ເທິງພື້ນແຫ່ງນີ້ ກໍຈະມີແຕ່ຄວາມຍຸດຕິທຳ ຕະຫຼອດກາລະນານ, ມີຄວາມສະເໝີພາບ ແລະ ຄວາມເປັນພີ່ ເປັນນ້ອງ

ລະຫວ່າງຄົນດ້ວຍກັນ. ແຕ່ວ່າອີກບໍ່ດົນ ຊີວິດຕົວຈິງໄດ້ຢືນຢັນໃຫ້ເຫັນ ວ່າ ສັງຄົມແຫ່ງຄວາມຍຸດຕິທຳທີ່ຈະຕ້ອງມາເຖິງນັ້ນ ຊ້ຳພັດໄດ້ຕ່າວປິ້ນໄປເປັນຮູບການແບບໃໝ່ແຫ່ງການກົດຂີ່ຂູດຮີດ ແລະ ການໃຊ້ຄົນເປັນຂ້າທາດ , ການຫູູນຮັ່ງຫູູນມີ ແລະ ຟູມເຟືອຍຂອງກຸ່ມຄົນໜຶ່ງ ແລະຄວາມໄຮ້ສິດແລະ ມັບມົນທຸກຈົນລົງຂອງກຸ່ມອື່ນ. ເມື່ອສົມທຽບກັບລະບອບສັກດີນາແລ້ວ, ການສ້າງຄວາມຊົ່ວຮ້າຍຂອງລະບອບນາຍທຶນ ຍິ່ງມີຄວາມເລິກແລບ ແລະ ປ່າເຖື່ອນກວ່າ.

ແຕ່ຢ່າງໃດກໍ່ຕາມລະບອບທຶນນິຍົມກໍ່ມັບມົນບຍາດຊິງເອົາຖານະໄວ້ຢ່າງໝັ້ນຄົງໃນທະວີບເອີລົບແລະມັນກໍ່ເລີ່ມຕົ້ນດຳເນີນການລ່າຫົວເມືອງຂຶ້ນ ໃນທະວີບຕ່າງໆ ແລະ ຢູ່ທົ່ວທຸກບ່ອນ,ລັດທິທຶນນິຍົມແລະລັດທິລ່າຫົວເມືອງຂຶ້ນບໍ່ພຽງແຕ່ເປັນພວກທີ່ນຳເອົາເຄາະຮ້າຍໃໝ່ມາສູ່ມວນຊົນເທົ່ານັ້ນ ແຕ່ຍັງສະແດງອອກເຖິງຄວາມໄຮ້ມະນຸດສະທຳ ແລະ ຄວາມຂັດແຍ່ງຂອງມັນອີກ.

ບັນດາຜູ້ທີ່ເຊື່ອວ່າ ຈະໄດ້ພົບເຫັນຊີວິດໃໝ່ອັນດີງາມເຂົ້າມາ ປ່ຽນແທນນັ້ນ ຕ່າງກໍ່ໄດ້ຮັບຄວາມຜິດຫວັງອັນຂົມຂື່ນ. ຫລາຍຄົນໄດ້ວິພາກວິຈານສັງຄົມນາຍທຶນຢ່າງເຄັ່ງຄັດ,ພ້ອມກັນນັ້ນ ເຂົາເຈົ້າກໍ່ປະດິດສ້າງໂຄງ ຮ່າງຂອງສັງຄົມໃໝ່ ເຊິ່ງ ຕາມຄຳເຫັນຂອງເຂົາເຈົ້ານັ້ນ ຖືວ່າເປັນສັງຄົມທີ່ມີມະນຸດສະທຳ ແລະ ເປັນທຳ.

ມາຮອດເວລານັ້ນ ມັນສະໝອງຂອງມະນຸດເຮົາ ໄດ້ສ້າງຜົນສຳເລັດອັນໃໝ່ຂຶ້ນເລື້ອຍໆຄື: ນັກວິທະຍາສາດ ນັບມື້ນັບຄົ້ນເລິກເຂົ້າເຖິງຄວາມເລິກລັບຂອງທຳມະຊາດ, ເຄື່ອງຈັກຊະນິດຕ່າງໆທີ່ບໍ່ເຄີຍມີມາກ່ອນ ກໍ່ໄດ້ຖືກປະດິດສ້າງອອກ. ຈາກຜົນສຳເລັດດັ່ງກ່າວ ທ່ານ ອາ.ແຊັງຊີມົງ,ຊ. ຟູຣີເອ ແລະ ຣ.ໂອອູແອນ ຕ່າງກໍ່ພາກັນຕັ້ງຄຳຖາມວ່າ ເປັນຫຍັງ ພວກເຮົາຈຶ່ງບໍ່ນຳເອົາກຳລັງຄວາມສາມາດຂອງຕັກກະປັນຍາ, ວິທະຍາສາດ ແລະ ເຕັກນິກນັ້ນປະກອບເປັນອາວຸດ ເພື່ອຊ່ວຍດັດແປງຊີວິດ ຂອງຄົນເຮົາ ? ຖ້າພວກເຮົາຈະສ້າງສັງຄົມແຫ່ງຄວາມສຸກຂຶ້ນດຽວນີ້ໂລດ ແທນທີ່ວ່າຈະສ້າງໃນອະນາຄົດ ອັນໄກພູນຈະເປັນໄປໄດ້ບໍ ? ແລ້ວທ່ານທັງສາມຕ່າງກໍ່ຕອບຄຳຖາມເຫລົ່ານີ້ຕາມແນວຄິດຂອງໃຜລາວ.

<u>ອາງຣີ</u> <u>ແຊັງ-ຊີມົງ</u> ( ໑໗໖໐-໑໘໒໕ ) ເກີດໃນຄອບຄົວຊຸນນາງ,

ເພິ່ນໄດ້ເຂົ້າຮ່ວມໃນເຫດການອັນໃຫຍ່ໆໃນຄາວນັ້ນເຊັ່ນ ໃນສົງຄາມເພື່ອເອກະລາດຂອງສະຫະລັດອາເມລິກາ ( ໑໗໗໕–໑໗໘໓ ) ແລະໃນການປະຕິວັດທຶນນິຍົມຢູ່ຝະລັ່ງ ( ໑໗໘໙–໑໗໙໔ ). ຫລັງຈາກຕັດຂາດ ຈາກການພົວພັນກັບຄອບຄົວແລ້ວ ເພິ່ນໄດ້ອຸທິດຕົນໃຫ້ແກ່ການຄົ້ນຄວ້າປັດຊະຍາ ແລະ ເປັນຜູ້ປະສົບເຄາະຮ້າຍຢ່າງຫນັກຫນ່ວງ.

ຕາມຄຳເຫັນຂອງ ແຊັງຊີມົງ ກໍ່ແມ່ນວ່າ ມະນຸດເຮົາໄດ້ຜ່ານສາມໄລຍະແຫ່ງການຂະຫຍາຍຕົວຂອງມັນເອງມາແລ້ວ. ໄລຍະທຳອິດ ແມ່ນຢູ່ໃຕ້ການຄອບງຳຮອບດ້ານຂອງສາສະຫນາ, ໄລຍະທີສອງ ແມ່ນໄລຍະ ແຫ່ງການຕໍ່ສູ້ລະຫວ່າງສາສະຫນາ ແລະ ວິທະຍາສາດ, ໄລຍະ ທີສາມ ແມ່ນໄລຍະແຫ່ງໄຊຊະນະຂອງວິທະຍາສາດ. ດ້ວຍເຫດວ່າໄລຍະ ທີສາມນີ້ ໄດ້ມາເຖິງແລ້ວ, ສະນັ້ນ ຈຳເປັນຕ້ອງສ້າງວິທະຍາສາດພິເສດ ຫນຶ່ງກ່ຽວກັບສັງຄົມຂຶ້ນ ເພື່ອອີງອາໄສມັນເປັນຜູ້ຊ່ວຍປ່ຽນແປງຊີວິດຂອງຄົນ . ຫນ້າທີ່ອັນສຳຄັນຂອງວິທະຍາສາດດັ່ງກ່າວ ແມ່ນການສ້າງໂຄງຮ່າງ ຂອງສັງຄົມແຫ່ງຄວາມສຸກຂຶ້ນ ເຊິ່ງຫລັງຈາກນັ້ນ ກໍ່ຄວນນຳເອົາໄປປະຕິບັດໃນຕົວຈິງໂລດ.

ແຊັງ–ຊີມົງ ເຫັນວ່າ ການສ້າງໂຄງຮ່າງດັ່ງກ່າວແມ່ນຂຶ້ນກັບ ເວລາ ແລະ ເງື່ອນໄຂທາງດ້ານປະຫວັດສາດແຕ່ຢ່າງໃດ, ອັນນັ້ນແມ່ນຜົນ ທີ່ໄດ້ມາຈາກການອອກແຮງ ແລະ ການບຸກບືນຂອງຄົນຜູ້ຫນຶ່ງທີ່ມີຄວາມປີຊາສາມາດ. ຖ້າວ່າຜູ້ທີ່ມີຄວາມປີຊາສາມາດຄົນນັ້ນຫາກມີຂຶ້ນກ່ອນນັ້ນຫາຮ້ອຍປີ,ມະນຸດເຮົາກໍ່ຈະຫລີກຈາກຄວາມທຸກທໍລະມານທີ່ມີມາ ຫລາຍສະຕະວັດແລ້ວນັ້ນໄດ້. ແຕ່ຈົນເຖິງດຽວນີ້ ຜູ້ທີ່ຈະຊ່ວຍກອບກູ້ເຊັ່ນນັ້ນບໍ່ທັນມີເທື່ອ,ເພາະສະນັ້ນ ຈະຕ້ອງຮີບຮ້ອນປະດິດສ້າງໂຄງຮ່າງຂອງຊີວິດໃຫມ່ຂຶ້ນ ເພື່ອປົດປ່ອຍມວນມະນຸດ.

ແຊັງ–ຊີມົງ ໄດ້ວາດພາບເຖິງສັງຄົມໃນອະນາຄົດໃຫ້ຕົນເອງຈັ່ງໃດ? ຕາມຄຳເຫັນຂອງລາວ ກໍ່ແມ່ນວ່າ ຜູ້ປົກຄອງສັງຄົມແມ່ນຕ້ອງເປັນຜູ້ມີພອນສະຫວັນ ແລະ ຄວາມສາມາດພິເສດ. ອຳນາດສູງສຸດ ແມ່ນລັດຖະສະພາເຊິ່ງມີສາມສະພາຄື: ສະພາປະດິດສ້າງ, ສະພາຄົ້ນຄວ້າ ແລະ ສະພາບໍລິຫານ. ໃນເວລາດຽວກັນນັ້ນ ລັດຖະສະພາ ຍັງເປັນຜູ້ມີອຳນາດ ສູງສຸດ

ໃນການວາງແຜນການທາງດ້ານເສດຖະກິດນຳອີກ. ດ້ວຍເຫດວ່າການພັດທະນາເສດຖະກິດໄດ້ຮັບການວາງແຜນການ, ສະນັ້ນ ຢູ່ໃນສັງຄົມໃໝ່ ນີ້ ໄພຫວ່າງງານ, ຄວາມເປັນອະນາທິປະໄຕ, ຄວາມອຶດຫິວ ແລະທຸກຍາກ ກາກກຳ ແມ່ນຈະຖືກລົບລ້າງ. ເປົ້າໝາຍອັນສຳຄັນໃນການດັດສ້າງຊີວິດຮອບດ້ານຂອງສັງຄົມ ແມ່ນເພື່ອເຮັດໃຫ້ເງື່ອນໄຂດຳລົງຊີວິດຂອງແຕ່ລະ-ຄົນດີຂຶ້ນ ແລະ ເຮັດໃຫ້ຄວາມອາດສາມາດ ແລະ ກຳລັງແຮງຂອງແຕ່ລະຄົນໄດ້ຮັບການເສີມຂະຫຍາຍ.

ວິທີການເພື່ອກ້າວໄປຫາສັງຄົມໃໝ່, ວິທີການເພື່ອລົບລ້າງການກົດຂີ່ ຄວາມທຸກຈົນ ແລະ ກ້າວໄປເຖິງການປອງດອງ ແລະ ເອື້ອອີກເອື້ອ ໃຈກັນລະຫວ່າງຄົນທັງມວນ ທີ່ແຊັງ-ຊີມົງ ສະເໜີແນະນັ້ນມີແນວໃດແດ່ ? ຕາມຄຳເຫັນຂອງເພິ່ນກໍ່ແມ່ນວ່າ ສາມາດເຮັດສຳເລັດໄດ້ໂດຍອີງໃສ່ການໂຄສະນາ ແລະ ແຜ່ຂະຫຍາຍໂຄງຮ່າງ ຂອງສັງຄົມໃໝ່ ທີ່ເພິ່ນໄດ້ສ້າງຂຶ້ນແລ້ວ. ແຊັງ-ຊີມົງ ເຊື່ອວ່າ ການນຳເອົາແຜນການຂອງເພິ່ນໄປປະຕິບັດໃຫ້ປະກົດເປັນຈິງ ຈະມີຜົນດີບໍ່ພຽງແຕ່ໃຫ້ຜູ້ທຸກຈົນ ແຕ່ກໍ່ເປັນຜົນດີ ສຳລັບພວກຮັ່ງມີນຳອີກ. ເພິ່ນຖືວ່າ ໃນສັງຄົມທີ່ມີຢູ່ນັ້ນ ໃຜໆກໍ່ລ້ວນແຕ່ດຳລົງຊີວິດບໍ່ຈົບບໍ່ດີທັງນັ້ນ, ຈຳນວນໜຶ່ງ ແມ່ນເບື່ອໜ່າຍຄວາມທຸກຈົນ, ຈຳນວນໜຶ່ງອີກພັດຮູ້ສຶກກິນແໜງຕໍ່ຄວາມຮັ່ງມີທີ່ໄດ້ມາຢ່າງບໍ່ຍຸດຕິທຳ. ຢູ່ໃນສັງຄົມໃໝ່ນີ້ ທຸກຄົນຈະມີຄວາມສຸກ ແລະ ຄວາມເພິ່ງພໍໃຈ. ໝາຍຄວາມວ່າ ເພື່ອຈະກ້າວໄປເຖິງສັງຄົມໃໝ່ນັ້ນ ຈຶ່ງຕ້ອງໃຫ້ແຕ່ລະຄົນ ເຊື່ອມຊຶມເຖິງຄວາມດີເລີດຂອງຊີວິດໃໝ່ ແລະ ຈາກນັ້ນມັນກໍ່ຈະກ້າວມາປະກົດເປັນຈິງເອງ.

ວິທີການດັດສ້າງສັງຄົມທີ່ແຊັງ-ຊີມົງ ສະເໜີອອກມານີ້ ແມ່ນມັນເກີດມາຈາກຄວາມເຊື່ອຖືທີ່ວ່າ ຄວາມຄິດ, ແນວຄິດ ແລະ ຈິດສຳນຶກ ແມ່ນເປັນສິ່ງສຳຄັນໃນຊີວິດຂອງສັງຄົມ. ດ້ວຍເຫດນັ້ນ ເມື່ອສິ່ງດັ່ງກ່າວມີການປ່ຽນແປງ ກໍ່ຈະພາໃຫ້ມີການດັດສ້າງຊີວິດຮອບດ້ານຂອງສັງຄົມຢ່າງຫລີກບໍ່ໄດ້. ແຕ່ແມ່ນແນວນັ້ນແທ້ບໍ ? ແມ່ນບໍ່ວ່າຢູ່ນີ້ເອງທີ່ເປັນບ່ອນເຜີຍໃຫ້ເຫັນສາຍເຫດແຫ່ງຄວາມຜິດພາດຂອງນັກມະນຸດສະທຳຜູ້ຍິ່ງໃຫຍ່ ? ກ່ຽວກັບບັນຫາດັ່ງກ່າວ ຈະຖືກນຳມາເວົ້າໃນອັນຕໍ່ໄປ, ດຽວນີ້ ພວກເຮົາ ພາກັນ

ມາພິຈາລະນາເຖິງທັດສະນະຂອງນັກຄົ້ນຄິດຜູ້ຍິ່ງໃຫຍ່ອີກຜູ້ໜຶ່ງ ເຊິ່ງເປັນຄົນປະເທດດຽວ ແລະ ຮຸ່ນດຽວກັນກັບ ແຊັງ-ຊີມົງ, ນັ້ນແມ່ນ ຊ.ຟູຣີເຍ

<u>ຊາກ</u> <u>ຟູຣີເອ</u> ( ໑໗໗໒-໑໘໓໗ ) ເປັນຜູ້ທີ່ໄດ້ເຮັດວຽກຢູ່ໃນບໍລິສັດການຄ້າຕະຫລອດຊີວິດຂອງຕົນ. ຟູຣີເອ ເວົ້າວາ ຄົນເຮົາເກີດມາເພື່ອມີຄວາມສຸກ ແລະ ຄວາມສຸກດັ່ງກ່າວ ຈະມີຂຶ້ນໄດ້ກໍຕໍເມື່ອຄົນເຮົາ ສາມາດຕອບສະໜອງຄວາມຮຽກຮ້ອງຕ້ອງການທີ່ບໍ່ເກີນຂອບເຂດ ແລະ ອັນຈຳເປັນສຳລັບດຳລົງຊີວິດນັ້ນໄດ້. ໜ້າທີ່ຂອງສັງຄົມ ແມ່ນເປັນຜູ້ຕອບສະ - ໜອງຄວາມຮຽກຮ້ອງຕ້ອງການດັ່ງກ່າວຂອງແຕ່ລະຄົນ. ຖ້າວາ ສັງຄົມຫາກບໍ່ມີຄວາມສາມາດເຮັດໄດ້ ມັນກໍ່ສົມຄວນຈະຖືກກ່າວປະນາມ ແລະລົບລ້າງ.

ຟູຣີເອ ໄດ້ຕຳນິວິຈານລະບອບທຶນນິຍົມຢ່າງບໍ່ມີເມດຕາປານີວ່າ ມັນເປັນລະບອບສັງຄົມທີ່ມີການຈັດຕັ້ງບໍ່ດີ ແລະ ທີ່ພົ້ນສະໄໝ. ເພິ່ນຍັງ ໄດ້ກ່າວຫາລັດທິທຶນນິຍົມວ່າ ເປັນຜູ້ມີບາບກຳ ທີ່ຈະຕ້ອງລົງໂທດເຖິງຂັ້ນຕາຍ ແລະ ພ້ອມກັນນັ້ນ ຟູຣີເອ ກໍ່ໄດ້ຍົກເອົາຮູບພາບຂອງສັງຄົມໃນອະນາຄົດອອກມາຢ່າງລະອຽດ. ສັງຄົມແຫ່ງຄວາມສຸກທີ່ມີຄວາມກົມກຽວ ທີ່ ຟູຣີເອ ວາດພາບນັ້ນ ເປັນແນວໃດ ?

ມັນປະກອບດ້ວຍຫລາຍສະຫະພັນ ທີ່ເປັນຜູ້ທ້ອນໂຮມຄົນເຂົ້າໃນ ການຜະລິດ ແລະ ຊົມໃຊ້, ສະຫະພັນໜຶ່ງມີ ໑.໖໐໐ ຄົນ. ທັງໝົດແມ່ນອາໄສຢູ່ໃນອາຄານອັນໃຫຍ່ໂຕຫລັງໜຶ່ງ ເຊິ່ງທີ່ນັ້ນມີບ່ອນທຳງານ, ຮ້ານອາຫານ ແລະ ຫໍສະໝຸດ.

ຢູ່ໃນສັງຄົມໃໝ່ນີ້ ບໍ່ມີການໃຊ້ຄວາມຮຸນແຮງລະຫວ່າງຄົນກັບຄົນ. ທຸກຄົນເຮັດວຽກງານເພື່ອຜົນປະໂຫຍດລວມດ້ວຍຄວາມສະໝັກໃຈ. ການອອກແຮງງານໄດ້ປ່ຽນຈາກການຖືກຖືວ່າ ເປັນສິ່ງທີ່ໜ້າເບື່ອໜ່າຍມາເປັນສິ່ງທີ່ໄດ້ຮັບຄວາມນິຍົມຊົມຊອບ ແລະເພິ່ງພໍໃຈ. ແຕ່ເຮັດແນວໃດຈຶ່ງຈະບັນລຸຜົນດີດັ່ງກ່າວນັ້ນໄດ້? ເພິ່ນໃຫ້ຄຳເຫັນວ່າການປ່ຽນແປງເຫລົ່ານີ້ຈະມີຂຶ້ນໄດ້ຍ້ອນວ່າມວນຊົນມີເສລີພາບໃນການເລືອກວຽກເຮັດງານທຳ ສະຫລັບກັນໄປຕາມຄວາມມັກແລະມີການແຂ່ງຂັນອີກ, ແຮງງານຂອງເຂົາເຈົ້າ ກໍມີລັກສະນະປະດິດສ້າງ, ສະນັ້ນຈຶ່ງເປັນເຫດທີ່ພາໃຫ້ແຕ່ລະຄົນງານມີຄວາມກະຕືລືລົ້ນ.

ໃນສັງຄົມທີ່ມີຄວາມກົມກຽວນີ້ ແມ່ຍິງມີສິດເທົ່າທຽມກັບຜູ້ຊາຍ, ເຂົາເຈົ້າຍັງຖືກປົດປ່ອຍອອກຈາກແຮງງານອັນໜັກໜ່ວງປະຈຳວັນທີ່ເຄີຍມີມາ. ການສຶກສາອົບຮົມຂອງມວນຊົນ ເປັນສິ່ງເຮັດໃຫ້ຮ່າງກາຍ ແລະ ຈິດໃຈຂອງເຂົາເຈົ້າໄດ້ຮັບການຂະຫຍາຍຕົວຮອບດ້ານ. ຟູຣີເອ ກໍ່ເຊັ່ນດຽວກັບແຊັງ-ຊີມົງ ມີຄວາມເຊື່ອໝັ້ນໃນຄົນ, ໃນກຳລັງແຮງທາງດ້ານ ຈິດໃຈຂອງເຂົາເຈົ້າ. ສະນັ້ນ ເພິ່ນຈຶ່ງຄິດວ່າໜ້າທີ່ອັນສຳຄັນແມ່ນຕ້ອງ ຊອກເຫັນ, ເປີດເຜີຍໃຫ້ຮູ້ ແລະ ປັບປຸງກຳລັງແຮງດັ່ງກ່າວໃຫ້ດີຂຶ້ນ.

ເປັນອັນວ່າ ໂຄງຮ່າງຂອງສັງຄົມແຫ່ງຄວາມສຸກໃນອະນາຄົດ ໄດ້ຖືກສ້າງຂຶ້ນ. ແມ່ນໃຜຈະເປັນຜູ້ສ້າງໂຄງຮ່າງດັ່ງກ່າວ ແລະ ຈະນຳມັນໄປປະຕິບັດໄດ້ຢ່າງໃດ? ບາງທີ ອາດຈະແມ່ນການຍຶດເອົາອຳນາດຈາກພວກຮັ່ງມີ ແລະ ອີງໃສ່ອຳນາດດັ່ງກ່າວເພື່ອປ່ຽນແປງຊີວິດຂອງຄົນ? ບໍ່, ບໍ່ແມ່ນເຊັ່ນນັ້ນ, ກົງກັນຂ້າມ ຟູຣີເອ ຄິດວ່າເພື່ອຈະເຮັດໃຫ້ແຜນການດັ່ງກ່າວ ປະກົດເປັນຈິງ ຕ້ອງອີງໃສ່ຊົນຊັ້ນຮັ່ງມີ, ອີງໃສ່ເງິນຄຳ, ທຶນຮອນ ແລະ ເຈດຈຳນົງດີຂອງພວກເຂົາ, ພຽງແຕ່ວ່າຕ້ອງເປີດຫູເປີດຕາໃຫ້ພວກເຂົາຮັບຮູ້ ແລະ ຊັກຊວນພວກເຂົາໃຫ້ເຊື່ອໝັ້ນໃນຄວາມດີເລີດ ຂອງລະບອບໃໝ່ເທົ່ານັ້ນ. ເພື່ອບັນລຸເປົ້າໝາຍດັ່ງກ່າວ ຟູຣີເອ ໄດ້ຂຽນຈົດໝາຍ ເຖິງເຈົ້າຊີວິດ, ເຈົ້າຂຸນມູນນາຍ, ເຈົ້າທະນາຄານ ແລະ ເຈົ້າຂອງໂຮງຈັກໂຮງງານ. ເປັນເວລາຫລາຍຟ້າຫລາຍປີ, ຢູ່ໃນຫ້ອງເຮືອນ ອັນຮົກເຮື້ອ, ແຕ່ລະມື້ ເພິ່ນອົດທົນລໍຄອຍຜູ້ອຸປະຖຳ ຜູ້ຮັ່ງມີ ຜູ້ເຊິ່ງ ຟູຣີເອຄິດວ່າຈະຊ່ວຍປະຕິບັດຄວາມຄິດຂອງລາວໃຫ້ປະກົດເປັນຈິງ, ແຕ່ເມື່ອຖ້າປານໃດກໍບໍ່ເຫັນແຂກຜູ້ຮັ່ງມີມາຫາຈັກເທື່ອ ຟູຣີເອ ກໍໄດ້ເອົາເສື້ອໂຕເກົ່າມານຸ່ງ ແລ້ວກໍໜີອອກໄປເລາະລຽບຢູ່ຕາມຮ້ານຂາຍເຄື່ອງຍ່ອຍເພື່ອຊອກຫາການອັນບໍ່ແຊບນົວພໍປານໃດຂອງຊາວປາຣີ ຜູ້ທຸກຈົນມາກິນ. ໂຄງຮ່າງຂອງສັງຄົມແຫ່ງຄວາມສຸກເຊິ່ງເປັນຜົນງານທີ່ເພິ່ນໄດ້ມາດ້ວຍການອຸທິດຊົ່ວຊີວິດແລະດ້ວຍ ຄວາມທຸກທໍລະມານມາບໍ່ຈັກວ່າເທົ່າໃດຄໍ່າຄືນ ກໍຍັງເປັນພຽງຄວາມຝັນ.

ເຖິງແມ່ນວ່າ ແຊັງ-ຊີມົງ ແລະ ຟູຣີເອ ມີທັດສະນະທີ່ແຕກຕ່າງກັນທີ່ສຸດກໍຕາມ ແຕ່ວ່າພວກເພິ່ນທັງສອງຄົນມີອັນລວມຫລາຍປະການ ໃນສ່ວນທີ່ພົວພັນກັບການວາດພາບລະບອບສັງຄົມໃໝ່. ຄົນຊຸມວິທີການເພື່ອ ໃຊ້ດັດ

ສ້າງສັງຄົມທີ່ ຟູຣິເອ ສະເໜີຂຶ້ນນັ້ນ ບໍ່ແມ່ນອັນດຽວກັບຂອງ ແຊັງ-ຊີມົງ ບໍ ? ຕອນນີ້ ພວກເຮົາບໍ່ທັນຝ້າວທຳການສັງລວມເທື່ອ,ພວກເຮົາ ພາກັນມາຄົ້ນຄວ້າເບິ່ງທັດສະນະຂອງ ຣ.ໂອອູແອນ ນັກສັງຄົມນິຍົມ ແບບໄຝ່ຝັນລອຍເມກ ຜູ້ຍິ່ງໃຫຍ່ຄົນທີສາມກ່ອນ.

<u>ໂຣເບີດ</u> <u>ໂອອູແອນ</u> ( ໑໗໗໑-໑໘໕໘ ) ເກີດໃນຄອບຄົວ ນາຍທຶນນ້ອຍ, ມີພອນສະຫວັນອັນວິເສດ, ໃນເວລາມີອາຍຸ ໒໐ ປີ ກໍ່ໄດ້ເປັນ ຜູ້ອຳນວຍການໂຮງງານແຫ່ງໜຶ່ງໃນເມືອງ ມັນແຊສະເຕີ ແລະພໍຍ່າງເຂົ້າອາຍຸສາມສິບປີກໍ່ເປັນຜູ້ຈັດການວິສາຫະກິດແຫ່ງໃຫຍ່ ໃນສະກອດແລນ.ຕາມຄຳເວົ້າຂອງ ອັງແກນນັ້ນ ໂອອູແອນ "ເປັນຄົນມີຈິດໃຈບໍລິສຸດ ຄືເດັກນ້ອຍ ແລະໃນເວລາດຽວກັນນັ້ນກໍ່ເປັນຜູ້ນຳພານາແຕ່ກຳເນີດຊຶ່ງຫາຍາກທີ່ສຸດ"[1]. ສິ່ງທີ່ໜ້າສົນໃຈໃນຕົວຂອງໂອອູແອນ ບໍ່ແມ່ນພຽງແຕ່ແນວຄິດຂອງເພິ່ນ , ແຕ່ຫາກ ມັນທັງການເຄື່ອນໄຫວ ທີ່ຈະເຮັດໃຫ້ແນວຄິດດັ່ງກ່າວ ປະກົດເປັນຈິງ.

ໂອອູແອນ ຮັບຮູ້ແນວຄິດຂອງລັດທິສັງຄົມນິຍົມ ບໍ່ແມ່ນໃນທັນທີທັນໃດ. ເບື້ອງຕົ້ນເພິ່ນໄດ້ພະຍາຍາມຢາກຈະປ່ຽນແປງຊີວິດຂອງຄົນເຮົາ ໃນຂອບເຂດຂອງສັງຄົມ ທີ່ມີຢູ່ແລ້ວເສຍກ່ອນ. ໃນຖານະເປັນຫົວໜ້າໂຮງງານຜູ້ໜຶ່ງ, ເພິ່ນໄດ້ນຳເອົາລະບຽບການຊຸດໃໝ່ເຂົ້າມາໃຊ້ໃນໂຮງງານຂອງເມືອງ ນິວ-ລານາກ ຄື: ຫລຸດຜ່ອນໂມງເຮັດວຽກ, ຈັດຕັ້ງ ບ່ອນຝາກເດັກ, ໂຮງຮຽນ, ໂຮງໝໍ ແລະ ຄັງສິນເຊື່ອສຳລັບກຳມະກອນຂຶ້ນ.ມາຕະການເຫລົ່ານີ້ ໄດ້ເພີ່ມລາຍໄດ້ໃຫ້ວິສາຫະກິດ ແລະ ທັງເຮັດໃຫ້ ແນວຄິດຈິດໃຈ ແລະ ແບບແຜນດຳລົງຊີວິດດີຂຶ້ນ. ການຕິດເຫລົ້າ, ຊິກຕີກັນ, ຟ້ອງຮ້ອງກັນ ແລະ ອື່ນໆເຊິ່ງແຜ່ລາມຢ່າງກວ້າງຂວາງໃນເມື່ອກ່ອນ,ແຕ່ດຽວນີ້ ຊ້ຳພັດເປັນເຫດການທີ່ບໍ່ຄ່ອຍພົບເຫັນ. ເຫດການອັນໃໝ່ນີ້ ໄດ້ເຮັດໃຫ້ ໂອອູແອນ ມີຊື່ສຽງທີ່ສຸດ, ຊື່ຂອງເພິ່ນໄດ້ໂດ່ງດັງໄປທົ່ວ ທະວີບ

---

໑) ກ.ມາກ ແລະ ຟ.ອັງແກນ. ບົດນິພົນ, ເຫລັ້ມທີ ໒໐, ໜ້າ ໒໗໒.

ເອີລົບ. ແຕ່ເພິ່ນບໍ່ໄດ້ເພິງພໍໃຈນຳສິ່ງທີ່ເຮັດໄດ້ນັ້ນ. ໂອອູແອນ ກໍໄດ້ສະຫລຸບວ່າ ສັງຄົມນາຍທຶນແມ່ນສັງຄົມ ທີ່ເຕັມໄປດ້ວຍຄວາມເປື້ອນເປິ ຊົ່ວຮ້າຍ ສະນັ້ນຈຶ່ງມີຄວາມຈຳເປັນ ນຳເອົາສັງຄົມກອມມູນິດ ເຂົ້າມາ ປ່ຽນແທນ.

ໂອອູແອນໄດ້ວາດພາບເຖິງສັງຄົມໃໝ່ໃນອະນາຄົດຄືແນວໃດແລະຕາມຄວາມເຫັນຂອງເພິ່ນແລ້ວ ເຮັດຈັ່ງໃດ ຈຶ່ງຈະອ້າມຜ່ານໄປເຖິງສັງຄົມ ດັ່ງກ່າວ?ກ່ຽວກັບບັນຫານີ້ ເພິ່ນໄດ້ກ່າວວ່າ ຕ້ອງສ້າງກອມມູນຫຼືບ້ານພິເສດຈຳນວນໜຶ່ງຂຶ້ນຊຶ່ງມີພົນລະເມືອງແຕ່ ໓໐໐ ເຖິງ ໓.໐໐໐ ຄົນ ແລະ ແຜ່ຂະຫຍາຍກອມມູນເຫລົ່ານີ້ໄປທົ່ວທຸກແຫ່ງຫົນຂອງໂລກ.ບ້ານເຫລົ່ານີ້ ຮວບຮວມເອົາອັນດີອັນຊອບທັງໝົດຂອງຕົວເມືອງແລະຊົນນະບົດໂດຍບໍ່ເອົາອັນທີ່ເປັນຈຸດອ່ອນຂອງມັນ.ສະມາຊິກຂອງກອມມູນນີ້ອອກແຮງງານຢູ່ໃນໂຮງຈັກ ໂຮງງານແລະໃນກະສິກຳ,ອອກແຮງງານດ້ວຍກຳລັງກາຍແລະດ້ວຍມັນສະໝອງສະຫລັບກັນໄປ. ເອົາເຈົ້ານຳໃຊ້ເຕັກນິກອັນທັນສະໄໝຢ່າງກວ້າງຂວາງ. ຖ້າວ່າ ຟູຣິເອ ຖືເອົາການຫັດຖະກຳ ແລະ ໂຮງງານຫັດຖະກຳເປັນຜູ້ມີບົດບາດສຳຄັນ ໃນການຜະລິດແລ້ວ, ໂອອູແອນ ພັດຖືວ່າ ແມ່ນ ອຸດສາຫະກຳໃຫຍ່ ແລະ ເຄື່ອງຈັກ. ໂອອູແອນ ຍັງຮຽກຮ້ອງ ໃຫ້ມີການນຳໃຊ້ເຄື່ອງຈັກເຕັກນິກ ເຂົ້າໃນວຽກເຮືອນນຳອີກ. ກຳລັງການຜະລິດ ອັນເຂັ້ມແຂງ ຢູ່ພາຍໃຕ້ລະບອບທຶນນິຍົມ ແມ່ນຮັບໃຊ້ການສ້າງຮັ່ງດູນມີໃຫ້ຄົນສ່ວນໜ້ອຍ ແລະ ເຮັດໃຫ້ມະຫາຊົນເປັນຂ້າທາດ, ສ່ວນຢູ່ໃນສັງຄົມໃໝ່ແມ່ນໃຊ້ເພື່ອຍົກສູງຄວາມຢູ່ດີກິນດີຂອງໝົດທຸກຄົນ.

ຢູ່ໃນສັງຄົມນີ້ ແມ່ນອຸດົມສົມບູນໄປດ້ວຍສິນຄ້າ ທີ່ຮັກສາໄວ້ ໃນສາງລວມ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງປະຊາຊົນ.ສະມາຊິກຂອງສັງຄົມ ພາກັນຮັບປະທານອາຫານຢູ່ໃນຮ້ານກິນດື່ມ.ການແຈກຢາຍຜົນຜະລິດໃນເບື້ອງຕົ້ນ ແມ່ນອີງໃສ່ແຮງງານຂອງແຕ່ລະຄົນ,ແຕ່ພາຍຫລັງມາ ແມ່ນກ້າວໄປສູ່ການແບ່ງປັນຕາມຄວາມຮຽກຮ້ອງຕ້ອງການ.ການພົວພັນລະຫວ່າງຄົນກັບຄົນ ແມ່ນຢູ່ບົນພື້ນຖານຫລັກການແຫ່ງຄວາມຮັກໄຄ່ແລະຊ່ວຍເຫລືອຊຶ່ງກັນ ແລະ ກັນ.

ຕາມຄຳເຫັນຂອງ ໂອອູແອນ ແລ້ວ, ການຂ້າມຜ່ານໄປສູ່ສັງຄົມໃໝ່

ນັ້ນ ສາມາດເຮັດໃຫ້ເປັນຈິງໄດ້ ໂດຍຜ່ານການໂຄສະນາແນວຄິດກອມມູນິດ ການເຄື່ອນໄຫວທີ່ເປັນແບບຢ່າງຂອງຄົນຜູ້ກະຕືລືລົ້ນຈຳນວນໜຶ່ງ ແລະໂດຍຜ່ານການຮ່ວມສຳພັນແບບງ່າຍດາຍຂອງປະຊາຊົນ. ພວກເຮົາຍັງຈື່ວ່າດ້ວຍວິການເຊັ່ນນີ້ເອງ ທີ່ ແຊັງ-ຊີມົງ ແລະ ຟູຣິເອ ພະຍາຍາມດັດສ້າງ ຊີວິດຂອງສັງຄົມ.

ໂອອູແອນ ມຸ່ງໝາຍນຳເອົາແນວຄິດຂອງຕົນເອງ ເຂົ້າໃນພາກປະຕິບັດ. ເພິ່ນໄດ້ຊື້ດິນຕອນໜຶ່ງໃຫຍ່ສົມຄວນ ຢູ່ໃນສະຫະລັດອາເມລິກາແລະສ້າງກອມມູນແບບກອມມູນິດ ທີ່ໃສ່ຊື່ວ່າ "ຄວາມກົມກຽວແບບໃໝ່"ຂຶ້ນໃນທີ່ນັ້ນ. ເບື້ອງຕົ້ນ ມັນກໍມີຜົນສຳເລັດຈຳນວນໜຶ່ງ, ແຕ່ຕໍ່ມາຍ້ອນການນຳເອົາຫລັກການແບ່ງປັນຜົນຜະລິດຕາມຄວາມຮຽກຮ້ອງຕ້ອງການ ອອກໃຊ້ ແລະຍ້ອນຜົນສະທ້ອນຂອງໂລກນາຍທຶນທີ່ເປັນສັດຕູນັ້ນຈຶ່ງໄດ້ເຮັດໃຫ້ກອມມູນດັ່ງກ່າວພັງທະລາຍ. ໂອອູແອນ ໄດ້ອຸທິດຊັບສົມບັດສ່ວນຕົວຂອງເພິ່ນ ທັງໝົດເຂົ້າໃນກິດຈະການກໍ່ສ້າງກອມມູນແຫ່ງນີ້ ແລະ ໃນທີ່ສຸດກໍໄດ້ສິ້ນເນື້ອປະດາຕົວ. ຊີວິດຂອງເພິ່ນນັບມື້ນັບຂາດແຄນ ແລະ ໜັກໜ່ວງຂຶ້ນຈຸກໃຈ. ຊື່ສຽງ ແລະ ກຽດຕິຍົດຂອງເພິ່ນ ທີ່ໄດ້ໂດ່ງດັງໄປທົ່ວໂລກ ໄດ້ແປປ່ຽນ ໄປເປັນຄວາມຫລົງລືມ ແລະ ເປັນຄວາມທຸກຍາກ,ແຕ່ສິ່ງດັ່ງກ່າວ ບໍ່ສາມາດທັບມ້າງເຈດຈຳນົງຂອງເພິ່ນໄດ້. ດ້ວຍຄວາມຮັກໄຄ່ອັນແຮງກ້າທີ່ເຄີຍ ມີມາ, ໂອອູແອນ ໄດ້ສືບຕໍ່ໂຄສະນາອຸດົມການຂອງຕົນ, ໂດຍໄດ້ຮຽກຮ້ອງໄປຍັງຜູ້ຮັ່ງມີ, ຂຽນບົດຄວາມ, ຄຳຮຽກຮ້ອງ ແລະ ໄປ ປາຖະກະຖາໃຫ້ກຳມະກອນ. ການປາຖະກະຖາເທື່ອສຸດທ້າຍຂອງເພິ່ນກ່ຽວກັບລັດທິສັງຄົມນິຍົມນັ້ນ ເພິ່ນບໍ່ສາມາດເວົ້າໃຫ້ສິ້ນສຸດໄດ້, ກຳມະກອນໄດ້ຫາມ ເອົາເພິ່ນອອກຈາກຫ້ອງດ້ວຍຕຽງຫາມຄົນເຈັບ. ຈາກນັ້ນບໍ່ດົນ ໂລກໄດ້ຮູ້ຂ່າວກ່ຽວກັບການເຖິງແກ່ກຳຂອງຄົນຜູ້ດີເດັ່ນນີ້ ຊຶ່ງຕະຫລອດຊີວິດໄດ້ອຸທິດໃຫ້ແກ່ການຊອກຄົ້ນຫາລະບອບສັງຄົມທີ່ມີຄວາມຍຸດຕິທຳ ແລະ ຄວາມສຸກ.

ຢູ່ໃນຫລັກທິດສະດີຂອງນັກສັງຄົມນິຍົມແບບໄຝ່ຝັນລ່ອຍເມກຜູ້ອື່ນໆທີ່ດຳລົງຊີວິດຢູ່ໃນປະເທດຕ່າງໆ ກໍມີຫລາຍອັນທີ່ເປັນໜ້າສົນໃຈ. ແຕ່ວ່າ ຕົວຢ່າງທີ່ນຳສະເໜີໃນເບື້ອງເທິງນີ້ ກໍໄດ້ວາດພາບໃຫ້ເຫັນກ່ຽວກັບ ທິດທາງແຫ່ງແນວຄິດສັງຄົມນິຍົມ. ພຽງແຕ່ໄຈ້ແຍກລັດທິສັງຄົມນິຍົມ ແບບໄຝ່ຝັນ

ລອຍເມກນັ້ນອອກເປັນຈຸດດີ ແລະ ຈຸດອ່ອນເທົ່ານັ້ນ ພວກເຮົາກໍ່ຈະສາມາດເຂົ້າໃຈ ແລະ ຕີລາຄາທິດສະດີວິທະຍາສາດ ກ່ຽວກັບການກໍ່ສ້າງສັງຄົມນິຍົມ ແລະ ກອມມູນິດຢ່າງຖືກຕ້ອງໄດ້.

## ຜູ້ເປີດສາກສັງຄົມໃໝ່

ເປັນຫຍັງ ບັນດາໂຄງຮ່າງແຫ່ງສັງຄົມມະນຸດສະທຳ ແລະ ເປັນທຳທີ່ຖືກສ້າງຂຶ້ນຢ່າງລະອຽດລະອໍແລ້ວນັ້ນ ຈຶ່ງບໍ່ໄດ້ຮັບການປະຕິບັດໃຫ້ເປັນຈິງ ແລະ ເປັນພຽງຄວາມໄຝ່ຝັນ ? ທັງນີ້ ກໍ່ຍ້ອນວ່າ ຄວາມຄິດຂອງ ອາ. ແຊງ-ຊີມົງ, ຟູຣີເຍ ແລະ ໂອອູແອນ ກ່ຽວກັບສັງຄົມນິຍົມ ແລະ ເສັ້ນທາງຂ້າມຜ່ານໄປຫາມັນນັ້ນ ເຖິງວ່າຫລັກແຫລມສົມຄວນ, ແຕ່ທັງໝົດນັ້ນເປັນພຽງການກະຕວງ, ຫາກບໍ່ແມ່ນການສະຫລຸບແບບວິທະຍາສາດ. ໂດຍແຕກຕ່າງກັບການກະຕວງນັ້ນ, ການສະຫລຸບແບບມີວິທະຍາສາດ ຍາມໃດກໍ່ແມ່ນມີ ເຫດຜົນ, ໄດ້ຜ່ານການທົດສອບ ແລະ ພິສູດຢ່າງຮອບດ້ານ. ວິທະຍາສາດ ແມ່ນຄົ້ນຄວ້າຂະບວນວິວັດ ແລະ ເຫດການຕົວຈິງ ໝາຍຄວາມວ່າ ຊີວິດຕົວຈິງ, ສ່ວນຄວາມໄຝ່ຝັນລອຍເມກນັ້ນ ຊ້ຳພັດ ອີງໃສ່ການຄິດເດົາເອົາແລະ ຄວາມໄຝ່ຝັນຂອງຄົນໃດໜຶ່ງ. ຈາກນັ້ນ ຈຶ່ງເຫັນໄດ້ເຖິງຄວາມແຕກຕ່າງທາງດ້ານຫລັກການຂອງມັນ. ແຕ່ກໍ່ມີຄຳຖາມທີ່ວ່າເປັນຫຍັງລັດທິສັງຄົມນິຍົມແບບໄຝ່ຝັນລອຍເມກ ຈຶ່ງຖືເປັນພື້ນຖານແນວຄິດ ແລະ ເປັນທີ່ມາຂອງລັດທິສັງຄົມນິຍົມວິທະຍາສາດ ? ອັນນີ້ ຈະອະທິບາຍໄດ້ວ່າ ບັນຫາທີ່ນັກສັງຄົມນິຍົມແບບໄຝ່ຝັນລອຍເມກຍົກຂຶ້ນມາ ແລະ ວິທີການສ່ວນໃດສ່ວນໜຶ່ງໃນການແກ້ໄຂ ບັນຫາດັ່ງກ່າວໄດ້ຖືກນຳໃຊ້ເຂົ້າໃນການສ້າງລັດທິກອມມູນິດວິທະຍາສາດ [໑].

---

໑) ຄວາມສຳນຶກກ່ຽວກັບ "ລັດທິສັງຄົມນິຍົມວິທະຍາສາດ" ແລະ "ລັດທິ

ຄົນອຸ້ມຜົນສຳເລັດຂອງບັນດານັກສັງຄົມນິຍົມແບບໄຝ່ຝັນລອຍເມກນັ້ນມີຫຍັງແດ່ ?

ປະການທີໜຶ່ງ, ຄຸນງາມຄວາມດີຂອງລັດທິສັງຄົມນິຍົມ ແບບໄຝ່ຝັນລອຍເມກ ທີ່ມີຕໍ່ມະນຸດເຮົາແມ່ນການຕຳນິວິຈານລະບອບນາຍທຶນ ຢ່າງດຸເດືອດ ແລະ ບໍ່ເມດຕາປານີອັນທີ່ພາໃຫ້ມີການຍົກບັນຫາກ່ຽວກັບຄວາມຈຳເປັນທີ່ຈະຕ້ອງສັບປ່ຽນລະບອບທຶນນິຍົມດ້ວຍສັງຄົມ ສັງຄົມນິຍົມທີ່ຍຸດຕິທຳ. ບົດຂຽນຕ່າງໆຂອງບັນດານັກສັງຄົມນິຍົມແບບໄຝ່ຝັນລອຍເມກ ໄດ້ຊ່ວຍໃຫ້ມີການແຜ່ຂະຫຍາຍແນວຄິດສັງຄົມນິຍົມຢູ່ໃນໝູ່ມະຫາຊົນອັນກວ້າງຂວາງ. ພິເສດແລ້ວ ແມ່ນເຂົາເຈົ້າໄດ້ສ້າງພື້ນຖານເພື່ອໃຫ້ທິດສະດີ ວິທະຍາສາດກ່ຽວກັບການກໍ່ສ້າງສັງຄົມນິຍົມສາມາດຊຶມເລິກເຂົ້າໃນສະໝອງ ແລະ ໝາກຫົວໃຈຂອງມວນຊົນຫລາຍລ້ານຄົນໄດ້ພາຍໃນໄລຍະປະຫວັດສາດອັນສັ້ນໆ.

ປະການທີສອງ, ນັກສັງຄົມນິຍົມແບບໄຝ່ຝັນລອຍເມກ ໄດ້ມອງເຫັນລັກສະນະສຳຄັນທີ່ສຸດບາງຢ່າງຂອງສັງຄົມສັງຄົມນິຍົມ ແລະ ກອມມູນິດນິຍົມ,ກ.ມາກ ແລະ ຟ.ອັງແກນເຊິ່ງເປັນຜູ້ສ້າງຕັ້ງທິດສະດີແຫ່ງລັດທິກອມມູນິດວິທະຍາສາດໄດ້ຮັບເອົາລັກສະນະສຳຄັນດັ່ງກາວ. ພວກເພິ່ນ ໄດ້ຕີລາຄາສູງຕໍ່ລັກສະນະເຫລົ່ານັ້ນຂອງລັດທິສັງຄົມນິຍົມແບບໄຝ່ຝັນລອຍເມກ.ຟ. ອັງແກນ ໄດ້ຂຽນວ່າ "...ລັດທິສັງຄົມນິຍົມເຍຍລະມັນ ບໍ່ມີ ຍາມໃດຈະຫລົງລືມໄດ້ວ່າ ແມ່ນມັນຕັ້ງຢູ່ບົນພື້ນຖານແຫ່ງຫລັກທິດສະດີຂອງນັກຄົ້ນຄິດສາມຄົນຄື: ແຊັງ-ຊີມົງ, ຟູຣິເອ, ໂອອູແອນ, ເຖິງວ່າຫລັກທິດສະດີ ຂອງເຂົາເຈົ້າເຕັມໄປດ້ວຍຄວາມໄຝ່ຝັນ ແລະ ລອຍເມກກໍ່ຕາມ, ພວກເຂົາເຈົ້າກໍ່ໄດ້ຖືກຈັດເຂົ້າຢູ່ໃນຈຳນວນບັນດານັກຄົ້ນຄິດທີ່ປັນຍາສາມາດຂອງທຸກຍຸກ ທຸກ

---

ກອມມູນິດວິທະຍາສາດ" ແມ່ນເປັນອັນໜຶ່ງອັນດຽວກັນຄື: ທິດສະດີວິທະຍາສາດກ່ຽວກັບເສັ້ນທາງ ກໍ່ສ້າງສັງຄົມສັງຄົມນິຍົມ ແລະ ການກ້າວຂຶ້ນສູ່ລັດທິກອມມູນິດນິຍົມເທື່ອລະກ້າວ.

ສະໄຫມ ຊຶ່ງໄດ້ຄາດຄະເນເຖິງສັດຈະທຳຕ່າງໆທີ່ມີຈຳນວນມາກມາຍກ່າຍກອງນັ້ນ ຢ່າງປີຊາສາມາດ, ຄວາມຖືກຕ້ອງຂອງມັນ ແມ່ນພວກເຮົາພວມພິສູດຢ່າງມີວິທະຍາສາດຢູ່ໃນປະຈຸບັນນີ້" ໑).

ບັນດານັກສັງຄົມນິຍົມແບບໄຝ່ຝັນລອຍເມກ ໄດ້ສັງເກດເຫັນ ຢ່າງຖືກຕ້ອງວ່າ ການມີກຳມະສິດເອກະຊົນຕໍ່ພາຫະນະການຜະລິດແມ່ນສາຍເຫດທີ່ພາໃຫ້ມີຄວາມບໍ່ສະເຫມີພາບທາງດ້ານເສດຖະກິດ, ຈາກນັ້ນ ເຂົາເຈົ້າກໍ່ໃຫ້ຂໍ້ສະຫລຸບວ່າ: ສັງຄົມໃຫມ່ທີ່ຍຸດຕິທຳຈະຕ້ອງສ້າງຂຶ້ນບົນພື້ນຖານກຳມະສິດສ່ວນລວມຕໍ່ພາຫະນະການຜະລິດ. ຍິ່ງໄປກວ່ານັ້ນ ແຊັງ-ຊີມົງ ໄດ້ສະເຫນີແນວຄິດອັນຖືກຕ້ອງທີ່ສຸດອອກ ກ່ຽວກັບຄວາມຈຳເປັນໃນການ ຈັດຕັ້ງເສດຖະກິດລວມສູນທີ່ເປັນເອກະພາບ ແລະການວາງແຜນເສດຖະກິດ.

ບັນດານັກສັງຄົມນິຍົມແບບໄຝ່ຝັນລອຍເມກຍັງໄດ້ໃຫ້ຄວາມເອົາໃຈໃສ່ຢ່າງຫລວງຫລາຍ ຕໍ່ບັນຫາແຮງງານ. ເຂົາເຈົ້າໄດ້ກ່າວປະນາມ ແນວຄິດເກາະຫ້ອຍກິນ ແລະ ກໍ່ໄດ້ສະເຫນີຫລັກມູນທີ່ວ່າ ການອອກແຮງງານຖືເປັນຫນ້າທີ່ອັນສຳຄັນຍິ່ງຂອງພົນລະເມືອງແຕ່ລະຄົນຢູ່ໃນສັງຄົມ. ຄວາມຄິດຂອງເຂົາເຈົ້າທີ່ຫນ້າສົນໃຈຫລາຍ ກໍ່ແມ່ນກ່ຽວກັບຄວາມອາດສາມາດ ໃນການສັບປ່ຽນການອອກແຮງງານ ແລະ ຄວາມຈຳເປັນໃນ ການຫັນເອົາການອອກແຮງງານໄປເປັນການປະດິດສ້າງ ແລະ ເປັນຄວາມຮຽກຮ້ອງຕ້ອງການອັນເປັນຕາຍຂອງຄົນຜູ້ຫນຶ່ງໆ.

ສິ່ງທີ່ມີຄວາມສຳຄັນບໍ່ຫນ້ອຍກວ່ານັ້ນ ກໍ່ແມ່ນຫລັກມູນ ທີ່ເຂົາໄດ້ຍົກຂຶ້ນມາກ່ຽວກັບການແບ່ງປັນຜົນຜະລິດ. ເປັນທີ່ຮູ້ກັນວ່າຫລັກການແຫ່ງການແບ່ງປັນຊັບສິນວັດຖຸ ແລະ ຈິດໃຈມີບົດບາດສຳຄັນໃນຊີວິດຂອງຄົນເຮົາ. ມັນເປັນຜູ້ກຳນົດຄວາມຢູ່ດີກິນດີຂອງເຂົາເຈົ້າ ແລະ ກໍ່ມີຜົນສະທ້ອນຕໍ່ການຂະຫຍາຍການຜະລິດຕໍ່ໄປຢ່າງໃຫຍ່ຫລວງ. ແຊັງ-ຊີມົງ ແລະຜູ້ສືບທອດຂອງເພິ່ນ ໄດ້ຍົກເອົາຫລັກການແບ່ງປັນຜົນຜະລິດອັນຍຸດຕິທຳອອກຄື "ແຕ່ລະຄົນເຮັດຕາມຄວາມສາມາດ ແລະ ຊົມໃຊ້ຕາມແຮງງານ" ເຊິ່ງ ປະຈຸບັນພວມໄດ້ຮັບການປະຕິບັດຢູ່ໃນຫລາຍໆປະເທດສັງຄົມນິຍົມ.

---

໑) ກ.ມາກ ແລະ ຟ.ອັງແກລ.ບົດນິພົນ, ເຫລັ້ມທີ ໑໘, ຫນ້າ໔໘-໔໙.

ແນວຄິດຂອງບັນດານັ:ສັງຄົມນິຍົມແບບໄຝ່ຝັນລອຍເມກ ຍັງມີ ຫລາຍຢ່າງຄື: ຄວາມຈຳເປັນໃຫ້ແມ່ຍິງມີສິດເທົ່າທຽມກັນກັບຜູ້ຊາຍ, ການສຶກສາອົບຮົມເດັກນ້ອຍເປັນໜ້າທີ່ຂອງສັງຄົມ ແລະ ການລົບລ້າງຄວາມແຕກຕ່າງກັນລະຫວ່າງຕົວເມືອງ ແລະ ຊົນນະບົດ ກໍໄດ້ປະກອບເຂົ້າເປັນ ທິດສະດີແຫ່ງລັດທິກອມມູນິດວິທະຍາສາດ.

ຄວາມນຶກຄິດຂອງເຂົາເຈົ້າ ກ່ຽວກັບ ຄວາມຈຳເປັນ ໃນການສ້າງເງື່ອນໄຂເພື່ອການຂະຍາຍຕົວຢ່າງຮອບດ້ານແລະ ຢ່າງສົມສ່ວນຂອງແຕ່ລະບຸກຄົນເປັນສິ່ງທີ່ມີຄຸນຄ່າພິເສດ. ແນວຄິດອັນມີມະນຸດສະທຳດັ່ງກ່າວ ໄດ້ສະແດງອອກຢູ່ໃນທິດສະດີແຫ່ງລັດທິກອມມູນິດວິທະຍາສາດ ແລະພວມເຮັດໃຫ້ປະກົດຜົນເປັນຈິງຢູ່ໃນບັນດາປະເທດສັງຄົມນິຍົມ ພ້ອມໆກັບ ຜົນສຳເລັດຂອງປະເທດເຫລົ່ານັ້ນໃນການສ້າງສັງຄົມໃໝ່.

ປະການທີສາມ, ຄວນຢ້ຳເຖິງຄຸນງາມຄວາມດີໜຶ່ງອີກ ຂອງລັດທິສັງຄົມນິຍົມ ແບບໄຝ່ຝັນລອຍເມກທີ່ມີຕໍ່ມວນມະນຸດ.

ຫລັກທິດສະດີຂອງ ແຊັງ-ຊີມົງ, ຟູຣີເອ ແລະ ໂອອູແອນ ເປັນຜົນສຳເລັດສູງສົ່ງອັນໜຶ່ງ, ເປັນຈຸດສູງສຸດຂອງລັດທິສັງຄົມນິຍົມແບບ ໄຝ່ຝັນລອຍເມກ. ແຕ່ພ້ອມກັນນັ້ນ ເຖິງວ່າມີຄວາມພະຍາຍາມຫລາຍຄັ້ງ ຫລາຍຫົນ ທີ່ຢາກເຮັດໃຫ້ແນວຄິດເຫລົ່ານີ້ປະກົດເປັນຈິງກໍຕາມ ກໍເປັນເລື່ອງ ທີ່ຈະແຈ້ງວ່າ ແນວຄິດເຫລົ່ານີ້ຈະນຳເອົາໄປປະຕິບັດໃນພາກຕົວຈິງ ບໍ່ໄດ້ດອກ. ພຶດຕິກຳຕົວຈິງ ເປັນສິ່ງຢັ້ງຢືນໃຫ້ແກ່ຄວາມຖືກຕ້ອງ ແລະ ລັກສະນະມີວິທະຍາສາດ ຂອງທຸກໆທິດສະດີ, ພຶດຕິກຳຕົວຈິງເປັນສິ່ງທີ່ນຳເອົາການຕັດສິນສຸດທ້າຍ ມາໃຫ້ແກ່ທຸກໆຫລັກທິດສະດີທາງສັງຄົມ. ສະຫລຸບ ໄດ້ວ່າ ຄວາມບໍ່ອາດສາມາດເຮັດໃຫ້ໂຄງຮາງ ຂອງບັນດານັກສັງຄົມນິຍົມແບບໄຝ່ຝັນລອຍເມກ ປະກົດເປັນຈິງໄດ້ນັ້ນ ຢັ້ງຢືນໃຫ້ເຫັນວ່າ ໂຄງຮາງເຫຼົ່ານັ້ນ ແມ່ນບໍ່ຖືກຕ້ອງ ແລະ ບໍ່ມີເຫດຜົນໃນດ້ານທິດສະດີ.

ລັດທິສັງຄົມນິຍົມແບບໄຝ່ຝັນລອຍເມກເປັນ "ອາການເຈັບປ່ວຍ" ໜຶ່ງທີ່ມະນຸດເຮົາຕ້ອງໄດ້ "ຜ່ານ" ກ່ອນຈະກ້າວໄປສູ່ການເຂົ້າໃຈຕົວຈິງແລະ ຢ່າງມີວິທະຍາສາດ ກ່ຽວກັບກົດເກນແຫ່ງການຂະຫຍາຍຕົວ ຂອງສັງຄົມ ແລະ ເສັ້ນທາງດັດສ້າງມັນ. ຖ້າວ່າບໍ່ມີບົດຮຽນຂອງນັກສັງຄົມນິຍົມ ແບບ

ໄຝ່ຝັນລອຍເມກແລ້ວ ຄົນເຮົາຈະເກີດມີຄວາມມຸ່ງມາດປາດຖະໜາ ຄັ້ງແລ້ວຄັ້ງເລົ່າທີ່ຢາກດັດສ້າງໂລກໂດຍປາສະຈາກການຕໍ່ສູ້ ໂດຍຜ່ານ ການໂຄສະນາຂົນຂວາຍແນວຄິດແຫ່ງຄວາມຍຸດຕິທຳ. ແບບຢ່າງຂອງເຂົາເຈົ້າໄດ້ຊີ້ບອກຢ່າງຈະແຈ້ງວ່າ ຕ້ອງຊອກຫາເສັ້ນທາງໃໝ່ທາງດ້ານຫລັກການເພື່ອຂ້າມຜ່ານໄປຫາຊີວິດໃໝ່. ໝາຍຄວາມວ່າ ລັດທິສັງຄົມນິຍົມ ແບບໄຝ່ຝັນລອຍເມກເປັນໄລຍະເວລາອັນຈຳເປັນໜຶ່ງ ຢູ່ໃນການຂະຫຍາຍຕົວຂອງແນວຄິດສັງຄົມນິຍົມ. ມັນມີບົດບາດອັນດີ ຢູ່ໃນການກະກຽມ ໃຫ້ການກຳເນີດຂອງທິດສະດີວິທະຍາສາດ. ດ້ວຍເຫດນັ້ນ ມວນມະນຸດ ຜູ້ກ້າວໜ້າ ຕ່າງກໍ່ສະແດງຄວາມເຄົາລົບອັນເລິກເຊິ່ງຕໍ່ບັນດານັກຄົ້ນຄິດສັງຄົມນິຍົມຜູ້ດີເດັ່ນ ທີ່ໄດ້ຊອກຄົ້ນຫາວິທີການຂ້າມຜ່ານໄປສູ່ການມີຊີວິດອັນສຸກສຳລານ ຊຶ່ງໄດ້ຜ່ານຄວາມທຸກຍາກ ແລະ ທໍລະມານຢູ່ບົນເສັ້ນທາງ ອັນຮົກເຮື້ອນັ້ນ.

ໃນສະຕະວັດທີ ໑໙ ແນວຄິດຂອງນັກສັງຄົມນິຍົມແບບໄຝ່ຝັນລອຍເມກໄດ້ແຜ່ຂະຫຍາຍອອກບໍ່ພຽງແຕ່ຢູ່ໃນເອີລົບ, ແຕ່ກໍ່ຢູ່ໃນທະວີບອື່ນໆອີກແລະຍັງເປັນທີ່ຮູ້ຈັກຢູ່ໃນບັນດາປະເທດ ອາເມລິກາລາຕິນ ໂດຍໄດ້ສົ່ງຜົນສະທ້ອນອັນດີຕໍ່ການຕໍ່ສູ້ເພື່ອຄວາມເປັນເອກະລາດແຫ່ງຊາດ ຂອງປະຊາຊາດເຫລົ່ານັ້ນ.

ແນວຄິດຂອງລັດທິສັງຄົມນິຍົມແບບໄຝ່ຝັນລອຍເມກ ແລະ ລັດທິປະຊາທິປະໄຕຢູ່ໃນບັນດາປະເທດຂອງທະວີບເອີລົບ, ອາເມລິກາ, ອາຊີ ແລະ ອາຟລິກາ ໄດ້ກະກຽມພື້ນທີ່ສຳລັບການແຜ່ຂະຫຍາຍລັດທິມາກໄປທົ່ວໂລກ.

### ເປັນຫຍັງ ເຂົາເຈົ້າຈຶ່ງເປັນນັກໄຝ່ຝັນລອຍເມກ ?

ຄວາມຈຳກັດທາງປະຫວັດສາດຂອງລັດທິສັງຄົມນິຍົມ ແບບໄຝ່ຝັນລອຍເມກສະແດງອອກຢ່າງເດັ່ນຊັດຢູ່ບ່ອນໃດ ?

ບັນດານັກລັງຄົມນິຍົມ ແບບໄຟຝັນລອຍເມກ ໄດ້ຕຳນິວິຈານ ລະບຽບການຂອງນາຍທຶນ, ແຕ່ເຂົາເຈົ້າ ບໍ່ສາມາດຄົ້ນພົບສິ່ງສຳຄັນທີ່ສຸດຂອງມັນໄດ້ນັ້ນ ແມ່ນກົດເກນແຫ່ງການດຳເນີນງານ ແລະ ຂະຫຍາຍຕົວຂອງ ສັງຄົມນາຍທຶນ ກໍຄື ຄວາມຂັດແຍ່ງທີ່ຈະນຳເອົາມັນໄປສູ່ຄວາມຫາຍະນະ . ເຂົາເຈົ້າເຫັນໄດ້ພຽງແຕ່ປະກົດການຂອງມັນຊື່ໆ.

ນັກສັງຄົມນິຍົມແບບໄຟຝັນລອຍເມກ ກໍເຫັນພຽງເປືອກນອກຂອງລັດທິທຶນນິຍົມ, ແຕ່ເຂົາເຈົ້າບໍ່ສາມາດຄົ້ນພົບອັນຊົ່ວຮ້າຍທີ່ແທ້ຈິງຂອງແບບ ວິທີການຜະລິດຂອງທຶນນິຍົມ, ບໍ່ເຫັນເຖິງກຳລັງຕົວຈິງຊຶ່ງສາມາດດັບສູນລັດທິທຶນນິຍົມ ແລະ ກໍ່ສ້າງສັງຄົມໃຫມ່ທີ່ຍຸດຕິທຳ. ໃນເວລານັ້ນ ຊົນຊັ້ນກຳມາຊີບຫາກໍ່ພວມກໍ່ຮ່າງສ້າງຕົວ ແລະ ບໍ່ທັນສາມາດດຳເນີນ ການເຄື່ອນໄຫວທາງດ້ານການເມືອງຢ່າງເປັນເອກະລາດໄດ້ເທື່ອ. ດ້ວຍເຫດນັ້ນ ນັກສັງຄົມນິຍົມແບບໄຟຝັນລອຍເມກຈຶ່ງຖືຊາວຜູ້ອອກແຮງງານເປັນພຽງກຳລັງທີ່ຖືກກົດຂີ່ ແລະ ໄດ້ຮັບຄວາມທຸກທໍລະມານ ຊຶ່ງຕ້ອງອີງໃສ່ການຊ່ວຍເຫລືອຈາກທາງນອກ, ຈາກກຸ່ມຄົນທີ່ມີລະດັບການສຶກສາຈຳນວນຫນຶ່ງ. ນັກສັງຄົມນິຍົມແບບໄຟຝັນລອຍເມກ ບໍ່ສາມາດຊອກເຫັນເສັ້ນທາງອັນຖືກຕ້ອງ ທີ່ເນື່ອງໄປຫາສັງຄົມໃຫມ່ນັ້ນຄື ເສັ້ນທາງແຫ່ງການຕໍ່ສູ້ແບບປະຕິວັດ ແລະການປະຕິວັດສັງຄົມນິຍົມ. ຄວາມຫວັງອັນຕົ້ນຕໍ ແມ່ນເຂົາເຈົ້າອີງໃສ່ຄຳອະທິບາຍ ແລະ ການໂຄສະນາແນວຄິດຂອງຕົນເອງ. ສະນັ້ນ ເຂົາເຈົ້າຈຶ່ງຈຳເປັນຕ້ອງໄດ້ "ສ້າງບັນດາສ່ວນປະກອບຂອງສັງຄົມໃຫມ່ດ້ວຍຄວາມຄິດຂອງຕົນເອງ, ເພາະວ່າຢູ່ໃນສັງຄົມເກົ່ານັ້ນ ສ່ວນປະກອບເຫລົ່ານີ້ ຍັງບໍ່ທັນສະແດງອອກຢ່າງເດັ່ນຊັດ ເພື່ອໃຫ້ທຸກຄົນເຫັນໄດ້" ໑) .

ຈະຊອກເຫັນເສັ້ນທາງອັນຖືກຕ້ອງ ໃນການຂ້າມຜ່ານໄປຫາ ລະບອບສັງຄົມນິຍົມ ແລະ ຄົ້ນພົບກົດເກນຂອງສັງຄົມໃນອະນາຄົດນັ້ນໄດ້ ກໍຕໍ່ເມື່ອຮັບຮູ້ກ່ຽວກັບຄວາມຂັດແຍ່ງຂອງສັງຄົມນາຍທຶນ. ດ້ວຍເຫດວ່າ ນັກສັງຄົມນິຍົມແບບໄຟຝັນລອຍເມກ ບໍ່ສາມາດບັນລຸເຖິງສິ່ງດັ່ງກ່າວ, ດັ່ງນັ້ນ ເຂົາ

---

໑) ກ.ມາກ ແລະ ຟ.ອັງແກນ. ບົດນິພົນ, ເຫລັ້ມທີ ໔໐, ຫນ້າ ໔໗໘.

ເຈົ້າ ຈຶ່ງບໍ່ສາມາດຄົ້ນຄິດເຖິງບັນຫາຕ່າງໆຢ່າງມີວິທະຍາສາດໄດ້.

ສາຍເຫດອັນໃດທີ່ພາໃຫ້ລັດທິສັງຄົມນິຍົມແບບໄຝ່ຝັນລອຍເມກ ຕ້ອງຖືກຈຳກັດ ? ສາຍເຫດດັ່ງກ່າວ ແມ່ນນອນຢູ່ໃນບັນດາເງື່ອນໄຂພາວະວິໄສທີ່ມີຢູ່ໃນຄາວນັ້ນ. ຈະແມ່ນແນວໃດກໍ່ຕາມ ທິດສະດີຍາມໃດກໍ່ສ່ອງແສງເຖິງພຶດຕິກຳຕົວຈິງ. ຊີວິດສັງຄົມໃນເວລານັ້ນ ບໍ່ທັນສຸກງອມສຳລັບ ການຂ້າມຜ່ານໄປສູ່ລະບອບສັງຄົມນິຍົມ, ດ້ວຍເຫດນັ້ນ ຈຶ່ງພາໃຫ້ທິດສະດີແຫ່ງລັດທິສັງຄົມນິຍົມອັນບໍ່ສຸກງອມເກີດຂຶ້ນຢ່າງຫລີກລ່ຽງບໍ່ໄດ້.

ເມື່ອໄດ້ທຳຄວາມຮູ້ຈັກກັບລັດທິສັງຄົມນິຍົມແບບໄຝ່ຝັນລອຍເມກ ແລ້ວສາມາດສະຫລຸບໄດ້ແນວໃດແດ່ ? ເປັນຫຍັງຈຶ່ງຈຳເປັນຕ້ອງຮູ້ຈັກມັນ ?

ປະການທີໜຶ່ງ, ການຄົ້ນຄວ້າລັດທິສັງຄົມນິຍົມແບບໄຝ່ຝັນລອຍເມກນີ້ຊີ້ບອກວ່າ ບັນດາຜູ້ມີແນວຄິດອັນກ້າວໜ້າໃນປະເທດຕ່າງໆມຸ່ງໝາຍຢາກສ້າງຕັ້ງສັງຄົມອັນຍຸດຕິທຳມາແຕ່ດົນນານພຸ້ນ. ໝາຍຄວາມວ່າ ສັງຄົມນິຍົມທີ່ເປັນຈິງນີ້ ບໍ່ແມ່ນປະກົດການບັງເອີນຂອງປະຫວັດສາດ, ແຕ່ແມ່ນການເຮັດໃຫ້ຄວາມໄຝ່ຝັນ ຂອງມວນມະນຸດ ທີ່ມີມາຫລາຍສະຕະວັດແລ້ວ ນັ້ນກາຍເປັນຄວາມຈິງ.

ປະການທີສອງ, ແມ່ນການພົວພັນແບບທຶນນິຍົມທີ່ບໍ່ທັນສຸກງອມນັ້ນທີ່ພາໃຫ້ເກີດລັດທິສັງຄົມນິຍົມແບບໄຝ່ຝັນລອຍເມກ. ແຕ່ການພົວພັນເຊັ່ນນີ້ ຍັງຄົງມີຢູ່ໃນຫລາຍປະເທດ, ປະຈຸບັນ ມີບັນດາປະຊາຊາດ ແລະປະເທດຈຳນວນບໍ່ໜ້ອຍທີ່ພວມຢູ່ໃນໄລຍະປະຫວັດສາດແຫ່ງການຂະຫຍາຍຕົວເຊັ່ນນີ້. ດ້ວຍເຫດນັ້ນ ຢູ່ໃນຂົງເຂດຕ່າງໆຂອງໂລກ ຈຶ່ງເກີດມີບັນດາທິດສະດີ ທີ່ຄ້າຍຄືກັນທີ່ສຸດ ກັບທິດສະດີທີ່ນັກສັງຄົມນິຍົມແບບໄຝ່ຝັນລອຍເມກ ໄດ້ເຄີຍສະເໜີອອກ. ສະຫລຸບຄວາມວ່າ ການເຂົ້າໃຈລັດທິສັງຄົມນິຍົມ ໄຝ່ຝັນລອຍເມກຈະຊ່ວຍໃຫ້ຈຳແນກຢ່າງຖືກຕ້ອງກ່ຽວກັບແນວຄິດຕ່າງໆຂອງຍຸກສະໄໝປະຈຸບັນໄດ້ ແລະ ໃຫ້ການຕີລາຄາທິດສະດີທີ່ປະກົດວ່າ ເປັນອັນໃໝ່, ແຕ່ໃນຕົວຈິງແມ່ນອັນເກົ່າ ຊຶ່ງວັນເວລາໄດ້ປະຕິເສດໄປແລ້ວນັ້ນ.

ປະການທີສາມ, ບັນດານັກແນວຄິດນາຍທຶນ ພະຍາຍາມໃສ່ຮ້າຍປ້າຍສີທິດສະດີ ແລະ ພຶດຕິກຳຂອງສັງຄົມນິຍົມ, ເພື່ອເປົ້າໝາຍອັນນັ້ນ ພວກ

ເອົາໄດ້ເສກສັນປັ້ນແຕ່ງ ແລະ ບິດເບືອນປະຫວັດສາດແຫ່ງແນວຄິດສັງຄົມນິຍົມ. ພວກປົກປ້ອງລັດທິທຶນນິຍົມ ພະຍາຍາມສວຍໃຊ້ດ້ານທີ່ອ່ອນສຸດຂອງລັດທິສັງຄົມນິຍົມແບບໄຝ່ຝັນລອຍເມກ ເພື່ອບິດເບືອນມັນແລ້ວເຮັດໃຫ້ ມັນເປັນອັນດຽວກັນກັບລັດທິກອມມູນິດວິທະຍາສາດ. ຍົກຕົວຢ່າງເຊັ່ນການໂຄສະນາຂອງພວກນາຍທຶນ ມັກກ່າວຫານັກກອມມູນິດວ່າເປັນຜູ້ມຸ່ງໝາຍຢາກສ້າງຕັ້ງລະບອບໜຶ່ງອັນ ເຊິ່ງຢູ່ທີ່ນັ້ນ ທຸກສິ່ງທຸກຢ່າງກໍ່ເປັນອັນລວມກັນຄື: ເຮືອນຢູ່ອາໄສ, ເຄື່ອງນຸ່ງ, ອາຫານການກິນ, ຄວາມຮຽກຮ້ອງຕ້ອງ - ການ, ລົດນິຍົມ ແລະ ຄວາມມຸ່ງມາດປາດຖະໜາຂອງຄົນ. ຄືຈັ່ງວ່າໝົດທຸກຄົນຄືກັນອ້ອຍຕ້ອຍເໝືອນຝູງມົດໃນປ່າ. ບໍ່ມີຫຍັງຈະຜິດພາດ ໄປກວ່າການວາດພາບເຊັ່ນນັ້ນ ກ່ຽວກັບຄົນໃນສັງຄົມສັງຄົມນິຍົມ. ຕົວຈິງແລ້ວແມ່ນພາຍໃຕ້ລັດທິສັງຄົມນິຍົມນັ້ນເອງ ທີ່ແຕ່ລະຄົນໄດ້ຮັບຄວາມອາດສາມາດອັນກ້ວາງຂວາງ ສໍາລັບການຂະຫຍາຍພອນສະຫວັນ, ສະຕິປັນຍາ, ຄວາມສາມາດ ແລະ ສໍາລັບການສະແດງໃຫ້ເຫັນບຸກຄະລິກລັກສະນະຂອງຕົນເອງ. ບັນດານັກສັງຄົມນິຍົມຜູ້ທໍາອິດກໍ່ໄດ້ໄຝ່ຝັນຫາສິ່ງດັ່ງກ່າວ. ດັ່ງນັ້ນ ຄວາມຮູ້ກ່ຽວກັບລັດທິສັງຄົມນິຍົມແບບໄຝ່ຝັນລອຍເມກ ຊ່ວຍກໍາຈັດປັດເປົ່າ ການເວົ້າບໍ່ມີຄວາມຈິງ ແລະ ການໃສ່ຮ້າຍປ້າຍສີລະບອບໃໝ່ຊຶ່ງມີເປົ້າໝາຍຕົ້ນຕໍ ເພື່ອທໍາຄວາມເສຍຫາຍໃຫ້ແກ່ແນວຄິດ ຂອງລັດທິສັງຄົມນິຍົມ.

ປະການທີ່ສີ່, ການທໍາຄວາມຮູ້ຈັກກັບລັດທິສັງຄົມນິຍົມແບບໄຝ່ຝັນລອຍເມກນັ້ນ ບໍ່ພຽງແຕ່ໄດ້ຊ່ວຍໃຫ້ເຫັນເຖິງສາຍພົວພັນລະຫວ່າງລັດທິສັງຄົມນິຍົມແບບໄຝ່ຝັນລອຍເມກກັບລັດທິກອມມູນິດວິທະຍາສາດເທົ່ານັ້ນແຕ່ຍັງຊ່ວຍໃຫ້ແຍກຄວາມແຕກຕ່າງທາງຫລັກການຂອງມັນອີກດ້ວຍ. ອັນທໍາອິດນັ້ນແມ່ນຄວາມໄຝ່ຝັນ, ຄວາມລອຍເມກ, ອັນທີສອງ ແມ່ນທິດສະດີວິທະຍາສາດຊຶ່ງໃນທຸກວັນນີ້ ພວມໄດ້ຖືກນໍາໄປປະຕິບັດໃຫ້ເປັນຈິງຢູ່ໃນທະວີບຕ່າງໆ ຂອງໂລກ.

ລັດທິສັງຄົມນິຍົມ ໄດ້ຖືກຫັນປ່ຽນຈາກຄວາມໄຝ່ຝັນລອຍເມກ ມາເປັນວິທະຍາສາດດ້ວຍວິທີໃດ ? ກ່ຽວກັບເລື່ອງນີ້ ຈະສະເໜີຢູ່ໃນອັນຕໍ່ໄປ.

## ບົດທີ ໔. ການສ້າງລັດທິກອມມູນິດວິທະຍາສາດ

ລັດທິກອມມູນິດວິທະຍາສາດນີ້ ເກີດມາຈາກຄວາມຮຽກຮ້ອງຕ້ອງການຂອງຄວາມເປັນຈິງຂອງສັງຄົມນັ້ນເອງ ແຕ່ວ່າແມ່ນບັນດາຫລັກທິດສະດີສັງຄົມນິຍົມ ທີ່ມີຢູ່ກ່ອນແລ້ວນັ້ນ ເປັນຜູ້ກະກຽມໃຫ້ແກ່ການກຳເນີດຂຶ້ນຂອງມັນ ເງື່ອນໄຂທີ່ພາໃຫ້ເກີດວິທະຍາສາດດັ່ງກ່າວຂຶ້ນໃນຊີວິດຕົວຈິງມີອັນໃດແດ່?

ລັດທິກອມມູນິດວິທະຍາສາດ ກຳເນີດຂຶ້ນໃນກາງສະຕະວັດທີ ໑໙. ໃນເວລານັ້ນ ລະບອບທຶນນິຍົມຢູ່ໃນບາງປະເທດເອີລົບຕາເວັນຕົກ ໄດ້ກ້າວຂຶ້ນເຖິງລະດັບການຂະຫຍາຍຕົວສູງ. ພ້ອມກັນນັ້ນ ຄວາມຂັດແຍ່ງພາຍໃນເຊິ່ງເປັນລັກສະນະສະເພາະຂອງມັນກໍເພີ່ມທະວີຂຶ້ນ, ການຕໍ່ສູ້ ລະຫວ່າງຊົນຊັ້ນກຳມາຊີບ ແລະ ນາຍທຶນກໍເຄັ່ງຕຶງ ແລະ ຂະຫຍາຍຕົວອອກ.ຢູ່ໃນເວທີແຫ່ງປະຫວັດສາດໄດ້ປະກົດມີຊົນຊັ້ນໃຫມ່ ນັ້ນຄືຊົນຊັ້ນກຳມະກອນ.ຊົນຊັ້ນກຳມະກອນ ໄດ້ປະກາດຕົນເອງເປັນຄືກຳລັງການເມືອງຫນຶ່ງທີ່ເປັນເອກະລາດ ເຊິ່ງສະແດງອອກດ້ວຍຂະບວນການລຸກຮືຂຶ້ນ ຂອງກຳມະກອນເມືອງ ລີອົງ ຢູ່ຝະລັ່ງ, ຂະບວນກົດບັດຢູ່ອັງກິດ, ຂະບວນປະທ້ວງ ຂອງກຳມະກອນຕໍ່າແຜ່ນຢູ່ ຊີເລຊີ ໃນປະເທດເຢຍລະມັນ ແລະ ຂະບວນການສັງຄົມອື່ນໆ. ການຕໍ່ສູ້ແບບປະຕິວັດຂອງຊົນຊັ້ນກຳມາຊີບ ຕ້ານກັບນາຍທຶນນັບມື້ນັບມີລັກສະນະດຸເດືອດ ແລະ ກວມເອົາທຸກປະເທດ.ເປັນອັນວ່າຖ້າບໍ່ມີການກຳແຫນ້ນຄວາມຫມາຍກ່ຽວກັບການຕໍ່ສູ້ດັ່ງກ່າວແລ້ວ ກໍບໍ່ສາມາດຄົ້ນຄວ້າເຖິງຍຸກສະໄຫມປະຈຸບັນ, ຄິດຫາອະນາຄົດ ແລະສ້າງໂຄງຮ່າງຂອງສັງຄົມໃຫມ່ຢ່າງຈິງຈັງໄດ້. ຂະບວນການ ຂອງຊົນຊັ້ນກຳມະກອນໃນເວລານັ້ນ ເປັນສິ່ງທີ່ສ້າງເງື່ອນໄຂໃຫ້ແກ່ການຫັນປ່ຽນວິທີການຕີລາຄາຕໍ່ເຫດ

ການທີ່ເກີດຂຶ້ນ.

ສ່ວນນາຍທຶນ, ມັນຕ້ອງການພຽງແຕ່ຄວາມຮູ້ກ່ຽວກັບຊີວິດສັງຄົມ ຊຶ່ງຈະນຳເອົາກຳໄລມາ ຮັບປະກັນໃຫ້ແກ່ການດຳເນີນທຸລະກິດຢ່າງເສລີແລະປົບປຸງການຄອບຄອງທາງຊົນຊັ້ນຂອງມັນເທົ່ານັ້ນ. ໂດຍແຕກຕ່າງກັບນາຍທຶນ, ຊົນຊັ້ນກຳມາຊີບ ແມ່ນລົມໃຈນຳການຮັບຮູ້ຢ່າງເລິກເຊິ່ງ ກ່ຽວກັບຊີວິດສັງຄົມທັງໝົດ, ກົດເກນແຫ່ງການດຳເນີນງານ ແລະ ຂະຫຍາຍຕົວຂອງມັນ. ຍ້ອນຫຍັງ ? ຍ້ອນວ່າຊີວິດຂອງຊົນຊັ້ນກຳມາຊີບ ຕິດພັນກັບທຸກອົງເຂດສັງຄົມ, ນອກຈາກນັ້ນ ຊົນຊັ້ນກຳມາຊີບ ຍັງເປັນຕົວແທນ ໃຫ້ແກ່ທ່າອຽງອັນກ້າວໜ້າໃນການພັດທະນາສັງຄົມນັ້ນ. ເພື່ອຈະປົດປ່ອຍ ຕົນເອງໄດ້, ຊົນຊັ້ນກຳມາຊີບບໍ່ພຽງແຕ່ຕ້ອງເຂົ້າໃຈຕົນເອງ ເທົ່ານັ້ນ, ແຕ່ຫາກຍັງຕ້ອງມອງເບິ່ງສັງຄົມນາຍທຶນຢ່າງຖືກຕ້ອງ ແລະ ຢ່າງບໍ່ໃຫ້ມີ ສິ່ງລວງຕາ ກໍຄື ຕ້ອງໃຫ້ເຂົ້າໃຈສັງຄົມນາຍທຶນນັ້ນ. ແຕ່ວ່າລະບອບທຶນນິຍົມ ເປັນພຽງຂັ້ນຕອນອັນໜຶ່ງ ຢູ່ໃນຂັ້ນໄດທາງສັງຄົມຂອງການຂະຫຍາຍຕົວຂອງມວນມະນຸດ. ສະຫລຸບຄວາມວ່າ ເພື່ອຈະຈຳແນກ ແລະ ຜ່ານຜ່າມັນໄດ້ ຈະຕ້ອງຄິດຄົ້ນຄວາມໝາຍ ທັງໝົດຂອງປະຫວັດສາດແຫ່ງການຂະຫຍາຍຕົວຂອງມວນມະນຸດ.

ດັ່ງນັ້ນ ຄວາມຮຽກຮ້ອງຕ້ອງການຂອງຊົນຊັ້ນກຳມາຊີບ ໃນການຮັບຮູ້ຢ່າງມີວິທະຍາສາດ ກ່ຽວກັບກົດເກນແຫ່ງການຂະຫຍາຍຕົວຂອງສັງຄົມນັ້ນເປັນຄວາມຮຽກຮ້ອງຕ້ອງການອັນເປັນຕາຍຂອງເຂົາເຈົ້າ. ຖ້າບໍ່ມີຄວາມຮູ້ຢ່າງມີວິທະຍາສາດແລ້ວ, ຊົນຊັ້ນກຳມາຊີບ ກໍຈະບໍ່ສາມາດດຳເນີນການຕໍ່ສູ້ເພື່ອເຮັດໃຫ້ສະພາບຂອງຕົນດີຂຶ້ນ ແລະ ເພື່ອຕອບສະໜອງ ຄວາມຮຽກຮ້ອງຕ້ອງການຂັ້ນພື້ນຖານຂອງຕົນໃຫ້ສຳເລັດຜົນໄດ້. ຊາວຜູ້ອອກແຮງງານ ຕ້ອງການທິດສະດີວິທະຍາສາດອັນເປັນຄືອາວຸດທີ່ມີອານຸພາບ ທາງດ້ານຈິດໃຈ. ກ.ມາກ ແລະ ຟ.ອັງແກລ ໄດ້ສ້າງອາວຸດເຊັ່ນນັ້ນ ຂຶ້ນມາ, ພວກເພິ່ນໄດ້ຫັນປ່ຽນເອົາລັດທິສັງຄົມນິຍົມ ອອກຈາກຄວາມຝັນ, ຄວາມລອຍເມກມາເປັນວິທະຍາສາດ ແລະ ປະກອບເປັນອາວຸດໃຫ້ຊາວກຳມາ-ຊີບ. ພວກເພິ່ນໄດ້ສ້າງລັດທິສັງຄົມນິຍົມວິທະຍາສາດຂຶ້ນ.

## ຈາກຄວາມໄຝ່ຝັນລອຍເມກ ກ້າວໄປສູ່ວິທະຍາສາດ

<u>ການເຂົ້າໃຈປະຫວັດສາດແບບວັດຖຸນິຍົມ.</u> ກ່ອນ ກ. ມາກ ແລະ ຟ. ອັງແກນນັ້ນ ບັນດານັກຄົ້ນຄິດທັງໝົດ ລ້ວນແຕ່ເປັນນັກຈິດຕະນິຍົມ ຢູ່ໃນການອະທິບາຍປະຫວັດສາດຂອງມະນຸດເຮົາ. ເຂົາເຈົ້າຖືວ່າ ກຳລັງ ອັນສຳຄັນທີ່ເຮັດໃຫ້ສັງຄົມຂະຫຍາຍຕົວ ແມ່ນແນວຄິດ, ທິດສະດີ ແລະ ສະຕິສຳນຶກຂອງຄົນເຮົາ. ດັ່ງນັ້ນຕາມຄຳເຫັນຂອງເຂົາເຈົ້າແລ້ວ, ສິ່ງທີ່ເປັນອິດໝາຍແຫ່ງຄວາມກ້າວໜ້າຂອງສັງຄົມແມ່ນການປະກົດຕົວຂອງຫລັກທິດສະດີອັນໃໝ່ ແລະ ການແຜ່ຂະຫຍາຍຄວາມຮູ້. ນັກປັດຊະຍາຈຳນວນໜຶ່ງ ຖືວ່າ ການຂ້າມຜ່ານຂອງມວນມະນຸດໄປຫາໄລຍະໃໝ່ ແຫ່ງການຂະຫຍາຍຕົວ ແມ່ນຍ້ອນມີການປ່ຽນແປງຢູ່ໃນສາສະໜາ, ຈຳນວນໜຶ່ງອີກພັດຖືວ່າ: ຍ້ອນມີການປ່ຽນແປງຢູ່ໃນສິລະປະກຳ ແລະ ຈຳນວນທີສາມ ຖືວ່າ ແມ່ນຍ້ອນການປ່ຽນແປງຢູ່ໃນວິທະຍາສາດ. ອາດຈະລວບລວມກະແສ ແນວຄິດຂອງພວກເຂົານັ້ນໄດ້ດັ່ງຕໍ່ໄປນີ້:

ສິ່ງທີ່ເປັນຜູ້ກຳນົດວ່າຄົນນັ້ນ ແມ່ນຄົນດີ ຫລືບໍ່ດີນັ້ນ ກໍຄື ສະພາບແວດລ້ອມ ແລະ ເງື່ອນໄຂແຫ່ງຊີວິດ. ສະນັ້ນ ເພື່ອເຮັດໃຫ້ຄົນເຮົາດີຂຶ້ນແມ່ນຈະຕ້ອງດັດແປງສະພາບການດຳລົງຊີວິດ ຂອງຄົນ. ນີ້ແມ່ນຄວາມຄິດທີ່ຜູ້ຂຽນ ກໍເຫັນດີນຳ. ແຕ່ການປ່ຽນແປງສະພາບແວດລ້ອມ ແລະເງື່ອນໄຂແຫ່ງການດຳລົງຊີວິດຂອງຄົນນັ້ນ ແມ່ນຂຶ້ນກັບຫຍັງ ? ພວກຈິດຕະນິຍົມມີຄວາມເຫັນແບບດຽວກັນວ່າ ມັນຂຶ້ນຢູ່ກັບແນວຄິດ, ເຈດຈຳນົງ, ສະຕິ-ສຳນຶກ, ຄວາມມີມະນຸດສະທຳ ແລະ ລະດັບການສຶກສາຂອງກຸ່ມຄົນ ໃດໜຶ່ງຄື: ເຈົ້າຊີວິດ, ນາຍທະຫານ, ນັກກົດໝາຍ ແລະ ນັກຄົ້ນຄິດ.ແຕ່ວ່າເປັນໄປໄດ້ບໍ ທີ່ຄົນຈຳພວກເຫລົ່ານີ້ ຈະປ່ຽນແປງໂລກໄດ້ ຕາມຄວາມມັກຂອງຕົນເອງ ? ກ່ອນ ກ.ມາກ ແລະ ຟ.ອັງແກນ ບໍ່ມີໃຜສາມາດໃຫ້ຄຳຕອບຕໍ່ບັນຫາອັນສຳຄັນນີ້ໄດ້ຢ່າງຖືກຕ້ອງແລະມີເຫດຜົນທາງດ້ານວິທະຍາສາດ.

ການເຂົ້າໃຈປະຫວັດສາດແບບຈິດຕະນິຍົມນັ້ນ ພາໃຫ້ມີການສະຫລຸບທີ່

ວ່າສັງຄົມ ຖືກປ່ຽນແປງໄດ້ກໍ່ຕໍ່ເມື່ອມີການແຜ່ຂະຫຍາຍແນວຄິດອັນໃຫມ່ແລະມີການຍົກລະດັບການສຶກສາໃຫ້ສູງຂຶ້ນ. ຕາມທັດສະນະດັ່ງກ່າວ, ຕັກກະປັນຍາເປັນສິ່ງທີ່ລົບລ້າງຄວາມຂາດຕົກບົກພ່ອງຂອງລະບອບສັງຄົມທີ່ພວມ ຄົງຕົວຢູ່ນັ້ນ ແລະ ເປັນສິ່ງທີ່ປະດິດສ້າງລະບົບໃຫມ່ທີ່ດີກວ່າ ແລະ ເຮັດໃຫ້ສັງຄົມຮັບເອົາມັນໂດຍຜ່ານການໂຄສະນາແບບຢ່າງອັນດີ.

ບັນດານັກສັງຄົມນິຍົມແບບໄຜ່ຝັນລອຍເມກ ເຂົ້າໃຈຊີວິດຂອງ ສັງຄົມແບບຈິດຕະນິຍົມ. ສິ່ງດັ່ງກ່າວ ໄດ້ສະແດງອອກຢູ່ໃນເນື້ອໃນຂອງທິດສະດີ ແລະ ຢູ່ໃນວິທີການປ່ຽນແປງຊີວິດທີ່ເຂົາເຈົ້າສະເຫນີອອກມາ. ລັດທິຈິດຕະນິຍົມ ຈະຕ້ອງກ້າວໄປຫາລັດທິໄຜ່ຝັນລອຍເມກຢ່າງຫລີກລ່ຽງບໍ່ໄດ້. ດັ່ງນັ້ນ ເພື່ອຈະຫລີກເວັ້ນຄວາມເຂົ້າໃຈຜິດກ່ຽວກັບການຂະຫຍາຍຕົວຂອງສັງຄົມ, ຕ້ອງຍຶດຖືເອົາລັດທິວັດຖຸນິຍົມມາເປັນອາວຸດ. ທາດແທ້ຂອງລັດທິວັດຖຸນິຍົມນັ້ນ ມີແນວໃດແດ່ ?

ກ. ມາກ ແລະ ຟ. ອັງແກນ ບໍ່ພຽງແຕ່ໄດ້ຫມູນໃຊ້ວິທີການ ໄຈ້ແຍກແບບວັດຖຸນິຍົມ ຕໍ່ປະກົດການຂອງທຳມະຊາດ, ແຕ່ອັນສຳຄັນທີ່ສຸດແມ່ນຍັງໄດ້ຫມູນໃຊ້ວິທີການດັ່ງກ່າວຕໍ່ເຫດການຕົວຈິງຢູ່ໃນຊີວິດສັງຄົມ. ພວກເພິ່ນທັງສອງໄດ້ຖືເອົາແບບວິທີທຳມາຫາກິນເປັນພື້ນຖານ ສຳລັບ ການໄຈ້ແຍກເຫດການຕົວຈິງເຫລົ່ານັ້ນ. ຢູ່ໃນການຜະລິດອາຫານການກິນ, ເຄື່ອງນຸ່ງຫົ່ມ, ເກີບ ແລະ ການສ້າງໂຮງຈັກໂຮງງານ, ທີ່ພັກພາອາໄສ ແລະ ອື່ນໆນັ້ນ ຄົນເຮົານຳໃຊ້ເຄື່ອງມືອອກແຮງງານ, ພາຫະນະທາງດ້ານວັດຖຸ ແລະ ເຕັກນິກຕ່າງໆ. ລະດັບການຂະຫຍາຍຕົວຂອງເຄື່ອງມື ແລະພາຫະນະດັ່ງກ່າວໃນທີ່ສຸດເປັນສິ່ງທີ່ກຳນົດຈຸດພິເສດຂອງໄລຍະເວລານັ້ນໆ. ກ. ມາກ ເນັ້ນວ່າ ຍຸກສະໄຫມຫນຶ່ງແຕກຕ່າງກັບອີກຍຸກສະໄຫມຫນຶ່ງບໍ່ແມ່ນແຕ່ຢູ່ບ່ອນວ່າ ມັນຜະລິດຫຍັງອອກແຕ່ກໍຢູ່ບ່ອນວ່າມີການນຳໃຊ້ເຄື່ອງມືອອກແຮງງານອັນໃດແດ່ເພື່ອສ້າງພາຫະນະໃນການຄອງຊີບ. ຈາກນັ້ນ ຄົນເຮົາຈຶ່ງເຂົ້າຢູ່ໃນລະບົບການພົວພັນການຜະລິດອັນແນ່ນອນໃດຫນຶ່ງ. ການພົວພັນການຜະລິດເປັນຜູ້ກຳນົດຈຸດພິເສດແຫ່ງລະບົບການເມືອງ, ໂຄງປະກອບທາງຊົນຊັ້ນສັງຄົມ ແລະ ຊີວິດຈິດໃຈຂອງສັງຄົມ.

ການເຂົ້າໃຈປະຫວັດສາດແບບວັດຖຸນິຍົມ ໄດ້ຊີ້ບອກວ່າ: ພື້ນຖານແຫ່ງ

ການຂະຫຍາຍຕົວຂອງສັງຄົມນັ້ນ ບໍ່ແມ່ນແນວຄິດ, ທິດສະດີ ຫລືຈິດສຳນຶກ ດັ່ງທີ່ພວກຈິດຕະນິຍົມຄິດ, ແຕ່ຊ້ຳພັດແມ່ນແບບວິທີການຜະລິດ ຊັບສິນວັດຖຸ ເຊິ່ງປະກອບມີກຳລັງການຜະລິດ ແລະ ການພົວພັນການຜະລິດ. ແຕ່ລະລະດັບແຫ່ງການຂະຫຍາຍຕົວຂອງກຳລັງການຜະລິດ ແມ່ນຕ້ອງມີລັກສະນະການພົວພັນການຜະລິດ ທີ່ສອດຄ່ອງຂອງມັນ ເຊິ່ງເປັນຜູ້ກຳນົດ ລັກສະນະຈຳເພາະຂອງຂົງເຂດຕ່າງໆໃນຊີວິດສັງຄົມ.

ຂໍ້ສະຫລຸບພື້ນຖານ ຊຶ່ງເກີດມາຈາກການເຂົ້າໃຈປະຫວັດສາດແບບວັດຖຸນິຍົມນັ້ນ ມີແນວໃດແດ່ ? ມັນມີຢູ່ບ່ອນວ່າ, ເພື່ອຈະດັດສ້າງລະບອບ ທີ່ກຳລັງຄົງຕົວຢູ່ນັ້ນ ມີຄວາມຈຳເປັນຕ້ອງໄດ້ປ່ຽນແປງພື້ນຖານແຫ່ງ ຊີວິດຂອງສັງຄົມນັ້ນ ຄືແບບວິທີການຜະລິດຊັບສິນວັດຖຸນັ້ນເອງ, ຢູ່ໃນນັ້ນກໍ່ຕ້ອງປ່ຽນແປງລັກສະນະຂອງການພົວພັນການຜະລິດ. ກ່ຽວກັບບັນຫາທີ່ວ່າ ກຳລັງການຜະລິດສຸກງອມແລ້ວ ຫລືບໍ່ເພື່ອຈະນຳເອົາກຳມະສິດສ່ວນລວມຕໍ່ພາຫະນະການຜະລິດ ເຂົ້າປ່ຽນແທນກຳມະສິດເອກະຊົນນັ້ນ, ກ່ຽວກັບບັນຫານີ້ ແມ່ນວິທະຍາສາດອື່ນ ນັ້ນຄືເສດຖະສາດການເມືອງທີ່ຈະເປັນຜູ້ໃຫ້ ຄຳຕອບ.

ປັດຊະຍາວັດຖຸນິຍົມນັ້ນ ໄດ້ຊີ້ບອກວ່າພາກສ່ວນໃດຂອງຊີວິດ ສັງຄົມເກີດມີຄວາມຈຳເປັນ ແລະ ຄວາມອາດສາມາດຂ້າມຜ່ານໄປສູ່ລະບອບສັງຄົມໃໝ່. ໂດຍແຕກຕ່າງກັບລັດທິຈິດຕະນິຍົມນັ້ນ, ປັດຊະຍາວັດຖຸນິຍົມແມ່ນແນ່ໃສ່ການຊອກຄົ້ນຫາວິທີການດັດສ້າງຊີວິດຂອງສັງຄົມຕາມເສັ້ນທາງ ອັນຖືກຕ້ອງ. ມາຮອດນີ້ ເຫັນວ່າຕ້ອງໄດ້ທຳການວິໄຈຢ່າງລະອຽດລະອໍກ່ຽວກັບຂົງເຂດເສດຖະກິດ ເຊິ່ງໝາຍເຖິງ: ກຳລັງການຜະລິດ ແລະ ການພົວພັນການຜະລິດຂອງສັງຄົມນາຍທຶນ. ຕ້ອງຄົ້ນຄວ້າອັນທີ່ຄົງຕົວຢູ່ໃນຄວາມຈິງ ແຕ່ບໍ່ແມ່ນຈະສ້າງລະບົບຈັດຕັ້ງຕ່າງໆ ແຫ່ງສັງຄົມຂຶ້ນມາ ໂດຍລຳພັງຕາມແບບສະບັບຂອງນັກໄຝ່ຝັນລອຍເມກ. ປັດຊະຍາ ໄດ້ມອບໜ້າທີ່ ໃຫ້ເສດຖະສາດການເມືອງເປັນຜູ້ແກ້ໄຂບັນຫາດັ່ງກ່າວນີ້.

ກ.ມາກ ໄດ້ແກ້ໄຂບັນຫານີ້ຢ່າງງົດງາມເຊັ່ນດຽວກັນກັບບັນຫາ ກ່ຽວກັບຄວາມເຂົ້າໃຈປະຫວັດສາດໄປຕາມແບບວັດຖຸນິຍົມ. ເພິ່ນເປັນຜູ້ຄົ້ນພົບກົດເກນພື້ນຖານແຫ່ງການເຄື່ອນໄຫວຂອງແບບວິທີການຜະລິດຂອງທຶນນິຍົມ.

ຢູ່ໃນບົດນິພົນຂອງເພິ່ນ ທີ່ໃສ່ຊື່ວ່າ "ທຶນ" ນັ້ນ ມີການໃຫ້ຄຳນິຍາມ, ມີຂໍ້ພິສູດຮອບດ້ານກ່ຽວກັບກົດເກນດັ່ງກ່າວ. ກ.ມາກ ໄດ້ຖືວ່າບົດນິພົນນັ້ນເປັນພົນງານອັນສຳຄັນສຳລັບຊີວິດຂອງເພິ່ນ. ເຫຼັ້ມທີ່ໜຶ່ງ ໄດ້ຖືກພິມຈຳໜ່າຍເມື່ອປີ ໑໘໖໗ ໃນເວລາທີ່ ກ.ມາກ ຍັງມີຊີວິດຢູ່, ອີກສາມເຫຼັ້ມ ທີ່ເຫຼືອນັ້ນ ແມ່ນໄດ້ພິມຈຳໜ່າຍພາຍຫຼັງການເຖິງແກ່ກຳຂອງເພິ່ນ ໂດຍແມ່ນ ຟ.ອັງແກນ ເປັນຜູ້ຊ່ວຍໃນການກະກຽມພິມຈຳໜ່າຍ.

<u>ການຄົ້ນພົບກົດເກນວ່າດ້ວຍມູນຄ່າສ່ວນເກີນ.</u> ກົດເກນວ່າດ້ວຍມູນຄ່າສ່ວນເກີນ ແມ່ນເປັນກົດເກນພື້ນຖານແຫ່ງການຂະຫຍາຍຕົວຂອງ ສັງຄົມນາຍທຶນ. ກ.ມາກ ໄດ້ຂຽນວ່າ "ການຜະລິດມູນຄ່າສ່ວນເກີນ ຫຼືກຳໄລນັ້ນ ແມ່ນກົດເກນສຳບູນຂອງແບບວິທີການຜະລິດອັນນີ້" ໑). ຢູ່ໃນ ກົດເກນດັ່ງກ່າວ ແມ່ນສະແດງອອກເຖິງທາດແທ້ຂອງການກົດຂີ່ຂູດຮີດ ຂອງນາຍທຶນ, ການກົງກັນຂ້າມ ແລະ ການປະລະປັກກັນ ລະຫວ່າງຜົນປະໂຫຍດອັນພື້ນຖານຂອງນາຍທຶນ ກັບຊົນຊັ້ນກຳມາຊີບ.

ນາຍທຶນຈ້າງກຳມະກອນ, ກຳມະກອນຂາຍແຮງງານຂອງຕົນໃຫ້ນາຍທຶນ. ຖ້າເບິ່ງຢ່າງຜິວເຜີນແລ້ວ ເຫດການດັ່ງກ່າວນີ້ ກໍແມ່ນວ່າມີລັກສະນະເທົ່າທຽມກັນທັງສອງຝ່າຍ, ບໍ່ມີໃຜຂົ້ມກັບໃຜ ດັ່ງທີ່ເປັນຢູ່ໃນລະບອບສັກດີ-ນາ. ແຕ່ຢູ່ເບື້ອງຫຼັງຂອງຄວາມສະເໝີພາບທາງດ້ານຮູບການນັ້ນກໍມີຄວາມບໍ່ສະເໝີພາບທາງສັງຄົມ ແລະ ເສດຖະກິດອັນເລິກເຊິ່ງເຊື່ອງຢູ່.

ປະການທີ່ໜຶ່ງ, ກຳມະກອນ ຕ້ອງຂາຍແຮງງານຂອງຕົນ ເພື່ອ ດຳລົງຊີວິດ ເພາະວ່າ ພາຫະນະການຜະລິດທີ່ຈຳເປັນສຳລັບການອອກແຮງງານຂອງກຳມະກອນພັດເປັນກຳມະສິດຂອງນາຍທຶນ. ປະການທີສອງ, ມື້ເຮັດວຽກຮັບຈ້າງຂອງກຳມະກອນຖືກແບ່ງອອກເປັນສອງພາກສ່ວນຄື: ເວລາອັນຈຳເປັນ ແລະ ເວລາສ່ວນເກີນ. ຢູ່ໃນໄລຍະເວລາອັນຈຳເປັນນັ້ນກຳມະກອນໄດ້ຜະລິດຜົນຜະລິດ ອັນຈຳເປັນອອກມາ, ມູນຄ່າ ຂອງມັນເທົ່າກັບຄ່າແຮງງານຂອງກຳມະກອນ. ຢູ່ໃນເວລາສ່ວນເກີນ ເຂົາເຈົ້າກໍຜະລິດຜົນຜະລິດສ່ວນເກີນອອກ, ມູນຄ່າຂອງມັນບໍ່ຖືກນັບເຂົ້າໃນຄ່າ ແຮງ

---

໑) ກ.ມາກ ແລະ ຟ.ອັງແກນ. ບົດນິພົນ, ເຫຼັ້ມທີ ໒໓, ໜ້າ ໖໓໒.

ງານຂອງກຳມະກອນ ແລະ ກໍກາຍເປັນມູນຄ່າສ່ວນເກີນ. ຜົນຜະລິດນີ້ນາຍທຶນໄດ້ກອບໂກຍເອົາໄວ້ເປັນຂອງຕົນເອງລ້າໆ ແລະ ປະກອບເປັນຜົນຜະລິດສ່ວນເກີນຫລືກຳໄລ.

ໂດຍມຸ່ງໝາຍໃຫ້ໄດ້ຮັບກຳໄລສູງທີ່ສຸດນັ້ນ, ນາຍທຶນກໍເພີ່ມທະວີການກົດຂີ່ຂູດຮີດກຳມະກອນ. ເພື່ອເປົ້າໝາຍດັ່ງກ່າວ ພວກເຂົາໄດ້ນຳໃຊ້ວິທີການຕ່າງໆ. ວິທີງ່າຍດາຍກວ່າໝູ່ໝົດ ກໍແມ່ນການແກ່ຍາວເວລາເຮັດວຽກອອກ. ຍິ່ງແກ່ຍາວເວລາເຮັດວຽກ ຂອງກຳມະກອນອອກໄດ້ຫລາຍເທົ່າໃດ ກໍຍິ່ງເຮັດໃຫ້ຜົນຜະລິດສ່ວນເກີນທີ່ນາຍທຶນກອບໂກຍເອົາໄວ້ເປັນຂອງມັນເອງຫລາຍຂຶ້ນເທົ່ານັ້ນ. ແຕ່ວ່າ ການແກ່ຍາວເວລາເຮັດວຽກອອກນັ້ນ ມັນກໍມີຂອບເຂດ, ເພາະວ່າ ກຳມະກອນກໍຕ້ອງການກິນ, ນອນ,ພັກຜ່ອນ ແລະ ອື່ນໆ. ຖ້າວ່ານີ້ ກຳມະກອນບໍ່ສາມາດຟື້ນເຫື່ອແຮງຂອງຕົນຄືນມາໄດ້, ມື້ອື່ນກໍຈະຜະລິດໄດ້ໜ້ອຍກວ່າມື້ວານນີ້. ນອກຈາກນັ້ນ ແລ້ວ ນັບຕັ້ງແຕ່ມີທຳອິດແຫ່ງຂະບວນການປົດປ່ອຍທາງສັງຄົມ , ຊົນຊັ້ນກຳມະກອນກໍໄດ້ດຳເນີນການຕໍ່ສູ້ຢ່າງຂ້ຽວຂາດເພື່ອການຈຳກັດ ແລະ ຫລຸດຜ່ອນເວລາເຮັດວຽກ. ສະນັ້ນ ລັດນາຍທຶນຈຶ່ງຈຳເປັນຕ້ອງບັນຍັດການແກ່ຍາວເວລາເຮັດວຽກໄວ້ເປັນກົດໝາຍ. ດ້ວຍເຫດນັ້ນ ພວກນາຍທຶນຈຶ່ງນຳໃຊ້ວິທີການອື່ນທີ່ມີປະສິດທິພາບກວ່າ ເພື່ອໃຫ້ໄດ້ກຳໄລສູງທີ່ສຸດ. ພວກເຂົາມຸ່ງໝາຍຢາກຫລຸດຜ່ອນຄ່າແຮງງານລົງຢ່າງເປັນລະບົບ. ໃນມື້ເຮັດວຽກດຽວກັນນັ້ນ ຖ້າຄ່າແຮງງານຍິ່ງຕ່ຳເທົ່າໃດ ນາຍທຶນກໍຍິ່ງໄດ້ກຳໄລຫລາຍຂຶ້ນເທົ່ານັ້ນ.

ຈະເຮັດແນວໃດ ເພື່ອໃຫ້ຄ່າແຮງງານຖືກກວ່າເກົ່າ ? ອັນນີ້ສາມາດເຮັດໄດ້ດ້ວຍການເຮັດໃຫ້ລາຄາສິນຄ້າຖືກລົງ ໂດຍຜ່ານການຍົກສູງຜະລິດຕະພາບຂອງງານ, ການນຳໃຊ້ເຕັກໂນໂລຊີ ແລະ ເຕັກນິກໃໝ່ ແລະເຮັດໃຫ້ການອອກແຮງງານຂອງກຳມະກອນມີລັກສະນະຂະຫຍັນອົ່ນແຂງຂຶ້ນຢ່າງບໍ່ຢຸດຢັ້ງ. ດັ່ງນັ້ນ ຕິດຕ້ອຍໄປກັບຜົນສຳເລັດຢູ່ໃນເປົ້າໝາຍອັນໂລບມາກໂລພາ ອັນໄດ້ແກ່ການໄດ້ຮັບກຳໄລນັ້ນ, ນາຍທຶນຈຳເປັນຕ້ອງໄດ້ ປັບປຸງ ແລະ ຂະຫຍາຍການຜະລິດ. ສິ່ງນີ້ຈະນຳໄປເຖິງຂັ້ນໃດ ?

ປະການທີໜຶ່ງ, ຈະນຳໄປເຖິງຂັ້ນທີ່ວ່າ ອຳນາດຂອງທຶນທີ່ມີຕໍ່ ແຮງ

ງານ ແລະ ອຳນາດຂອງຜູ້ຂູດຣີດທີ່ມີຕໍ່ຊາວຜູ້ອອກແຮງງານເພີ່ມຂຶ້ນ. ຄວາມຕ້ອງການແຮງງານຕ່ຳລົງ, ຜົນດັ່ງກ່າວ ພາໃຫ້ເກີດມີກອງສຳຮອງ ຢູ່ໃນອຸດສາຫະກຳ ນັ້ນແມ່ນພວກຫວ່າງງານ. ພວກນາຍທຶນ ຕ້ອງການກຳລັງນີ້ຫລາຍເຖິງສອງເທົ່າ. ດ້ວຍເຫດວ່າ ການຜະລິດຂະຫຍາຍຕົວຕາມມີຕາມເກີດ, ບຶດໜຶ່ງຕົກຕ່ຳ, ບຶດໜຶ່ງສູງຂຶ້ນ, ສະນັ້ນ ຄວາມຕ້ອງການ ແຮງງານກໍ່ປ່ຽນແປງ. ໃນເວລາການຜະລິດຕົກຕ່ຳ ຈຳນວນຄົນຫວ່າງງານ ກໍ່ເພີ່ມຂຶ້ນຢ່າງຫລວງຫລາຍ, ເມື່ອການຜະລິດເລີ່ມມີຊີວິດຊີວາຂຶ້ນ ຈຳນວນຄົນຫວ່າງງານເຫລົ່ານີ້ ກໍ່ໃຊ້ເປັນກອງສຳຮອງ ແຫ່ງກຳລັງແຮງງານ . ນອກຈາກນັ້ນ ການມີຄົນຫວ່າງງານ ຊ່ວຍໃຫ້ນາຍທຶນເພີ່ມທະວີການຂູດຣີດກຳມະກອນຜູ້ມີວຽກເຮັດງານທຳ, ແລະ ເຮັດໃຫ້ກຳມະກອນເຫລົ່ານັ້ນຕົກຢູ່ໃນສະພາບຢ້ານກົວຕໍ່ການຈະສູນເສຍບ່ອນທຳງານຂອງຕົນຢ່າງເປັນປະ-ຈຳ, ສະນັ້ນ ການຕໍ່ສູ້ຂອງເຂົາເຈົ້າຕ້ານເຈົ້າຂອງໂຮງຈັກໂຮງງານ ຈຶ່ງອ່ອນເພຍລົງ. ວິກິດການຜະລິດເຫລືອ, ໄພເງິນເຟີ້, ລາຄາເພີ່ມຂຶ້ນ , ຫັນເສດຖະກິດໄປເປັນແບບການທະຫານຢ່າງເນື່ອງນິດລຽນຕິດນັ້ນ ເປັນເພື່ອນຮ່ວມທາງອັນປາສະຈາກບໍ່ໄດ້ຂອງການຂະຫຍາຍຕົວ ແຫ່ງແບບວິທີການຜະລິດທຶນນິຍົມ.

ກ.ມາກ ບໍ່ພຽງແຕ່ໄດ້ຊີ້ແຈງໃຫ້ເຫັນເຖິງທ່ວງທ່າປະຕິການຂອງແບບວິທີການຜະລິດດັ່ງກ່າວ, ໄປຄຽງຂ້າງກັນນັ້ນ, ເພິ່ນຍັງໄດ້ເຜີຍໃຫ້ ເຫັນເຖິງທ່ວງທ່າອັນອື່ນ ທີ່ກ້າວໜ້າເຊິ່ງມັນເກີດມາຈາກແບບວິທີ ການຜະລິດທຶນນິຍົມນັ້ນເອງ. ແບບວິທີການຜະລິດນັ້ນ ເປັນສິ່ງທີ່ເລັ່ງລັດຂະບວນວິວັດດັ່ງຕໍ່ໄປນີ້: ສຸມການຜະລິດເຂົ້າກັນ, ລວມສູນການຜະລິດເຂົ້າກັນ, ຂະຫຍາຍຮູບການແຮງງານລວມໝູ່ ແລະ ການນຳໃຊ້ຜົນສຳເລັດດ້ານວິທະ-ຍາສາດ ເຂົ້າໃນການຜະລິດຢ່າງຕື່ນຕົວ. ຂະບວນວິວັດເຫລົ່ານີ້ ຂັດແຍ່ງກັບກຳມະສິດເອກະຊົນຕໍ່ພາຫະນະການຜະລິດ, ມັນເລັ່ງທວງໃຫ້ການຜະ-ລິດສັງຄົມໄດ້ຮັບການຂະຫຍາຍຕົວ ແລະ ໄດ້ຮັບການຊຸມຄອງເພື່ອ ຜົນປະໂຫຍດຂອງສັງຄົມທັງໝົດ, ແຕ່ບໍ່ແມ່ນເພື່ອຄົນກຸ່ມໃດໜຶ່ງ. ແຕ່ຈະເຮັດແນວນັ້ນໄດ້ ກໍ່ຕໍ່ເມື່ອໃນກໍລະນີທີ່ພາຫະນະການຜະລິດ ກາຍເປັນຊັບສົມບັດຂອງສັງຄົມເທົ່ານັ້ນ.

ຢູ່ໃນບົດນິພົນ "ທຶນ" ກ.ມາກ ໄດ້ຊີ້ໃຫ້ເຫັນວ່າ ການດຳເນີນງານຂອງສັງຄົມນາຍທຶນ ຢູ່ບົນພື້ນຖານກົດເກນພາຍໃນອັນເປັນລັກສະນະ ສະເພາະຂອງມັນນັ້ນ ຈະນຳໄປສູ່ການຂະຫຍາຍຕົວ ແລະ ການປະຕິເສດຕົວມັນເອງຄືແນວໃດ. ສະຫລຸບໄດ້ວ່າ ຄວາມຈຳເປັນທີ່ຈະຕ້ອງເອົາສັງຄົມນິຍົມມາສັບປ່ຽນທຶນນິຍົມນັ້ນ ມັນບໍ່ແມ່ນເລື່ອງຄິດອອກເອົາຂອງບຸກຄົນ ໃດໜຶ່ງ ແຕ່ມັນແມ່ນຄວາມຈຳເປັນ ເຊິ່ງເກີດມາຈາກການຂະຫຍາຍຕົວຂອງແບບວິທີການຜະລິດທຶນນິຍົມ. ໂດຍຄົ້ນພົບກົດເກນແບບວິທີການຜະລິດທຶນນິຍົມນີ້, ກ.ມາກ ໄດ້ໃຫ້ຂໍ້ພິສູດທາງເສດຖະກິດແກ່ຄວາມຈຳເປັນກໍ່ຄືຄວາມອາດສາມາດໃນການຂ້າມຜ່ານຈາກທຶນນິຍົມ ໄປສູ່ສັງຄົມນິຍົມ.

ແຕ່ວ່າ ຂໍ້ສະຫລຸບກ່ຽວກັບຄວາມຫາຍະນະຢ່າງຫລີກບໍ່ພົ້ນຂອງທຶນນິຍົມນັ້ນ ບໍ່ໄດ້ໝາຍຄວາມວ່າ ມັນຈະສະຫລາຍໄປດ້ວຍຕົວມັນເອງ, ແບບອັດຕະໂນມັດ. ເພື່ອຈະດັບສູນທຶນນິຍົມນັ້ນ ກໍ່ຕ້ອງການກຳລັງສັງຄົມອັນພິເສດໜຶ່ງ ແລະ ການເຄື່ອນໄຫວອັນຂະຫຍັນຂັນແຂງຂອງກຳລັງດັ່ງກ່າວ.ແມ່ນໃຜໃນບັນດາຊົນຊັ້ນ ທີ່ພວມດຳລົງຄົງຕົວຢູ່ນັ້ນ ຈະເປັນຕົວແທນຂອງ ກຳລັງດັ່ງກ່າວ ? ຈະຕ້ອງເຮັດຫຍັງ ແລະ ເຮັດແນວໃດຈຶ່ງຈະລົບລ້າງການຂູດຮີດ, ຄວາມທຸກຍາກ ແລະ ຄວາມໄຮ້ສິດທິໄດ້ ? ຈະສາມາດກ້າວໄປເຖິງການສ້າງສາສັງຄົມໃໝ່ ທີ່ຍຸດຕິທຳໄດ້ດ້ວຍເສັ້ນທາງໃດ? ?

ຊີວິດ ແລະ ການຕໍ່ສູ້ຂອງຊາວຜູ້ອອກແຮງງານ ໄດ້ເລັ່ງທວງເອົາຄຳຕອບຕໍ່ບັນດາຄຳຖາມເຫລົ່ານີ້ຢ່າງຮີບດ່ວນ. ລັດທິສັງຄົມນິຍົມ ແບບໄຝ່ຝັນລອຍເມກ ບໍ່ສາມາດໃຫ້ຄຳຕອບຕໍ່ຄຳຖາມເຫລົ່ານີ້ໄດ້. ກ.ມາກ ແລະ ຟ.ອັງແກນ ເປັນຜູ້ທີ່ໄດ້ໃຫ້ຄຳຕອບຕໍ່ບັນຫາເຫລົ່ານີ້ ດ້ວຍເຫດຜົນທີ່ມີວິທະຍາສາດ ໂດຍອີງໃສ່ການເຂົ້າໃຈປະຫວັດສາດຕາມແບບວັດຖຸນິຍົມແລະກົດເກນມູນຄ່າສ່ວນເກີນ. ດັ່ງນັ້ນ ໝາຍຄວາມວ່າ ພວກເພິ່ນທັງສອງໄດ້ຫັນປ່ຽນຫລັກທິດສະດີກ່ຽວກັບລັດທິສັງຄົມນິຍົມ ຈາກຄວາມໄຝ່ຝັນ ມາເປັນ ວິທະຍາສາດ ຊຶ່ງໃນເວລາຕໍ່ມາກໍໄດ້ຮັບການຢືນຢັນຢູ່ໃນຊີວິດຕົວຈິງ.



3–699

## ຈະກໍ່ສ້າງສັງຄົມໃໝ່ແນວໃດ ?

ກ.ມາກ ແລະ ຟ.ອັງແກນ ໄດ້ຊີ້ໃຫ້ເຫັນວ່າ: ການປະກົດຕົວ ຂອງ ຊົນຊັ້ນກຳມາຊີບ ແມ່ນເປັນໝາກຜົນທີ່ມີລັກສະນະກົດເກນ ຢູ່ໃນການຂະຫຍາຍຕົວຂອງແບບວິທີການຜະລິດທຶນນິຍົມ. ຄວາມຂັດແຍ່ງ ອັນເປັນພື້ນຖານຂອງທຶນນິຍົມ ໝາຍຄວາມວ່າ ຄວາມຂັດແຍ່ງລະຫວ່າງ ກຳລັງການຜະລິດ ແລະ ການພົວພັນການຜະລິດນັ້ນ ກໍ່ມີຜົນສະທ້ອນແນວບໍ່ດີຕໍ່ສະພາບການຂອງຊາວຜູ້ອອກແຮງງານ.

ຍ້ອນມີຄວາມກ້າວໜ້າທາງດ້ານເຕັກນິກ-ວິທະຍາສາດ ແລະການຂະຫຍາຍຕົວຂອງການຜະລິດ,ດັ່ງນັ້ນ ຄວາມຮຽກຮ້ອງຕ້ອງການຂອງຊາວ ຜູ້ອອກແຮງງານກໍ່ເພີ່ມຂຶ້ນ. ແຕ່ວ່າ ຄວາມຮຽກຮ້ອງຕ້ອງການນັ້ນ ບໍ່ໄດ້ຮັບການຕອບສະໜອງໃນຂອບເຂດທີ່ຈຳເປັນສຳລັບການດຳລົງຊີວິດແບບປົກກະຕິ. ການໂຕນກັນລະຫວ່າງຄວາມຮຽກຮ້ອງຕ້ອງການ ກັບລະດັບການຕອບສະໜອງນັ້ນແມ່ນຍ້ອນວ່າມີກຳມະສິດເອກະຊົນຕໍ່ພາຫະນະການຜະລິດ. ນາຍທຶນຜູ້ຊຶ່ງເປັນເຈົ້າຂອງພາຫະນະການຜະລິດ ໄດ້ໝູນໃຊ້ມູນຄ່າ ສ່ວນເກີນບໍ່ແມ່ນເພື່ອຜົນປະໂຫຍດ ຂອງກຳມະກອນ, ແຕ່ແມ່ນເພື່ອຜົນປະໂຫຍດອັນໂລບມາກໂລພາຂອງເຂົາເອງ.

ແຕ່ຫາກວ່າ ໄປພ້ອມໆກັບການເພີ່ມທະວີການກົດຂີ່ຂູດຮີດນັ້ນ ສະຕິຕື່ນຕົວທາງການເມືອງຂອງຊົນຊັ້ນກຳມະກອນກໍໄດ້ເພີ່ມຂຶ້ນ. ກ່ອນອື່ນໝົດ ກໍ່ແມ່ນກົນໄກແຫ່ງຂະບວນວິວັດຂອງການຜະລິດທຶນນິຍົມນັ້ນເອງ ເປັນສິ່ງ ທີ່ເຮັດໃຫ້ຈຳນວນຂອງກຳມະກອນເພີ່ມຂຶ້ນຢ່າງບໍ່ຢຸດຢັ້ງ, ເຮັດໃຫ້ເຂົາເຈົ້າໄດ້ຮັບການບົ່ມສອນ, ເຕົ້າໂຮມກັນເຂົ້າ ແລະ ມີການຈັດຕັ້ງ. ດັ່ງນັ້ນສະພາບພາວະວິໄສຂອງຊົນຊັ້ນກຳມະກອນນັ້ນເອງ ທີ່ເຮັດໃຫ້ມັນເປັນຊົນຊັ້ນດຽວທີ່ມີຄວາມສາມາດລົ້ມລ້າງລະບຽບການສັງຄົມທີ່ພວມຄົງຕົວຢູ່ນັ້ນ . ສ່ວນພວກນັກສັງຄົມນິຍົມແບບໄຝ່ຝັນລອຍເມກ ຊ້ຳພັດໄປຝາກ ຄວາມຫວັງໃນການດັດສ້າງສັງຄົມໄວ້ກັບບຸກຄົນຜູ້ດີເດັ່ນຈຳນວນໜຶ່ງ. ກ.ມາກ ແລະ ຟ.ອັງແກນ ໄດ້ມອງເຫັນວ່າ ມີແຕ່ຊົນຊັ້ນກຳມາຊີບເທົ່ານັ້ນ ເປັນກຳລັງ

ແຮງຕົວຈິງ ທີ່ສາມາດນຳເອົາສັງຄົມນິຍົມມາສັບປ່ຽນທຶນນິຍົມໄດ້. ການໃຫ້ຂໍ້ພິສູດກ່ຽວກັບພາລະໜ້າທີ່ປະຫວັດສາດຂອງຊົນຊັ້ນກຳມາຊີບທີ່ວ່າ ເປັນຜູ້ຂຸດຂຸມຝັງລະບອບນາຍທຶນນັ້ນ ເປັນຫລັກມູນອັນໜຶ່ງທີ່ສຳຄັນຍິ່ງ ຂອງລັດທິສັງຄົມນິຍົມວິທະຍາສາດ.

ເປັນອັນວ່າ ບັນຫາແມ່ນຢູ່ບ່ອນວ່າ ຈະເຮັດແນວໃດ ຈຶ່ງຈະໃຫ້ ຂໍ້ພິສູດແກ່ໂຄງການດຳເນີນງານຂອງຊົນຊັ້ນກຳມາຊີບໄດ້ຢ່າງມີວິທະຍາສາດແລະຕ້ອງຊີ້ບອກວ່າ ຊົນຊັ້ນກຳມາຊີບ ຕ້ອງເຮັດຫຍັງ ແລະ ຈະເຮັດແນວໃດເພື່ອປົດປ່ອຍຕົນເອງ ແລະ ປົດປ່ອຍຊາວຜູ້ອອກແຮງງານທັງໝົດ ອອກຈາກການກົດຂີ່ທາງສັງຄົມ. ກ.ມາກ ແລະ ຟ.ອັງແກນ ໄດ້ຂຽນວ່າ: "ບັນຫາບໍ່ແມ່ນຢູ່ບ່ອນວ່າ ມີຫຍັງແດ່ທີ່ກຳມາຊີບຜູ້ໜຶ່ງ ຫລືກະທັງຊົນຊັ້ນ ກຳມາຊີບທັງໝົດມອງເຫັນວ່າເປັນເປົ້າໝາຍຂອງຕົນຢູ່ໃນໄລຍະໃດໜຶ່ງ ແຕ່ບັນຫາຈຳພັດແມ່ນວ່າ ໃນຕົວຈິງນັ້ນ ຊົນຊັ້ນກຳມາຊີບແມ່ນຫຍັງ ແລະເຂົາເຈົ້າສົມຄວນຈະເຮັດຫຍັງຢູ່ໃນປະຫວັດສາດ ເພື່ອໃຫ້ສອດຄ່ອງກັບການດຳລົງຄົງຕົວຂອງຕົນ" ໑).

ລັດທິກອມມູນິດວິທະຍາສາດ ເປັນຜູ້ໃຫ້ຄຳຕອບຕໍ່ຄຳຖາມເຫລົ່ານີ້, ມັນໄຂຊ່ອງທາງໃຫ້ຊາວຜູ້ຖືກກົດຂີ່ໃນການປົດປ່ອຍຕົນເອງ ແລະ ຊີ້ບອກກ່ຽວກັບບັນດາກົດເກນຂອງການຕໍ່ສູ້ຊົນຊັ້ນເຊິ່ງການຕໍ່ສູ້ດັ່ງກ່າວນັ້ນ ແມ່ນນຳໄປສູ່ການສ້າງສາສັງຄົມທີ່ຍຸດຕິທຳ ໂດຍຜ່ານການປະຕິວັດສັງຄົມນິຍົມ. ໃນເວລາກຳນົດກ່ຽວກັບພາລະບົດບາດ ຂອງລັດທິກອມມູນິດ ວິທະຍາສາດນັ້ນ, ຟ.ອັງແກນໄດ້ຂຽນວ່າ: "ການຄົ້ນຄວ້າບັນດາເງື່ອນໄຂທາງປະຫວັດສາດ, ກໍຄືທາດແທ້ຂອງການປ່ຽນແປງເອງນັ້ນ, ເພື່ອເຮັດໃຫ້ຊົນຊັ້ນທີ່ຖືກກົດຂີ່ໃນປະຈຸບັນເຊິ່ງເປັນຜູ້ທີ່ມີພາລະບົດບາດຈະສ້າງວິລະກຳນັ້ນ ເຫັນແຈ້ງເຖິງເງື່ອນໄຂ ແລະ ທາດແທ້ຂອງພາລະບົດບາດຂອງຕົນ, ສິ່ງດັ່ງກ່າວ ລ້ວນແຕ່ແມ່ນໜ້າທີ່ຂອງລັດທິສັງຄົມນິຍົມ ວິທະຍາສາດ ອັນເປັນ ການສະແດງອອກທາງດ້ານທິດສະດີຂອງຂະບວນການກຳມາຊີບ" ໒).

---

໑) ກ.ມາກ ແລະ ຟ.ອັງແກນ. ບົດນິພົນ, ເຫລັ້ມທີ ໒, ໜ້າ ໔໐.

໒) ກ.ມາກ ແລະ ຟ.ອັງແກນ. ບົດນິພົນ, ເຫລັ້ມທີ ໑໙, ໜ້າ ໒໙໐.

ຊົນຊັ້ນກຳມາຊີບໄດ້ຈັດຕັ້ງ ແລະ ສ້າງຕັ້ງພັກການເມືອງຂອງຕົນ ຂຶ້ນຢ່າງມີສະຕິຕື່ນຕົວ ແລະ ຢູ່ພາຍໃຕ້ການນຳພາຂອງພັກນັ້ນ ກໍໄດ້ ເລີ່ມຕົ້ນດຳເນີນການຕໍ່ສູ້ເພື່ອຍາດເອົາອຳນາດຢູ່ໃນສັງຄົມ. ບັນຫາກ່ຽວກັບ ການຍາດເອົາອຳນາດນັ້ນ ເປັນບັນຫາສຳຄັນຢູ່ໃນການຕໍ່ສູ້ຊົນຊັ້ນ. ຫລັງຈາກທີ່ຊາວຜູ້ອອກແຮງງານກຳອຳນາດທີ່ໄດ້ມາຈາກການປະຕິວັດຢູ່ໃນສັງຄົມແລ້ວ ພວກເຂົາເຈົ້າຈະນຳໃຊ້ມັນເປັນເຄື່ອງມືໃນການແກ້ໄຂບັນຫາເສດຖະກິດ, ສັງຄົມ ແລະ ວັດທະນະທຳ. ເປັນອັນວ່າ ການດັດສ້າງຂົງເຂດຊີວິດສັງຄົມທັງໝົດ ເພື່ອຜົນປະໂຫຍດຂອງຊາວຜູ້ອອກແຮງງານຢ່າງມີສະຕິຕື່ນຕົວ ແລະ ຢ່າງມີເປົ້າໝາຍນັ້ນແມ່ນບັນຫາອັນດັບໜຶ່ງ.

ດັ່ງນັ້ນ ລັດທິກອມມູນິດວິທະຍາສາດ ຈຶ່ງແມ່ນທິດສະດີແຫ່ງການເຄື່ອນໄຫວຢ່າງມີສະຕິທີ່ແນໃສ່ເພື່ອດັດສ້າງສັງຄົມໄປຕາມແບບປະຕິວັດແລະການສືບຕໍ່ຂະຫຍາຍມັນ ບົນຫລັກການແຫ່ງສັງຄົມນິຍົມ. ທິດສະດີນັ້ນຄົ້ນຄວ້າເຖິງຂະບວນວິວັດແຫ່ງການກະກຽມ, ການກຳເນີດ ແລະ ຂະຫຍາຍຕົວ ຂອງລະບອບກອມມູນິດ, ຊຶ່ງຈະໄດ້ຮັບການປະຕິບັດຜ່ານການເຄື່ອນໄຫວ ຢ່າງມີເປົ້າໝາຍຂອງຊົນຊັ້ນກຳມະກອນ ທີ່ມີຜູ້ອອກແຮງງານອື່ນໆເປັນພັນທະມິດພາຍໃຕ້ການນຳພາຂອງພັກມາກ-ເລນິນ.

ລັດທິກອມມູນິດວິທະຍາສາດ ເປັນສິ່ງທີ່ສືບທອດ ແລະ ສະຫລຸບ ສັງລວມປັດຊະຍາ ແລະ ເສດຖະສາດການເມືອງຂອງ ມາກ ຢ່າງມີຕັກກະ-ສາດ. ການສ້າງລັດທິດັ່ງກ່າວຂຶ້ນມານັ້ນ ແມ່ນສາມາດເປັນໄປໄດ້ ກໍຍ້ອນມີການຄົ້ນພົບອັນມີລັກສະນະພື້ນຖານ ຢູ່ໃນວິທະຍາສາດເຫລົ່ານີ້: ການເຂົ້າໃຈປະຫວັດສາດແບບວັດຖຸນິຍົມ ແລະ ກົດເກນມູນຄ່າສ່ວນເກີນ. ຢູ່ໃນໂລກປະຈຸບັນຍັງມີທິດສະດີກ່ຽວກັບລັດທິສັງຄົມນິຍົມຈຳນວນຫລາຍ ບໍ່ໜ້ອຍເຊິ່ງເປັນທິດສະດີທີ່ມີລັກສະນະສິນລະປະທັດ, ປະຈຳຊາດ, ພາກພື້ນແລະອື່ນໆ. ແຕ່ທັງໝົດ ແມ່ນອີງໃສ່ການອະທິບາຍຊີວິດສັງຄົມ ແບບຈິດຕະນິ-ຍົມ ໂດຍບໍ່ມີຫລັກຖານດ້ານເສດຖະກິດ. ດັ່ງນັ້ນ ເຖິງວ່າ ທິດສະນະເຫລົ່ານີ້ຖືກເບິ່ງຢ່າງຜິວເຜີນແລ້ວ ຈະເປັນໜ້າດູດດື່ມກໍຕາມ ມັນກໍມີ ລັກສະນະໄຝ່ຝັນລອຍເມກ ແລະ ບໍ່ມີວິທະຍາສາດ.

ໜ້າທີ່ຂອງວິທະຍາສາດສັງຄົມອັນແທ້ຈິງ ບໍ່ແມ່ນວ່າຈະເຈາະຈົງ ໃສ່

ພຽງແຕ່ການອະທິບາຍໂລກເທົ່ານັ້ນ, ສິ່ງສຳຄັນ ແມ່ນແນໃສ່ ປ່ຽນແປງຄວາມເປັນຈິງ ເພື່ອຜົນປະໂຫຍດຂອງຄົນເຮົາ. ໜ້າທີ່ດັ່ງກ່າວ ແມ່ນສະແດງອອກ ຢ່າງຄົບຖ້ວນທີ່ສຸດ ຢູ່ໃນລັດທິກອມມູນິດວິທະຍາສາດ. ເພາະສະນັ້ນ ວ.ອິ. ເລນິນ ຈຶ່ງໄດ້ນິຍາມມັນວ່າ "ເປັນທິດສະດີແລະໂຄງການດຳເນີນງານ ຂອງຂະບວນການກຳມະກອນ ຢູ່ໃນປະເທດ ທີ່ຈະເລີນກ້າວໜ້າທັງໝົດໃນໂລກ"[1]. ມີແຕ່ທິດສະດີວິທະຍາສາດທີ່ພິສູດ ທາງດ້ານປັດຊະຍາ ແລະ ເສດຖະສາດ, ທີ່ເອົາໃຈໃສ່ ແລະ ສັງລວມ ບົດຮຽນການຕໍ່ສູ້ ແລະ ການສ້າງສາຂອງຊາວຜູ້ອອກແຮງງານ ຂອງຫຼາຍປະເທດ ເທົ່ານັ້ນ ຈຶ່ງສາມາດກາຍເປັນ ເຂັມທິດ ໃຫ້ແກ່ການເຄື່ອນໄຫວຕົວຈິງຂອງເຂົາເຈົ້າໄດ້.

ດັ່ງນັ້ນ ລັດທິກອມມູນິດວິທະຍາສາດ ຈຶ່ງເປັນການສະແດງອອກ ທາງທິດສະດີ ກ່ຽວກັບຜົນປະໂຫຍດທາງດ້ານເສດຖະກິດ-ສັງຄົມຂອງຊົນຊັ້ນກຳມະກອນ. ເພື່ອຈະປະຕິບັດໜ້າທີ່ປົດປ່ອຍຂອງຕົນໃຫ້ສຳເລັດຜົນນັ້ນ ຊາວຜູ້ອອກແຮງງານບໍ່ພຽງແຕ່ຈະຕ້ອງຈັດຕັ້ງແລະຮັດແໜ້ນກັນເຂົ້າເທົ່ານັ້ນ,ແຕ່ຍັງຕ້ອງກຳແໜ້ນອາວຸດທາງທິດສະດີອັນເຂັ້ມແຂງນີ້ ໂດຍຢູ່ພາຍໃຕ້ ການນຳພາຂອງພັກຜູ້ເປັນກອງລະວັງໜ້າ.

ການແຜ່ຂະຫຍາຍລັດທິ ມາກ ຢູ່ໃນປະເທດໃດກໍ່ຕາມ ແມ່ນມີການພົວພັນຢ່າງສະໜິດແໜ້ນກັບການເຜີຍແຜ່ທິດສະດີນາຍທຶນ ແລະນາຍທຶນນ້ອຍ. ບົດຮຽນທາງປະຫວັດສາດ ໄດ້ຢືນຢັນຢ່າງຈະແຈ້ງເຖິງເລື່ອງດັ່ງກ່າວ.ຍົກຕົວຢ່າງ ຢູ່ໃນປະເທດລັດເຊຍໃນທ້າຍສະຕະວັດທີ ໑໙ ມີທັດສະນະ ຈຳນວນໜຶ່ງທີ່ວ່າປະເທດລັດເຊຍນີ້ເປັນປະເທດທີ່ແຕກຕ່າງກັບບັນດາລັດເອີລົບຕາເວັນຕົກສະນັ້ນທິດສະດີ ມາກ ແມ່ນໃຊ້ບໍ່ໄດ້ໃນລັດເຊຍ.ໃນການໂຕ້ຕອບກັບເຈົ້າຂອງທິດສະດີເຫຼົ່ານັ້ນ ວ.ອິ.ເລນິນ ໄດ້ພິສູດໃຫ້ເຫັນວ່າ ເຖິງວ່າປະເທດລັດເຊຍມີເອກະລັກຂອງມັນກໍ່ຕາມ, ແຕ່ມັນກໍ່ພວມກ້າວໄປຕາມເສັ້ນທາງຂະຫຍາຍຕົວແບບທຶນນິຍົມຄືກັນກັບບັນດາປະເທດເອີລົບຕາເວັນ-ຕົກ, ໝາຍຄວາມວ່າ ຫຼັກທິດສະດີຂອງ ກ.ມາກ ແລະ ຟ.ອັງແກນນັ້ນສາມາດນຳມາໝູນໃຊ້ເຂົ້າໃນປະເທດລັດເຊຍໄດ້ເປັນຢ່າງເຕັມສ່ວນ. ຊິ

---

[1]) ວ.ອິ.ເລນິນ. ບົດນິພົນຄົບຊຸດ, ເຫຼັ້ມທີ ໒໖,ໜ້າ໕໐-໕໑.

ວິດຕົວຈິງໄດ້ຢືນຢັນເຖິງຄວາມຖືກຕ້ອງຂອງການສະຫລຸບທີ່ ເລນິນ ໄດ້ໃຫ້ໄວ້ນັ້ນຢ່າງເຕັມປ່ຽມ.

ພວກເຮົາຍັງເຫັນສະພາບແບບຄ້າຍຄືກັນນັ້ນຢູ່ໃນອົງເຂດອື່ນໆອີກ. ຕົວຢ່າງຢູ່ໃນບັນດາປະເທດອາເມລິກາລາຕິນ, ຊຶ່ງໃນນັ້ນເລີ່ມແຕ່ຊຸມປີ໒໐ ຂອງສະຕະວັດນີ້ມາ ໄດ້ມີການແຜ່ຂະຫຍາຍທິດສະດີທີ່ວ່າ ລັດທິມາກ-ເລນິນນັ້ນບໍ່ສາມາດນຳມາຫມູນໃຊ້ເຂົ້າໃນອົງເຂດນີ້ໄດ້. ບັນດານັກມາກຊິດອາເມລິກາລາຕິນ, ກ່ອນອື່ນຫມົດແມ່ນ ຄ. ກ. ມາຣີອາເຕກີ ( ເປລູ )ແລະ ຄ. ອາ. ແມເລຍ ( ກູບາ ) ໄດ້ພິສູດໃຫ້ເຫັນເຖິງຄວາມຜິດພາດຂອງທິດສະນະດັ່ງກ່າວ ແລະ ໄດ້ໃຫ້ຫລັກຖານທີ່ວ່າ ລັດທິມາກ-ເລນິນ ແມ່ນລັດທິ ທີ່ສາມາດນຳມາຫມູນໃຊ້ ເຂົ້າໃນບັນດາປະເທດຂອງອົງເຂດນີ້.

ເຫດການໃນສະໄຫມປະຈຸບັນນີ້ ໄດ້ຊີ້ບອກວ່າ ທິດສະດີມາກ- ເລນິນ ພວມແຜ່ຂະຫຍາຍຢູ່ໃນບັນດາປະເທດເອີລົບ, ອາເມລິກາ, ອາຊີແລະອາຟລິກາ. ສາເຫດຕົ້ນຕໍທີ່ພາໃຫ້ລັດທິມາກ-ເລນິນ ມີການຂະຫຍາຍຕົວຢ່າງກວ້າງຂວາງ ນັ້ນ ກໍ່ຍ້ອນວ່າ ມັນສາມາດຄົ້ນເຫັນຂະບວນວິວັດ ພາວະວິໄສນັ້ນໄດ້ຢ່າງຖືກຕ້ອງ ແລະ ມັນສະແດງອອກຢ່າງເລິກເຊິ່ງເຖິງ ຜົນປະໂຫຍດ ແລະ ຄວາມຮຽກຮ້ອງຕ້ອງການຂອງມວນຊົນຜູ້ອອກແຮງງານແລະມັນກໍສາມາດເປັນເຂັມທິດຊີ້ທາງໃຫ້ແກ່ການຕໍ່ສູ້ຂອງເຂົາເຈົ້າໄດ້.

ໃນຖານະເປັນທິດສະດີປະຕິວັດ ໂດຍກົງ ໃນການດັດສາງ ໂລກໃຫມ່ນັ້ນ, ລັດທິກອມມູນິດວິທະຍາສາດ ໄດ້ຂະຫຍາຍຕົວໄປພ້ອມໆກັນ ກັບການແຜ່ຂະຫຍາຍການເຄື່ອນໄຫວປະຕິວັດຂອງມວນຊົນຜູ້ອອກແຮງງານ . ເປົ້າຫມາຍການຄົ້ນຄວ້າຂອງລັດທິກອມມູນິດວິທະຍາສາດກໍ່ມີການປ່ຽນແປງເປົ້າຫມາຍນີ້ ກໍ່ຂະຫຍາຍຕົວກວ້າງອອກໄປຢ່າງສະຫມ່ຳສະເຫມີໂດຍກວມເອົາການວິໄຈອົງເຂດໃຫມ່ຂອງຊີວິດສັງຄົມ ຢູ່ໃນຂອບເຂດປະເທດ ຫນຶ່ງປະເທດດຽວ ກໍ່ຄືໃນຂອບເຂດທົ່ວໂລກ.

## ຫລັກທິດສະດີ ທີ່ມີລັກສະນະສາກົນ

ລັດທິກອມມູນິດວິທະຍາສາດເປັນທິດສະດີທີ່ສະແດງອອກໃຫ້ເຫັນສະພາບພາວະວິໄສ, ຄວາມຮຽກຮ້ອງຕ້ອງການ, ເປົ້າໝາຍ ແລະການຕໍ່ສູ້ຂອງຊົນຊັ້ນກຳມາຊີບ. ພ້ອມກັນນັ້ນ ມັນກໍ່ສະທ້ອນໃຫ້ເຫັນ ຜົນປະໂຫຍດ ຂອງຊາວຜູ້ອອກແຮງງານທັງໝົດ, ທັງນີ້ກໍ່ຍ່ອມວ່າ ຜົນປະໂຫຍດດັ່ງກ່າວ ກົງກັບຜົນປະໂຫຍດ ແລະ ອຸດົມຄະຕິຂອງຊົນຊັ້ນກຳມະກອນ.

ຕາມທາດແທ້ຂອງມັນເອງແລ້ວ, ຊົນຊັ້ນກຳມະກອນ ກໍ່ເປັນຊົນຊັ້ນທີ່ມີລັກສະນະສາກົນນິຍົມຢ່າງເລິກເຊິ່ງ. ຊົນຊັ້ນດັ່ງກ່າວໄດ້ພົວພັນກັບໄລຍະໃດໜຶ່ງແຫ່ງການຂະຫຍາຍຕົວຂອງກຳລັງການຜະລິດ ໃນເວລາທີ່ກຳລັງການຜະລິດເລີ່ມມີລັກສະນະສາກົນໝາຍຄວາມວ່າລັກສະນະລະຫວ່າງຊາດເປັນເທື່ອທຳອິດໃນປະຫວັດສາດ, ເພາະສະນັ້ນ ໃນໄລຍະນີ້ການຕໍ່ສູ້, ການປະຕິວັດ ແລະ ການກໍ່ສ້າງສັງຄົມໃໝ່ ລ້ວນແຕ່ເຕັມໄປດ້ວຍ ຄວາມສາມັກຄີລະຫວ່າງຊາດ. ໂດຍກົງກັນຂ້າມກັບຊົນຊັ້ນກຳມາຊີບນັ້ນ, ຊົນຊັ້ນນາຍທຶນແມ່ນມີແນວຄິດຊາດຄັບແຄບ.

ໂດຍແຕກຕ່າງກັບນາຍທຶນ, ຊົນຊັ້ນກຳມາຊີບຊ້ຳພັດຕໍ່ສູ້ ແລະ ໄດ້ຮັບໄຊຊະນະຢູ່ໃຕ້ຮົ່ມທຸງແຫ່ງລັດທິສາກົນນິຍົມ. ພ້ອມດຽວກັນນັ້ນ ຊົນຊັ້ນ ກຳມາຊີບຍັງຕໍ່ສູ້ເພື່ອຄວາມເປັນເອກະລາດແຫ່ງຊາດອັນແທ້ຈິງແຕ່ບໍ່ແມ່ນເພື່ອເອກະລາດອັນປອມແປງ, ເພາະວ່າມັນເປັນພື້ນຖານສຳລັບການຮ່ວມສຳພັນສາກົນອັນເລິກເຊິ່ງ. ນ້ຳໃຈສາກົນນິຍົມຂອງຊົນຊັ້ນກຳມະກອນ ໄດ້ຕິດພັນຢ່າງຕັດຂາດບໍ່ໄດ້ ກັບລັກສະນະປະຕິວັດອັນສູງສົ່ງຂອງເຂົາເຈົ້າ ຊຶ່ງສະແດງອອກຢູ່ໃນການລົບລ້າງທຸກໆຮູບການຂອງການກົດຂີ່ທາງສັງຄົມ ແລະ ທາງຊາດ, ຢູ່ໃນການສ້າງມິດຕະພາບ ແລະ ພະລາດອນພາບ ລະຫວ່າງບັນດາປະຊາຊາດທັງໝົດໃຫ້ໜັກແໜ້ນຢູ່ໃນຂະບວນວິວັດ ແຫ່ງການດັດສ້າງໂລກແບບປະຕິວັດ.

ລັດທິກອມມູນິດວິທະຍາສາດ ກໍ່ມີລັກສະນະສາກົນນິຍົມເຊັ່ນດຽວກັນ . ລັກສະນະສາກົນນັ້ນ ມັນສະແດງອອກຢູ່ບ່ອນວ່າ ມັນໄດ້ສັງລວມເອົາ ບົດ

ຮຽນ ບໍ່ແມ່ນສະເພາະແຕ່ປະເທດໜຶ່ງປະເທດດຽວເທົ່ານັ້ນ, ແຕ່ແມ່ນສັງລວມເອົາບົດຮຽນ ຂອງທຸກປະຊາຊາດ ແລະ ທຸກປະເທດ. ຟ.ອັງແກນ ໄດ້ຂຽນໄວ້ວ່າ: "ລັດທິກອມມູນິດ ບໍ່ແມ່ນຜົນທີ່ໄດ້ມາຈາກສະພາບພິເສດຂອງຊາດ ອັງກິດ ຫຼືຂອງຊາດອື່ນໃດໜຶ່ງ, ແຕ່ແມ່ນຂໍ້ສະຫຼຸບທີ່ຖືກຕ້ອງຕາມກົດເກນຢ່າງຫຼີກບໍ່ໄດ້ ຊຶ່ງໄດ້ມາຈາກບັນດາປະຖົມປັດໄຈ ທີ່ມີຢູ່ໃນເງື່ອນໄຂລວມຂອງອະລິຍະທຳປະຈຸບັນ"[1].

ນັກຕ້ານກອມມູນິດແລະພວກນິຍົມລັດທິແກ້ປະຕິເສດລັກສະນະສາກົນຂອງລັດທິກອມມູນິດວິທະຍາສາດ ແລະ ພະຍາຍາມນຳເອົາ ລັດທິຊາດຄັບແຄບເຂົ້າໃນທິດສະດີ, ການເມືອງ ແລະ ພຶດຕິກຳຂອງລັດທິກອມມູນິດ. ເປົ້າໝາຍຕົ້ນຕໍຂອງພວກເຂົາ ແມ່ນການອະທິບາຍລັດທິກອມມູນິດວິທະຍາສາດໃຫ້ເປັນແບບແນວຄິດຊາດຄັບແຄບ ແລະແມ່ນການມ້າງເພຄວາມເປັນເອກະພາບທາງດ້ານແນວຄິດ ແລະ ການເມືອງຂອງຊາວຜູ້ອອກແຮງງານ. ໂດຍແບ່ງລັດທິກອມມູນິດວິທະຍາສາດອອກເປັນລັດທິສະເພາະຊາດນັ້ນແມ່ນພວກເຂົາບິດເບືອນບັນດາຫຼັກການພື້ນຖານຂອງທິດສະດີປະຕິວັດ. ຕາມທາດແທ້ຂອງມັນແລ້ວ, ລັດທິກອມມູນິດວິທະຍາສາດ ເປັນຊັບສົມບັດ ຂອງຊາວຜູ້ອອກແຮງງານທັງໝົດ.

ຊົນຊັ້ນກຳມະກອນ ແລະ ພັກ ມາກ-ເລນິນ ຂອງມັນຈະສາມາດເຮັດສຳເລັດພາລະບົດບາດເປັນຜູ້ປົດປ່ອຍຂອງຕົນໄດ້ ກໍຕໍ່ເມື່ອມີຄວາມພະຍາຍາມຮ່ວມກັນໃນລະດັບສາກົນເທົ່ານັ້ນ. ນັກກອມມູນິດໄດ້ຢືນຢັນດ້ວຍ ພາກທິດສະດີ ແລະ ພາກປະຕິບັດເຖິງຄວາມເປັນເອກະພາບຂອງຕົນ, ສະນັ້ນເຂົາເຈົ້າຈຶ່ງຍາດເອົາຜົນສຳເລັດອັນຍິ່ງໃຫຍ່ມາໄດ້ ໃນການຕໍ່ສູ້ ຕ້ານລັດທິຈັກກະພັດ, ເພື່ອສັນຕິພາບ, ປະຊາທິປະໄຕ ແລະ ສັງຄົມນິຍົມ. ທາດແທ້ປະດິດສ້າງຂອງລັດທິກອມມູນິດວິທະຍາສາດ ແມ່ນມາຈາກເນື້ອໃນຂອງມັນ ທີ່ເປັນວິທະຍາສາດໜຶ່ງ ຊຶ່ງຄົ້ນຄວ້າກົດເກນຂອງການກະກຽມ, ການກຳເນີດ ແລະ ຂະຫຍາຍຕົວຂອງລະບອບກອມມູນິດ. ໜ້າທີ່ທາງ ສັງຄົມຂອງທິດສະດີດັ່ງກ່າວນີ້ແມ່ນຢູ່ບ່ອນວ່າ ມັນປູເສັ້ນທາງໃຫ້ແກ່ ການເຄື່ອນ

---

໑) ກ.ມາກ ແລະ ຟ.ອັງແກນ. ບົດນິພົນ, ເຫຼັ້ມ ໑, ໜ້າ ໕໔໕.

ໄຫວຕົວຈິງຂອງຊາວຜູ້ອອກແຮງງານໃນການດັດສ້າງໂລກ.

ການຕໍ່ສູ້ປະຕິວັດ, ການສ້າງສາສັງຄົມນິຍົມ ແລະກອມມູນິດນິຍົມເປັນຂະບວນວິວັດ ທີ່ເປີດກວ້າງອອກ ແລະ ຂະຫຍາຍຕົວ ຢ່າງບໍ່ຢຸດຢັ້ງ. ພອມພ້ອມກັບຜົນສຳເລັດໃນການດັດສ້າງໂລກໃຫ້ໄປຕາມແບບກອມມູນິດນັ້ນ ກໍ່ເກີດມີບັນຫາອັນໃໝ່, ນັບທັງວິທີການແບບໃໝ່ໃນການແກ້ໄຂບັນຫາ ດັ່ງກ່າວນີ້. ເພື່ອຈະແກ້ໄຂບັນຫາເຫຼົ່ານີ້, ທິດສະດີແຫ່ງລັດທິກອມມູນິດ ວິທະຍາສາດ ຈຳຕ້ອງໄດ້ຮັບການຂະຫຍາຍ ແລະ ເຮັດໃຫ້ມັນສົມບູນ ຂຶ້ນເລື້ອຍໆ ຢູ່ບົນພື້ນຖານການຄົ້ນຄວ້າຊີວິດຕົວຈິງຢ່າງຮອບດ້ານ ແລະ ເລິກເຊິ່ງ.

ລັດທິກອມມູນິດວິທະຍາສາດ ປະຕິບັດໜ້າທີ່ສອງຢ່າງເຊິ່ງມີການພົວພັນເຊິ່ງກັນ ແລະ ກັນ. ໜ້າທີ່ ທີໜຶ່ງ ແມ່ນການແຍກເອົາກົດເກນ ທີ່ມີຄຸນຄ່າສຳລັບທຸກໆປະເທດອອກຈາກຂະບວນວິວັດ ແລະ ປະກົດການຕ່າງໆ ອັນສັບສົນ ໃນການດັດສ້າງໂລກ. ການຄົ້ນຄວ້າກ່ຽວກັບກົດເກນດັ່ງກ່າວນີ້ ຍາມໃດກໍ່ເປັນໃຈກາງແຫ່ງຄວາມເອົາໃຈໃສ່ ຢ່າງຮອບຄອບ ຂອງບັນດານັກ ມາກຊິດ ຜູ້ເປັນນັກວິທະຍາສາດ. ໃນປະຈຸບັນນີ້ ໄດ້ມີບັນດາກົດເກນ ວ່າດ້ວຍການຕໍ່ສູ້ປະຕິວັດ ແລະ ການສ້າງສາສັງຄົມນິຍົມ ແລະ ກອມມູນິດນິຍົມ ຊຶ່ງຖືວ່າເປັນອາວຸດຂອງຂະບວນການກອມມູນິດໃນໂລກ, ກົດເກນດັ່ງກ່າວ ໄດ້ຮັບການພິສູດທາງດ້ານທິດສະດີແລະໄດ້ຮັບການທົດສອບໃນພຶດຕິກຳຕົວຈິງ. ສະນັ້ນ ມັນຈຶ່ງບໍ່ແມ່ນສິ່ງບັງເອີນທີ່ກົດເກນດັ່ງກ່າວ ໄດ້ກາຍເປັນເປົ້າໝາຍແຫ່ງການບຸກໂຈມຕີຢ່າງໜັກຈາກຝ່າຍຕ້ານກອມມູນິດແລະພວກນິຍົມລັດທິແກ້.

ໜ້າທີ່ອີກອັນໜຶ່ງຂອງລັດທິກອມມູນິດວິທະຍາສາດ ແມ່ນການໝູນໃຊ້ກົດເກນລວມເຫຼົ່ານີ້ຢ່າງປະດິດສ້າງເຂົ້າໃນແຕ່ລະພາກພື້ນ ແລະ ແຕ່ລະປະເທດ ໂດຍເອົາໃຈໃສ່ຈຸດພິເສດຂອງມັນ. ວ.ອີ.ເລນິນ ໄດ້ກຳນົດໜ້າທີ່ຂອງພັກກອມມູນິດໄວ້ດັ່ງນີ້: "ຄົ້ນຄວ້າ, ສຶກສາ, ຊອກຄົ້ນ, ຄາດຄະເນ ແລະ ກຳເອົາລັກສະນະພິເສດສະເພາະຊາດ, ລັກສະນະປະຈຳຊາດທີ່ມີຢູ່ໃນວິທີການທີ່ເໝາະສົມກັບສະພາບຕົວຈິງຂອງແຕ່ລະປະເທດໃນ

ການປະຕິບັດໜ້າທີ່ສາກົນ ທີ່ເປັນອັນໜຶ່ງອັນດຽວກັນ"[1] . ປະຈຸບັນຂໍ້ກໍານົດອັນນີ້ຂອງ ເລນິນ ພວມໄດ້ຮັບການຢືນຢັນດ້ວຍພຶດຕິກໍາທາງສັງຄົມ.

ຢູ່ໃນທິດສະດີແຫ່ງລັດທິກອມມູນິດວິທະຍາສາດນັ້ນ, ໜ້າທີ່ເຫລົ່ານີ້ຈະໄດ້ຮັບການແກ້ໄຂຢູ່ບົນພື້ນຖານການໄຈແຍກປະຫວັດສາດຕົວຈິງຂອງການຕໍ່ສູ້ປະຕິວັດແລະ ການສັງລວມປະສົບການ ໃນການກໍ່ສ້າງສັງຄົມນິຍົມ. ໃນນັ້ນ ມັກມາກຊິດ ໄດ້ທໍາການຕໍ່ສູ້ຕ້ານສອງທັດສະນະຄື:ຕ້ານທັດສະນະແບບຄໍາພີຕາຍຕົວ ທີ່ມີຕໍ່ກົດເກນລວມ ເຊິ່ງຂັດຂວາງການນໍາໃຊ້ມັນຢ່າງປະດິດສ້າງ ແລະ ຕ້ານພວກນິຍົມລັດທິແກ້ ທີ່ບິດເບືອນທາດແທ້ ແລະ ເນື້ອໃນຂອງກົດເກນລວມ.

## ເຄື່ອງມືຂອງການດັດສ້າງໂລກແບບປະຕິວັດ

ໃນຍຸກສະໄໝຂອງພວກເຮົາ ເຊິ່ງແມ່ນຍຸກສະໄໝ ແຫ່ງການຂ້າມຜ່ານຂອງມວນມະນຸດຈາກລະບອບຊຸດທຶນ ໄປສູ່ລະບອບສັງຄົມນິຍົມນັ້ນ,ພາລະບົດບາດຂອງລັດທິກອມມູນິດວິທະຍາສາດ ກໍ່ເພີ່ມຂຶ້ນຢ່າງບໍ່ຢຸດຢັ້ງ. ໃນນັ້ນ ຄວາມສັບສົນ ແລະ ຂະໜາດຂອງການດັດສ້າງທີ່ພວມດໍາເນີນ ໄປແມ່ນໃຫຍ່ຫລວງ, ດັ່ງນັ້ນ ການດັດສ້າງດັ່ງກ່າວ ຈະສໍາເລັດຜົນໄດ້ ກໍ່ຕໍ່ເມື່ອມັນ ຖືກປະຕິບັດຢູ່ບົນພື້ນຖານຄວາມຮູ້ ທາງດ້ານວິທະຍາສາດ ເທົ່ານັ້ນ.

ດຽວນີ້ ໂລກໄດ້ເປັນສັກຂີພິຍານວ່າ ຂະບວນວິວັດ ແຫ່ງການປະຕິວັດໂລກສືບຕໍ່ເບີດກວ້າງອອກ ແລະ ເລິກເຊິ່ງກວ່າເກົ່າ, ເຖິງວ່າ ມີການຕ້ານຄືນຂອງອິດທິກໍາລັງປະຕິການກໍ່ຕາມ. ລັດທິສັງຄົມນິຍົມ ນັບມື້ ຍາດເອົາທ່າດີຂອງຕົນມາໄດ້ ໃນຂອບເຂດທົ່ວໂລກ.

---

[1] ວ.ອີ.ເລນິນ. ບົດນິພົນຄົບຊຸດ, ເຫລັ້ມທີ ໔໑, ໜ້າ ກກ.

ຈຶນຈຸ້ນກຳມະກອນຂອງບັນດາປະເທດທຶນນິຍົມທີ່ຂະຫຍາຍຕົວ ໄດ້ດຳເນີນການຕໍ່ສູ້ຈຶນຈຸ້ນຢ່າງຂະຫຍັນຂັນແຂງ ຢູ່ໃນກະໂຕປະເທດຈັກກະພັດນິຍົມເອງ. ເງື່ອນໄຂຂອງການຕໍ່ສູ້ນັ້ນ ມີການປ່ຽນແປງ, ດັ່ງນັ້ນ ມັນຈຶ່ງຮຽກຮ້ອງໃຫ້ມີການຄົ້ນຄວ້າຫາຮູບການໃໝ່ ໃນການຂ້າມຜ່ານໄປສູ່ສັງຄົມນິຍົມ.

ປະຈຸບັນ, ການຕໍ່ສູ້ຂອງບັນດາປະຊາຊາດທີ່ພວມປົດປ່ອຍຕົນເອງອອກຈາກແອກລ່າຫືອເມືອງຂຶ້ນ ໄດ້ກ້າວກະໂດດເຖິງລະດັບໃໝ່ທາງດ້ານ ຄຸນນະພາບ. ຄວາມອາດສາມາດໃໝ່ ໄດ້ເປີດຊ່ອງທາງໃຫ້ເຂົາເຈົ້າ ໃນການຜ່ານຜ່າຄວາມຫລ້າຫລັງ ທີ່ມີມາແຕ່ດົນນານ ແລະ ໃນການຮັບ ເອົາຄວາມເປັນເອກະລາດ ແລະ ອິດສະຫລະພາບທາງສັງຄົມອັນແທ້ຈິງ.

ການຊອກຄົ້ນຫາວິທີແກ້ໄຂບັນຫາທີ່ກ່າວມາຂ້າງເທິງນັ້ນ ແລະ ບັນຫາອື່ນໆຈຳນວນຫລາຍຢ່າງຖືກຕ້ອງນັ້ນ ແມ່ນເປັນໜ້າທີ່ທາງສັງຄົມ ຂອງລັດທິກອມມູນິດວິທະຍາສາດ.

ມີແຕ່ຊາວຜູ້ອອກແຮງງານເທົ່ານັ້ນ ທີ່ຈະສາມາດສ້າງລະບອບໃໝ່ຊຶ່ງເປັນລະບອບທີ່ມີການດັດສ້າງຊີວິດສັງຄົມທຸກໆດ້ານຢ່າງເຖິງຖອງ. ໃນທຸກວັນນີ້, ມະຫາຊົນຈຳນວນຫລວງຫລາຍຢູ່ໃນທຸກທະວີບ ໄດ້ຖືກດຶງດູດ ເຂົ້າໃນການດັດສ້າງໂລກ. ຂະບວນວິວັດອັນນີ້ຍິ່ງມີຄວາມກ້າວໜ້າຫລາຍເທົ່າໃດ ກໍ່ຍິ່ງຈະເຮັດໃຫ້ຜູ້ປະກອບສ່ວນຢູ່ໃນນັ້ນມີສະຕິສຳນຶກ ແລະ ກໍ່ຈະເຮັດໃຫ້ການປະສົມປະສານທິດສະດີປະຕິວັດ ເຂົ້າກັບຂະບວນຂອງມວນຊົນນັ້ນມີປະສິດທິພາບຍິ່ງຂຶ້ນເທົ່ານັ້ນ.

ດັ່ງນັ້ນ ລັດທິກອມມູນິດວິທະຍາສາດ ຈຶ່ງບໍ່ພຽງແຕ່ຊ່ວຍໃຫ້ຄົນເຮົາເຂົ້າໃຈບັນດາປະກົດການທາງສັງຄົມອັນສັບສົນໄດ້ເທົ່ານັ້ນ, ແຕ່ມັນ ຍັງເປີດຊ່ອງທາງຕົວຈິງໃຫ້ແກ່ການຕໍ່ສູ້ ເພື່ອອຸດົມຄະຕິອັນມະນຸດສະທຳທີ່ສຸດ ຂອງມວນມະນຸດເຮົາ ນັ້ນແມ່ນອຸດົມຄະຕິແຫ່ງສັງຄົມນິຍົມ ແລະ ກອມມູນິດນິຍົມ. ດ້ວຍເຫດນັ້ນ ການຊາບຊຶ້ງທິດສະດີອັນນີ້ ໄດ້ຢ່າງເລິກເຊິ່ງນັ້ນ ມັນເປັນເງື່ອນໄຂອັນສຳຄັນທີ່ສຸດອັນໜຶ່ງ ໃນການກໍ່ສ້າງນັກຮົບຜູ້ຫ້າວຫັນ ແລະ ມີສະຕິຫໍ່ສູ້ເພື່ອສັງຄົມອັນຍຸດຕິທຳຢ່າງແທ້ຈິງ. ຟ.ອັງແກນ ໄດ້ເນັ້ນວ່າ : "...ສັງຄົມນິຍົມ, ນັບແຕ່ມັນໄດ້ກາຍເປັນວິທະຍາສາດ, ມັນຮຽກຮ້ອງ

ໃຫ້ຮັບຮູ້ວ່າ ມັນເປັນວິທະຍາສາດໜຶ່ງ, ໝາຍຄວາມວ່າ ຕ້ອງໄດ້ ຄົ້ນຄວ້າມັນ" [1]. ເຖິງແມ່ນວ່າຄຳເວົ້ານີ້ໄດ້ກ່າວໄວ້ເມື່ອກ່ອນນີ້ຮ້ອຍກວ່າປີກໍຕາມ, ແຕ່ພຸກວັນນີ້ ມັນຍິ່ງມີຄວາມໝາຍອັນຮີບດ່ວນ ແລະ ຖືກຕ້ອງກັບປະຈຸບັນທີ່ສຸດຍິ່ງກວ່າເວລາໃດໆ. ບົດຮຽນຂອງຫລາຍໆຄົນໄດ້ຊີ້ບອກ ວ່າ ຖ້າວ່າຄົນຜູ້ໜຶ່ງ ຕ້ອງການເຂົ້າໃຈບັນດາເຫດການແຂ່ງຍຸກສະໄໝອັນສັບສົນຂອງພວກເຮົານີ້ໄດ້ ແລະ ຢາກປະກອບສ່ວນເຂົ້າໃນການຕໍ່ສູ້ເພື່ອການດັດສ້າງໂລກໃຫ້ມີຄວາມຍຸດຕິທຳໄດ້, ຢາກຈະມີຊີວິດຢ່າງດູດດື່ມ ແລະ ເຕັມໄປດ້ວຍຄວາມໝາຍ, ຄົນຜູ້ນັ້ນ ຈະຕ້ອງຮູ້ລັດທິກອມມູນິດວິທະຍາສາດໃຫ້ດີ.

ຄວນຄົ້ນຄວ້າລັດທິກອມມູນິດວິທະຍາສາດແນວໃດ ?

ກ່ອນອື່ນໝົດ, ຕ້ອງເຂົ້າໃຈເປົ້າໝາຍ ດ້ານສັງຄົມຂອງມັນ. ລັດທິກອມມູນິດວິທະຍາສາດ ແມ່ນທິດສະດີ ແລະ ໂຄງການຂອງການດັດສ້າງສັງຄົມເກົ່າ ແບບປະຕິວັດ ແລະ ປະດິດສ້າງສັງຄົມໃໝ່ ທີ່ມີການພົວພັນຢ່າງສະໜິດແໜ້ນ ກັບພຶດຕິກຳຕົວຈິງ.

ປະການທີສອງ, ການຄົ້ນຄວ້າລັດທິກອມມູນິດວິທະຍາສາດໝາຍເຖິງການສຶກສາຄົ້ນຄວ້າຢ່າງເປັນປະຈຳກ່ຽວກັບບົດນິພົນຂອງ ກ.ມາກ, ຟ. ອັງແກນ ແລະ ວ.ອີ.ເລນິນ ກໍຄື ເອກະສານຂອງ ບັນດາພັກກອມມູນິດ ແລະ ພັກກຳມະກອນ, ຍ້ອນວ່າເອກະສານເຫລົ່ານີ້ ແມ່ນຜົນຂອງຄວາມພະຍາຍາມຮ່ວມກັນ ໃນການເສີມຂະຫຍາຍລັດທິກອມມູນິດວິທະຍາສາດ.

ປະການທີສາມ, ລັດທິກອມມູນິດວິທະຍາສາດ ເປັນການສືບຕໍ່ ແລະ ເປັນພາກສຸດທ້າຍຂອງປັດຊະຍາ ແລະ ເສດຖະສາດການເມືອງແຫ່ງລັດທິມາກ ຢ່າງມີຕັກກະສາດ. ເພາະສະນັ້ນ ເພື່ອທີ່ຈະຊາບຊຶ້ງມັນໄດ້ນັ້ນແມ່ນຕ້ອງມີຄວາມເຂົ້າໃຈອັນແນ່ນອນກ່ຽວກັບປັດຊະຍາ ແລະ ເສດຖະສາດການເມືອງແຫ່ງລັດທິມາກເສຍກ່ອນ.

ປະການທີສີ່, ພວກເຮົາ ຈະເຂົ້າໃຈລັດທິກອມມູນິດວິທະຍາສາດ ໄດ້ຢ່າງເລິກເຊິ່ງ ຖ້າມີການສົມທຽບມັນກັບບັນດາທິດສະດີອື່ນໆທີ່ປໍລະປັກ ກັບ

---

1) ກ.ມາກ ແລະ ຟ.ອັງແກນ. ບົດນິພົນ, ເຫລັ້ມທີ ໑໘, ໜ້າ ໔໙໙.

ມັນ ແລະ ຈົນກະທັ້ງສົມທຽບກັບລັດທິສັງຄົມນິຍົມແບບໄຟຝັນລອຍເມກແລະບັນດາຮູບການຂອງມັນທີ່ຍັງມີຢູ່ໃນປະຈຸບັນນີ້.

ປະການທີຫ້າ, ເພື່ອຈະເຂົ້າໃຈແຈ້ງກ່ຽວກັບລັດທິກອມມູນິດວິທະຍາ-ສາດນັ້ນ, ຕ້ອງສຶກສາຄົ້ນຄວ້າມັນຄືກັບລະບົບຄວາມຮູ້ອັນຄົບຖ້ວນໜຶ່ງເຊິ່ງໃນນັ້ນທຸກໆທິດສະດີ, ຫລັກມູນ, ມາດຕະການລ້ວນແຕ່ມີການພົວພັນຊຶ່ງກັນແລະກັນ.

ບາດນີ້ ພວກເຮົາຈະກ້າວໄປທຳຄວາມຮູ້ຈັກກັບເນື້ອໃນ ຂອງວິທະຍາສາດນີ້ ຢ່າງລະອຽດ. ພວກເຮົາຈະສຶກສາເບິ່ງວ່າວິທະຍາສາດດັ່ງກ່າວນີ້ແກ້ໄຂບັນຫາສັງຄົມ ໃນປະຈຸບັນນີ້ຢ່າງໃດ ແລະ ການແກ້ໄຂດັ່ງກ່າວ ຖືກນຳໃຊ້ ເຂົ້າໃນຊີວິດຕົວຈິງແນວໃດ.

## ບົດທີ ໓. ເນື້ອໃນພື້ນຖານຂອງຍຸກສະໄໝປະຈຸບັນ

ແຕ່ລະລະບອບສັງຄົມໃໝ່ ແມ່ນເກີດຂຶ້ນຢ່າງລຳບາກ ແລະ ສັບສົນ. ດ້ວຍເຫດວ່າສັງຄົມນິຍົມແຕກຕ່າງຢ່າງຂາດຂັ້ນກັບບັນດາຮູບຖານຈັດຕັ້ງທີ່ມີຢູ່ກ່ອນແລ້ວ, ດ້ວຍເຫດນັ້ນ ຂະບວນວິວັດແຫ່ງການກໍ່ຕັ້ງຂອງມັນ ຈຶ່ງມີລັກສະນະສະເພາະຂອງມັນ. ຂະບວນວິວັດດັ່ງກ່າວນັ້ນ ດຳເນີນໄປບໍ່ພຽງແຕ່ຢູ່ໃນປະເທດດຽວ ຫລືກຸ່ມປະເທດໜຶ່ງເທົ່ານັ້ນ, ແຕ່ມັນໄດ້ກາຍເປັນ ລັກສະນະລະຫວ່າງຊາດ.

ໂລກສະໄໝປະຈຸບັນນີ້ ມີຄວາມສັບສົນ ແລະ ອັດແຍ່ງຢ່າງບໍ່ເຄີຍ ມີມາ. ໃນໂລກມີເກືອບ ໑໔໐ ລັດ ເຊິ່ງເປັນຕົວແທນໃຫ້ແກ່ລະບົບເສດຖະກິດ–ສັງຄົມ ທີ່ແຕກຕ່າງກັນທີ່ສຸດ. ໃນຈຳນວນດັ່ງກ່າວຈຳນວນໜຶ່ງ ພວມກ້າວເດີນໄປບົນເສັ້ນທາງສັງຄົມນິຍົມ, ຈຳນວນໜຶ່ງອີກພັດພວມຢູ່ໃນ ໄລຍະຂະຫຍາຍຕົວແບບທຶນນິຍົມ ແລະ ປະສົບກັບວິກິດການ ແລະ ສະພາບການປັ່ນປ່ວນອື່ນໆ ຢ່າງເນື່ອງນິດລຽນຕິດ, ຈຳນວນທີສາມ ຊ້ຳພັດຍັງຢູ່ໃຕ້ການຄອບງຳຂອງລະບຽບການແບບສັກດີນາຢູ່. ມີປະຊາຊາດຈຳນວນບໍ່ໜ້ອຍ ທີ່ຍັງດຳລົງຊີວິດໃນເງື່ອນໄຂແຫ່ງການພົວພັນເຄິ່ງສັກດີນາ ແລະ ບິດາສິດທິລາດ. ຍັງມີລະບົບສັງຄົມຈຳນວນຫລວງຫລາຍ ເຊິ່ງເປັນລະບົບສັງຄົມແບບທີ່ເຄີຍພົບໃນປະຫວັດສາດຂອງມວນມະນຸດແຕ່ດົນມາແລ້ວ. ດັ່ງນັ້ນລະດັບການຂະຫຍາຍຕົວຂອງບັນດາລັດ ແລະ ປະຊາຊາດຈຶ່ງຜິດ ໂຕນກັນແບບບໍ່ເຄີຍເຫັນໃນອະດີດ.

ແຕ່ວ່າ ເຖິງຈະມີຫລາຍສິ່ງຫລາຍຢ່າງຕ່າງກັນກໍ່ຕາມ, ໂລກເຮົາແມ່ນເປັນອັນດຽວ. ເຖິງແມ່ນວ່າຊາດໃດໜຶ່ງຈະນອນຢູ່ໃນຂັ້ນຕອນແຫ່ງ ການ

ຂະຫຍາຍຕົວຂອງສັງຄົມ ອັນຕອນໃດກໍ່ຕາມ, ມັນກໍບໍ່ແມ່ນວ່າ ຈະດຳ-ລົງຄົງຕົວ ຫ່າງເຫີນຈາກປະຊາຊາດອື່ນ. ປະເທດໜຶ່ງ ໄດ້ຕິດພັນກັບຊີວິດຂອງປະເທດອື່ນໆດ້ວຍສາຍໄຍຕັ້ງເປັນພັນໆສາຍ. ເຫດການທີ່ເກີດຂຶ້ນຢູ່ໃນສ່ວນໃດໜຶ່ງຂອງໂລກກໍ່ລ້ວນແຕ່ກະທົບບໍ່ແນວໃດກໍແນວໜຶ່ງ ຕໍ່ຊາຕາກຳຂອງປະຊາຊົນທີ່ດຳລົງຄົງຕົວຢູ່ໃນຂົງເຂດອື່ນຂອງໂລກ. ບໍ່ມີເຫດການອັນສຳຄັນໃດເລີຍ ໃນຍຸກສະໄໝຂອງພວກເຮົານີ້ ທີ່ມີລັກສະນະພາກສ່ວນຢູ່ໃນນັ້ນກໍລະນີພິພາດທາງດ້ານການທະຫານ ແມ່ນອັນຕະລາຍ ທີ່ຮ້າຍແຮງກວ່າໝູ່, ບໍ່ວ່າມັນເລີ່ມຕົ້ນຂຶ້ນທີ່ໃດ ກໍ່ລ້ວນແຕ່ເປັນການອື່ມອູ່ຕົວຈິງ ທີ່ຈະພາໃຫ້ເກີດກອງໄຟເຜົາຜານໂລກ. ການຊ່ວງເສັງປະກອບອາວຸດ ເຊິ່ງພວກຈັກກະພັດເປັນຜູ້ດຳເນີນນັ້ນ ຖ້າບໍ່ຖືກຢັບຢັ້ງແລ້ວ ມັນຈະເປັນອັນຕະລາຍບໍ່ພຽງແຕ່ຕໍ່ປະຊາຊາດຈຳນວນໃດໜຶ່ງເທົ່ານັ້ນ, ແຕ່ມັນອື່ມອູ່ການດຳລົງຊີວິດຂອງມວນມະນຸດເຮົາທັງໝົດ.

ການພົວພັນທີ່ຕັດແຍກອອກຈາກກັນບໍ່ໄດ້ຂອງໂລກປະຈຸບັນ ເປັນຜົນ ທີ່ໄດ້ມາຈາກການຂະຫຍາຍຕົວຂອງປະຫວັດສາດ. ຄົນສະໄໝນີ້ ຈຳນວນຫລວງຫລາຍ ຮັບຮູ້ເຖິງການພົວພັນດັ່ງກ່າວ ເຊິ່ງສະແດງອອກຢູ່ໃນຄວາມເປັນຫ່ວງເປັນໃຍຂອງເຂົາເຈົ້າຕໍ່ອະນາຄົດຂອງມວນມະນຸດ ແລະ ຢູ່ໃນການຕໍ່ສູ້ຕ້ານບັນດາອິດທິກຳລັງທີ່ເປັນຜູ້ອື່ມອູ່ການດຳລົງຄົງຕົວ ຂອງມະນຸດນັ້ນເອງ.

ຈຸດສະເພາະຂອງຍຸກສະໄໝພວກເຮົານີ້ ໄດ້ປະກົດອອກຢ່າງລະອຽດຢູ່ບ່ອນໃດ ? ມີລັກສະນະອັນໃດແດ່ ທີ່ເຮັດໃຫ້ມັນແຕກຕ່າງກັບບັນດາ ໄລຍະປະຫວັດສາດໃນອະດີດ ? ແມ່ນຫຍັງ ທີ່ເຮັດໃຫ້ວັນເວລາ ຂອງພວກເຮົາ ບໍ່ມີການລົມຄືນ ? ກ່ອນຈະຕອບຄຳຖາມເຫລົ່ານີ້, ພວກເຮົາ ຄວນຈະສຶກສາເບິ່ງຄວາມສຳນຶກກ່ຽວກັບ "ຍຸກສະໄໝ" ເສຍກ່ອນ.

## ຍຸກສະໄໝ ແມ່ນຫຍັງ ?

ປະຫວັດສາດທັງໝົດຂອງມວນມະນຸດ ສາມາດແບ່ງອອກເປັນ ໄລຍະເວລາໃຫຍ່ ທີ່ຖືກອີດໝາຍດ້ວຍບັນດາເຫດການໃຫຍ່ໃດໜຶ່ງຄື: ສົງຄາມ, ການປະຕິວັດ, ການກ້າວຂຶ້ນກຳອຳນາດຂອງຊົນຊັ້ນໃໝ່ ແລະ ອື່ນໆ. ແຕ່ລະໄລຍະເວລາເຫຼົ່ານີ້ ລ້ວນແຕ່ແຕກຕ່າງຈາກໄລຍະປະຫວັດສາດທີ່ເກີດຂຶ້ນກ່ອນ ແລະ ຫລັງ ເຊິ່ງໄລຍະເວລາດັ່ງກ່າວແມ່ນມີໃບໜ້າ ທີ່ບໍ່ສຳຄືນຈັກເທື່ອ. ໄລຍະເວລາດັ່ງກ່າວນີ້ຂອງປະຫວັດສາດໂລກເອີ້ນວ່າເປັນຍຸກສະໄໝແຫ່ງປະຫວັດສາດ. ປະຫວັດສາດຂອງມວນມະນຸດ ແມ່ນຍຸກ ສະໄໝໜຶ່ງສືບລຳດັບຕໍ່ມາຈາກອີກຍຸກສະໄໝໜຶ່ງ ຢ່າງຕໍ່ເນື່ອງກັນ.

ຍຸກສະໄໝໜຶ່ງ ແຕກຕ່າງກັບອີກຍຸກສະໄໝໜຶ່ງຢູ່ບ່ອນໃດແທ້, ບົນຫລັກການອັນໃດ ຈຶ່ງມີການແບ່ງຂະບວນວິວັດແຫ່ງປະຫວັດສາດອັນດຽວ ນີ້ອອກເປັນບັນດາຍຸກສະໄໝ ? ນັກຄົ້ນຄິດບາງຄົນຖືວ່າ ຍຸກສະໄໝ ໜຶ່ງຕ່າງກັບອີກຍຸກສະໄໝໜຶ່ງຢູ່ບ່ອນລະດັບ ແລະ ປະເພດ ແຫ່ງການຂະຫຍາຍຕົວຂອງສິລະປະກຳ, ຈຳນວນໜຶ່ງອີກ ພັດຖືວ່າຕ່າງຢູ່ບ່ອນການສັບປ່ຽນ ແລະ ແຜ່ຂະຫຍາຍສາສະໜາຕ່າງໆ ແລະ ພວກທີສາມ ພັດຖືວ່າຕ່າງກັນຢູ່ບ່ອນຜົນສຳເລັດ ແລະ ການຄົ້ນພົບທາງດ້ານວິທະຍາສາດ.

ແນ່ນອນແລ້ວວ່າ ຍຸກສະໄໝຂອງພວກເຮົາ ແຕກຕ່າງກັບຍຸກສະໄໝກ່ອນທາງດ້ານລະດັບການຂະຫຍາຍຕົວຂອງສິລະປະກຳ, ກໍຄືຂອບເຂດແຫ່ງການແຜ່ຂະຫຍາຍສາສະໜາ, ການເພີ່ມຂຶ້ນຂອງຈຳນວນ ການຄົ້ນພົບອັນເປັນຫລັກການຢູ່ໃນວິທະຍາສາດ ແລະ ເຕັກນິກ. ແຕ່ຫາກວ່າ ຄວາມແຕກຕ່າງອັນຕົ້ນຕໍລະຫວ່າງຍຸກສະໄໝ ບໍ່ແມ່ນຢູ່ບ່ອນນັ້ນ, ຈຳເປັນຕ້ອງຊອກຫາມັນໃຫ້ເລິກເຊິ່ງກວ່ານັ້ນອີກ ໝາຍຄວາມວ່າ ຕ້ອງຄົ້ນຫາມັນຢູ່ໃນພື້ນຖານຂອງຊີວິດສັງຄົມ, ຢູ່ໃນແບບວິທີການຜະລິດຊັບສິນວັດຖຸ. ຈາກທັດສະນະດັ່ງກ່າວ ບັນດາປະເທດ ແລະ ລັດທີ່ມີຢູ່ໃນປະຈຸບັນ ຈະຖືກ ແບ່ງອອກເປັນກຸ່ມອັນແນ່ນອນ ເຊິ່ງມີຮູບຖານເສດຖະກິດ-ສັງຄົມຕ່າງກັນຄື: ຮູບຖານກອມມູນິດ, ທຶນນິຍົມ, ສັກດີນາ ແລະ ອື່ນໆ.

ກຸ່ມປະເທດໜຶ່ງໆແຕກຕ່າງກັນດ້ວຍຫລາຍລັກສະນະດີ: ດ້ວຍປະຫວັດສາດໃນອະດີດ, ເງື່ອນໄຂທຳມະຊາດ, ການປະກອບສ້າງທາງ ຊົນຊາດຂອງປະຊາຊົນ. ແຕ່ອັນສຳຄັນທີ່ສຸດທີ່ຈະຕ້ອງຮູ້ນັ້ນ ແມ່ນວ່າແບບວິທີ ການຜະລິດໃດ ເປັນຜູ້ກຳນົດຊີວິດສັງຄົມດັ່ງກ່າວ ແລະ ພາຫະນະການຜະລິດນັ້ນຢູ່ໃນກຳມືຂອງໃຜ. ເມື່ອນັ້ນ ຈະເຫັນໄດ້ວ່າລັດທີ່ບໍ່ຄ້າຍຄືກັນ ຕົວຢ່າງສະຫະພາບໂຊວຽດ ແລະ ກູບາ ຈະຕ້ອງໄດ້ຈັດເຂົ້າຢູ່ໃນຮູບຖານ ກອມມູນິດອັນດຽວກັນ. ກົງກັນຂ້າມ ປະຊາຊົນຊາດດຽວກັນໃນອະດີດ ແຕ່ປະຈຸບັນພັດເປັນຕົວແທນໃຫ້ແກ່ສອງຮູບຖານຕ່າງກັນຄື: ໃນປະຈຸບັນ ສປ ເຍຍລະມັນ ແມ່ນຈັດເຂົ້າຢູ່ໃນຮູບຖານກອມມູນິດ, ສ່ວນ ສສ ເຍຍລະມັນ ພັດຢູ່ໃນຮູບຖານທຶນນິຍົມ.

ພື້ນຖານຂອງແຕ່ລະຮູບຖານສັງຄົມ ແມ່ນແບບວິທີການຜະລິດ ອັນແນ່ນອນໃດໜຶ່ງ ແລະ ຢູ່ໃນແຕ່ລະແບບວິທີການຜະລິດ ກໍ່ຈະມີຊົນຊັ້ນໃດໜຶ່ງອັນແນ່ນອນຄື: ສັກດີນາ, ນາຍທຶນ, ຊົນຊັ້ນກຳມະກອນ ແລະ ຊາວນາ. ດ້ວຍເຫດວ່າ ຢູ່ເບື້ອງຫລັງຂອງແຕ່ລະຮູບຖານ ຕ້ອງມີຊົນຊັ້ນອັນແນ່ນອນນັ້ນ, ເມື່ອວິໄຈກ່ຽວກັບຈຸດພິເສດຂອງຍຸກສະໄໝໃດໜຶ່ງ ຈຶ່ງມີຄວາມຈຳເປັນຕ້ອງໄດ້ຊີ້ບອກວ່າແມ່ນຊົນຊັ້ນໃດທີ່ກຳອຳນາດ ແລະເປັນຊົນຊັ້ນທີ່ຄອບຄອງ. ກ່ຽວກັບຂໍ້ຄວາມນີ້ ວ.ອີ.ເລນິນ ໄດ້ຂຽນວ່າ: "ພວກເຮົາ ຈະບໍ່ສາມາດຮູ້ໄດ້ວ່າ ຂະບວນການປະຫວັດສາດໃດໜຶ່ງຂອງຍຸກສະໄໝ ໃດໜຶ່ງ ຈະໄດ້ຮັບການຂະຫຍາຍຕົວດ້ວຍຄວາມວ່ອງໄວ ແລະ ພົບສຳເລັດເຖິງຂັ້ນໃດ. ແຕ່ພວກເຮົາສາມາດຮູ້ ແລະ ພວກເຮົາກຳລັງຮູ້ວ່າແມ່ນ<u>ຊົນຊັ້ນໃດ</u>ພວມຢືນຢູ່ໃຈກາງຂອງຍຸກສະໄໝນີ້ ຫລືຍຸກສະໄໝນັ້ນ ຊຶ່ງເປັນ ຜູ້ກຳນົດເນື້ອໃນ, ທິດທາງຕົ້ນຕໍໃນການຂະຫຍາຍຕົວຂອງຍຸກສະໄໝ ແລະ ຈຸດພິເສດອັນເປັນພື້ນຖານຂອງສະພາບການປະຫວັດສາດ ຂອງຍຸກສະໄໝໃດໜຶ່ງ ແລະ ອື່ນໆ" ໑). ລັດທິກອມມູນິດວິທະຍາສາດ ເປັນຜູ້ຊ່ວຍກຳນົດຈຸດພິເສດຂອງຍຸກສະໄໝນີ້ ຫລືຍຸກສະໄໝນັ້ນ ແລະ ຊ່ວຍຄົ້ນຫາເນື້ອໃນຂອງຍຸກສະໄໝປະຈຸບັນ.

ການໄຈ້ແຍກຍຸກສະໄໝປະຫວັດສາດນັ້ນ ແມ່ນຈຸດຕົ້ນຕໍ ຂອງຍຸດທະ

---

໑) ວ.ອີ.ເລນິນ.ບົດນິພົນຄົບຊຸດ, ເຫລັ້ມທີ ໒໖, ໜ້າ ໑໔໒.

ສາດ ແລະ ຍຸດໂທບາຍ ຂອງບັນດາພັກກອມມູນິດ ແລະ ພັກກຳມະກອນ.
ວ.ອິ.ເລນິນ ໄດ້ເນັ້ນວ່າ: "ມີພຽງແຕ່ຢູ່ບົນພື້ນຖານອັນນີ້ເທົ່ານັ້ນ, ໝາຍຄວາມວ່າ ໂດຍຕົ້ນຕໍແລ້ວແມ່ນຄຳນຶງເຖິງລັກສະນະພື້ນຖານ ຂອງຄວາມແຕກຕ່າງຂອງ "ຍຸກສະໄໝ" ຕ່າງໆ ( ແຕ່ບໍ່ແມ່ນກໍລະນີບັງເອີນ ຕ່າງຫາກ ແຫ່ງປະຫວັດສາດຂອງປະເທດໃດໜຶ່ງ ), ພວກເຮົາຈຶ່ງຈະສາມາດວາງຍຸດໂທບາຍຂອງຕົນໄດ້ຢ່າງຖືກຕ້ອງ; ມີແຕ່ຄວາມຮູ້ກ່ຽວກັບລັກສະນະພື້ນຖານຂອງຍຸກສະໄໝໃດໜຶ່ງ ຈຶ່ງຈະສາມາດຮັບໃຊ້ເປັນພື້ນຖານສຳລັບການຄຳນຶງເຖິງຈຸດພິເສດອັນລະອຽດກວ່າຂອງປະເທດໜຶ່ງຫລື ປະເທດອື່ນໆ" 1).

ປະສົບການທາງສັງຄົມໄດ້ຢືນຢັນວ່າ ການກຳນົດລັກສະນະຂອງຍຸກສະໄໝ ທີ່ມີຢູ່ນັ້ນຢ່າງຖືກຕ້ອງ ແມ່ນມີຄວາມໝາຍຍິ່ງໃຫຍ່ ສຳລັບ ການວາງແນວທາງການເມືອງ ໃຫ້ຖືກຕ້ອງ. ກ. ມາກ, ຟ. ອັງແກນແລະ ວ.ອິ.ເລນິນ ໄດ້ຖືວ່າບັນຫານີ້ມີຄວາມໝາຍສຳຄັນອັນດັບໜຶ່ງ. ພິເສດແລ້ວ ຄວາມໝາຍຂອງບັນຫາດັ່ງກ່າວໄດ້ທະວີຂຶ້ນໃນຕອນຕົ້ນຂອງສະຕະວັດທີ 20 ນີ້. ແມ່ນໃນເວລານັ້ນເອງທີ່ ວ.ອິ.ເລນິນ ໄດ້ຈັດແບ່ງ ປະຫວັດສາດອອກເປັນສະໄໝໃໝ່ ແລະ ສະໄໝໃໝ່ສຸດ, ເພິ່ນໄດ້ຊີ້ບອກສະໄໝປະຫວັດສາດດັ່ງຕໍ່ໄປນີ້:

<u>ສະໄໝທຳອິດ</u>- ນັບຕັ້ງແຕ່ມະຫາປະຕິວັດທຶນນິຍົມຝະລັ່ງ ເຖິງ ສົງຄາມລະຫວ່າງ ຝະລັ່ງ ກັບ ປະຣຸດຊີ ແລະ ກອມມູນປາຣີ ( 1789 - 1871 ) ເປັນສະໄໝແຫ່ງຄວາມຮຸ່ງເຮືອງຂອງຊົນຊັ້ນນາຍທຶນແລະໄຊຊະນະອັນສົມບູນຂອງມັນ. ໃນໄລຍະນີ້ ນາຍທຶນໄດ້ດຳເນີນການຕໍ່ສູ້ ຕ້ານລະບອບແບບແຜນຂອງສັກດີນາ ຢູ່ໃນທົ່ວທຸກແຫ່ງຫົນ ເຊິ່ງໃນນັ້ນຊົນຊັ້ນກຳມະກອນ ກໍໄດ້ເຂົ້າຮ່ວມນຳ.

<u>ສະໄໝທີສອງ</u>- ແມ່ນສະໄໝແຫ່ງການຄອບງຳຢ່າງສົມບູນຂອງນາຍທຶນ, ການຊຸດໂຊມຂອງມັນແລະການກ້າວໄປຫາຈັກກະພັດ(1871-1914). ຢູ່ໃນເວລານີ້ ຊົນຊັ້ນກຳມາຊີບມີການກະກຽມ ແລະ ການຮວບຮວມກຳລັງ

---

1) ວ.ອິ.ເລນິນ. ບົດນິພົນຄົບຊຸດ, ເຫລັ້ມທີ 26, ໜ້າ 148.

ເພື່ອທຳການສູ້ຮົບອັນຕັດສິນຊີ້ຂາດກັບພວກນາຍທຶນ. ວ.ອີ.ເລນິນໄດ້ຂຽນວ່າ: "ຈາກຊົນຊັ້ນກ້າວໜ້າທີ່ສຸດທາງທາພູງຂົນນັ້ນ ບາດນີ້ນາຍທຶນໄດ້ກາຍເປັນຊົນຊັ້ນຫລ້າຖອຍ ແລະ ຕົກຕ່ຳລົງ, ກະໂຕມັນເອງກໍມີລັກສະນະ ປະຕິການ ແລະ ພົ້ນສະໄໝ. ຊົນຊັ້ນໃໝ່ຢ່າງສົມເຊີງ ອີກຊົນຊັ້ນໜຶ່ງໄດ້ກາຍເປັນຊົນຊັ້ນທີ່ສຸດທາງທາພູງຂົນມາຢູ່ໃນຂອບເຂດອັນກວ້າງຂວາງ ຂອງປະຫວັດສາດ"(1). ຍຸກສະໄໝໃໝ່ຮຽກຮ້ອງໃຫ້ມີການວາງທິດທາງການເມືອງໃໝ່ໃນການດຳເນີນງານແລະການຕໍ່ສູ້ຂອງຊົນຊັ້ນກຳມາຊີບແລະຮຽກຮ້ອງໃຫ້ມີການສ້າງຕັ້ງພັກແບບໃໝ່ ທີ່ມີຄວາມສາມາດນຳພາມວນມະຫາຊົນໄປເຖິງການບຸກໂຈມຕີທຶນນິຍົມ.

<u>ສະໄໝທີສາມ</u>–ແມ່ນຍຸກສະໄໝຂ້າມຜ່ານຈາກທຶນນິຍົມ ໄປສູ່ສັງຄົມນິຍົມ ເຊິ່ງໄດ້ເລີ່ມຕົ້ນດ້ວຍໄຊຊະນະຂອງມະຫາປະຕິວັດສັງຄົມນິຍົມເດືອນຕຸລາຢູ່ລັດເຊຍ ເມື່ອປີ 1917.

ວ.ອີ.ເລນິນ ໄດ້ຂຽນວ່າ: "ພວກເຮົາມີສິດພູມໃຈ ແລະ ພວກເຮົາກໍພວມພູມໃຈຍ້ອນວ່າພວກເຮົາມີຄວາມສຸກ ທີ່ໄດ້<u>ເລີ່ມຕົ້ນ</u>ສ້າງສາ ລັດໂຊວຽດ, <u>ເລີ່ມຕົ້ນ</u>ຍຸກສະໄໝໃໝ່ຂອງປະຫວັດສາດໂລກ ອັນນັ້ນແມ່ນຍຸກສະໄໝແຫ່ງການປົກຄອງຂອງຊົນຊັ້ນ<u>ໃໝ່</u> ເຊິ່ງຖືກກົດຂີ່ຢູ່ໃນປະເທດທຶນນິຍົມທັງໝົດ, ທີ່ກຳລັງກ້າວເດີນໄປຫາຊີວິດໃໝ່ ໄປສູ່ການເອົາຊະນະ ພວກນາຍທຶນ, ໄປຫາຜະເດັດການກຳມາຊີບ ແລະ ໄປສູ່ການກອບກູ້ເອົາມວນມະນຸດອອກຈາກແອກຂອງນາຍທຶນ ແລະ ອອກຈາກສົງຄາມຈັກກະພັດຢູ່ທົ່ວທຸກແຫ່ງຫົນ" (2).

ດັ່ງນັ້ນ ຍຸກສະໄໝແມ່ນເປັນໄລຍະເວລາອັນຍາວນານ ຂອງປະຫວັດສາດໂລກ ຊຶ່ງຖືກຂີດໝາຍດ້ວຍເຫດການໃຫຍ່ ແລະ ພົວພັນກັບບັນດາຂັ້ນຕອນອັນເປັນພື້ນຖານຢູ່ໃນການຂະຫຍາຍຕົວຂອງລະບອບເສດຖະກິດ– ສັງຄົມໃດໜຶ່ງ ຫລືກັບການສັບປ່ຽນລະບອບ.

ສອງຍຸກສະໄໝທຳອິດ ແມ່ນພົວພັນກັບການກຳເນີດ ແລະ ຂະຫຍາຍ

1) ວ.ອີ.ເລນິນ. ບົດນິພົນຄົບຊຸດ, ເຫລັ້ມທີ 26, ໜ້າ 145–146.

2) ວ.ອີ.ເລນິນ. ບົດນິພົນຄົບຊຸດ, ເຫລັ້ມທີ 44, ໜ້າ 147.

ຕົວຂອງຮູບຖານອັນດຽວກັນນັ້ນ ແມ່ນຮູບຖານທຶນນິຍົມ. ສ່ວນຍຸກສະໄໝທີ່ສາມນີ້ ແມ່ນແຕກຕ່າງກັນຢ່າງມີລັກສະນະຫລັກການ ເຊິ່ງໃນນັ້ນ ແມ່ນມີການຂ້າມຜ່ານຈາກລະບົບສັງຄົມທີ່ມີການຂູດຮີດໄປສູ່ລະບອບໃໝ່ແຫ່ງກອມມູນິດ ທີ່ບໍ່ມີການກົດຂີ່ລະຫວ່າງຄົນກັບຄົນ, ທີ່ມີຄວາມສະເໝີພາບທາງສັງຄົມ ແລະ ຢູ່ໃນນັ້ນຄວາມເປັນຫ່ວງເປັນໃຍເຖິງຄວາມສົມບູນພູນສຸກ ຂອງແຕ່ລະບຸກຄົນ ໄດ້ກາຍເປັນເປົ້າໝາຍອັນສູງສົ່ງຂອງສັງຄົມ.

ຄຳນິຍາມອັນຖືກຕ້ອງກ່ຽວກັບຍຸກສະໄໝ ແມ່ນມີຄວາມໝາຍ ສຳຄັນອັນໃຫຍ່ຫລວງບໍ່ພຽງແຕ່ສຳລັບການວາງຍຸດທະສາດ ແລະຍຸດໂທບາຍຂອງບັນດາພັກກອມມູນິດ ແລະ ພັກກຳມະກອນເທົ່ານັ້ນ, ແຕ່ມັນຍັງມີ ຄວາມໝາຍສຳຄັນທີ່ສຸດ ສຳລັບການກໍ່ຮ່າງສ້າງຕົວຂອງໂລກະທັດອັນຖືກຕ້ອງ , ຂອງທ່ານຍິງແຕ່ງການດຳລົງຄົງຕົວ ກໍ່ຄື ຈຸດຢືນຂອງແຕ່ລະຄົນ.

ແມ່ນໃຜແທ້ເປັນຕົວແທນໃຫ້ແກ່ຍຸກສະໄໝປະຈຸບັນ ແລະອະນາຄົດຈະຕົກເປັນຂອງໃຜ, ເປັນຂອງທຶນນິຍົມ ທີ່ເຕັມໄປດ້ວຍວິກິດການ, ການທັບເປັນການທະຫານ ແລະ ການກົດຂີ່ຊາວຜູ້ອອກແຮງງານ ຫລືຈະເປັນຂອງສັງຄົມນິຍົມ ຜູ້ເຊິ່ງໄດ້ປະກາດໃຊ້ຄຳຂວັນທີ່ວ່າ "ທຸກສິ່ງທຸກຢ່າງແມ່ນເພື່ອມະນຸດ, ທຸກສິ່ງທຸກຢ່າງສຳລັບຄວາມສົມບູນພູນສຸກຂອງຄົນ"? ລະບອບທຶນນິຍົມ ເປັນຜູ້ເຮັດໃຫ້ຄົນເກີດມີແນວຄິດ ມອງເຫັນແຕ່ແງ່ຮ້າຍ, ຢ້ານກົວຕໍ່ອະນາຄົດ, ຜູກມັດກຳລັງແຮງຂອງຄົນໄວ້ ໂດຍຫວັງເຮັດໃຫ້ຄົນກາຍເປັນເຄື່ອງມືທີ່ບອກໄດ້ໃຊ້ຟັງຂອງກຳລັງທີ່ມີລັກສະນະຕາມມີຕາມເກີດ. ສັງຄົມນິຍົມແມ່ນເປັນຜູ້ເຮັດໃຫ້ຄົນມີສູຂະທັດນິຍົມ, ມີຄວາມເຊື່ອໝັ້ນ, ເຮັດໃຫ້ມີການຄົ້ນຄິດ ແລະ ຊອກຫາຈຸດຢືນຂອງຕົນຢູ່ໃນໝູ່ຜູ້ຄົນທີ່ພວມດຳເນີນການຕໍ່ສູ້ ເພື່ອການດຳລົງຊີວິດອັນສຸກສະບາຍ ແລະ ເພື່ອການລົບລ້າງ ບັນດາປະກົດການອັນໜ້າສະຫຍົດສະຫຍອງຄື: ສົງຄາມ, ການກົດຂີ່ຂົ່ມເຫັງລະຫວ່າງຄົນກັບຄົນ, ໄພຫວ່າງງານ ແລະ ຄວາມທຸກຍາກເກາກຳ.

ໃນປະຈຸບັນນີ້ ແມ່ນມີການຕໍ່ສູ້ທາງດ້ານແນວຄິດຢ່າງຂ້ຽວຂາດ ກ່ຽວກັບເນື້ອໃນຂອງຍຸກສະໄໝ. ການໂຄສະນາຂອງນາຍທຶນໄດ້ວາດພາບຍຸກສະໄໝປະຈຸບັນນີ້ຄືແນວໃດ ແລະ ມັນເລັງໃສ່ເປົ້າໝາຍໃດແດ່ ?

แบบย่างที่สองแสงเຖິງແນວຄິດນາຍທຶນ

ປະຈຸບັນນີ້ ມີຫລາຍທິດສະດີນາຍທຶນ ທີ່ໃຫ້ການອະທິບາຍກ່ຽວກັບ ຍຸກສະໄໝຂອງພວກເຮົານີ້ ຕາມແບບສະບັບຂອງໃຜມັນ, ແຕ່ວ່າຢູ່ເບື້ອງຫຼັງທິດສະດີຈຳນວນຫລວງຫລາຍນັ້ນ ໄດ້ຊຸກເຊື່ອງຈຸດປະສົງອັນດຽວຄື ຄວາມມຸ່ງໝາຍຢາກປົກປ້ອງທຶນນິຍົມ, ໂດຍຍົກຊູດົມຄະຕິ "ດ້ານດີ" ຂອງນາຍທຶນເພື່ອມາຕ້ານກັບສັງຄົມນິຍົມ. ສັງຄົມນິຍົມ ກໍ່ໄດ້ປະກາດເຖິງ ເປົ້າໝາຍຂອງຕົນ ແລະ ຫລັກການຕໍ່ສູ້ເພື່ອເປົ້າໝາຍດັ່ງກ່າວຢ່າງເປີດເຜີຍ. ເຖິງແມ່ນວ່ານັກແນວຄິດນາຍທຶນມີຄວາມບໍ່ພ້ອມພຽງ ທາງດ້ານອຸດົມຄະຕິ ແລະ ແນວຄິດກໍຕາມ, ແຕ່ພວກເຂົາກໍ່ຍັງພະຍາຍາມຊີ້ໃຫ້ເຫັນວ່າ ຄວນຕໍ່ສູ້ເພື່ອຫຍັງ.

ເປັນອັນວ່າ ຈະສະແຫວງຫາອຸດົມຄະຕິແບບໃດ ແລະ ແມ່ນຫຍັງເປັນຜູ້ກຳນົດໃບໜ້າແຫ່ງຍຸກສະໄໝຂອງພວກເຮົາ? ຄຳຕອບຕໍ່ຄຳຖາມຕ່າງໆດັ່ງກ່າວນີ້ ແມ່ນເປັນຄຳຕອບທີ່ມີລັກສະນະຄະຕິເຕືອນໃຈ.

ຫລັງຈາກສົງຄາມໂລກຄັ້ງທີສອງ ( ໑໙໓໙-໑໙໔໕ ) ບໍ່ດົນ, ຢູ່ໃນບັນດາປະເທດອີລົບຕາເວັນຕົກ ມີທິດສະດີກ່ຽວກັບ "ການແຈກຢາຍ ກຳມະສິດ", "ການປະຕິວັດທີ່ເຮັດໃຫ້ມີລາຍໄດ້ສະເລ່ຍ" , "ການຫັນທຶນໄປເປັນປະຊາທິປະໄຕ", "ຊົນຊັ້ນກາງ", "ການສູນຫາຍຂອງຊົນຊັ້ນ"ແລະອື່ນໆເກີດຂຶ້ນ. ຫລັງຈາກນັ້ນທິດສະດີເຫລົ່ານັ້ນໄດ້ຖືກທ້ອນໂຮມເປັນ ທິດສະດີ "ລະບອບທຶນນິຍົມແຫ່ງປະຊາຊົນ" ຊຶ່ງຕໍ່ມາກໍ່ໄດ້ເພີ່ມທິດສະດີກ່ຽວກັບລັດແຫ່ງ "ຄວາມສົມບູນພູນສຸກທົ່ວປວງຊົນ" ເຂົ້າຕື່ມອີກ. ຜູ້ສ້າງຕັ້ງທິດສະດີເຫຼົ່ານີ້ພະຍາຍາມຢັ້ງຢືນວ່າທຶນນິຍົມກໍ່ມີການປ່ຽນແປງ, "ມີການຫັນປ່ຽນເປັນອັນໃໝ່". ພວກເຂົາເຈົ້ານັກເວົ້າວ່າແຕ່ກ່ອນນັ້ນມັນແມ່ນຊົ່ວຮ້າຍແທ້, ເປັນຜູ້ນຳເອົາຄວາມທຸກໄຮ້ເຂັນໃຈແລະກົດຂີ່ມາໃຫ້ຊາວຜູ້ອອກແຮງງານ. ສ່ວນດຽວນີ້ ມັນກາຍເປັນຂອງປະຊາຊົນ, ຖືກຫັນປ່ຽນເປັນສັງຄົມ "ປະຊາທິປະໄຕ" ແລະ "ມະນຸດສະທຳ" ເຊິ່ງເປັນຫວງເປັນໃຍ ນຳຄວາມສົມບູນພູນສຸກຂອງແຕ່ລະຄົນ. ພວກນັກທິດສະດີນາຍທຶນ ຢັ້ງຢືນວ່າ ດ້ວຍເຫດວ່າທຶນນິຍົມມີການປ່ຽນແປງ, ສະນັ້ນອະນາຄົດຈະຕ້ອງເປັນຂອງມັນ. ແຕ່ສຳ

ລັບສັງຄົມນິຍົມ ຊຶ່ງໄດ້ກາຍເປັນຄວາມຈິງແລ້ວນັ້ນເດ ເປັນແນວໃດ ? ພວກເຂົາຕັ້ງຕິເຣັດຄື ບໍ່ຮູ້ເຫັນເຖິງການລົງຕົວ ຂອງສັງຄົມນິຍົມນັ້ນ ແລະ ບໍ່ໄດ້ນັບນັ້ນ ເຂົ້າຢູ່ໃນການໄຈ້ແຍກໂລກສະໄໝປະຈຸບັນເລີຍ.

ແຕ່ບໍ່ດົນຊີວິດຕົວຈິງ ກໍ່ໄດ້ທັບມ້າງການຫລອກລວງເຫລົ່ານີ້. ປະການທີໜຶ່ງ, ໃນທັນທີທັນໃດທຶນນິຍົມ ກໍ່ໄດ້ສະແດງໃຫ້ເຫັນຢ່າງປະຈັກຕາ ຍິ່ງຂຶ້ນກວ່າເກົ່າເຖິງທາດແທ້ອັນແທ້ຈິງຂອງມັນຄື: ການກົດຂີ່ທາງສັງຄົມ, ໄພຫວ່າງງານ, ໄພເງິນເຟີ້ ແລະ ລັດທິຊຸນເສິກ.

ປະການທີສອງ, ໃນໄລຍະເວລາອັນສັ້ນ, ບັນດາປະເທດທີ່ກ້າວເດີນຕາມເສັ້ນທາງສ້າງສາສັງຄົມນິຍົມ ຊ້ຳພັດກ້າວເຖິງໄຊຊະນະອັນໃຫຍ່ຫລວງຢູ່ໃນເສດຖະກິດ, ການເມືອງ, ວັດທະນະທຳ ແລະ ສິລະປະກຳ. ໂລກສັງຄົມນິຍົມເຕີບໃຫຍ່ຂະຫຍາຍຕົວ ແລະ ເຂັ້ມແຂງ. ໃນປີ ໑໙໑໗ ບັນດາປະເທດສັງຄົມນິຍົມ ມີພື້ນທີ່ພຽງແຕ່ ໑໗ % ແລະ ພົນລະເມືອງ ໙ % ຂອງໂລກເທົ່ານັ້ນ, ແຕ່ໃນປີ ໑໙໖໐ ໄດ້ມີເນື້ອທີ່ເຖິງ ໒໕,໙% ແລະພົນລະເມືອງເຖິງ ໓໕% ຂອງໂລກ. ຖ້າສົມທຽບອັດຕາສ່ວນຂອງປະເທດສັງຄົມນິຍົມຢູ່ໃນຜົນຜະລິດອຸດສາຫະກຳຂອງໂລກນັ້ນ ໃນປີ ໑໙໑໗ ລັດສັງຄົມນິຍົມມີໜ້ອຍກວ່າ ໑໐%, ແຕ່ໃນປີ ໑໙໕໐ ໄດ້ກວມເອົາເຖິງ ໒໐%, ໃນປີ ໑໙໕໕ ແມ່ນ ໒໗%, ສ່ວນວ່າ ໃນປີ ໑໙໖໐ ກໍ່ເພີ່ມຂຶ້ນເຖິງ໓໖%.ບັດນີ້ສາມາດເປັນໄປໄດ້ບໍ່ທີ່ຈະບໍ່ນັບສັງຄົມນິຍົມ ? ແນ່ນອນແລ້ວວ່າເປັນໄປບໍ່ໄດ້.

ມາບັດນີ້ ບັນດານັກວິທະຍາສາດທຶນນິຍົມໄດ້ເລີ່ມຕົ້ນໄຈ້ແຍກການຊົ່ວຊາຢູ່ໃນການຂະຫຍາຍຕົວຂອງທຶນນິຍົມ ແລະ ສັງຄົມນິຍົມ. ບັນຫາຂອງ ລະບອບທຶນນິຍົມ ແລະ ຄວາມກ້າວໜ້າຂອງລະບອບສັງຄົມນິຍົມ ໄດ້ຖືກ ນຳມາສົມທຽບກັນ, ແຕ່ການສົມທຽບນັ້ນເປັນໄປແນວໃດ ?

ຜູ້ທີ່ພະຍາຍາມຈະໃຫ້ຄຳຕອບຕໍ່ບັນຫານີ້ ແມ່ນທິດສະດີ "ສັງຄົມອຸດສາຫະກຳ ທີ່ເປັນເອກະພາບກັນ". ພວກທີ່ເປັນເຈົ້າຂອງທິດສະດີນີ້ຢືນຢັນວ່າ ບັນດາປະເທດທີ່ຂະຫຍາຍຕົວທາງອຸດສາຫະກຳທັງໝົດ ບໍ່ວ່າທຶນນິຍົມ ກໍ່ດີ ສັງຄົມນິຍົມ ລ້ວນແຕ່ ເປັນສ່ວນປະກອບ ຂອງລະບົບອຸດສາຫະກຳ ອັນລຶບຖ້ວນ ທີ່ເປັນອັນໜຶ່ງອັນດຽວ. ລະຫວ່າງທຶນນິຍົມ ກັບ ສັງຄົມນິຍົມ ມີ

ຄວາມຄ້າຍຄືກັນຫລາຍກວ່າຄວາມແຕກຕ່າງກັນ. ພວກເຂົາຢືນຢັນວ່າ, ເຖິງພາຫະນະການຜະລິດ ຈະຕົກຢູ່ໃນກຳມືຂອງໃຜມັນກໍ່ບໍ່ສຳຄັນ, ອັນສຳຄັນແມ່ນຢູ່ບ່ອນວ່າ ປະເທດທີ່ມີການຂະຫຍາຍຕົວທັງໝົດແມ່ນຄືກັນອ້ອຍຕ້ອຍຖ້າເບິ່ງ ໃນແງ່ຂອງການຂະຫຍາຍຕົວທາງເຕັກນິກ. ພວກເຂົາ ໄດ້ປົກປິດບັນຫາອັນສຳຄັນທີ່ວ່າ ພາຫະນະການຜະລິດເປັນຂອງໃຜ, ເປັນຂອງ ຊາວຜູ້ອອກແຮງງານ ຫລືນາຍທຶນ ເຊິ່ງບັນຫາດັ່ງກ່າວນັ້ນ ແມ່ນເປັນສິ່ງ ກຳນົດການແຈກຢາຍຊັບສິນວັດຖຸ ແລະ ຈິດໃຈ, ການດຳເນີນເສດຖະກິດຢ່າງມີແຜນການ ຫລືກົງກັນຂ້າມແມ່ນອະນາທິປະໄຕທີ່ເປັນສິ່ງຄອບງຳຢູ່ໃນເສດຖະກິດ ທັງເປັນສາຍເຫດ ຂອງວິກິດການ, ໄພຫວ່າງງານ ແລະ ໄພເງິນເຟີ້ຢ່າງເນືອງນິດລຽນຕິດ. ຮູບການຂອງກຳມະສິດ ຍັງເປັນຜູ້ກຳນົດຈັງຫວະແຫ່ງການຂະຫຍາຍຕົວຂອງການຜະລິດ, ຮູບການ ແລະ ວິທີການຊຸ້ມຄອງການຜະລິດນັ້ນອີກ. ກ່ຽວກັບບັນຫາເຫລົ່ານີ້ ພວກນັກວິທະຍາສາດນາຍທຶນຕັ້ງຕິເມີນເສີຍ. ການເຮັດໃຫ້ຄວາມແຕກຕ່າງຢ່າງເປັນຫລັກການລະຫວ່າງສັງຄົມນິຍົມ ແລະ ທຶນນິຍົມເປັນສິ່ງບໍ່ຈະແຈ້ງນັ້ນ ໄດ້ຊ່ວຍພວກເຂົາໃນການປົກປິດຄວາມດີເລີດຂອງສັງຄົມໃໝ່, ເຮັດໃຫ້ ຄວາມໝາຍຂອງມັນຕ່ຳລົງ ແລະ ຈັດວາງສັງຄົມນິຍົມໄວ້ຢູ່ໃນຖັນແຖວດຽວກັບລະບອບທຶນນິຍົມ. ດ້ວຍວິທີດັ່ງກ່າວນັ້ນ ພວກນິຍົມແນວຄິດນາຍທຶນພະຍາຍາມ ປັດເຂ່ຍບັນຫາທີ່ວ່າ ລະບອບສັງຄົມນິຍົມ ແມ່ນລະບົບສັງຄົມໜຶ່ງທີ່ມີອະນາຄົດຊຶ່ງຈະມາປ່ຽນແທນລະບອບທຶນນິຍົມ.

ຫລັງຈາກນັ້ນມາບໍ່ດົນເທົ່າໃດ ກໍ່ມີທິດສະດີອື່ນປະກົດອອກ ເຊິ່ງ ຕາມທັດສະນະຂອງມັນກໍ່ແມ່ນວ່າ ຈະມີ "ສັງຄົມທີ່ເກີດຕາມຫລັງສັງຄົມ ອຸດສາຫະກຳ" ແລະ "ສັງຄົມແຫ່ງອຳນາດເຕັກນິກເອເລັກໂຕຣນິກ" ມາສັບປ່ຽນ "ສັງຄົມອຸດສາຫະກຳທີ່ເປັນເອກະພາບກັນ". ເຖິງວ່າທິດສະດີເຫລົ່ານີ້ ມີຄວາມແຕກຕ່າງກັນບາງຢ່າງກໍ່ຕາມ, ແຕ່ທາດແທ້ທາງສັງຄົມຂອງມັນແມ່ນອັນດຽວກັນໝົດຄື: ປັດເປົ່າຄວາມແຕກຕ່າງກັນລະຫວ່າງທຶນນິຍົມແລະສັງຄົມນິຍົມ, ຕົບແຕ່ງທຶນນິຍົມ ທີ່ເປັນລະບອບສັງຄົມພົ້ນສະໄໝແລ້ວ, ນຳເອົາມັນມາວາງໄວ້ໃນຖັນແຖວອັນດຽວກັນກັບສັງຄົມນິຍົມ.

ສ່ວນພວກທີ່ເປັນເຈົ້າຂອງທິດສະດີທາງຄົບ ແມ່ນຮັບຮູ້ເຖິງ ການແຕກ

ຕ່າງກັນ ລະຫວ່າງສັງຄົມນິຍົມ ກັບທຶນນິຍົມ. ແຕ່ພວກເຂົາເວົ້າວ່າດ້ວຍເຫດທີ່ກຸ່ມປະເທດທຶນນິຍົມກໍດີກຸ່ມປະເທດສັງຄົມນິຍົມລ້ວນແຕ່ດຳລົງຄົງຕົວ ຢູ່ໃນເງື່ອນໄຂຄວາມກ້າວໜ້າທາງດ້ານເຕັກນິກ-ວິທະຍາສາດອັນດຽວກັນ, ສະນັ້ນ ໃນອະນາຄົດພວກມັນຈະໄປຄົບກັນ, ໝາຍຄວາມວ່າ ພວກມັນ ຫຍັບເຂົ້າຫາກັນ. ໄປພ້ອມໆກັບການຫຍັບເຂົ້າຫາກັນນັ້ນ, ພວກມັນກໍຈະປະຖິ້ມ ແລະ ປະຕິເສດດ້ານບໍ່ດີ ແລະ ຮັບເອົາຄຸນທາດທີ່ດີ ຂອງກັນ ແລະ ກັນ. ຕາມຄຳເຫັນຂອງພວກເຂົານັ້ນ ກໍແມ່ນວ່າ ລັດສັງຄົມນິຍົມ ກໍດີລັດທຶນນິຍົມ ຈະກ້າວໄປຫາສະພາບທີ່ບໍ່ມີຫຍັງແຕກຕ່າງກັນ.

ພວກທີ່ສ້າງທິດສະດີທາງຄົບນີ້ ໄດ້ສວຍໃຊ້ເຫດການຕົວຈິງພາວະວິໄສທີ່ວ່າ ປະຖົມປັດໄຈທາງເສດຖະກິດ-ສັງຄົມຈຳນວນໜຶ່ງ ຂອງສັງຄົມນິຍົມແມ່ນໄດ້ຮັບການສ້າງຂຶ້ນຢູ່ໃນກະໂຕບັນດາປະເທດນາຍທຶນຂະຫຍາຍຕົວນັ້ນເອງ, ໃນນັ້ນລວມມີ: ລະດັບການຂະຫຍາຍຕົວສູງທາງອຸດສາຫະກຳ,ການຮູ້ໜັງສືຂອງປະຊາຊົນທົ່ວມວນ, ກຳລັງແຮງງານທີ່ມີວິຊາສະເພາະ, ການເຕີບໃຫຍ່ຂອງປັນຍາຊົນ. ສະຫລຸບແລ້ວ ມັນສ້າງພາບພົດ ທີ່ຄ້າຍກັບວ່າທຶນນິຍົມກໍເຮັດສິ່ງດຽວກັນກັບສັງຄົມນິຍົມ. ແຕ່ຫາກຄວນຈື່ວ່າ ຂະບວນວິວັດເຫລົ່ານີ້ແມ່ນດຳເນີນໄປຢູ່ໃນຂອບເຂດຂອງທຶນນິຍົມ ໂດຍບໍ່ໄດ້ເຮັດໃຫ້ທາດແທ້ຂອງມັນມີການປ່ຽນແປງ ແລະ ໂດຍບໍ່ໄດ້ເຮັດໃຫ້ມັນຫຍັບເຂົ້າຫາສັງຄົມນິຍົມແຕ່ຢ່າງໃດ.

ເມື່ອສົມທຽບສັງຄົມນິຍົມກັບທຶນນິຍົມ, ພວກນັກວິທະຍາສາດ ນາຍທຶນໄດ້ປົກປິດຄວາມຈິງທີ່ວ່າ ສອງລະບອບແມ່ນມີປະຫວັດການເປັນມາຕ່າງກັນ. ທຶນນິຍົມໄດ້ເກີດຂຶ້ນມາໄດ້ ໔໐໐ ກວ່າປີແລ້ວ. ສ່ວນສັງຄົມນິຍົມນັ້ນ ຫາກໍດຳລົງຄົງຕົວມາໄດ້ພຽງ ໗໐ ປີ, ເຊິ່ງໃນນັ້ນຈຳຕ້ອງດຳເນີນສົງຄາມປົດປ່ອຍ ແລະ ຟື້ນຟູເສດຖະກິດອີກເປັນເວລາຫລາຍຟ້າຫລາຍປີ, ເພາະສະນັ້ນ ສັງຄົມນິຍົມຈຶ່ງເປັນລະບົບເສດຖະກິດ-ສັງຄົມ ທີ່ພວມຢູ່ໃນໄລຍະແຫ່ງການບູລະນະ.

ທິດສະດີນາຍທຶນທັງໝົດດັ່ງກ່າວນັ້ນ ໄດ້ເກີດມີຂຶ້ນຢູ່ໃນສະພາບ ທີ່ວ່າສັງຄົມນິຍົມ ໄດ້ມີຜົນສຳເລັດຢ່າງໃຫຍ່ຫລວງ ແລະ ຢູ່ໃນສະພາບ ທີ່ມວນຊົນຫລາຍລ້ານຄົນໄດ້ຂາດຄວາມເຊື່ອໝັ້ນຕໍ່ລັດທິທຶນນິຍົມ. ດ້ວຍເຫດ ນັ້ນ

ພວກນັກແນວຄິດທຶນນິຍົມ ມອງບໍ່ເຫັນອະນາຄົດທາງປະຫວັດສາດ ຂອງລະບອບທຶນນິຍົມ, ພວກເຂົາຢາກຮັກສາລະບອບທຶນນິຍົມໄວ້ ໂດຍສວຍໃຊ້ລະບອບສັງຄົມນິຍົມ, ສວຍໃຊ້ອະນາຄົດ ແລະ ຄວາມອາດສາມາດ ທາງປະຫວັດສາດຂອງມັນ. ທິດສະດີທາງຄົບກໍ່ຄືທິດສະດີອື່ນໆທີ່ຄ້າຍຄືກັນນັ້ນ ແມ່ນໃຫ້ຄຳອະທິບາຍແບບທາງປັ້ນ ແລະ ຕາມທັດສະນະຈົນຈຸ້ນນາຍທຶນ ກ່ຽວກັບຂະບວນວິວັດທີ່ເກີດຂຶ້ນໃນໂລກ, ກ່ຽວກັບເນື້ອໃນ ແລະ ລັກສະນະພື້ນຖານຂອງຍຸກສະໄໝພວກເຮົາ.

ໂດຍຢູ່ໃຕ້ພົນສະທ້ອນທາງການເມືອງຂອງວົງການຈັກກະພັດນັ້ນ, ຄຽງຂ້າງກັບບັນດາທິດສະດີດັ່ງກ່າວ ຍັງມີການໂຄສະນາຂອງນາຍທຶນທີ່ໄດ້ ຍົກເອົາຄຳຂວັນປະຕິການມາເວົ້າຢ່າງເປີດເຜີຍ. ເນື້ອແທ້ຂອງຄຳຂວັນເຫຼົ່ານີ້ ກໍ່ແມ່ນຢາກເວົ້າວ່າ ສັງຄົມນິຍົມເປັນພຽງປະກົດການແບບບັງເອີນຂອງປະຫວັດສາດ, ເປັນ "ຄວາມຜິດພາດ" ຂອງປະຊາຊາດໃດໜຶ່ງ ຊຶ່ງຈະຕ້ອງ "ແກ້ໄຂ" ດ້ວຍການເປີດບັ້ນຮົບຕ້ານປະຊາຊາດເຫຼົ່ານັ້ນ. ແຕ່ໃນສະໄໝຂອງພວກເຮົານີ້ຈະເປັນໄປໄດ້ບໍ່ທີ່ຈະຖືວ່າປະຊາຊາດຂອງຕັ້ງສິບໆກ່ວາລັດ ເຊິ່ງພວມສ້າງສາຊີວິດໃໝ່ຢ່າງໜັກແໜ້ນຢູ່ໃນພາກສ່ວນຕ່າງໆຂອງໂລກນັ້ນເປັນ "ຜູ້ຫລົງຜິດ" ? ເປັນໄປໄດ້ບໍ່ທີ່ຈະຕັ້ງຕິບໍ່ນັບເອົາການຕໍ່ສູ້ເພື່ອປົດປ່ອຍຊາດ ແລະ ສັງຄົມຂອງຊາວຜູ້ອອກແຮງງານ ຫລາຍລ້ານຄົນ ແລະ ບັນດາປະຊາຊາດທັງໝົດ ? ເພື່ອຈະຕອບຄຳຖາມເຫຼົ່ານີ້ນັ້ນ ຈຳເປັນຕ້ອງໄດ້ຄົ້ນຄວ້າເບິ່ງລັກສະນະອັນແທ້ຈິງ ຂອງຍຸກສະໄໝປະຈຸບັນເສຍກ່ອນ.

## ບັນດາຈຸດພິເສດຂອງຍຸກສະໄໝປະຈຸບັນ

ທັດສະນະຢ່າງຮອບດ້ານ ແລະ ຢ່າງຮອບຄອບຕໍ່ຍຸກສະໄໝນັ້ນ ຊ່ວຍໃຫ້ຈຳແນກບັນດາຂະບວນວິວັດ ແລະ ເຫດການອັນສຳຄັນຂອງມັນໄດ້. ການ

ປະຕິວັດປົດປ່ອຍຊາດ ແລະ ສັງຄົມນິຍົມຢູ່ໃນໂລກກຳລັງດຳເນີນໄປ, ລະບອບຈັກກະພັດຖືກສັ່ນຄອນ, ລະບົບທົວເມືອງຂຶ້ນອັນໜ້າອັບອາຍ ເຊິ່ງລະບອບທຶນນິຍົມ ເປັນຜູ້ສ້າງຂຶ້ນນັ້ນ ພວມຖືກລົບລ້າງ , ການຕໍ່ສູ້ລະຫວ່າງສອງລະບົບໂລກກໍ່ພວມດຳເນີນໄປ. ຈາກນີ້ຈຶ່ງສະຫລຸບໄດ້ວ່າ ເນື້ອໃນພື້ນຖານຂອງຍຸກສະໄໝປະຈຸບັນ ແມ່ນການຂ້າມຜ່ານຈາກທຶນນິຍົມໄປສູ່ສັງຄົມນິຍົມ, ແມ່ນການແຂ່ງຂັນອັນເປັນປະຫວັດການລະຫວ່າງສອງລະບົບໂລກ. ນັ້ນແມ່ນຍຸກສະໄໝແຫ່ງການປະຕິວັດປົດປ່ອຍຊາດ ແລະ ສັງຄົມນິຍົມ, ຍຸກສະໄໝແຫ່ງການພັງທະລາຍຂອງລະບົບທົວເມືອງຂຶ້ນ, ຍຸກສະໄໝ ແຫ່ງການຕໍ່ສູ້ຂອງກຳລັງຊຸກດັນອັນຕົ້ນຕໍໃນການຂະຫຍາຍຕົວຂອງສັງຄົມນັ້ນຄືລະບົບສັງຄົມນິຍົມໂລກ, ຂະບວນການກຳມະກອນ ແລະ ກອມມູນິດ, ຂະບວນການປະຊາຊົນຂອງປະເທດທີ່ຫາກໍ່ປົດປ່ອຍ, ຂະບວນການປະຊາທິປະໄຕທີ່ກວ້າງຂວາງ ຕ້ານນະໂຍບາຍຮຸກຮານຂອງພວກຈັກກະພັດນິຍົມເພື່ອປະຊາທິປະໄຕ ແລະ ຄວາມກ້າວໜ້າທາງສັງຄົມ.

ລະບົບສັງຄົມນິຍົມໂລກ ແມ່ນໃຈກາງຂອງຍຸກສະໄໝປະຈຸບັນ, ບັນດາປະເທດສັງຄົມນິຍົມ ເປັນຕົວແທນໃຫ້ແກ່ທິດທາງອັນຕົ້ນຕໍໃນການຂະຫຍາຍຕົວຂອງຍຸກສະໄໝປະຈຸບັນ, ນັ້ນແມ່ນການສ້າງອຳນາດຂອງຊາວ ຜູ້ອອກແຮງງານໃຫ້ໜັກແໜ້ນໃນລະດັບທົ່ວໂລກ. ສິ່ງທີ່ເປັນການຢັ້ງຢືນໃຫ້ເຫັນເຖິງທິດທາງດັ່ງກ່າວນັ້ນ ກໍຄືຄວາມຈິງທີ່ວ່າ ລະບົບສັງຄົມນິຍົມໂລກ ເປັນຜູ້ທີ່ສົ່ງຜົນສະທ້ອນອັນນັບມື້ນັບຍິ່ງໃຫຍ່ໃສ່ເຫດການສາກົນ, ເປັນຜູ້ ລິເລີ່ມການຕໍ່ສູ້ເພື່ອສັນຕິພາບອັນເປັນການສະແດງໃຫ້ເຫັນເຖິງເຈດຈຳນົງ ແລະ ຄວາມປາດຖະໜາຂອງຄົນຜູ້ບໍລິສຸດໃຈໝົດທຸກຄົນ.

ລັກສະນະ ແລະ ຈຸດພິເສດພື້ນຖານຂອງຍຸກສະໄໝປະຈຸບັນນີ້ ມີແນວໃດແດ່ ?

ລັກສະນະຂ້າມຜ່ານແມ່ນລັກສະນະສະເພາະຂອງຍຸກສະໄໝປະຈຸບັນ.

ຢູ່ໃນປະຫວັດສາດທີ່ຜ່ານມາຂອງມວນມະນຸດນັ້ນ, ເຄີຍມີສະໄໝໃດບໍ່ທີ່ມະນຸດກ້າວຈາກຮູບຖານໜຶ່ງ ໄປສູ່ອີກຮູບຖານໜຶ່ງ ? ແນ່ນອນແລ້ວແມ່ນມີ, ຕົວຢ່າງກໍຄືການຂ້າມຜ່ານຈາກລະບອບສັກດິນາ ໄປຫາທຶນນິຍົມ. ໃນນັ້ນມັນເປັນພຽງແຕ່ການຂ້າມຜ່ານຈາກລະບອບຂູດຮີດໜຶ່ງ ໄປຫາອີກລະບອບຂູດ

ຣິດໜຶ່ງເທົ່ານັ້ນ, ຊຶ່ງເປັນລະບອບທີ່ແບ່ງຄົນອອກເປັນຊົນຊັ້ນປໍລະປັກກັນ, ອອກ ເປັນຜູ້ທຸກ ແລະ ຜູ້ຮັ່ງ. ແຕ່ໃນນີ້ແມ່ນເວົ້າເຖິງການຂ້າມຜ່ານໄປຫາສັງຄົມແບບອື່ນ ທີ່ແຕກຕ່າງທີ່ສຸດ ເຊິ່ງເປັນສັງຄົມ ທີ່ບໍ່ມີການກົດຂີ່ຂົ່ມເຫັງ, ບໍ່ມີການແບ່ງຄົນອອກເປັນຜູ້ຮັ່ງ ແລະ ຜູ້ທຸກຈົນ, ເປັນສັງຄົມ ທີ່ມີຄວາມສະເໝີພາບທາງສັງຄົມ ແລະ ອຳນາດກໍ່ເປັນຂອງຊາວຜູ້ອອກ - ແຮງງານ. ຍ້ອນແນວນັ້ນ ຈຶ່ງມີການຕໍ່ສູ້ ລະຫວ່າງອັນໃໝ່ ກັບອັນເກົ່າຢ່າງຂ້ຽວຂາດ. ພວກນາຍທຶນໄດ້ຊອກຫາທຸກວິທີທາງເພື່ອ ປົກປ້ອງການຄອບງຳຂອງພວກເຂົາໄວ້.

ຜ່ານການຕໍ່ສູ້ປົດປ່ອຍຊາດນັ້ນ, ປະຊາຊາດຈຳນວນຫລວງຫລາຍ ໄດ້ໄປເຖິງຂໍ້ສະຫລຸບທີ່ວ່າ ເອກະລາດອັນແທ້ຈິງນັ້ນຈະສາມາດບັນລຸໄດ້ ກໍ່ຕໍ່ເມື່ອມີການລົບລ້າງລະບອບຂູດຮີດແລ້ວເທົ່ານັ້ນ. ຈາກນັ້ນຈຶ່ງເກີດມີ ຂະບວນການຂອງບັນດາປະເທດທີ່ເດີນຕາມເສັ້ນທາງທີ່ມີທ່າອ່ຽງສັງຄົມນິຍົມ.

ລັກສະນະອັນສຳຄັນຂອງຍຸກສະໄໝປະຈຸບັນນັ້ນ ມັນແມ່ນຍຸກສະໄໝແຫ່ງການປະຕິວັດ. ຄັດງທີ່ລັດທິມາກ ໄດ້ພິສູດແລ້ວ ແລະ ພຶດຕິກຳຕົວຈິງກໍ່ໄດ້ຢືນຢັນວ່າ ການຂ້າມຜ່ານໄປສູ່ລະບອບສັງຄົມໃໝ່ນັ້ນ ແມ່ນ ສາມາດດຳເນີນໄປໄດ້ກໍ່ຕໍ່ເມື່ອມີການດັດສ້າງແບບປະຕິວັດເທົ່ານັ້ນ. ມີຄົນຈຳນວນໜຶ່ງກໍ່ຍອມຮັບວ່າ ໂລກພວມເຄື່ອນຍ້າຍໄປສູ່ສັງຄົມນິຍົມ, ແຕ່ພວກເຂົາພັດຖືວ່າ ການດັດສ້າງທຶນນິຍົມໄປເປັນສັງຄົມນິຍົມນັ້ນ ສາມາດເຮັດ ໄດ້ດ້ວຍວິທີການດັດສ້າງ ແລະ ປະຕິຮູບໄປເທື່ອລະໜ້ອຍ ແຕ່ບໍ່ແມ່ນ ເສັ້ນທາງດຳເນີນການປະຕິວັດ. ທັດສະນະແບບນີ້ແມ່ນໄດ້ຮັບການສະໜັບສະໜູນຈາກບັນດາຜູ້ນຳພັກສັງຄົມປະຊາທິປະໄຕ. ຢູ່ໃນບາງປະເທດເອີລົບຕາເວັນຕົກ ພວກເຂົາໄດ້ກຳເອົາອຳນາດມາໄດ້ຫລາຍຟ້າຫລາຍປີແລ້ວ, ແຕ່ບັນດາປະເທດເຫລົ່ານັ້ນ ບໍ່ໄດ້ກ້າວໄປຫາສັງຄົມນິຍົມແມ່ນແຕ່ ບາດກ້າວດຽວ. ປະເທດເຫລົ່ານີ້ ກໍ່ມີຄວາມປົ່ນປ່ວນຊ້ຳເຮື້ອຊະນິດດຽວກັນ ກັບປະເທດທຶນນິຍົມອື່ນ.

ການຮັບຮູ້ ລັກສະນະປະຕິວັດຂອງ ຍຸກສະໄໝປະຈຸບັນ ແມ່ນເປັນກຸນແຈໄຂໄປສູ່ຄວາມເຂົ້າໃຈເນື້ອໃນ, ກຳລັງຊຸກດັນ ແລະຂອບເຂດປະຫວັດສາດຂອງມັນ. ຖ້າໃຜປະຕິເສດລັກສະນະດັ່ງກ່າວແມ່ນຜູ້ນັ້ນ ບໍ່ເຂົ້າ

ໃຈກ່ຽວກັບຍຸກສະໄໝ.

ຂະບວນວິວັດແຫ່ງການປະຕິວັດໂລກນັ້ນ ບໍ່ພຽງແຕ່ແມ່ນການຕໍ່ສູ້ ຂອງ ຈີນຈຸ້ນກຳມະກອນຢູ່ໃນບັນດາປະເທດທຶນນິຍົມຂະຫຍາຍຕົວເທົ່ານັ້ນ, ແຕ່ຍັງ ແມ່ນການປະຕິວັດຕາມຈັກກະພັດ ແລະ ເພື່ອປະຊາທິປະໄຕ ຊຶ່ງພວມກ້າວ ກາຍເປັນການດັດສ້າງແບບສັງຄົມນິຍົມ ແລະ ການປະຕິວັດປົດປ່ອຍ ຊາດ ເຊິ່ງທັງໝົດເຫຼົ່ານັ້ນ ເປັນພາກສ່ວນທີ່ແບ່ງແຍກອອກບໍ່ໄດ້ຂອງຂະບວນວິ ວັດດັ່ງກ່າວ. ຈີນຈຸ້ນກຳມະກອນເປັນຜູ້ເຕົ້າໂຮມບັນດາກຳລັງທັງໝົດທີ່ດຳ ເນີນການຕໍ່ສູ້ ຕ້ານຈັກກະພັດທັງຢູ່ໃນຂອບເຂດ ລະດັບຊາດ ກໍຄືສາກົນ.

<u>ເນື້ອໃນຂອງຄວາມຂັດແຍ່ງພື້ນຖານ</u> <u>ແມ່ນຈຸດພິເສດຂອງຍຸກສະໄໝ ປະຈຸບັນ.</u> ຢູ່ໃນໂລກປະຈຸບັນນີ້ ມີຄວາມຂັດແຍ່ງທີ່ມີລັກສະນະສາກົນຢູ່ຫຼາຍ ສົມຄວນ. ນັ້ນແມ່ນຄວາມຂັດແຍ່ງລະຫວ່າງບັນດາລັດສັງຄົມນິຍົມ ແລະລັດ ທຶນນິຍົມ, ຄວາມຂັດແຍ່ງຢູ່ພາຍໃນຂອງໂລກທຶນນິຍົມຄື ລະຫວ່າງປະເທດ ຕ່າງໆ ແລະ ກຸ່ມປະເທດຕ່າງໆຂອງໂລກທຶນນິຍົມ, ຄວາມຂັດແຍ່ງ ທີ່ຍັງ ເຄັ່ງຂຸ້ນຂຶ້ນລະຫວ່າງບັນດາປະເທດພວມພັດທະນາ ແລະ ອະດີດເຈົ້າຂອງ ເມືອງຂຶ້ນຊຶ່ງຍັງສືບຕໍ່ຂູດຮີດປະເທດເຫຼົ່ານັ້ນດ້ວຍວິທີການໃໝ່. ແຕ່ຄວາມ ຂັດແຍ່ງລະຫວ່າງສັງຄົມນິຍົມ ແລະ ທຶນນິຍົມ ເປັນອັນສຳຄັນກວ່າໝູ່, ມັນ ສິ່ງຜົນສະທ້ອນແບບຕັດສິນຊີ້ຂາດຕໍ່ການແກ້ໄຂຄວາມຂັດແຍ່ງອື່ນໆ ຂອງຍຸກ ສະໄໝ. ໂຊກຊາຕາກຳຂອງບັນດາປະຊາຊາດ, ການພິທັກຮັກສາ ແລະ ປັບປຸງສັນຕິພາບຢູ່ໃນໂລກນີ້ ແມ່ນຂຶ້ນກັບວິທີການແກ້ໄຂຄວາມຂັດແຍ່ງ ດັ່ງ ກ່າວ. ອີກປະການໜຶ່ງກໍແມ່ນວ່າ ການແຂ່ງຂັນ ທີ່ມີລັກສະນະປະຫວັດ- ສາດ ລະຫວ່າງລະບົບເສດຖະກິດ-ສັງຄົມ ທີ່ກົງກັນຂ້າມກັນນັ້ນ ຕອງ ດຳເນີນໄປບົນພື້ນຖານແຫ່ງການຢູ່ຮ່ວມກັນຢ່າງສັນຕິ ເຊິ່ງເໝາະສົມ ກັບ ທາດແທ້ພາຍໃນຂອງສັງຄົມໃໝ່ຢ່າງສົມບູນ. ຄວາມມີໄຊຂອງສັງຄົມນິຍົມ ຢູ່ໃນໂລກ ຈະສຳເລັດຜົນໄດ້ ບໍ່ແມ່ນຍ້ອນການສູ້ຢັນກັນທາງການທະຫານ, ແຕ່ແມ່ນຍ້ອນຄວາມດີເລີດທີ່ມີລັກສະນະປະຫວັດສາດຂອງລະບອບໃໝ່ ທີ່ມີ ຕໍ່ລະບອບເກົ່າ.

ປະຫວັດສາດໄດ້ຢືນຢັນຢ່າງໜັກແໜ້ນວ່າ ຄວາມເຂັ້ມແຂງ ຂອງບັນ ດາປະເທດສັງຄົມນິຍົມຍິ່ງເພີ່ມທະວີຂຶ້ນເທົ່າໃດ, ສັນຕິພາບ ກໍຍິ່ງຈະໝັ້ນ

ຄົງຂຶ້ນເທົ່ານັ້ນ ແລະ ກໍຍິ່ງຈະເປັນການສ້າງຄວາມອາດສາມາດ ຕົວຈິງສຳລັບບັນດາປະຊາຊາດທັງໝົດ ຢູ່ໃນການຕໍ່ສູ້ ເພື່ອປົດປ່ອຍຊາດ ແລະ ສັງຄົມ. ດ້ວຍເຫດນີ້ເອງ ຜູ້ບໍລິສຸດໃຈທັງໝົດໃນໂລກ ຈຶ່ງມີຄວາມ ມຸ່ງໝາຍຢາກສົ່ງເສີມການຂະຫຍາຍຕົວ ຂອງສັງຄົມນິຍົມ ອັນເປັນເສົາຄ້ຳແຫ່ງສັນຕິພາບ, ຄວາມກ້າວໜ້າ ແລະ ຄວາມຍຸດຕິທຳທາງສັງຄົມ. ກົງກັນຂ້າມ, ພວກນາຍທຶນຊ້ຳພັດໃຊ້ທຸກວິທີທາງເພື່ອພະຍາຍາມເຮັດໃຫ້ມວນຊົນຫ່າງເຫີນອອກຈາກສັງຄົມນິຍົມ.

ການຊັ່ງຊາກຳລັງຢູ່ໃນໂລກ ມີການປ່ຽນແປງເຊິ່ງເປັນຜົນດີໃຫ້ແກ່ສັງຄົມນິຍົມນັ້ນ ແມ່ນເປັນສັນຍາລັກອັນຕົ້ນຕໍຂອງຍຸກສະໄໝປະຈຸບັນ. ການທີ່ລະບົບສັງຄົມນິຍົມໂລກໄດ້ກາຍເປັນປັດໃຈທີ່ມີລັກສະນະຕັດສິນ ໃນການຂະຫຍາຍຕົວຂອງສັງຄົມເທື່ອລະກ້າວນັ້ນ ແມ່ນເປັນຈຸດພິເສດຂອງຍຸກສະໄໝພວກເຮົາ. ການຫັນປ່ຽນດັ່ງກ່າວ ເປັນຂະບວນວິວັດອັນຍາວນານແລະສັບສົນ ຊຶ່ງປະກອບເປັນເນື້ອໃນຂອງຍຸກສະໄໝໜຶ່ງທັງໝົດ. ລະບອບທຶນນິຍົມ ບໍ່ໄດ້ຄອບຄອງໂລກ ແລະ ກໍບໍ່ໄດ້ຢູ່ໃນສະພາບທີ່ຈະເປັນຜູ້ມີ ບົດບາດຕັດສິນຕໍ່ເຫດການໂລກຄືແຕ່ກ່ອນອີກ. ມາບັດນີ້ຈັກກະພັດ ບໍ່ສາມາດແກ້ໄຂບັນຫາອັນສຳຄັນທີ່ສຸດຂອງຍຸກສະໄໝ ໂດຍບໍ່ເອົາຫົວຊານຳເຈດຈຳນົງຂອງບັນດາປະຊາຊາດ, ກ່ອນອື່ນໝົດ ກໍແມ່ນບັນຫາ ກ່ຽວກັບ ສົງຄາມ ແລະ ສັນຕິພາບ. ພວກຈັກກະພັດ ບໍ່ສາມາດດັບມອດ ຂະບວນການຕໍ່ສູ້ປົດປ່ອຍຊາດ ແລະ ເຮັດໃຫ້ບາດກ້າວເດີນຂອງສັງຄົມນິຍົມຢຸດສະງັກໄດ້. ຄວາມລິເລີ່ມຕ່າງໆໃນການແກ້ໄຂບັນຫາສາກົນກໍນັບມື້ຕົກມາຢູ່ໃນຄວາມເປັນເຈົ້າການຂອງສັງຄົມນິຍົມ, ຜົນສະທ້ອນຂອງສັງຄົມນິຍົມ ທີ່ມີຕໍ່ບາດກ້າວ - ເດີນຂອງປະຫວັດສາດນັ້ນ ກໍນັບມື້ນັບເພີ່ມທະວີຂຶ້ນ. ສິ່ງດັ່ງກ່າວເຫລົ່ານັ້ນເປັນການຄ້ຳປະກັນອັນເຊື່ອໝັ້ນໄດ້ວ່າ ມວນມະນຸດເຮົາ ພວມກ້າວໄປສູ່ຊີວິດທີ່ດີກວ່າເກົ່າ, ໄປສູ່ການມີຊີວິດທີ່ປາສະຈາກສົງຄາມ, ປາສະຈາກການຂູດຮີດ ແລະ ການຂົ່ມເຫັງ.

ແຕ່ວ່າ ຈັກກະພັດນິຍົມ ແລະ ນະໂຍບາຍຮຸກຮານຂອງມັນໄດ້ເປັນຜູ້ທີ່ກີດຂວາງເສັ້ນທາງເດີນໄປສູ່ຊີວິດໃໝ່ດັ່ງກ່າວ. ພວກມັນຍັງໄດ້ເປັນຜູ້ກໍ່ສົງຄາມໂລກທີ່ສັງຫານຊີວິດຫລາຍໆສິບລ້ານຄົນເຖິງສອງເທື່ອແລ້ວ, ໃນປະ

ຈຸບັນ ຕັ້ງໃຈຢາກກໍ່ສົງຄາມໂລກຄັ້ງທີສາມອີກ. ຈັກກະພັດນິຍົມໄດ້ສວຍໃຊ້ຜົນສຳເລັດອັນຈົບງາມຂອງມວນມະນຸດ ເພື່ອຮັບໃຊ້ໃຫ້ແກ່ການສ້າງອາວຸດລ້າງຜານຂະໜາດມະຫຶມາ. ແນວທາງນະໂຍບາຍຂອງວົງການຈັກກະພັດນິຍົມ ທີ່ກຽມພ້ອມຈະສັງເວີຍຊີວິດຂອງປະຊາຊາດທັງໝົດນັ້ນ ເປັນ ການເພີ່ມທະວີໄພອັນຕະລາຍ ກ່ຽວກັບການນຳໃຊ້ອາວຸດດັ່ງກ່າວຫລາຍຍິ່ງຂຶ້ນ. ທ້າຍທີ່ສຸດແລ້ວ, ການປະທະກັນທາງການທະຫານລະດັບທົ່ວໂລກ ອາດຈະລະເບີດຂຶ້ນໄດ້, ຈາກການປະທະກັນດັ່ງກ່າວນີ້ ແມ່ນວ່າ ຈະບໍ່ມີ ຜູ້ຊະນະເລີດ ກໍ່ຄືຈະບໍ່ມີຜູ້ປະລາໄຊເລີຍ, ສ່ວນວ່າອະລິຍະທຳກໍ່ຈະຖືກ ດັບສູນໝົດ. ດ້ວຍເຫດນີ້ໂລກສັງຄົມນິຍົມ ຈຶ່ງເຮັດສຸດຄວາມສາມາດ ເພື່ອທີ່ຈະແກ້ໄຂບັນຫາອັນສຳຄັນຂອງຍຸກປະຈຸບັນອັນໄດ້ແກ່ບັນຫາສົງຄາມ ແລະ ສັນຕິພາບ. ສສສຊ ເປັນຜູ້ລິເລີ່ມໂຄງການລົບລ້າງອາວຸດນິວຄະເລຍຢ່າງສົມບູນ ແລະ ໃນທົ່ວທຸກແຫ່ງນັບແຕ່ນີ້ຈົນຮອດປີ ໒໐໐໐, ປົດປ່ອຍມວນມະນຸດອອກຈາກໄພດັບສູນຕົນເອງ, ຮັບປະກັນຄວາມປອດໄພອັນໝັ້ນຄົງ ສຳລັບຮຸ່ນຄົນປະຈຸບັນ ແລະ ອະນາຄົດ. ການປະຕິບັດໂຄງການດັ່ງກ່າວ ໃຫ້ປະກົດເປັນຈິງນັ້ນ ແມ່ນບັນຫາສຳຄັນອັນມີລັກສະນະເປັນຕາຍຂອງທຸກໆ ລັດ ແລະ ປະຊາຊາດ, ຂອງທຸກໆວົງການຈັດຕັ້ງມະຫາຊົນ ແລະ ບຸກຄົນ ທີ່ມີເຈດຕະນາດີ.

## ບົດທີ ໔. ທິດສະດີມາກ-ເລນິນ ກ່ຽວກັບ ການປະຕິວັດສັງຄົມນິຍົມ

ທິດສະດີກ່ຽວກັບການປະຕິວັດສັງຄົມນິຍົມ ແມ່ນເປັນຜົນສຳເລັດ ທີ່ສູງສຸດອັນໜຶ່ງຂອງລັດທິກອມມູນິດວິທະຍາສາດ. ຢູ່ໃນປະຫວັດສາດຂອງມວນມະນຸດເຮົາ ໄດ້ເຄີຍມີຂະບວນການເຄື່ອນໄຫວຂອງມວນຊົນ, ເຄີຍມີ ສົງຄາມ ແລະ ການລຸກຮື້ຂຶ້ນຂອງປະຊາຊົນຈຳນວນບໍ່ໜ້ອຍ ທີ່ໄດ້ນຳໄປ ສູ່ການປ່ຽນແປງອັນເລິກເຊິ່ງຢູ່ໃນຊີວິດຮອບດ້ານຂອງສັງຄົມ ແລະໄປສູ່ການສັບປ່ຽນຮູບຖານເສດຖະກິດ-ສັງຄົມ ທີ່ພົ້ນສະໄໝແລ້ວນັ້ນ ດ້ວຍຮູບຖານໃໝ່. ແຕ່ວ່າ ການປະຕິວັດສັງຄົມທັງໝົດຢູ່ໃນຍຸກສະໄໝອະດີດແຫ່ງປະຫວັດສາດນັ້ນ ແມ່ນມີລັກສະນະຕາມມີຕາມເກີດ ແລະ ບັນດານັກແນວຄິດຜູ້ມີຊື່ສຽງຂອງມັນ ບໍ່ພຽງແຕ່ບໍ່ສາມາດຄາດຄະເນການເລີ່ມຕົ້ນ ແລະ ບາດກ້າວແຫ່ງການຂະຫຍາຍຕົວຂອງການປະຕິວັດເຫຼົ່ານັ້ນ, ແຕ່ກໍບໍ່ສາມາດເຫັນເຖິງຜົນສະທ້ອນທີ່ຈະມີຂຶ້ນຂອງມັນໄດ້ອີກ. ເປັນເທື່ອທຳອິດ ໃນປະຫວັດສາດ ທີ່ລັດທິກອມມູນິດວິທະຍາສາດ ໄດ້ພິສູດໃຫ້ເຫັນວ່າ ການປະຕິວັດສັງຄົມນິຍົມ ຈະຕ້ອງມາເຖິງຢ່າງຫລີກລ່ຽງບໍ່ໄດ້ ແລະ ການຕໍ່ສູ້ຢ່າງມີສະຕິຂອງຊາວຜູ້ອອກແຮງງານ ເພື່ອໂຄ່ນລົ້ມລະບອບທຶນນິຍົມ ແລະ ກໍ່ຕັ້ງລະບອບສັງຄົມນິຍົມນັ້ນເປັນສິ່ງທີ່ຈຳເປັນ.

## ການປະຕິວັດທາງສັງຄົມ ແມ່ນສິ່ງທີ່ຫລີກລ່ຽງ ບໍ່ໄດ້ ທາງປະຫວັດສາດ

ໂດຍຄົ້ນພົບກົດເກນພາວະວິໄສແຫ່ງການຂະຫຍາຍຕົວຂອງສັງຄົມມະນຸດ, ກ.ມາກ ແລະ ຟ.ອັງແກລ ເຊິ່ງເປັນຜູ້ໃຫ້ກຳເນີດລັດທິກອມມູນິດວິທະຍາສາດນັ້ນ ໄດ້ໃຫ້ຂໍ້ສະຫລຸບທາງທິດສະດີ ກ່ຽວກັບການປະຕິວັດສັງຄົມນິຍົມ ອັນຫລີກລ່ຽງບໍ່ໄດ້, ການປະຕິວັດດັ່ງກ່າວເປັນຜົນມາຈາກຄວາມຂັດແຍ່ງປໍລະປັກກັນ ທີ່ຮ້າຍແຮງສຸດຂີດຢູ່ໃນກະໂຕລະບອບທຶນນິຍົມນັ້ນເອງ . ກ.ມາກ ແລະ ຟ.ອັງແກລ ໄດ້ຊີ້ແຈງວ່າ ການປະຕິວັດຢູ່ໃນສັງຄົມ ໜຶ່ງນັ້ນ ບໍ່ແມ່ນເຫດການບັງເອີນ ຫລືການລວງລະເມີດ ບາດກ້າວເດີນ ອັນ "ເປັນປົກກະຕິ" ຂອງປະຫວັດສາດແຕ່ຢ່າງໃດ, ແຕ່ມັນແມ່ນໄລຍະແຫ່ງການຂະຫຍາຍຕົວ ຂອງສັງຄົມເຊິ່ງເກີດຂຶ້ນ ແລະ ຜ່ານກາຍໄປຢ່າງມີກົດເກນ, ຢູ່ໃນຂອບເຂດແຫ່ງການຂະຫຍາຍຕົວດັ່ງກ່າວນີ້ ກໍມີການແກ້ໄຂຄວາມຂັດ-ແຍ່ງທີ່ມີຢູ່ຢ່າງພາວະວິໄສ. ການປະຕິວັດກໍເປັນສິ່ງທີ່ຫລີກລ່ຽງບໍ່ໄດ້ ເຊັ່ນດຽວກັນກັບຄວາມຂັດແຍ່ງທາງສັງຄົມ ເຊິ່ງເປັນຜູ້ໃຫ້ກຳເນີດແກ່ການປະຕິວັດນັ້ນ.

ບັນດາຄວາມຂັດແຍ່ງທາງສັງຄົມເກີດຂຶ້ນ ແລະ ຂະຫຍາຍຕົວຢູ່ບົນພື້ນຖານອັນໃດ ? ມັນເກີດຂຶ້ນ ແລະ ຂະຫຍາຍຕົວຢູ່ບົນພື້ນຖານຂອງແບບວິທີການຜະລິດຊັບສິນວັດຖຸ ທີ່ເປັນສິ່ງຈຳເປັນສຳລັບການດຳລົງຊີວິດຂອງຄົນເຮົາ ເຊິ່ງມີຢູ່ໃນປະຫວັດສາດ. ແບບວິທີການຜະລິດລວມມີຄວາມເປັນເອກະພາບກັນ ລະຫວ່າງດ້ານໜຶ່ງ ແມ່ນກຳລັງການຜະລິດ ເຊິ່ງມີຄົນທີ່ເປັນຜູ້ປະກອບສ່ວນເຂົ້າໃນການຜະລິດສັງຄົມ, ມີພາຫະນະ ແລະ ເປົ້າໝາຍແຮງງານ, ອີກດ້ານໜຶ່ງແມ່ນການພົວພັນການຜະລິດ, ໝາຍຄວາມ ວ່າແມ່ນການພົວພັນລະຫວ່າງຄົນຢູ່ໃນຂະບວນວິວັດແຫ່ງການຜະລິດຂອງສັງຄົມ, ຢູ່ໃນສັງຄົມທີ່ມີຊົນຊັ້ນ ກໍແມ່ນການພົວພັນແບບມີການຄອບຄອງ ແລະ ຖືກຄອບຄອງ. ກຳລັງການຜະລິດແມ່ນພາກສ່ວນປະກອບທີ່ສຳຄັນຂອງແບບວິທີການຜະລິດ, ແຕ່ລະຂັ້ນຕອນແຫ່ງການຂະຫຍາຍຕົວຂອງກຳລັງການຜະລິດນັ້ນ

ຕ້ອງມີການພົວພັນການຜະລິດທີ່ສອດຄ່ອງ. ຖ້າວ່າການພົວພັນການຜະລິດ ກັບກາຍເປັນຜູ້ຖ່ວງດຶງການຂະຫຍາຍຕົວຂອງກຳລັງການຜະລິດ ແລ້ວກໍຈະເກີດຄວາມຂັດແຍ່ງຂຶ້ນ ເຊິ່ງຈຳເປັນ ຈະຕ້ອງໄດ້ແກ້ໄຂແບບປະຕິວັດ ໝາຍຄວາມວ່າ ດ້ວຍວິທີການປ່ຽນແທນການພົວພັນການຜະລິດ ກໍຄືແບບວິທີການຜະລິດອັນເກົ່າດ້ວຍອັນໃໝ່. ຜົນຂອງການປ່ຽນແປງຢູ່ໃນການພົວພັນດ້ານເສດຖະກິດນັ້ນ ຈະພາໃຫ້ເກີດມີການປ່ຽນແປງຢ່າງເໝາະສົມຢູ່ໃນລະບົບການພົວພັນທາງດ້ານການເມືອງ, ດ້ານແນວຄິດ, ວັດທະນະທຳ ແລະ ດ້ານອື່ນໆ. ດ້ວຍເຫດນີ້ ຈຶ່ງເກີດມີການປ່ຽນແທນຮູບຖານສັງຄົມ- ເສດຖະກິດແບບໜຶ່ງ ດ້ວຍຮູບຖານອີກແບບໜຶ່ງ. ຢູ່ໃນປະຫວັດສາດຂອງມວນມະນຸດນັ້ນ ກໍເຄີຍມີການປ່ຽນຈາກລະບອບສະຫະຊີບປະຖົມບູຮານ ໄປເປັນ ລະບອບຂ້າທາດ, ຕໍ່ຈາກລະບອບຂ້າທາດກໍແມ່ນລະບອບສັກດີນາ ແລະ ຜູ້ສືບທອດລະບອບສັກດີນາ ກໍຄືລະບອບທຶນນິຍົມ ອັນເປັນສັງຄົມສຸດທ້າຍທີ່ມີ ລັກສະນະຂູດຮີດ.

ເນື້ອໃນພື້ນຖານຂອງແຕ່ລະການປະຕິວັດທາງສັງຄົມ ແມ່ນ ການຟື້ນຟູຄວາມສອດຄ່ອງລະຫວ່າງການພົວພັນການຜະລິດ ກັບ ລະດັບ ການຂະຫຍາຍຕົວ ແລະ ລັກສະນະຂອງກຳລັງການຜະລິດ. ດັ່ງນັ້ນ ໄຊຊະນະຂອງການປະຕິວັດທາງສັງຄົມໃດໜຶ່ງ, ກ່ອນອື່ນໝົດ ແມ່ນໝາຍເຖິງ ການເສີມສ້າງການຄອບງຳຂອງການພົວພັນການຜະລິດແບບໃໝ່ ທີ່ກ້າວໜ້າໃຫ້ໜັກແໜ້ນຂຶ້ນ.

ແຕ່ວ່າ ການປ່ຽນແປງແບບປະຕິວັດນັ້ນ ມັນຈະບໍ່ເກີດຂຶ້ນແບບອັດຕະໂນມັດ, ແບບເປັນໄປດ້ວຍ "ຕົວມັນເອງ". ຜົນສະທ້ອນ ແຫ່ງການຂະຫຍາຍຕົວຂອງກຳລັງການຜະລິດທີ່ມີຕໍ່ການປ່ຽນແປງຂອງການພົວພັນສັງຄົມນັ້ນ ແມ່ນສະແດງອອກຢູ່ໃນການເຄື່ອນໄຫວຂອງຄົນເຮົາ ເຊິ່ງເປັນຜູ້ສົ່ງ-ໃຈນຳການເສີມສ້າງອັນໃໝ່ໃຫ້ໜັກແໜ້ນ ຫລືຮັກສາການພົວພັນການຜະລິດເກົ່າໄວ້. ຍ້ອນແນວນັ້ນ ຄວາມຂັດແຍ່ງລະຫວ່າງກຳລັງ ການຜະລິດ ກັບ ການພົວພັນການຜະລິດ ຈຶ່ງສະແດງອອກຢູ່ໃນຄວາມຂັດແຍ່ງ ລະຫວ່າງຊົນຊັ້ນ ທີ່ເປັນຕົວແທນໃຫ້ແກ່ການພົວພັນທີ່ຕ່າງກັນ.

ການແກ້ໄຂຄວາມຂັດແຍ່ງອັນນີ້ ແມ່ນຈະຖືກດຳເນີນຢູ່ໃນການຕໍ່ສູ້ ຊົນ



5-699

ຊັ້ນ ແລະ ພົນຂອງມັນຈະເປັນຜູ້ກຳນົດລັກສະນະຂອງການພົວພັນດ້ານເສດຖະກິດ, ພ້ອມກັນນັ້ນ ມັນກໍຈະ ເປັນຜູ້ເລັ່ງລັດຫລືຖ່ວງດຶງການຂະຫຍາຍ-ຕົວຂອງກຳລັງການຜະລິດ.

ແຕ່ລະການປະຕິວັດສັງຄົມ ລ້ວນແຕ່ເຮັດໃຫ້ສະພາບທາງຊົນຊັ້ນ ປ່ຽນແປງຢ່າງເຖິງກົກເຖິງຮາກ ໂດຍເສີມສ້າງໄຊຊະນະຂອງຊົນຊັ້ນທີ່ນຳໜ້າຂອງປະຫວັດສາດໃຫ້ໜັກແໜ້ນ. ໄຊຊະນະອັນນີ້ ແມ່ນໝາຍເຖິງມີການປ່ຽນແປງການຄອບງຳຂອງຊົນຊັ້ນອັນແນ່ນອນຢູ່ໃນທຸກຂົງເຂດຂອງການພົວພັນສັງຄົມ. ທາງດ້ານການເມືອງນັ້ນ ຊົນຊັ້ນທີ່ມີໄຊ ຈະກຳເອົາ ອຳນາດແຫ່ງລັດໄວ້ໃນກຳມືຂອງຕົນ ແລະ ໃຊ້ການຊຸມຄອງລັດເປັນພາຫະນະ ອັນສຳຄັນໃນການເສີມສ້າງການຄອບຄອງຂອງຕົນໃຫ້ໜັກແໜ້ນ. ທາງດ້ານເສດຖະກິດ, ຊົນຊັ້ນທີ່ມີໄຊ ຈະເປັນເຈົ້າຂອງພາຫະນະການຜະລິດ ຕົ້ນຕໍ ແລະ ຮັບປະກັນໃຫ້ມີການຄອບຄອງຂອງຮູບການກຳມະສິດທີ່ສອດຄ່ອງ ກັບຜົນປະໂຫຍດຂອງຊົນຊັ້ນດັ່ງກ່າວຫລາຍກວ່າໝູ່. ແນວຄິດຂອງຊົນຊັ້ນ ທີ່ເປັນຜູ້ຄອບຄອງຢູ່ໃນເສດຖະກິດ ແລະ ການເມືອງນັ້ນ ຈະຄ່ອຍໆ ກາຍເປັນປັດໄຈອັນສຳຄັນຢູ່ໃນສະຕິສັງຄົມຂອງສັງຄົມດັ່ງກ່າວ.

## ການປະຕິວັດສັງຄົມນິຍົມ ແມ່ນການປະຕິວັດທາງສັງຄົມ ແບບໜຶ່ງ

ການປະຕິວັດສັງຄົມນິຍົມ ໃນຖານະທີ່ເປັນຮູບແບບໜຶ່ງຂອງການປະຕິວັດສັງຄົມນັ້ນ ມີຄວາມແຕກຕ່າງຈາກຮູບແບບອື່ນຢູ່ບ່ອນໃດ ? ການປະຕິ-ວັດສັງຄົມນິຍົມບໍ່ພຽງແຕ່ໝາຍຄວາມວ່າ ມີການສັບປ່ຽນການຄອບຄອງຂອງຊົນຊັ້ນໜຶ່ງ ດ້ວຍການຄອບຄອງຂອງຊົນຊັ້ນອື່ນຕາມທຳມະດາເທົ່ານັ້ນ, ແຕ່ຍັງແມ່ນການເລີ່ມຕົ້ນຂ້າມຜ່ານຈາກຍຸກສະໄໝຂອງສັງຄົມທີ່ມີຊົນຊັ້ນ ໄປສູ່ຍຸກສະໄໝຂອງສັງຄົມກອມມູນິດ ເຊິ່ງເປັນສັງຄົມທີ່ບໍ່ມີຊົນຊັ້ນ. ການບັນລຸ

ເຖິງການເຮັດໃຫ້ການຜະລິດມີລັກສະນະສ່ວນລວມ ຢູ່ໃນເງື່ອນໄຂຂອງລະບອບທຶນນິຍົມນັ້ນ ເປັນການສ້າງປະຖົມປັດໃຈອັນຈຳເປັນ ສຳລັບການສ້າງຕັ້ງກຳມະສິດສ່ວນລວມ ຕໍ່ພາຫະນະການຜະລິດ, ສຳລັບການລົບລ້າງການແບ່ງສັງຄົມອອກເປັນຊົນຊັ້ນຂູດຮີດ ແລະ ຊົນຊັ້ນຖືກຂູດຮີດ.

ອັນນີ້ ແມ່ນຄວາມແຕກຕ່າງພື້ນຖານຂອງການປະຕິວັດສັງຄົມນິຍົມເຊິ່ງເປັນການປະຕິວັດເພື່ອຜົນປະໂຫຍດຂອງຊາວຜູ້ອອກແຮງງານ ແລະ ຜູ້ຖືກກົດຂີ່ ຂູດຮີດທັງໝົດ. ຄວາມແຕກຕ່າງດັ່ງກ່າວນັ້ນ ເປັນຜູ້ກຳນົດ ບົດບາດຕັດສິນຂອງການປ່ຽນແປງດ້ານການເມືອງ ທີ່ມີຕໍ່ການດັດສ້າງແບບປະຕິວັດ. ຕາບໃດ ທີ່ນາຍທຶນຍັງຮັກສາອຳນາດແຫ່ງລັດໄວ້ໃນກຳມື ຂອງຕົນແລ້ວ, ພວກມັນກໍຈະບໍ່ອະນຸຍາດໃຫ້ມີການພົວພັນການຜະລິດແບບສັງຄົມນິຍົມ ເຊິ່ງສ້າງຂຶ້ນບົນພື້ນຖານການລົບລ້າງກຳມະສິດເອກະຊົນຕໍ່ພາຫະນະການຜະລິດນັ້ນເກີດຂຶ້ນໃນທ້ອງໃນໄສ້ຂອງລະບອບນາຍທຶນໄດ້.

ດັ່ງນັ້ນເພື່ອກຳຈັດນາຍທຶນອອກຈາກການຄອບຄອງທາງເສດຖະກິດນັ້ນ, ກ່ອນອື່ນໝົດຕ້ອງກຳຈັດພວກເຂົາອອກຈາກອຳນາດທາງການເມືອງ, ເພາະສະນັ້ນ ການປະຕິວັດການເມືອງ ເຊິ່ງເປັນຜູ້ນຳໄປສູ່ການສ້າງຕັ້ງອຳນາດຂອງຊາວຜູ້ອອກແຮງງານ ແລະ ລັດສັງຄົມນິຍົມນັ້ນ ຈຶ່ງເປັນເງື່ອນໄຂອັນສຳຄັນໃນການຄ້ຳປະກັນໄຊຊະນະຂອງການພົວພັນສັງຄົມນິຍົມຢູ່ໃນຂົງເຂດເສດຖະກິດ. ເປັນເທື່ອທຳອິດໃນປະຫວັດສາດ ທີ່ຊົນຊັ້ນ ຜູ້ອອກແຮງງານກໍຄື ຊາວກຳມະກອນ ໄດ້ກາຍເປັນຊົນຊັ້ນຄອບຄອງ. ຊົນຊັ້ນກຳມະກອນໄດ້ນຳໃຊ້ອຳນາດ ເພື່ອເສີມກຳລັງໃຫ້ແກ່ການຄອບຄອງ ທາງການເມືອງຂອງຕົນດ້ວຍການຄອບຄອງທາງດ້ານເສດຖະກິດ ແລະ ແນວຄິດ.

ການປະຕິວັດສັງຄົມນິຍົມ ໄດ້ລົບລ້າງກຳມະສິດເອກະຊົນ ແລະ ສ້າງຕັ້ງກຳມະສິດສ່ວນລວມຕໍ່ພາຫະນະການຜະລິດຂຶ້ນ, ການປະຕິວັດສັງຄົມນິຍົມຍັງໄດ້ລົບລ້າງລັດ ແບບຂູດຮີດ ແລະ ກໍ່ຕັ້ງລັດແບບໃໝ່ຂຶ້ນ ເຊິ່ງເປັນລັດ ທີ່ປົກປ້ອງຜົນປະໂຫຍດ ຂອງປະຊາຊົນສ່ວນຫລວງຫລາຍ ເປັນເທື່ອທຳອິດໃນປະຫວັດສາດ. ການປະຕິວັດສັງຄົມນິຍົມ ໄດ້ນຳເອົາ ການປ່ຽນແປງຢ່າງເຖິງກົກເຖິງຮາກມາສູ່ສະຕິສຳນຶກຂອງຄົນ, ເຊິ່ງເປັນການປ່ຽນແປງທີ່ສອດຄ່ອງກັບໜ້າທີ່ ແລະ ເປົ້າໝາຍຂອງການປະກອບສ່ວນອັນຂະຫຍັນ

ອັນແຂງຂອງເຂົາເຈົ້າ ໃນການກໍ່ສ້າງສັງຄົມ ສັງຄົມນິຍົມ [1].

ແນ່ນອນແລ້ວວ່າ ການດັດສ້າງແບບປະຕິວັດເຫລົ່ານີ້ ບໍ່ສາມາດ ເຮັດໄດ້ມື້ໜຶ່ງຍາມດຽວ, ການທີ່ຈະເຮັດໃຫ້ມັນປະກົດເປັນຈິງນັ້ນຕ້ອງມີໄລຍະເວລາແຫ່ງການຂະຫຍາຍຕົວອັນແນ່ນອນ ແລະ ການແກ່ຍາວ ຂອງໄລຍະເວລາດັ່ງກ່າວກໍ່ຂຶ້ນກັບເງື່ອນໄຂສະເພາະແຫ່ງການຂະຫຍາຍຕົວຂອງການປະຕິວັດສັງຄົມນິຍົມຢູ່ໃນແຕ່ລະປະເທດ.

ລວມຄວາມແລ້ວ ພວກເຮົາສາມາດເວົ້າໄດ້ວ່າ ການປະຕິວັດສັງຄົມນິຍົມ ໃນຄວາມໝາຍກວ້າງນັ້ນ ແມ່ນການປະຕິວັດສັງຄົມທີ່ມີຄວາມເປັນເອກະພາບຢູ່ໃນການປ່ຽນແປງດ້ານເສດຖະກິດ, ການເມືອງ ແລະ ແນວຄິດດັ່ງທີ່ເວົ້າມາຂ້າງເທິງ ແລະ ໃນຄວາມໝາຍແຄບນັ້ນ ແມ່ນການປະຕິວັດທາງການເມືອງ, ເປັນການສັບປ່ຽນແບບປະຕິວັດ ເຊິ່ງໃນນັ້ນ ການຄອບຄອງທາງການເມືອງຂອງນາຍທຶນຖືກປ່ຽນແທນ ດ້ວຍການຄອບຄອງຂອງຊາວຜູ້ອອກແຮງງານ.

ເບື້ອງຕົ້ນ ພວກເຮົາຈະສຶກສາເບິ່ງການປະຕິວັດສັງຄົມນິຍົມ ໃນແງ່ຂອງລັກສະນະກົດເກນ, ໃນດ້ານເງື່ອນໄຂ, ໃນດ້ານເສັ້ນທາງແລະດ້ານຮູບການຂອງການຍາດແຍ່ງອຳນາດທາງດ້ານການເມືອງຂອງຊົນຊັ້ນກຳມະກອນ ແລະ ຊາວຜູ້ອອກແຮງງານ. ຫລັງຈາກນັ້ນ ພວກເຮົາຈະໄປສຶກສາກ່ຽວກັບບັນຫາການດັດສ້າງຊີວິດຮອບດ້ານຂອງສັງຄົມແບບປະຕິວັດ ພາຍຫລັງການສ້າງຕັ້ງອຳນາດຂອງຊາວຜູ້ອອກແຮງງານຂຶ້ນແລ້ວ.

---

໑) ເບິ່ງ ວ.ອິ.ເລນິນ.ບົດນິພົນຄົບຊຸດ, ເຫລັ້ມທີ ໓໘, ໜ້າ ໑໐໕ ; ເຫລັ້ມທີ ໔໐, ໜ້າ ໑໑-໑໔.

## ລັກສະນະກົດເກນ ອັນເປັນພື້ນຖານ
## ຂອງການປະຕິວັດ ສັງຄົມນິຍົມ

ທິດສະດີຂອງລັດທິກອມມູນິດວິທະຍາສາດວ່າດ້ວຍການທີ່ລະບອບສັງຄົມນິຍົມ ຕ້ອງປ່ຽນແທນລະບອບທຶນນິຍົມຢ່າງຫລີກລ່ຽງບໍ່ໄດ້ທາງປະຫວັດສາດນັ້ນ ແມ່ນໄດ້ຖືກຝ່າຍ ທີ່ສະໜັບສະໜູນການປ່ຽນແປງແບບປະຕິວັດ ກໍຄື ຝ່າຍທີ່ຕໍ່ຕ້ານ ໝູນໃຊ້ສຳລັບເປັນຂໍ້ອ້າງ ເຖິງຄວາມອາດສາມາດ ໃນ "ການນຳເອົາ" ສັງຄົມນິຍົມເຂົ້າມາໃນທັນທີທັນໃດ ດ້ວຍວິທີການກະບົດ, ກໍການລັດຖະປະຫານ ຫລືດ້ວຍວິທີການເຄື່ອນໄຫວມ້າງເພທຳລາຍ, "ຈຸດຊະນວນ" ໃຫ້ມີການລຸກຮື້ຂຶ້ນ ແລະ ການຕໍ່ສູ້ດ້ວຍອາວຸດ ຕ້ານລະບອບ ທີ່ພວມດຳລົງຄົງຕົວຢູ່ນັ້ນ. ຝ່າຍທີ່ສະໜັບສະໜູນການປ່ຽນແປງແບບປະຕິວັດນັ້ນ ຖືວ່າມີແຕ່ນາມະຈິດ, ຄວາມເດັດດ່ຽວຂອງນັກປະຕິວັດ ກຸ່ມໜຶ່ງເຊິ່ງເປັນຜູ້ນຳພາມະຫາຊົນເທົ່ານັ້ນກໍພໍເພື່ອດຳເນີນການປະຕິວັດນັ້ນ. ສ່ວນຝ່າຍທີ່ຕໍ່ຕ້ານນັ້ນ ໄດ້ພະຍາຍາມວາດພາບນັກປະຕິວັດເປັນຕົ້ນແມ່ນນັກກອມມູນິດວ່າເປັນຜູ້ຄົບຄິດກະບົດ ແລະ ຜູ້ກໍ່ການຮ້າຍ, ຜູ້ເຊິ່ງມຸ່ງໝາຍ ຢາກຍຶດເອົາອຳນາດເພື່ອສ້າງຕັ້ງລະບອບອຳນາດສົມບູນ ທີ່ຕ້ານປະຊາທິປະໄຕຂຶ້ນ. "ການອະທິບາຍ" ກ່ຽວກັບ ເສັ້ນທາງດຳເນີນການປະຕິວັດສັງຄົມນິຍົມເຊັ່ນນີ້ ບໍ່ພຽງເປັນການບິດເບືອນຫລັກທິດສະດີອັນເປັນພື້ນຖານຂອງລັດທິກອມມູນິດວິທະຍາສາດເທົ່ານັ້ນ, ແຕ່ຍັງເປັນການປະກອບອາວຸດ ໃຫ້ແກ່ພວກປະຕິການຈັກກະພັດເພື່ອມາຕ້ານກັບລັດທິກອມມູນິດວິທະຍາສາດ. ກົງກັນຂ້າມກັບແນວຄິດທີ່ຂາດເຫດຜົນທີ່ເວົ້າມາຂ້າງເທິງນັ້ນ, ລັດທິກອມມູນິດວິທະຍາສາດ ໄດ້ພິສູດທາງດ້ານທິດສະດີ ວ່າ ການປະຕິວັດສັງຄົມນິຍົມ ບໍ່ໄດ້ເກີດມີຂຶ້ນຕາມ "ຄຳສັ່ງ", ຕາມຄວາມປະສົງຫລືຄວາມມຸ່ງຫວັງ ຂອງບຸກຄົນໃດໜຶ່ງ, ແຕ່ມັນຮຽກຮ້ອງໃຫ້ມີປະຖົມປັດໄຈ ແລະ ເງື່ອນໄຂ ອັນແນ່ນອນ ທີ່ຖືກສ້າງຂຶ້ນ ໃນບາດກ້າວເດີນແຫ່ງການຂະຫຍາຍຕົວຂອງ ປະຫວັດສາດ ແລະ ການປະຕິວັດສັງຄົມນິຍົມນັ້ນ ຈະເກີດຂຶ້ນຢ່າງເໝາະສົມກັບລັກສະນະກົດເກນສະເພາະຂອງມັນ.

ເງື່ອນໄຂພາວະວິໄສຂອງການປະຕິວັດ. ໃນເວລາໃຫ້ຂໍ້ພິສູດແກ່ ລັກສະນະກົດເກນຂອງການປະຕິວັດສັງຄົມນິຍົມນັ້ນ, ບັນດານັກທິດສະດີກອມມູນິດວິທະຍາສາດ ໄດ້ຄົ້ນພົບບັນດາປະຖົມປັດໄຈພາວະວິໄສ ເຊິ່ງເຮັດໃຫ້ມີຄວາມຈຳເປັນທີ່ສຸດທີ່ຕ້ອງປ່ຽນລະບອບທຶນນິຍົມດ້ວຍລະບອບສັງຄົມນິຍົມ . ປະຖົມປັດໄຈທຳອິດແມ່ນໄດ້ແກ່ລະດັບການຂະຫຍາຍຕົວຂອງກຳລັງການຜະລິດ ທີ່ເລັ່ງທວງໃຫ້ເປັນລັກສະນະສ່ວນລວມ. ອຸດສາຫະກຳ ຂະໜາດໃຫຍ່ ເຊິ່ງມີກຳມະກອນຫລາຍພັນຄົນຢູ່ໃນວິສາຫະກິດໜຶ່ງໆ, ການທັນເອົາຂະແໜງການ ແລະ ການຜະລິດທີ່ກະແຈກກະຈາຍໃນເມື່ອກ່ອນ ເປັນຂະແໜງການເສດຖະກິດອັນດຽວກັນ, ການຂະຫຍາຍຕົວຂອງຕະຫລາດໂລກຢ່າງວ່ອງໄວ, ທັງໝົດເຫລົ່ານັ້ນແມ່ນເປັນຂະບວນວິວັດທີ່ຂັດແຍ່ງ ກັບຮູບການຍຶດຖືເອົາໝາກຜົນຂອງການຜະລິດມາເປັນຂອງສ່ວນຕົວຂອງນາຍທຶນ ວິກິດການຊ້ຳເຮື້ອຂອງເສດຖະກິດທຶນນິຍົມ ກໍຄືການຕໍ່ສູ້ຊົນຊັ້ນ ລະຫວ່າງແຮງງານ ແລະ ທຶນທີ່ຮ້າຍແຮງຂຶ້ນຢ່າງບໍ່ຢຸດຢັ້ງນັ້ນ ເປັນສິ່ງທີ່ພິສູດ ໃຫ້ເຫັນເຖິງການຂັດແຍ່ງດັ່ງກ່າວ.

ຢູ່ໃນໄລຍະຂະຫຍາຍຕົວສູງສຸດຂອງລະບອບທຶນນິຍົມ ຄືລະບອບຈັກກະພັດນິຍົມນັ້ນ ຄວາມຂັດແຍ່ງພື້ນຖານຂອງມັນ ຊຶ່ງແມ່ນຄວາມຂັດແຍ່ງ ລະຫວ່າງລັກສະນະສັງຄົມຂອງການຜະລິດ ກັບຮູບການກອບໂກຍເອົາ ໝາກຜົນຂອງການຜະລິດມາເປັນຂອງສ່ວນຕົວຂອງນາຍທຶນໄດ້ພຸ່ງຂຶ້ນສູງເຖິງຂັ້ນວິກິດການ. ວ.ອີ.ເລນິນ ຂຽນວ່າ: "...ທຶນນິຍົມຜູກຂາດແຫ່ງລັດແມ່ນການກະກຽມທາງດ້ານວັດຖຸອັນຄົບຖ້ວນສຳລັບສັງຄົມນິຍົມ, ແມ່ນມ໊ກ່ອນຂອງມັນ ແລະ ແມ່ນຂັ້ນໜຶ່ງຢູ່ໃນຂັ້ນໄດປະຫວັດສາດ, ເຊິ່ງລະຫວ່າງຂັ້ນທຶນນິຍົມຜູກຂາດແຫ່ງລັດ ກັບຂັ້ນສັງຄົມນິຍົມນັ້ນແມ່ນບໍ່ມີຂັ້ນອື່ນໃດຢູ່ກາງອີກ"[1].

ໃນປະຈຸບັນນີ້ ການປະຕິວັດວິທະຍາສາດ-ເຕັກນິກ ໄດ້ເລັ່ງລັດ ຂະບວນວິວັດທັນເສດຖະກິດເປັນຂອງສ່ວນລວມໃຫ້ໄວຂຶ້ນ. ຢູ່ໃນເງື່ອນໄຂແຫ່ງການຄອບຄອງຂອງບໍລິສັດຜູກຂາດນັ້ນ ຄວາມເປັນປໍລະປັກທາງສັງຄົມຍິ່ງຄຸເດືອດ ແລະ ເກີດມີຄວາມຂັດແຍ່ງໃໝ່ຂອງທຶນນິຍົມ.

---

໑) ວ.ອີ.ເລນິນ. ບົດນິພົນຄົບຊຸດ, ເຫລັ້ມທີ ໓໔ , ໜ້າ ໑໙໓.

ຄວາມຂັດແຍ່ງເຫລົ່ານີ້ ບໍ່ນຳໄປສູ່ການດຳເນີນການປະຕິວັດສັງຄົມນິຍົມໄດ້ໂລດ, ມີແຕ່ມະຫາຊົນຜູ້ອອກແຮງງານເທົ່ານັ້ນ ທີ່ສາມາດດຳເນີນການປະຕິວັດສັງຄົມນິຍົມ. ສິ່ງທີ່ຊຸກຍູ້ໃຫ້ຊາວຜູ້ອອກແຮງງານລຸກຮື້ນ ເຮັດການປະຕິວັດນັ້ນ ແມ່ນຄວາມຂັດແຍ່ງທາງການເມືອງ ແລະ ສັງຄົມທີ່ຮ້າຍແຮງສຸດຂະໜາດ. ມີເງື່ອນໄຂພາວະວິໄສ ແລະ ອັດຕະວິໄສ ທາງດ້ານສັງຄົມ-ການເມືອງແນວໃດແດ່ ຈຶ່ງຈະສາມາດດຳເນີນການປະຕິວັດສັງຄົມນິຍົມໄດ້ ?

<u>ສະພາວະການປະຕິວັດ.</u> ວິກິດການທາງການເມືອງຢ່າງເລິກເຊິ່ງ ທີ່ພາໃຫ້ເກີດມີສະພາວະການປະຕິວັດນັ້ນ ເປັນສິ່ງທີ່ຈຳເປັນເພື່ອຊຸກຍູ້ ໃຫ້ມວນຊົນມີການກະກຽມລຸກຮື້ນເຮັດການປະຕິວັດ. ສະພາວະການປະຕິວັດຖືກກຳນົດດ້ວຍສັນຍາລັກດັ່ງຕໍ່ໄປນີ້:

ປະການທີໜຶ່ງ ແມ່ນລະດັບຮ້າຍແຮງຂອງຄວາມຂັດແຍ່ງພາຍໃນຂອງຊົນຊັ້ນ ແລະ ກຸ່ມຜູ້ປົກຄອງເຖິງຂັ້ນທີ່ວ່າ ພວກເຂົາບໍ່ສາມາດຮັກສາ ການປົກຄອງທາງຊົນຊັ້ນຂອງຕົນໄວ້ໄດ້ ແລະ ບໍ່ສາມາດປົກຄອງຕາມແບບເດີມໄດ້. ສ່ວນບັນດາຊົນຊັ້ນທີ່ຖືກກົດຂີ່ ກໍບໍ່ຢາກຈະດຳລົງຊີວິດຕາມແບບ ເກົ່າອີກຕໍ່ໄປ.

ປະການທີສອງ ແມ່ນສະພາບເງື່ອນໄຂທາງວັດຖຸ, ການເມືອງ ແລະ ສັງຄົມ ສຳລັບການດຳລົງຊີວິດຂອງຊາວຜູ້ອອກແຮງງານ ໄດ້ຊຸດໂຊມ ລົງຢ່າງສຸດຂະໜາດ.

ບະການທີສາມ ແມ່ນການເຄື່ອນໄຫວທາງດ້ານການເມືອງ ຂອງຊາວຜູ້ອອກແຮງງານຂຶ້ນສູ່ລະດັບສູງສົມຄວນ ເຊິ່ງຢູ່ໃນເງື່ອນໄຂນີ້ ຈະສາມາດປັດເຂ່ຍແນວຄິດຫຍໍ້ທໍ້ ແລະ ແນວຄິດເຮັດຕາມຄວາມຊິນເຄີຍ ອັນເປັນລັກສະນະສະເພາະຂອງໄລຍະຂະຫຍາຍຕົວຢ່າງມີຄວາມສະຫງົບ ໄລຍະໃດໜຶ່ງ[໑)].

ດັ່ງນັ້ນ, ສະພາວະການປະຕິວັດ ຈຶ່ງເປັນການສະແດງອອກເຖິງຄວາມຂັດແຍ່ງຕົວຈິງ ທີ່ມີຢູ່ໃນຊີວິດຂອງສັງຄົມ ແລະ ການເມືອງ ໃນຂະນະ ທີ່

---

໑) ເບິ່ງ ວ.ອິ.ເລນິນ.ບົດນິພົນຄົບຊຸດ,ເຫລັ້ມທີ໔໖,ໜ້າ໔໑໘; ເຫລັ້ມທີ ໔໑, ໜ້າ ໖໙.

ມັນຮ້າຍແຮງຂຶ້ນສຸດຂະໜາດ. ຢູ່ໃນເງື່ອນໄຂປະຈຸບັນນີ້ ການກໍ່ໃຫ້ເກີດມີສະພາວະການປະຕິວັດນັ້ນ ບໍ່ຈຳເປັນຕ້ອງເປັນຜົນທີ່ມາຈາກຄວາມຊຸດໂຊມທາງດ້ານວັດຖຸຂອງຊາວຜູ້ອອກແຮງງານເທົ່ານັ້ນ, ແຕ່ມັນສາມາດມາຈາກຄວາມເຄັ່ງຕຶງຢູ່ໃນການຕໍ່ສູ້ຊົນຊັ້ນເພື່ອສິດທິທາງການເມືອງ ແລະ ສັງຄົມຂອງຊາວຜູ້ອອກແຮງງານ ແລະ ມາຈາກຂະບວນການຂອງມະຫາຊົນ ທີ່ຕ້ານສົງຄາມ ແລະ ລັດທິລ່າຫົວເມືອງຂຶ້ນ, ເພື່ອສັນຕິພາບ,ການປົດປ່ອຍຊາດ ແລະ ປະຊາທິປະໄຕທີ່ພຸ່ງຂຶ້ນເຖິງລະດັບສູງ. ການກໍ່ໃຫ້ເກີດສະພາວະການປະຕິວັດນັ້ນ ຍັງຖືກກຳນົດດ້ວຍປັດໄຈພາວະວິໄສຈຳນວນໜຶ່ງທີ່ສັບປົນກັນ. ແຕ່ໂດຍພື້ນຖານແລ້ວ ການທີ່ສະພາວະການປະຕິວັດຈະກ້າວກາຍເປັນການປະຕິວັດນັ້ນ ແມ່ນຂຶ້ນກັບລະດັບກຽມພ້ອມ ຂອງຊາວຜູ້ອອກແຮງງານ ແລະ ພັກກອມມູນິດຂອງເຂົາເຈົ້າ ເພື່ອເຮັດການປະຕິວັດນັ້ນ.

ວ.ອີ.ເລນິນ ໄດ້ສັ່ງສອນນັກກອມມູນິດໃຫ້ດຳເນີນການຕໍ່ສູ້ ຢ່າງຂ້ຽວຂາດ ແລະ ຢ່າງມານະອົດທົນ ເພື່ອສ້າງອິດທິພົນ ຢູ່ໃນໝູ່ຊາວຜູ້ອອກແຮງງານ.

ແມ່ນຫຍັງແທ້ ທີ່ກຳນົດຄວາມສຸກງອມຂອງປັດໄຈອັດຕະວິໄສ, ໝາຍຄວາມວ່າ ການກຽມພ້ອມ ຂອງຊາວຜູ້ອອກແຮງງານ ເພື່ອການລຸກຮື້ຂຶ້ນຢ່າງເປັນຂະບວນ ທີ່ເປັນລັກສະນະກົດເກນຂອງການປະຕິວັດສັງຄົມນິຍົມ?

__ປະຖົມປັດໄຈອັດຕະວິໄສຂອງການປະຕິວັດ.__ ຄວາມຈຳເປັນ ດ້ານປະຫວັດສາດຂອງການປະຕິວັດທາງສັງຄົມນັ້ນ ຈະຖືກປະຕິບັດ ໃຫ້ປະກົດຜົນເປັນຈິງໄດ້ ໂດຍຜ່ານການເຄື່ອນໄຫວຂອງຜູ້ທີ່ມີກົ້ນຄິດ ແລະ ຜູ້ທີ່ສຳນຶກເຖິງຜົນປະໂຫຍດ ແລະ ເຈດຈຳນົງຂອງຕົນ, ເພາະສະນັ້ນ ການປະຕິ-ວັດ ຈຶ່ງບໍ່ພຽງແຕ່ເປັນໄລຍະທີ່ມີລັກສະນະຖືກຕ້ອງຕາມກົດເກນ ແລະ ມີລັກສະນະຈຳເປັນຢ່າງພາວະວິໄສຂອງຂະບວນການປົດປ່ອຍເທົ່ານັ້ນ, ແຕ່ເວລາດຽວກັນນັ້ນມັນກໍ່ຍັງເປັນເປົ້າໝາຍຂອງຂະບວນດັ່ງກ່າວ.

ໃນເວລາມີການກະກຽມເຮັດການປະຕິວັດນັ້ນ ຈຳເປັນຕ້ອງໄດ້ ແຍກເບິ່ງການຈັດວາງກຳລັງທາງສັງຄົມ ແລະ ຊົນຊັ້ນ ແລະ ກຳນົດວ່າ ແມ່ນຊົນຊັ້ນໃດ ແລະ ຊັ້ນຄົນໃດໃນສັງຄົມທີ່ຈະເປັນຜູ້ມີບົດບາດກ້າວໜ້າ ຢູ່ໃນການປະຕິວັດນັ້ນ, ມີຄວາມຈຳເປັນຈະຕ້ອງດຳເນີນການຕໍ່ສູ້ ແບບປະຕິວັດ

ຕ້ານຊົນຊັ້ນໃດ, ແມ່ນຊົນຊັ້ນ ແລະ ຊັ້ນຄົນໃດທີ່ຖືຕົນເປັນກາງຢູ່ໃນການຕໍ່ສູ້ນັ້ນ ແລະ ຄວາມເປັນກາງຂອງເຂົາເຈົ້ານັ້ນ ເປັນຜົນດີໃຫ້ແກໃຜ. <u>ກຳລັງຊຸກດັນຂອງການປະຕິວັດ</u> ກໍ່ຄືບັນດາຊົນຊັ້ນ ແລະ ຊັ້ນຄົນໃດທີ່ຮູ້ສຶກ ຕືນຕົວຕໍ່ການປະຕິວັດ ແລະ ໄດ້ດຳເນີນການຕໍ່ສູ້ເພື່ອໄຊຊະນະຂອງມັນ ຢ່າງຫ້າວຫັນ.

ໃນປະຈຸບັນນີ້, ຄຽງຂ້າງກັບຊົນຊັ້ນກຳມະກອນ, ບັນດາຊັ້ນຄົນ ສ່ວນໃຫຍ່ໃນໝູ່ຊາວນາ, ລັດຖະກອນ, ປັນຍາຊົນ, ນັກຮຽນ ນັກສຶກສາແລະທະຫານກໍໄດ້ດຳເນີນການຕໍ່ສູ້ນັບມື້ຫ້າວຫັນເພື່ອການດັດສ້າງສັງຄົມ ຢ່າງເຖິງຖອງ.

ຢູ່ໃນທິດສະດີກ່ຽວກັບການປະຕິວັດສັງຄົມນິຍົມນັ້ນ, ວ.ອີ.ເລນິນ ໄດ້ຄົ້ນຄວ້າກ່ຽວກັບບັນຫາອົບຮົມໃຫ້ຊົນຊັ້ນກຳມະກອນ, ຊາວຜູ້ອອກແຮງງານຮູ້ຈັກດຳເນີນການປະຕິວັດ, ກ່ຽວກັບຍຸດທະສາດ ແລະ ຍຸດທະວິທີ ຂອງການຕໍ່ສູ້ນັ້ນ. ຢູ່ໃນໃຈກາງຂອງທຸກໆບັນຫາກໍຄືຫລັກທິດສະດີຂອງ ເລນິນວ່າດ້ວຍພັກ ເຊິ່ງເປັນກອງລະວັງໜ້າຂອງຊາວຜູ້ອອກແຮງງານ, ເປັນຜູ້ເຊື່ອມຂະບວນກຳມະກອນເຂົ້າກັບທິດສະດີປະຕິວັດແລະເປັນຜູ້ຈັດຕັ້ງມະຫາຊົນເຂົ້າໃນການຕໍ່ສູ້ແບບປະຕິວັດ. ເພິ່ນໄດ້ຂຽນວ່າ: "ຖ້າບໍ່ມີພັກ ທີ່ແຂງແກ່ນຄືເຫລັກກ້າ ແລະ ທີ່ໄດ້ຖືກຊຸບຫລໃນການຕໍ່ສູ້, ຖ້າບໍ່ມີພັກທີ່ຮູ້ໝູນໃຊ້ຄວາມເຊື່ອໝັ້ນຂອງຜູ້ສັດຊື່ສຸດຈະຫລິດທັງໝົດ ຢູ່ໃນຊົນຊັ້ນນັ້ນໆ ແລະຖ້າບໍ່ມີພັກທີ່ຮູ້ຕິດຕາມອາລົມຈິດຂອງມະຫາຊົນ ແລະ ສົ່ງອິດທິພົນ ຕໍ່ເຂົາເຈົ້າແລ້ວ ແມ່ນຈະບໍ່ສາມາດດຳເນີນການຕໍ່ສູ້ດັ່ງກ່າວໃຫ້ມີຜົນສຳເລັດໄດ້"[໑]. ໂດຍເປັນຜູ້ຄັດຄ້ານຢ່າງເດັດດ່ຽວທິດສະດີແບບສວຍໂອກາດ "ກ່ຽວກັບລັກສະນະຕາມມີຕາມເກີດ" ຂອງຂະບວນກຳມະກອນນັ້ນ, ວ.ອີ.ເລນິນ ໄດ້ເນັ້ນວ່າ ຖ້າບໍ່ມີການນຳພາຈາກ ພັກປະຕິວັດແລ້ວ, ຂະບວນ ກຳມະກອນຈະກະແຈກກະຈາຍກັນ, ຈະຕົກໄປຢູ່ໃຕ້ອິດທິພົນຂອງນາຍທຶນ ແລະ ຈະສູນເສຍຄວາມເປັນເອກະລາດທາງດ້ານການເມືອງຂອງຕົນ. ປະສົບການທີ່ມີມາຫລາຍກວ່າເຄິ່ງສະຕະວັດຂອງການປະຕິວັດສັງຄົມນິຍົມນັ້ນ ໄດ້ຢືນຢັນ

---

໑) ວ.ອີ.ເລນິນ. ບົດນິພົນຄົບຊຸດ, ເຫລັ້ມທີ ໔໑, ໜ້າ ໔໗.

ໃຫ້ເຫັນວ່າ ຢູ່ໃນຈຳນວນປະຖົມປັດໄຈອັດຕະວິໄສທັງໝົດນັ້ນ ສິ່ງທີ່ສຳຄັນ ແລະ ເປັນເງື່ອນໄຂຕັດສິນກວ່າໝູ່ສຳລັບໄຊຊະນະຂອງການປະຕິວັດ ກໍຄື ການມີພັກ ເຊິ່ງຍຶດໝັ້ນຢູ່ໃນຫຼັກສະນະແຫ່ງລັດທິກອມມູນິດວິທະຍາສາດ , ພັກທີ່ສາມາດດຶງດູດເອົາຊາວຜູ້ອອກແຮງງານໄປນຳຕົນເອງ ຢູ່ໃນການດັດສ້າງແບບປະຕິວັດ.

<u>ການປູກລະດົມມະຫາຊົນໃຫ້ດຳເນີນການປະຕິວັດ.</u> ທ່າແຮງ ຂອງພັກກອມມູນິດ ແມ່ນສາຍພົວພັນອັນສະໜິດແໜ້ນ ກັບບັນດາຊັ້ນຄົນຜູ້ອອກແຮງງານອັນກວ້າງຂວາງ ທັງນີ້ກໍຍ້ອນວ່າ ມະຫາຊົນແມ່ນເປັນຜູ້ປະດິດສ້າງການປະຕິວັດສັງຄົມນິຍົມ. ການທີ່ມະຫາຊົນກ້າວໄປສູ່ການປະຕິວັດ ສັງຄົມນິຍົມແມ່ນເປັນຂະບວນວິວັດພາວະວິໄສທີ່ເກີດຂຶ້ນມາຈາກຄວາມຂັດແຍ່ງ ຮ້າຍແຮງຢູ່ພາຍໃນສັງຄົມທີ່ເປັນປໍລະປັກກັນນັ້ນ. ລັກສະນະຂອງຄວາມຂັດແຍ່ງເຫຼົ່ານີ້ ຈະເປັນຜູ້ກຳນົດບົດບາດຂອງແຕ່ລະຊົນຊັ້ນ ແລະ ກຸ່ມຄົນຕ່າງ ໆ ໃນສັງຄົມ ຢູ່ໃນການປະຕິວັດສັງຄົມນິຍົມ. ທ່າທີຂອງຊົນຊັ້ນຕ່າງໆ ທີ່ມີຕໍ່ການປະຕິວັດ ຈະເຫັນເດັ່ນຊັດໃນຂະນະທີ່ວິກິດການທາງການເມືອງ ເກີດຂຶ້ນ. ໂດຍຂຶ້ນກັບຄວາມຈິງທີ່ວ່າ ມະຫາຊົນກຽມພ້ອມເພື່ອດຳເນີນການຕໍ່ສູ້ປະຕິວັດເຖິງຂັ້ນໃດ ແລະ ເຂົາເຈົ້າເຂົ້າໃຈເຖິງເປົ້າໝາຍ ແລະຜົນປະໂຫຍດອັນສະເພາະໜ້າ ແລະ ອັນສຸດທ້າຍຂອງຕົນເຖິງຂັ້ນໃດ ນັ້ນແມ່ນສິ່ງທີ່ກຳນົດວ່າ ວິກິດການທາງການເມືອງອາດຈະສົມສຸດລົງໄດ້ ດ້ວຍໄຊຊະນະຂອງການປະຕິວັດ, ຫຼືດ້ວຍໄຊຊະນະຂອງພວກຝືນປະຕິວັດຫຼືດ້ວຍການປະນີປະນອມຊົ່ວຄາວໃດໜຶ່ງ.

ຫຼັກສະນະທາງດ້ານການເມືອງຂອງມະຫາຊົນ ບໍ່ພຽງແຕ່ ຖືກກຳນົດດ້ວຍບັນດາເງື່ອນໄຂພາວະວິໄສເທົ່ານັ້ນ, ແຕ່ກໍຍັງໄດ້ຮັບການກໍ່ຮ່າງສ້າງຕົວຢູ່ໃນວິວັດທະນາການຂອງການຕໍ່ສູ້ທາງດ້ານການເມືອງ ແລະແນວຄິດ. ຢູ່ໃນການເຄື່ອນໄຫວຂອງຕົນນັ້ນ ພັກເຊິ່ງເປັນຜູ້ນຳພາການຕໍ່ສູ້ປະຕິວັດຕ້ອງຄຳນຶງເຖິງເງື່ອນໄຂພາວະວິໄສແຫ່ງການເຕີບໃຫຍ່ທາງດ້ານ ປະສົບການຂອງມະຫາຊົນ ແລະ ພ້ອມດຽວກັນນັ້ນ ກໍຕ້ອງຮູ້ນຳໃຊ້ເງື່ອນໄຂເຫຼົ່ານັ້ນເພື່ອເຮັດໃຫ້ມະຫາຊົນ ສະໜັບສະໜູນການຕໍ່ສູ້ ທາງການເມືອງ ຢ່າງມີສະຕິ.

ເສັ້ນທາງແຫ່ງການຂະຫຍາຍຕົວແບບສັນຕິ ແລະ ແບບບໍ່ສັນຕິ ຂອງການປະຕິວັດສັງຄົມນິຍົມ. ເມື່ອກະກຽມມະຫາຊົນເພື່ອດຳເນີນການປະຕິວັດສັງຄົມນິຍົມນັ້ນ, ບັນດາພັກ ມາກ-ເລນິນ ຕ້ອງຄຳນຶງເຖິງຄວາມອາດສາມາດທີ່ຈະດຳເນີນການປະຕິວັດນັ້ນດ້ວຍສັນຕິວິທີ ຫລືບໍ່ສັນຕິວິທີ. ອັນນັ້ນແມ່ນຂຶ້ນກັບການຊົ່ງຊາກຳລັງທາງຊົນຊັ້ນຕົວຈິງຢູ່ໃນແຕ່ລະປະເທດ, ລະດັບການຈັດຕັ້ງ ແລະ ຄວາມສຸກງອມຂອງມວນຊົນຜູ້ອອກແຮງງານ ແລະ ຂຶ້ນກັບລະດັບຕ້ານຄືນຂອງຊົນຊັ້ນປົກຄອງ ແລະ ສະພາບແວດລ້ອມສາກົນເຖິງແມ່ນວ່າ ການປະຕິວັດສັງຄົມນິຍົມ ຈະເກີດຂຶ້ນຢູ່ພາຍໃຕ້ຮູບການໃດກໍຕາມ, ເນື້ອໃນອັນສຳຄັນຂອງມັນ ກໍຄືການສ້າງຕັ້ງອຳນາດຂອງຊາວຜູ້ອອກແຮງ-ງານ. ປະຫວັດສາດໄດ້ມີຕົວຢ່າງ ກ່ຽວກັບການດຳເນີນການປະຕິວັດ ສັງຄົມນິຍົມດ້ວຍເສັ້ນທາງແຫ່ງການຕໍ່ສູ້ດ້ວຍກຳລັງອາວຸດ(ການປະຕິວັດເດືອນຕຸລາຢູ່ລັດເຊຍ ເມື່ອປີ ໑໙໑໗ ແລະ ການປະຕິວັດຢູ່ ກູບາ ປີ ໑໙໕໙ ) ກໍຄືດ້ວຍເສັ້ນທາງແບບສັນຕິ ( ຢູ່ໃນບັນດາປະເທດເອີລົບຕາເວັນອອກ).

ນັກກອມມູນິດ ແມ່ນມຸ່ງໝາຍຢາກດຳເນີນການປະຕິວັດ ດ້ວຍສັນຕິວິທີ ເພາະວ່າ ວິທີການນີ້ ສອດຄ່ອງກັບສິດຜົນປະໂຫຍດຂອງປະຊາຊົນ ຫລາຍກວ່າໝູ່, ຊ່ວຍໃຫ້ຫລີກເວັ້ນການນອງເລືອດ, ການທຳລາຍ ແລະຄວາມທຸກໄຮ້ເຂັນໃຈ. ແຕ່ວ່າ ຊົນຊັ້ນກຳມະກອນ ແລະ ຊາວຜູ້ອອກແຮງງານບໍ່ໄດ້ຢູ່ທາງເລືອກເອົາຮູບການດຳເນີນການປະຕິວັດນັ້ນ, ເມື່ອຊົນຊັ້ນຂູດຮີດຫາກກ້າວໄປສູ່ການໃຊ້ຄວາມຮຸນແຮງຕໍ່ປະຊາຊົນແລ້ວ ກໍຈຳເປັນຕ້ອງ ໄດ້ໝູນໃຊ້ຄວາມອາດສາມາດອື່ນນັ້ນກໍຄື ເສັ້ນທາງແບບບໍ່ສັນຕິເພື່ອຂ້າມຜ່ານໄປສູ່ສັງຄົມນິຍົມ. ປະສົບການແຫ່ງປະຫວັດສາດໄດ້ຊີ້ບອກວ່າການມີຄວາມຮັບຮູ້ຢ່າງໜັກແໜ້ນກ່ຽວກັບທຸກຮູບການ ແລະ ທຸກວິທີການດຳເນີນການຕໍ່ສູ້ຊົນຊັ້ນ, ການຮູ້ໝູນໃຊ້ຫລັກການລັດທິ ມາກ-ເລນິນ ເຂົ້າໃນ ສະພາບການຕົວຈິງຢູ່ໃນແຕ່ລະປະເທດນັ້ນ ແມ່ນເງື່ອນໄຂໃຫ້ແກ່ ການເຄື່ອນໄຫວອັນມີຜົນຂອງແຕ່ລະພັກກອມມູນິດ.

ການພົວພັນແບບຄອບຄອງ ແລະ ແບບຖືກຄອບຄອງ ເຊິ່ງໄດ້ຖືກສ້າງຂຶ້ນໃນລະດັບທົ່ວໂລກ ພາຍໃຕ້ລະບອບຈັກກະພັດນິຍົມນັ້ນ ໄດ້ເຮັດໃຫ້ ລະດັບການຂະຫຍາຍຕົວທາງດ້ານເສດຖະກິດແຫ່ງຊາດຂອງປະເທດຕ່າງໆ ບໍ່

ເທົ່າທຽມກັນ. ບົນພື້ນຖານນີ້ ວ.ອີ.ເລນິນ ໄດ້ໃຫ້ຂໍ້ສະຫລຸບກ່ຽວກັບຄວາມອາດສາມາດຂອງການປະຕິວັດສັງຄົມນິຍົມ ທີ່ຈະໄດ້ຮັບໄຊຊະນະໃນເບື້ອງຕົ້ນຢູ່ໃນບາງປະເທດຫລືປະເທດດຽວ. ວ.ອີ.ເລນິນ ຖືວ່າ ການຂ້າມ - ຜ່ານຈາກທຶນນິຍົມ ໄປສູ່ສັງຄົມນິຍົມນັ້ນ ຈະຕ້ອງໄດ້ກວມເອົາ ຍຸກສະໄໝປະຫວັດສາດໜຶ່ງທັງໝົດ ເຊິ່ງຢູ່ໃນບາດກ້າວເດີນແຫ່ງການຂະຫຍາຍຕົວນັ້ນ ປະເທດໜຶ່ງ ຫລືກຸ່ມປະເທດໜຶ່ງ ຈະແຍກຕົວອອກຈາກລະບົບທຶນນິ-ຍົມ ແລະ ຂ້າມຜ່ານໄປສູ່ເສັ້ນທາງແຫ່ງການກໍ່ສ້າງສັງຄົມນິຍົມ. ອີກປະການໜຶ່ງ ການສັ່ນສະເທືອນແບບປະຕິວັດທຸກຢ່າງທີ່ເກີດຂຶ້ນຢູ່ໃນພາກສ່ວນໜຶ່ງ ແລະ ຂົງເຂດໜຶ່ງຂອງໂລກນາຍທຶນນັ້ນ ລ້ວນແຕ່ມີຜົນສະທ້ອນຕໍ່ສະພາບການຂອງລະບົບທຶນນິຍົມແຫ່ງໂລກເວົ້າລວມຢ່າງຫລີກບໍ່ໄດ້.

ຄວາມສຸກງອມຂອງປະຖົມປັດໄຈແຫ່ງການປະຕິວັດສັງຄົມນິຍົມຢູ່ໃນແຕ່ລະປະເທດນັ້ນ ແມ່ນຖືກກຳນົດດ້ວຍຄວາມຂັດແຍ່ງພາຍໃນ ກໍຄືພາຍນອກທີ່ສັບປົນກັນເຂົ້າ, ໃນນັ້ນບໍ່ຈຳເປັນວ່າຄວາມຂັດແຍ່ງທີ່ຮ້າຍແຮງ ສຸດຂະໜາດ ແມ່ນຈະຕ້ອງເກີດຂຶ້ນແຕ່ຢູ່ໃນບັນດາປະເທດທຶນນິຍົມທີ່ຂະຫຍາຍຕົວກ່ວາໝູ່ເທົ່ານັ້ນ. ຍົກຕົວຢ່າງ, ເບື້ອງຕົ້ນນັ້ນ ການປະຕິວັດ ສັງຄົມນິຍົມໄດ້ຮັບໄຊຊະນະຢູ່ລັດເຊຍ ເຊິ່ງເປັນປະເທດທຶນນິຍົມທີ່ມີລະດັບ ການຂະຫຍາຍຕົວບໍ່ສູງປານໃດ, ແຕ່ຜົນສະທ້ອນຂອງມັນ ໄດ້ເຮັດໃຫ້ຂະບວນການປະຕິວັດແຜ່ລາມ ໄປເຖິງຊົນຊັ້ນກຳມະກອນ ຢູ່ໃນບັນດາປະເທດຈັກກະ-ພັດນິຍົມ ກໍຄືປະຊາຊົນຢູ່ໃນບັນດາປະເທດທີ່ເປັນເມືອງຂຶ້ນ ແລະ ບໍ່ມີເອກະລາດ.

ເງື່ອນໄຂແຫ່ງການຂ້າມຜ່ານໄປສູ່ສັງຄົມນິຍົມຂອງປະເທດຕ່າງໆນັ້ນກໍມີລັກສະນະຫລາຍຮູບຫລາຍສີ. ເລນິນ ຖືວ່າ ລະດັບການຂະຫຍາຍຕົວຂອງທຶນນິຍົມ ທີ່ມີຢູ່ແລ້ວນັ້ນ ເປັນປັດໄຈຕັດສິນທີ່ຊີ້ບອກລັກສະນະສະເພາະຊາດໃນການດຳເນີນການປະຕິວັດ. ເລນິນ ໄດ້ຂຽນໄວ້ວ່າ " ...ການຂ້າມຜ່ານຈາກທຶນນິຍົມ ໄປສູ່ສັງຄົມນິຍົມນັ້ນ ອາດຈະເປັນໄປໄດ້ພາຍໃຕ້ ຮູບການຕ່າງໆກັນ, ເຊິ່ງມັນຂຶ້ນກັບຄວາມຈິງທີ່ວ່າ ແມ່ນການພົວພັນແບບທຶນນິຍົມຂະໜາດໃຫຍ່ ຫລືວ່າແມ່ນເສດຖະກິດຂະໜາດນ້ອຍທີ່ພວມຄອບງຳ ຢູ່

ໃນປະເທດໜຶ່ງໆ" [໑]. ເລນິນ ໄດ້ເນັ້ນວ່າ ຢູ່ໃນປະເທດທຶນນິຍົມ ທີ່ຫລ້າຫລັງນັ້ນ ການເລີ່ມຕົ້ນເຮັດການປະຕິວັດແມ່ນງ່າຍກວ່າ, ແຕ່ການສ້າງສັງຄົມນິຍົມພັດຫຍຸ້ງຍາກກວ່າ ເພາະວ່າ: "ຢູ່ນັ້ນນອກຈາກໜ້າທີ່ ໃນການທຳລາຍແລ້ວ ພັດຍັງມີບັນດາໜ້າທີ່ອັນໃໝ່ ທີ່ຫຍຸ້ງຍາກ ແລະ ທີ່ບໍ່ເຄີຍມີມາກ່ອນຈັກເທື່ອນັ້ນ ກໍຄືໜ້າທີ່ໃນການດຳເນີນການຈັດຕັ້ງ" [໒]. ກົງກັນຂ້າມ ປະເທດທີ່ມີການຂະຫຍາຍຕົວສູງເທົ່າໃດ ກໍຍິ່ງມີຄວາມຫຍຸ້ງຍາກໃນການເລີ່ມຕົ້ນ ແລະ ດຳເນີນການປະຕິວັດໃຫ້ສຳເລັດຜົນ, ແຕ່ພັດມີຄວາມງ່າຍດາຍກວ່າ ໃນການທີ່ຈະນຳເອົາການປະຕິວັດສັງຄົມນິຍົມໄປເຖິງໄຊຊະນະສຸດທ້າຍ [໓].

ຄວາມມຸ່ງມາດປາດຖະໜາທີ່ນັບມື້ນັບເພີ່ມທະວີຂຶ້ນ ຂອງບັນດາປະເທດທີ່ຫາກໍໄດ້ຮັບການປົດປ່ອຍອອກຈາກລະບົບລ່າຫົວເມືອງຂຶ້ນໃນການ ທີ່ຈະເຮັດໃຫ້ການຂ້າມຜ່ານໄປສູ່ສັງຄົມນິຍົມສຳເລັດຜົນນັ້ນໄດ້ກາຍເປັນ ປັດໄຈໃໝ່ແຫ່ງການຂະຫຍາຍຕົວຂອງການປະຕິວັດສະໄໝປະຈຸບັນ. ການຂ້າມຜ່ານຈາກການພົວພັນແບບກ່ອນທຶນນິຍົມ ຫລື ການພົວພັນແບບທຶນນິຍົມໃນຂັ້ນຕົ້ນໄປສູ່ສັງຄົມນິຍົມໂດຍບໍ່ຜ່ານໄລຍະແຫ່ງການຂະຫຍາຍຕົວແບບທຶນນິຍົມນັ້ນ ແມ່ນສາມາດເປັນໄປໄດ້ດ້ວຍການຊ່ວຍເຫລືອຈາກບັນດາປະເທດສັງຄົມນິຍົມທີ່ໄດ້ຮັບໄຊຊະນະແລ້ວ ໃຫ້ແກ່ບັນດາປະຊາຊາດທີ່ຍັງຫລ້າຫລັງ.

ປະຈຸບັນ, ໃນເມື່ອມີວົງຄະນາຍາດແຫ່ງລັດສັງຄົມນິຍົມ, ຄວາມອາດສາມາດທີ່ຈະຂະຫຍາຍຕົວໄປຕາມເສັ້ນທາງແບບບໍ່ແມ່ນທຶນນິຍົມ ແລະມີທ່າອຽງສັງຄົມນິຍົມນັ້ນ ໄດ້ກາຍເປັນອະນາຄົດຕົວຈິງແຫ່ງການຕໍ່ສູ້ຂອງບັນດາປະຊາຊາດ ທີ່ໄດ້ຮັບການປົດປ່ອຍອອກຈາກລະບົບລ່າຫົວເມືອງຂຶ້ນ. ແຕ່ວ່າເສັ້ນທາງແຫ່ງການຂະຫຍາຍຕົວແບບບໍ່ແມ່ນທຶນນິຍົມນັ້ນ ແມ່ນໄລຍະເວລາອັນຈຳເປັນທາງດ້ານປະຫວັດສາດ ເຊິ່ງໃນນັ້ນຈະມີການສ້າງເງື່ອນໄຂອັນຈຳເປັນ ສຳລັບການດຳເນີນການປະຕິວັດສັງຄົມນິຍົມໃນອະນາຄົດ. ຄວາມ

---

໑) ວ.ອີ.ເລນິນ. ບົດນິພົນຄົບຊຸດ, ເຫລັ້ມທີ ໔໓, ໜ້າ ໗໘.

໒) ວ.ອີ.ເລນິນ. ບົດນິພົນຄົບຊຸດ, ເຫລັ້ມທີ ໓໖, ໜ້າ ໖.

໓) ເບິ່ງ ວ.ອີ.ເລນິນ. ບົດນິພົນຄົບຊຸດ, ເຫລັ້ມທີ ໓໖, ໜ້າ ໔໓໑.

ມຸ່ງໝາຍທີ່ຈະກ້າວຂຶ້ນສູ່ສັງຄົມນິຍົມ "<u>ໃນທັນທີທັນໃດ</u>", ໝາຍຄວາມວ່າ ຢາກຈະເຮັດໃຫ້ການປະຕິວັດສັງຄົມນິຍົມສຳເລັດຜົນ ໂດຍບາສະຈາກ ບັນດາເງື່ອນໄຂອັນຈຳເປັນນັ້ນ ແມ່ນເປັນການສ່ຽງໄພທາງດ້ານ ການເມືອງ ເຊິ່ງຈະນຳເອົາຜົນເສຍຫາຍມາໃຫ້ແກ່ຂະບວນການປະຕິວັດ.

ໄຊຊະນະຂອງການປະຕິວັດສັງຄົມນິຍົມຢູ່ໃນບັນດາປະເທດເອີລົບ, ອາຊີ ແລະ ຢູ່ ກູບາ, ການເຕີບໃຫຍ່ຂະຫຍາຍຕົວຂອງຂະບວນການກອມມູນິດ ແລະ ກຳມະກອນຢູ່ໃນບັນດາປະເທດນາຍທຶນ ແລະ ທ່າອຽງສັງຄົມນິຍົມ ຂອງບັນດາລັດໜຸ່ມນ້ອຍ ທີ່ເປັນເອກະລາດ, ທັງໝົດນີ້ໄດ້ພິສູດ ໃຫ້ເຫັນເຖິງຄວາມມີເຫດຜົນຢ່າງວິທະຍາສາດ ແລະ ຄວາມມີຊີວິດຊີວາຂອງທິດສະດີ ກ່ຽວກັບການປະຕິວັດສັງຄົມນິຍົມ ເຊິ່ງເປັນຜົນແຫ່ງການຄົ້ນຄວ້າຂອງ ກ.ມາກ, ຟ.ອັງແກນ ແລະ ວ.ອີ.ເລນິນ.

24/VII
ຫ້າມຈຳໜ່າຍ

## ບົດທີ ໕. ບັນດາຈຸດພິເສດຂອງລະບອບກອມມູນິດ

ລະບອບກອມມູນິດ ເຊິ່ງເກີດມາຈາກການປະຕິວັດສັງຄົມນິຍົມນັ້ນຕາມເນື້ອໃນຂອງມັນແລ້ວ ແມ່ນແຕກຕ່າງທາງດ້ານຫລັກການກັບບັນດາລະບອບເສດຖະກິດ-ສັງຄົມທັງຫມົດທີ່ມີຢູ່ກ່ອນແລ້ວນັ້ນ.

ຄວາມສຳນຶກແບບ ມາກຊິດ ກ່ຽວກັບລະບອບກອມມູນິດນັ້ນແມ່ນມີລັກສະນະວິທະຍາສາດທີ່ສຸດ. ຄວາມສຳນຶກນັ້ນກຳເນີດຂຶ້ນມາຈາກການໄຈ້ແຍກກ່ຽວກັບທ່າອ່ຽງ ແລະ ລັກສະນະກົດເກນແຫ່ງການຂະຫຍາຍຕົວຂອງສັງຄົມທີ່ມີຢູ່ກ່ອນ ຄືສັງຄົມທຶນນິຍົມນັ້ນເອງ. ວ.ອີ.ເລນິນ ຊີ້ແຈງວ່າ:"ສຳລັບມາກແລ້ວ ບໍ່ເຄີຍມີຄວາມພະຍາຍາມແມ່ນແຕ່ຫນ້ອຍດຽວ ທີ່ຈະສ້າງ ຄວາມໄຝ່ຝັນແບບລອຍເມກ, ເດົາແບບລົມໆແລ້ງໆ ໃນສິ່ງທີ່ບໍ່ສາມາດຈະຮູ້ໄດ້.ມາກຕັ້ງບັນຫາ ກ່ຽວກັບລັດທິກອມມູນິດ ຄືກັນກັບວ່າ ນັກທົດລອງ ທຳມະຊາດຜູ້ຫນຶ່ງ ທີ່ໄດ້ຕັ້ງບັນຫາກ່ຽວກັບວິວັດທະນາການ, ເຊັ່ນກ່ຽວກັບ ຮູບແບບໃຫມ່ຕ່າງໆຂອງສິ່ງທີ່ມີຊີວິດ" ໑).

ຄວາມສຳນຶກຢ່າງມີວິທະຍາສາດ ກ່ຽວກັບສັງຄົມໃຫມ່ນັ້ນບໍ່ແມ່ນ ການພັນລະນາຢ່າງລະອຽດກ່ຽວກັບສິ່ງທີ່ວ່າ ຄົນເຮົາຕ້ອງນຸ່ງເຄື່ອງ, ກິນອາຫານ, ເຮັດວຽກງານ ແລະ ໃຊ້ເວລາຫວ່າງຄືແນວໃດ. ລັດທິກອມມູນິດວິທະຍາສາດ ເປັນຜູ້ຄົ້ນພົບສິ່ງສຳຄັນຢູ່ໃນຊີວິດສັງຄົມຄື ລັກສະນະກົດເກນ ລັກສະນະພື້ນຖານ ແລະ ທ່າອ່ຽງແຫ່ງການຂະຫຍາຍຕົວຂອງມັນ.

ຄວນເນັ້ນຕື່ມວ່າ: ຄວາມສຳນຶກຢ່າງມີວິທະຍາສາດກ່ຽວກັບ ລະບອບ

---

໑) ວ.ອີ.ເລນິນ. ບົດນິພົນຄົບຊຸດ, ເຫລັ້ມທີ ໓໓, ຫນ້າ ໘໕.

ໃຫມ່ ພວມໄດ້ຮັບການຂະຫຍາຍຕົວ ແລະ ເຮັດໃຫ້ອຸດົມຮັ່ງມີຂຶ້ນ ທັງນີ້ ກໍ ຍ້ອນການຄົ້ນຄວ້າກ່ຽວກັບການດຳລົງຊີວິດຂອງບັນດາປະຊາຊາດທີ່ພວມກ້າວ ເດີນໄປຕາມເສັ້ນທາງສັງຄົມນິຍົມ. ທຸກສິ່ງທຸກຢ່າງທີ່ໄດ້ຮັບ ການທົດສອບ ແລະ ພິສູດດ້ວຍພຶດຕິກຳທາງສັງຄົມ ຈະຖືກສັງລວມ ແລະຈັດເຂົ້າຢູ່ໃນທິດ ສະດີຂອງລະບອບກອມມູນິດ. ແຕ່ລະປະເທດ ຫລັງຈາກທີ່ກ້າວຂຶ້ນສູ່ ເສັ້ນ ທາງແຫ່ງການກໍ່ສ້າງສັງຄົມນິຍົມແລ້ວ ລ້ວນແຕ່ມີອັນໃດອັນຫນຶ່ງທີ່ເປັນ ຈຸດ ສະເພາະຂອງໃຜລາວ ດ້ວຍເຫດນັ້ນຈຶ່ງເຮັດໃຫ້ຄວາມສຳນຶກກ່ຽວກັບ ລະ ບອບໃຫມ່ອຸດົມຮັ່ງມີຂຶ້ນ. ຍິ່ງມີບັນດາປະເທດແບບນີ້ຫລາຍເທົ່າໃດ ກໍຍິ່ງ ຈະເຮັດໃຫ້ວິທະຍາສາດກ່ຽວກັບລັດທິກອມມູນິດອຸດົມຮັ່ງມີຂຶ້ນເທົ່ານັ້ນ. ລັດ ທິກອມມູນິດວິທະຍາສາດ ແມ່ນຫລັກທິດສະດີແບບປະດິດສ້າງ, ມັນຂະຫຍາຍ ຕົວໄປພ້ອມໆກັບການຂະຫຍາຍຕົວຂອງຊີວິດນັ້ນເອງ ເພາະວ່າຊີວິດເປັນຜູ້ ໃຫ້ກຳເນີດລັດທິນີ້, ມັນກ້າວໄປພ້ອມກັບບາດກ້າວຂອງຄວາມເປັນຈິງ ພາ ວະວິໄສ.

ລະບອບໃຫມ່ບໍ່ແມ່ນສິ່ງທີ່ແຂງກະດ້າງ ແລະ ບໍ່ແມ່ນສິ່ງ ທີ່ບໍ່ປ່ຽນແປງ ແຕ່ຢ່າງໃດເລີຍ, ກົງກັນຂ້າມ, ນັບຕັ້ງແຕ່ມີກຳເນີດລະບອບໃຫມ່ຂຶ້ນ ກໍ່ ເລີ່ມມີຂະບວນວິວັດແຫ່ງການຂະຫຍາຍຕົວຮອບດ້ານຂອງຊີວິດສັງຄົມ ຢ່າງ ຂະຫຍັນຂັນແຂງ.

ຈຸດພິເສດຂອງລະບອບກອມມູນິດມີຫຍັງແດ່ ?

## ຄວາມສີວິໄລໃນລະດັບສູງສຸດ

ການທີ່ຈະຕີລາຄາສັງຄົມໃດຫນຶ່ງນັ້ນ ແມ່ນຕ້ອງອີງໃສ່ລັກສະນະ ແລະ ເນື້ອໃນຂອງເປົ້າຫມາຍທີ່ສັງຄົມນັ້ນໄດ້ວາງອອກສຳລັບມັນເອງ. ເປົ້າຫມາຍ ແມ່ນເປັນຜູ້ກຳນົດພາຫະນະ ແລະ ວິທີການທີ່ຈະນຳໃຊ້ເພື່ອເຮັດໃຫ້ ເປົ້າ ຫມາຍນັ້ນບັນລຸຜົນ. ຖ້າວ່າສັງຄົມໃດ ມຸ່ງຫມາຍຢາກຈະຮັບປະກັນຄວາມຢູ່

ດີກິນດີໃຫ້ແກ່ຊາວຜູ້ອອກແຮງງານທັງໝົດ ແລະສົ່ງເສີມການຂະຫຍາຍຕົວທາງດ້ານໃຈ ແລະ ກາຍຂອງເຂົາເຈົ້າແລ້ວ ກໍແມ່ນວ່າ ພາຫະນະທີ່ເຮັດໃຫ້ເປົ້າໝາຍເຫຼົ່ານັ້ນປະກົດເປັນຈິງຈະຕ້ອງເປັນສິ່ງທີ່ມີມະນຸດສະທຳ , ກົງກັນຂ້າມ ຖ້າສັງຄົມໃດມີເປົ້າໝາຍເພື່ອສະສົມຄວາມຮັ່ງມີໄວ້ ໃນກຳມືຂອງຄົນຈຳນວນໜ້ອຍນັ້ນ, ຢູ່ໃນສັງຄົມດັ່ງກ່າວຈະມີການນຳໃຊ້ພາຫະນະຂູດຮີດທີ່ໄຮ້ມະນຸດສະທຳທີ່ສຸດ.

ເປົ້າໝາຍໃດແດ່ ທີ່ລະບອບໃໝ່ໄດ້ວາງອອກໃຫ້ແກ່ຕົນເອງ ?ເປັນຫຍັງ ການທີ່ຈະເຮັດໃຫ້ມັນປະກົດຜົນເປັນຈິງນັ້ນ ຈຶ່ງຖືວ່າແມ່ນຄວາມຈຳ-ເປັນທາງສັງຄົມ ? ຈະບັນລຸເປົ້າໝາຍເຫຼົ່ານັ້ນໄດ້ດ້ວຍວິທີການແນວໃດ?

ກ.ມາກ ແລະ ຝ.ອັງແກນ ໄດ້ຂຽນກ່ຽວກັບສັງຄົມກອມມູນິດວ່າ:"ສັງຄົມນາຍທຶນເກົ່າພ້ອມກັບຊົນຊັ້ນ ແລະ ຄວາມຂັດແຍ່ງທາງຊົນຊັ້ນ ຂອງມັນນັ້ນ ຈະຖືກປ່ຽນແທນ ດ້ວຍສັງຄົມ ເຊິ່ງຢູ່ໃນນັ້ນ ການຂະຫຍາຍຕົວ ຢ່າງເປັນອິດສະຫລະຂອງແຕ່ລະຄົນ ໄດ້ເປັນເງື່ອນໄຂແຫ່ງ ການຂະຫຍາຍຕົວຢ່າງເປັນອິດສະຫລະຂອງໝົດທຸກຄົນ"[1].

ເມື່ອກຳນົດເປົ້າໝາຍອັນສູງສົ່ງ ແລະ ສຳຄັນຂອງສັງຄົມໃໝ່ນັ້ນ , ວ.ອີ.ເລນິນ ໄດ້ຢ້ຳວ່າ ເປົ້າໝາຍດັ່ງກ່າວ ໄດ້ແກ່ການຮັບປະກັນຄວາມສົມບູນພູນສຸກ ແລະ ການຂະຫຍາຍຕົວຮອບດ້ານ ຢ່າງເປັນອິດສະຫຼະຂອງສະມາຊິກທັງຫລາຍ ໃນສັງຄົມ. ທາດແທ້ ຂອງລະບອບກອມມູນິດ, ແບບວິທີການຜະລິດຂອງມັນ ແມ່ນມີລັກສະນະທີ່ວ່າ ມັນເລັງຫວັງໃຫ້ມີບຸກຄົນ ທີ່ຂະຫຍາຍຕົວຢ່າງຮອບດ້ານ, ເພາະສະນັ້ນ, ໃນທັນທີທັນໃດ ພາຍຫລັງທີ່ໄດ້ກຳເນີດຂຶ້ນນັ້ນ, ລະບອບສັງຄົມໃໝ່ ໄດ້ວາງໜ້າທີ່ຂອງຕົນອອກໄວ້ຄືຍົກລະດັບຊີວິດການເປັນຢູ່ຂອງຊາວຜູ້ອອກແຮງງານທັງໝົດໃຫ້ສູງຂຶ້ນແລະເຮັດໃຫ້ສະພາບດ້ານກາຍ ແລະ ໃຈຂອງພົນລະເມືອງແຕ່ລະຄົນ ໄດ້ຮັບການປັບປຸງໃຫ້ດີຂຶ້ນ.

ອັນນີ້ແມ່ນບັນຫາສັບສົນທີ່ມີຫລາຍດ້ານ ເຊິ່ງບໍ່ສາມາດຈະແກ້ໄຂໄດ້ໃນທັນທີທັນໃດ, ແຕ່ຈະໄດ້ຮັບການແກ້ໄຂໄປເທື່ອລະກ້າວໃນເມື່ອ ເງື່ອນໄຂ

---

໑) ກ.ມາກ ແລະ ຝ.ອັງແກນ. ບົດນິພົນ,ເຫລັ້ມທີ ໔, ໜ້າ ໔໔ກ.



6–699

ອັນຈຳເປັນ ຄືເງື່ອນໄຂທາງດ້ານວັດຖຸ, ເຕັກນິກ, ສັງຄົມ ແລະ ຈິດໃຈ ຈະໄດ້ຮັບການສ້າງຕັ້ງຂຶ້ນ. ຖ້າບໍ່ດັ່ງນັ້ນ ໝາຍຄວາມວ່າ ຈະຕົກຢູ່ໃນສະພາບຂອງນັກໄຝ່ຝັນລອຍເມກ, ເຊິ່ງຝັນເຖິງຄວາມປາດຖະໜາອັນດີງາມທີ່ບໍ່ສາມາດເປັນໄປໄດ້. ການປະຕິບັດເປົ້າໝາຍທີ່ເວົ້າມາຂ້າງເທິງ ນັ້ນມັນເລັ່ງທວງໃຫ້ມີການດັດສ້າງຊີວິດຮອບດ້ານຂອງສັງຄົມຢ່າງເຖິງກົກເຖິງຮາກ ແລະ ສຳລັບສິ່ງດັ່ງກ່າວມັນຕ້ອງການເວລາ ແລະ ການບຸກບືນຂອງມະຫາຊົນຫລາຍລ້ານຄົນນຳອີກ.

ເປັນຫຍັງຈຶ່ງສາມາດວາງເປົ້າໝາຍອັນໜຶ່ງອັນດຽວກັນສຳລັບສັງຄົມທັງໝົດໄດ້ ?

ການປະຕິວັດສັງຄົມນິຍົມ ໄດ້ຫັນເອົາພາຫະນະການຜະລິດສັງຄົມຈາກການເປັນກຳມະສິດຂອງສ່ວນບຸກຄົນໄປເປັນຊັບສົມບັດຂອງປວງຊົນ. ສະຫລຸບຄວາມວ່າ ຄວາມເປັນປໍລະປັກກັນຂອງສິດຜົນປະໂຫຍດຂອງກຸ່ມໃຫຍ່ໆໃນໝູ່ປະຊາຊົນຄືພວກກົດຂີ່ ແລະ ຜູ້ຖືກກົດຂີ່ຈະຖືກລຶບລ້າງ. ຢູ່ໃນເງື່ອນໄຂຂອງລະບອບທຶນນິຍົມນັ້ນ ສິ່ງໃດກໍຕາມ ທີ່ເປັນຜົນດີສຳລັບນາຍທຶນເຊັ່ນຜົນກຳໄລ ແລະ ການສ້າງຮັ່ງຄູນມີ, ສິ່ງນັ້ນຊ້ຳພັດ ສ້າງຄວາມທຸກຍາກເຂັນໃຈໃຫ້ແກ່ຊາວຜູ້ອອກແຮງງານທີ່ມີຜົນປະໂຫຍດອັນດຽວກັນ ໂດຍພື້ນຖານ. ຜົນປະໂຫຍດ ແລະ ຄວາມຕ້ອງການລວມ ຂອງຊາວຜູ້ອອກແຮງງານດັ່ງກ່າວນີ້ ເຕີບໃຫຍ່ຂຶ້ນໄປພ້ອມໆກັບຜົນສຳເລັດຢູ່ໃນການສ້າງສາສັງຄົມໃໝ່, ມັນອຳນວຍໃຫ້ມີການວາງເປົ້າໝາຍອັນໜຶ່ງອັນດຽວກັນ ແລະ ມີຜົນປະໂຫຍດຄືກັນ ສຳລັບໝົດທຸກຄົນ ແລະ ຊ່ວຍໃຫ້ພົນລະເມືອງ ທັງໝົດຢູ່ໃນສັງຄົມປະກອບສ່ວນຢ່າງມີສະຕິເຂົ້າໃນການເຮັດໃຫ້ ເປົ້າໝາຍເຫລົ່ານັ້ນປະກົດຜົນເປັນຈິງ.

ການລົບລ້າງພວກຂູດຮີດ ແລະ ການກຳຈັດຄວາມແຕກຕ່າງກັນ ທາງດ້ານຊົນຊັ້ນລະຫວ່າງຄົນໃຫ້ໝົດສິ້ນໄປເທື່ອລະກ້າວນັ້ນ ບໍ່ພຽງແຕ່ເປັນ - ການເປີດໂອກາດໃຫ້ສັງຄົມສາມາດວາງເປົ້າໝາຍທີ່ເປັນອັນໜຶ່ງອັນດຽວນັ້ນຄືການຮັບປະກັນຄວາມຢູ່ດີກິນດີ ແລະ ເຮັດໃຫ້ແຕ່ລະຄົນໄດ້ຮັບການຂະຫຍາຍຕົວຢ່າງຮອບດ້ານໄດ້ເທົ່ານັ້ນ. ການແບ່ງຄົນອອກເປັນຊົນຊັ້ນ ແລະ ກຸ່ມສັງຄົມນັ້ນ ໝາຍຄວາມວ່າແນວໃດ? ນັ້ນໝາຍຄວາມວ່າຖ້າແມ່ນເບິ່ງ

ຖານະທາງດ້ານວັດຖຸຂອງຄົນທີ່ສັງກັດຢູ່ໃນກຸ່ມສັງຄົມແລະຊົນຊັ້ນຕ່າງໆແລ້ວ ຈະເຫັນວ່າຄົນເຫຼົ່ານັ້ນມີສິດບໍ່ເທົ່າທຽມກັນແລະບໍ່ຄືກັນ. ດວຍເຫດນັ້ນ ລະບອບສັງຄົມໃໝ່ຈຶ່ງບໍ່ພຽງແຕ່ລົບລ້າງຊົນຊັ້ນຂູດຮີດເທົ່ານັ້ນ, ມັນຍັງເຮັດໃຫ້ຄວາມແຕກຕ່າງກັນທາງດ້ານຊົນຊັ້ນຄ່ອຍໆໝົດສິ້ນໄປຢ່າງບໍ່ຢຸດຢັ້ງ ແລະ ຢ່າງສະເໝີຕົ້ນສະເໝີປາຍ, ມັນມຸ້ງໝາຍຢາກໃຫ້ສັງຄົມມີລັກສະນະເປັນເນື້ອດຽວກັນ ເຊິ່ງເປັນສິ່ງທີ່ສ້າງເງື່ອນໄຂອັນສະດວກສະບາຍໃນ ລະດັບດຽວກັນ ສຳລັບການດຳລົງຄົງຕົວ, ອອກແຮງງານ, ຮ່ຳຮຽນ, ແລະການພັກຜ່ອນຢ່ອນອາລົມ. ຂະບວນວິວັດທີ່ວ່າມານັ້ນ ຈະເກີດມີຂຶ້ນໄດ້ພຽງແຕ່ຢູ່ໃນລະບອບສັງຄົມນິຍົມເທົ່ານັ້ນ. ສິ່ງເຫຼົ່ານີ້ເອງ ທີ່ເຮັດໃຫ້ສັງຄົມໃໝ່ແຕກຕ່າງກັບລະບອບນາຍທຶນ ຊຶ່ງມີຊົນຊັ້ນທີ່ເປັນປໍລະປັກກັນ ແລະ ມີເປົ້າໝາຍທີ່ປາສະຈາກມະນຸດສະທຳ.

ແມ່ນບໍ່ວ່າ ການເຮັດໃຫ້ບັນດາຊົນຊັ້ນຫຍັບເຂົ້າຫາກັນ ແລະ ການລົບລ້າງຄວາມແຕກຕ່າງກັນທາງດ້ານຊົນຊັ້ນ ແລະ ສັງຄົມລະຫວ່າງມະຫາຊົນຢູ່ໃນສັງຄົມໃໝ່ນັ້ນ ເປັນຂະບວນວິວັດໜຶ່ງ ທີ່ເປັນເອກະລາດ ເຊິ່ງບໍ່ຂຶ້ນກັບການປ່ຽນແປງອັນອື່ນ ? ແນ່ນອນແລ້ວວ່າ ບໍ່ແມ່ນແນວນັ້ນ. ສາຍເຫດອັນຕົ້ນຕໍຂອງການດັດສ້າງອັນສຳຄັນທຸກຢ່າງຢູ່ໃນສັງຄົມນັ້ນ ກໍ່ຄືການຂະຫຍາຍຕົວຂອງແບບວິທີການຜະລິດຊັບສິນວັດຖຸ. ການກ້າວໄປສູ່ສັງຄົມ ທີ່ມີຄວາມເປັນເນື້ອດຽວ, ກ່ອນອື່ນໝົດແມ່ນຂຶ້ນຢູ່ກັບຜົນສຳເລັດ ໃນການປັບປຸງກຳລັງການຜະລິດ ແລະ ການພົວພັນການຜະລິດໃຫ້ດີຂຶ້ນ, ເພາະສະນັ້ນ ຄວາມກ້າວໜ້າທາງດ້ານເສດຖະກິດ ແລະ ການຫັນແຮງງານ ແລະ ການຜະລິດເປັນຂອງສ່ວນລວມ, ທີ່ດຳເນີນໄປຢູ່ບົນພື້ນຖານການປັບປຸງກຳລັງການຜະລິດ ແລະ ການພົວພັນການຜະລິດດັ່ງກ່າວ ກໍ່ເປັນກົດເກນ ອັນສຳຄັນຍິ່ງ ໃນການກໍ່ຮ່າງສ້າງຕົວຂອງລະບອບກອມມູນິດ. ເພື່ອຈະຮັບປະກັນຄວາມກ້າວໜ້າທາງດ້ານເສດຖະກິດດັ່ງກ່າວ ແມ່ນຕ້ອງໄດ້ອີງໃສ່ການອອກແຮງງານລວມໝູ່, ຄວາມພ້ອມພຽງກັນ ແລະ ການບຸກບືນ ຮ່ວມກັນຂອງຊາວຜູ້ອອກແຮງງານທັງໝົດ, ເຂົາເຈົ້າກໍ່ເຂົ້າໃຈວ່າ ການຜະລິດຂອງສັງຄົມຍິ່ງມີປະສິດທິຜົນດີເທົ່າໃດ, ເຂົາເຈົ້າກໍ່ຍິ່ງຈະໄດ້ຢູ່ດີກິນດີແລະຄວາມຮຽກຮ້ອງຕ້ອງການຂອງເຂົາເຈົ້າກໍ່ຍິ່ງຈະໄດ້ຮັບການຕອບສະໜອງ

ຢ່າງບໍລິບູນຂອງເທົ່ານັ້ນ.

ແຕ່ວ່າ ເປັນໄປບໍ່ໄດ້ທີ່ຈະແກ້ໄຂບັນຫາອັນເປັນພື້ນຖານ ຂອງສັງຄົມ ໂດຍມີແຕ່ອີງໃສ່ການຂະຫຍາຍຕົວດ້ານເສດຖະກິດເທົ່ານັ້ນ. ເພື່ອໃຫ້ໝົດທຸກຄົນສາມາດເຮັດວຽກ, ຮ່ຳຮຽນ, ພັກຜ່ອນ ກໍຄືເຮັດໃຫ້ແນວຄິດຈິດໃຈ ແລະ ຮ່າງກາຍສົມບູນດີຂຶ້ນນັ້ນ, ສັງຄົມຈະຕ້ອງໄດ້ຂະຫຍາຍລະບົບ ການສຶກສາສາມັນ ແລະ ວິຊາຊີບ, ຂະຫຍາຍສາທາລະນະສຸກ, ກາຍຍະກຳ ແລະ ກິລາ, ສະຫວັດດີການສັງຄົມ, ການບໍລິການ ແລະ ອື່ນໆ. ດ້ວຍເຫດນັ້ນ ຈຸດພິເສດຂອງການກໍ່ສ້າງສ້າງຕົວ ແລະ ຂະຫຍາຍຕົວຂອງ ຮູບຖານໃໝ່ຄືລະບອບກອມມູນິດນັ້ນ ບໍ່ພຽງແຕ່ແມ່ນການພັດທະນາເສດຖະກິດເທົ່ານັ້ນ, ແຕ່ຍັງແມ່ນການພັດທະນາຂົງເຂດອື່ນໆຂອງຊີວິດສັງຄົມນຳອີກ. ສິ່ງດັ່ງກ່າວນີ້ເອງ ທີ່ເປັນຄວາມແຕກຕ່າງກັນຢ່າງມີລັກສະນະຫລັກການລະຫວ່າງລະບອບສັງຄົມນິຍົມ ກັບລະບອບທຶນນິຍົມ.

ສັງຄົມໃໝ່ ຈະເຮັດໃຫ້ເປົ້າໝາຍຕ່າງໆທີ່ວາງອອກນັ້ນປະກົດ ເປັນຈິງໄດ້ແນວໃດ ແລະ ດ້ວຍວິທີໃດ ? ກ່ອນອື່ນໝົດແມ່ນອີງໃສ່ການເຄື່ອນໄຫວຂອງມະຫາຊົນຜູ້ອອກແຮງງານ ເຊິ່ງມີລັກສະນະຕື່ນຕົວນັ້ນເອງ. ຄົນຂອງສັງຄົມໃໝ່ ເຖິງແມ່ນວ່າຈະມີອາຊີບໃດກໍຕາມ ມີໂອກາດ ສະແດງອອກກ່ຽວກັບຄວາມສາມາດ, ພອນສະຫວັນ ແລະ ຄວາມສາມາດບົ່ມຊ້ອນຂອງຕົນ. ການອອກແຮງງານກໍໄດ້ຫັນປ່ຽນມາເປັນຄວາມຮຽກຮ້ອງ ຕ້ອງການອັນຈຳເປັນຂອງຄົນຜູ້ໜຶ່ງໆ.

ສັງຄົມໃໝ່ ໄດ້ວາງໜ້າທີ່ຕໍ່ຕົນເອງ ໂດຍເລັ່ງໃສ່ເຮັດໃຫ້ການດຳລົງຊີວິດຂອງແຕ່ລະຄົນດີຂຶ້ນ ແລະ ຄວາມສາມາດບົ່ມຊ້ອນ ຂອງເຂົາເຈົ້າເບັ່ງບານອອກ. ແຕ່ດ້ວຍເຫດວ່າ ບັນຫານີ້ແມ່ນບັນຫາໃຫຍ່ໂຕ ແລະ ສັບສົນ, ສະນັ້ນມັນຈະຖືກແກ້ໄຂໄດ້ ກໍຕໍ່ເມື່ອໝົດທຸກຄົນປະກອບສ່ວນ ຢ່າງມີສະຕິເຂົ້າໃນການແກ້ໄຂບັນຫາເຫລົ່ານັ້ນ. ກ.ມາກ ແລະ ຟ.ອັງແກນໄດ້ຄົ້ນພົບກົດເກນວ່າດ້ວຍການເພີ່ມທະວີບົດບາດຂອງມະຫາຊົນຢູ່ໃນ ປະຫວັດສາດ ເຊິ່ງສະແດງອອກຢ່າງຄົບຖ້ວນກວ່າເກົ່າ ຢູ່ໃນສະພາບເງື່ອນໄຂຂອງລະບອບກອມມູນິດ. ວ.ອີ.ເລນິນ ໄດ້ເອີ້ນກົດເກນດັ່ງກ່າວນີ້ວ່າເປັນຫລັກມູນພື້ນຖານທີ່ສຸດຂອງລັດທິມາກ. ເພິ່ນໄດ້ເວົ້າວ່າ: "ການເຄື່ອນໄຫວທາງ

ດ້ານປະຫວັດສາດ ຍິ່ງມີຂະໜາດໃຫຍ່ ແລະ ຂອບເຂດກວ້າງເທົ່າໃດ , ຈຳນວນມະຫາຊົນທີ່ເຂົ້າຮ່ວມໃນການເຄື່ອນໄຫວກໍຍິ່ງຫລາຍເທົ່ານັ້ນ, ອີກດ້ານໜຶ່ງ ການດັດສ້າງຂອງພວກເຮົາຍິ່ງເລິກເຊິ່ງເທົ່າໃດ, ກໍຍິ່ງຕ້ອງເພີ່ມທະວີຄວາມສົນໃຈ ແລະ ທ່າທີແບບມີສະຕິຕໍ່ມັນ ແລະ ຊັກຊວນປະຊາຊົນຫລາຍລ້ານ ແລະ ຫລາຍສິບລ້ານຄົນໃຫ້ຊາບຊຶມຄວາມຈຳເປັນ ຂອງວຽກງານດັ່ງກ່າວຕື່ມອີກ" [1].

ເນື້ອໃນ ແລະ ລັກສະນະຂອງບັນດາເປົ້າໝາຍທີ່ໄດ້ວາງອອກຕໍ່ໜ້າສັງຄົມນິຍົມຢ່າງພາວະວິໄສນັ້ນ ຍັງຖືກກຳນົດດ້ວຍຫລັກການ ແຫ່ງອຳນາດອັນແທ້ຈິງຂອງປະຊາຊົນ ເຊິ່ງຈະຖືກນຳປະຕິບັດໃຫ້ເປັນຈິງຢ່າງສູດກົກສູດປາຍໃນທັນໃດທີ່ການປະຕິວັດສັງຄົມນິຍົມໄດ້ຮັບໄຊຊະນະ. ແມ່ນຜູ້ໃດ ຈະສາມາດນຳພາສັງຄົມ ແລະ ຄຸ້ມຄອງຂະບວນວິວັດເຊິ່ງເລັ່ງໃສ່ການຍົກລະດັບຊີວິດການເປັນຢູ່ ແລະ ວັດທະນະທຳໃຫ້ສູງຂຶ້ນໄດ້ດີກວ່າໝູ່ໝົດ ຖ້າບໍ່ແມ່ນຕົວແທນຂອງປະຊາຊົນນັ້ນເອງ ? ເງື່ອນໄຂອັນຈຳເປັນ ຂອງຜົນສຳເລັດ ແມ່ນການຂະຫຍາຍປະຊາທິປະໄຕສັງຄົມນິຍົມຢ່າງສະເໝີຕົ້ນ ສະເໝີປາຍ ແລະ ດຶງດູດເອົາຄົນເຂົ້າໃນການຄຸ້ມຄອງວຽກງານຂອງສັງຄົມ ແລະ ຄຸ້ມຄອງລັດ ນັບມື້ນັບຫລາຍຂຶ້ນ. ລະບົບການເມືອງ ຂອງລະບອບໃໝ່ ກໍໄດ້ແນໃສ່ການແກ້ໄຂບັນຫາດັ່ງກ່າວ.

ມີແຕ່ພັກທີ່ຍຶດຖືທິດສະດີວິທະຍາສາດ ແລະ ເຮັດໃຫ້ຫລັກມູນຂອງທິດ-ສະດີນັ້ນປະກົດເປັນຈິງ ຢູ່ໃນການເຄື່ອນໄຫວທາງການເມືອງ ແລະພຶດຕິກຳຕົວຈິງນັ້ນ ຈຶ່ງສາມາດນຳພາຂະບວນວິວັດອັນສັບສົນ ແລະຫລາຍດ້ານແນວນີ້ໄດ້, ພັກແບບນີ້ມີແຕ່ພັກ ມາກ-ເລນິນ ເທົ່ານັ້ນ.

---

໑) ວ.ອີ.ເລນິນ. ບົດນິພົນຄົບຊຸດ, ເຫລັ້ມທີ ໔໒, ໜ້າ ໑໔໐.

## ການກໍ່ຕັ້ງ ແລະ ການຂະຫຍາຍຕົວຂອງສັງຄົມໃໝ່

ຈຸດພິເສດ ແລະ ລັກສະນະຂອງລະບອບກອມມູນິດຈະປະກົດອອກເທື່ອລະກ້າວ ໃນຂະນະທີ່ລະບອບໃໝ່ພວມເປັນຮູບເປັນຮ່າງຂຶ້ນ. ອົງປະກອບໃດໜຶ່ງ, ເຊິ່ງໃນນັ້ນລວມທັງອົງປະກອບທາງສັງຄົມ ລ້ວນແຕ່ ຂະຫຍາຍຕົວໄປເທື່ອລະກ້າວ ແລະ ຢ່າງສະເໝີຕົ້ນສະເໝີປາຍ. ລະບອບກອມມູນິດຂະຫຍາຍຕົວຢ່າງມີກົດເກນເຊັ່ນດຽວກັນ ໂດຍຂ້າມຜ່ານຈາກຂັ້ນຕ່ຳໄປສູ່ຂັ້ນສູງ ແລະ ສົມບູນກວ່າ.

ສັງຄົມໜຶ່ງ ບໍ່ສາມາດກະໂດດຂ້າມຫລາຍຂັ້ນຕອນແຫ່ງການຂະຫຍາຍຕົວທາງສັງຄົມຂອງມັນເອງໄດ້. ເຊັ່ນດຽວກັນກັບເດັກນ້ອຍ ທີ່ບໍ່ສາມາດກາຍເປັນຜູ້ໃຫຍ່ໄດ້ໃນທັນໃດ ແຕ່ຕ້ອງໄດ້ຜ່ານໄວເດັກ ແລະ ໄວໜຸ່ມ. ຍ້ອນຫຍັງຈຶ່ງມີການສືບລຳດັບຢ່າງເຂັ້ມງວດໃນການຂະຫຍາຍຕົວທາງດ້ານປະຫວັດສາດຂອງສັງຄົມ ? ທັງນີ້ກໍຍ້ອນວ່າບັນດາປະຖົມປັດໄຈແລະເງື່ອນໄຂອັນຈຳເປັນສຳລັບແຕ່ລະໄລຍະໃໝ່ແຫ່ງຄວາມກ້າວໜ້າ ຂອງສັງຄົມແມ່ນຖືກສ້າງຂຶ້ນຢູ່ໃນໄລຍະກ່ອນນັ້ນ. ໂດຍເປັນໄປຢ່າງຖືກຕ້ອງ ຕາມເງື່ອນໄຂພາວະວິໄສ, ໃນແຕ່ລະໄລຍະຂະຫຍາຍຕົວນັ້ນ ຈຳເປັນຕ້ອງໄດ້ກຳນົດກ່ຽວກັບຄວາມຮຽກຮ້ອງຕ້ອງການຂອງຊາວຜູ້ອອກແຮງງານ, ວາງໜ້າທີ່ ແລະ ເປົ້າໝາຍຕໍ່ສັງຄົມອອກຢ່າງເໝາະສົມ, ວາງໂຄງການ-ດຳເນີນງານ ແລະ ເປີດກວ້າງການເຄື່ອນໄຫວຕົວຈິງທີ່ຈຳເປັນ ຂອງມະຫາຊົນ.

ບັນດາປະຊາຊາດທີ່ກຳລັງກໍ່ສ້າງສັງຄົມນິຍົມ ແມ່ນໄດ້ຮັບການປະກອບອາວຸດດ້ວຍທິດສະດີວິທະຍາສາດກ່ຽວກັບລະບອບກອມມູນິດ. ຂໍ້ພິສູດ ທາງທິດສະດີ ແລະ ບົດຮຽນຕົວຈິງຂອງຫລາຍປະເທດ ໄດ້ຢືນຢັນຄວາມຈິງ ທີ່ວ່າ ການຂະຫຍາຍຕົວຂອງລະບອບໃໝ່ ຈະຜ່ານບັນດາຂັ້ນຕອນຕົ້ນຕໍດັ່ງຕໍ່ໄປນີ້: ໑) ໄລຍະຂ້າມຜ່ານຈາກທຶນນິຍົມ ໄປສູ່ສັງຄົມນິຍົມ; ໒) ສັງຄົມນິຍົມ ທີ່ເປັນຂັ້ນຕອນທຳອິດ; ໓) ກອມມູນິດນິຍົມທີ່ເປັນຂັ້ນສູງຂອງ ການຂະຫຍາຍຕົວ. ແຕ່ລະຂັ້ນຕອນ ກໍປະກອບມີໄລຍະເວລາຕ່າງໆຂອງມັນອີກ,

ເຊິ່ງມີຄວາມແຕກຕ່າງກັນ, ແຕ່ກໍມີຫລາຍອັນທີ່ມີລັກສະນະລວມ, ເພາະວ່າລ້ວນແຕ່ແມ່ນຂັ້ນຕ່າງໆຂອງລະບອບສັງຄົມອັນດຽວ ນັ້ນຄືລະບອບກອມມູນິດ.

ຂັ້ນຕອນເຫລົ່ານີ້ແມ່ນມີລັກສະນະໄປຕາມກົດເກນຢູ່ໃນການຂະຫຍາຍຕົວຂອງລະບອບກອມມູນິດ. ບໍ່ຄວນຖືວ່າພາຍຫລັງການປະຕິວັດສັງຄົມນິຍົມແລ້ວ, ລະບອບສັງຄົມນິຍົມຈະຖືກສ້າງຂຶ້ນຢ່າງສຳເລັດໃນທັນໃດ, ແຕ່ລະບອບສັງຄົມນິຍົມນັ້ນ ຖືກກໍ່ສ້າງຢູ່ໃນຂະບວນວິວັດຂອງໄລຍະຂ້າມຜ່ານ. ຖ້າບໍ່ ໄດ້ຜ່ານໄລຍະປະຫວັດສາດອັນດົນນານຂອງການກໍ່ສ້າງສັງຄົມນິຍົມແລ້ວກໍຈະບໍ່ສາມາດບັນລຸເຖິງລະບອບກອມມູນິດນິຍົມໄດ້ເຊັ່ນດຽວກັນ. ພວກຕ້ານລັດທິມາກ-ເລນິນ ທາງດ້ານທິດສະດີນັ້ນ ໄດ້ຊອກຫາທຸກໆວິທີທາງເພື່ອທຳລາຍຄວາມເຊື່ອໝັ້ນຕໍ່ສັງຄົມນິຍົມໂດຍໄດ້ວາງຂໍ້ເລັ່ງທວງຕໍ່ສັງຄົມນິຍົມ ທີ່ເກີນຄວາມສາມາດ, ຂໍ້ເລັ່ງທວງດັ່ງກ່າວຈະສາມາດປະຕິບັດໄດ້ພຽງແຕ່ ຢູ່ໃນຂັ້ນສູງຂອງລະບອບໃໝ່ນີ້ເທົ່ານັ້ນ. ໂດຍຊີ້ບອກເຖິງຂະບວນວິວັດ ອັນສະເໝີຕົ້ນສະເໝີປາຍແຫ່ງການກ້າວຂຶ້ນໄປສູ່ຂັ້ນສູງສຸດຂອງສັງຄົມໃໝ່ນັ້ນ, ລັດທິກອມມູນິດວິທະຍາສາດ ຍັງໄດ້ເຜີຍໃຫ້ເຫັນເຖິງ ຄວາມອາດສາມາດຕົວຈິງຂອງແຕ່ລະໄລຍະແຫ່ງການຂະຫຍາຍຕົວຂອງມັນ. ດັ່ງນັ້ນລັດທິກອມມູນິດວິທະຍາສາດ ຈຶ່ງເລັງໃສ່ການປະຕິບັດອຸດົມຄະຕິທາງສັງຄົມໃຫ້ປະກົດເປັນຈິງ, ໂດຍປັດເຂ່ຍຄວາມເພີ້ຝັນ ແລະ ການກ້າວຫາອັນບໍ່ມີຄວາມຈິງ, ທີ່ຕິດຕາມການກຳເນີດ ແລະ ການກໍ່ຕົວຂອງສັງຄົມທີ່ມີມະນຸດສະທຳ ແລະ ປາສະຈາກການກົດຂີ່ຂູດຮີດ.

ລະບອບໃໝ່ ບໍ່ຕ້ອງການໃຫ້ມີການແຕ່ງເຕີມແບບປອມແປງຫລືການຕີລາຄາຕໍ່າກ່ຽວກັບຄວາມດີເລີດຂອງມັນ. ລະບອບໃໝ່ພວມຂະຫຍາຍຕົວຢ່າງສະໝໍ່າສະເໝີ ແລະ ບໍ່ຢຸດຢັ້ງ. ໂດຍກ້າວຂຶ້ນຈາກຂັ້ນໜຶ່ງ ໄປສູ່ອີກຂັ້ນໜຶ່ງ ແລະ ໂດຍການສ້າງຄວາມອາດສາມາດໃໝ່ ສຳລັບເຮັດ ໃຫ້ການດຳລົງຊີວິດນັບມື້ນັບດີຂຶ້ນ, ເພີ່ມທະວີຄວາມສົມບູນພູນສຸກ ແລະ ການຂະຫຍາຍຕົວທີ່ເບີ່ງບານອອກຂອງແຕ່ລະຄົນ.

## ບົດທີ ໖. ສະໄໝຂ້າມຜ່ານຈາກທຶນນິຍົມຂຶ້ນໄປສູ່ສັງຄົມນິຍົມ

### ສະໄໝຂ້າມຜ່ານ ເປັນສິ່ງຈຳເປັນ

ຈຸດພິເສດຂອງການກໍ່ຕັ້ງລະບອບກອມມູນິດ ແມ່ນຢູ່ບ່ອນວ່າ, ໂດຍກຳເນີດຂຶ້ນມາຈາກການປະຕິວັດ, ລະບອບໃໝ່ນີ້ຈະຜ່ານສະໄໝ ຂ້າມຜ່ານຈາກທຶນນິຍົມ ໄປສູ່ສັງຄົມນິຍົມ. ປະຫວັດສາດກ່ອນນີ້ ກໍໄດ້ຮູ້ເຖິງການສັບປ່ຽນຮູບຖານໜຶ່ງ ດ້ວຍຮູບຖານອື່ນ, ຕົວຢ່າງການປ່ຽນແທນລະບອບສັກດິນາດ້ວຍລະບອບທຶນນິຍົມ. ແຕ່ວ່າ ໃນຄາວນັ້ນບໍ່ໄດ້ເກີດມີຄວາມຈຳເປັນທີ່ຈະຕ້ອງມີສະໄໝຂ້າມຜ່ານ. ຍ້ອນຫຍັງ ? ທັງນີ້ກໍ່ຍ້ອນວ່າ ລະບອບສັກດິນາ ແລະ ລະບອບທຶນນິຍົມ ເຖິງແມ່ນຈະແຕກຕ່າງກັນກໍ່ຕາມ ແຕ່ວ່າ ອັນຕົ້ນຕໍຂອງມັນ ແມ່ນຄືກັນ, ທັງສອງລະບອບລ້ວນແຕ່ເປັນລະບອບທີ່ຂູດຮີດ. ທັງສອງລະບອບນີ້ ແມ່ນສ້າງຂຶ້ນບົນພື້ນຖານຂອງການກົດຂີ່ຂູດຮີດແລະເຮັດໃຫ້ກຸ່ມຄົນໜຶ່ງເປັນທາດຮັບໃຊ້ອີກກຸ່ມຄົນໜຶ່ງ, ເຖິງວ່າຈະດ້ວຍຮູບການທີ່ແຕກຕ່າງກັນກໍ່ຕາມ.

ຢູ່ໃນປະເທດໃດໜຶ່ງ ການປະຕິວັດນາຍທຶນທີ່ໄດ້ເຮັດໃຫ້ອຳນາດຂອງສັກດິນາຖືກປ່ຽນແທນດ້ວຍອຳນາດຂອງນາຍທຶນນັ້ນ ເຖິງຢ່າງໃດຢູ່ໃນ ສັງຄົມກໍຍັງຮັກສາຄວາມເປັນປໍລະປັກກັນທາງຊົນຊັ້ນໄວ້ຄືເກົ່າ. ສະພາບເຊັ່ນດຽວກັນນີ້ຈະຍັງຄົງມີຢູ່ບໍໃນກໍລະນີທີ່ລະບອບທຶນນິຍົມຖືກປ່ຽນແທນດ້ວຍ ລະບອບສັງຄົມນິຍົມ? ແນ່ນອນວ່າສິ່ງດັ່ງກ່າວແມ່ນເປັນໄປບໍ່ໄດ້, ເພາະວ່າລະບອບສັງຄົມ-ການເມືອງໃໝ່ນີ້ແຕກຕ່າງກັບ ລະບອບສັງຄົມ- ການເມືອງເກົ່າຢ່າງຂາດຂັ້ນ, ຢູ່ໃນລະບອບໃໝ່ນີ້ ບໍ່ມີການກົດຂີ່ຂູດຮີດ, ເພາະສະນັ້ນ ລະບຽບການ ແລະ ການພົວພັນສັງຄົມນິຍົມ ບໍ່ສາມາດທີ່ຈະ ກຳເນີດຂຶ້ນ ແລະ ຂະຫຍາຍຕົວຢູ່ໃນຂອບເຂດຂອງສັງຄົມນາຍທຶນໄດ້.ຕົວຢ່າງວ່າ

ຢູ່ໃນລະບອບທີ່ມີລັກສະນະຂູດຣີດນັ້ນ ຈະປະຕິບັດຫລັກການສັງຄົມນິຍົມ ວ່າ ດ້ວຍການແຈກຢາຍຕາມແຮງງານໄດ້ບໍ່, ໂດຍເຮັດໃຫ້ລູກຈ້າງ ແລະນາຍຈ້າງໄດ້ຮັບຄ່າແຮງງານຕາມການອອກແຮງງານຂອງຕົນ. ແນ່ນອນ ວ່າ ເປັນໄປບໍ່ໄດ້.

ການພົວພັນແບບສັງຄົມນິຍົມນັ້ນ ຈຳເປັນຕ້ອງໄດ້ຖືກສ້າງຂຶ້ນຢ່າງມີສະຕິ ພາຍຫລັງສຳເລັດການປະຕິວັດແລ້ວ. ໜ້າທີ່ອັນນີ້ຈະຖືກປະຕິບັດ ຢູ່ໃນໄລຍະເວລາອັນແນ່ນອນ ນັ້ນກໍຄື ໄລຍະຂ້າມຜ່ານຈາກທຶນນິຍົມ ໄປສູ່ສັງຄົມນິຍົມ.

ຄວາມຕ້ອງການໃຫ້ມີໄລຍະຂ້າມຜ່ານນັ້ນ ແມ່ນເກີດມາຈາກຄວາມຈຳເປັນຕ້ອງລົບລ້າງຊົນຊັ້ນຂູດຮີດກໍຄືທຸກຮູບການກິດຂີ່ຢ່າງສົມເຫດ. ການປະຕິວັດສັງຄົມນິຍົມແມ່ນການຫັນປ່ຽນກຳມະສິດຂະໜາດໃຫຍ່ຂອງເອກະຊົນ ນັ້ນມາເປັນກຳມະສິດຂອງປະຊາຊົນທັງໝົດ. ແຕ່ວ່າພວກທີ່ຍຶດຖືກຳມະສິດກໍພະຍາຍາມເອົາອຳນາດຄືນມາໃຫ້ຕົນເອງ ໂດຍອາໄສອິດທິພົນຂອງຕົນຕໍ່ຊາວຜູ້ອອກແຮງງານ, ອາໄສການພົວພັນສາກົນ ແລະ ຄວາມຫຍຸ້ງຍາກທີ່ພວກເຂົາສ້າງຂຶ້ນຢູ່ພາຍໃນປະເທດນັ້ນ. ລະບອບເກົ່າ ບໍ່ແມ່ນຈະຍອມຈຳນົນເອົາເອງ ແລະ ດ້ວຍຄວາມສະໝັກໃຈ. ບັນຫາທີ່ວ່າ ແມ່ນໃຜເອົາ ຊະນະໃຜລະຫວ່າງສັງຄົມນິຍົມ ກັບ ທຶນນິຍົມນັ້ນ ແມ່ນບັນຫາທີ່ສະແດງເຖິງຈຸດພິເສດຕົ້ນຕໍຂອງໄລຍະຂ້າມຜ່ານ. ດັ່ງທີ່ປະຫວັດສາດໄດ້ຊີ້ບອກວ່າການຖືເບົາກຳລັງແຮງແຫ່ງການຕ້ານຄືນຂອງຊົນຊັ້ນຂູດຮີດນັ້ນ ຈະເຮັດໃຫ້ຊາວຜູ້ອອກແຮງງານຕ້ອງໄດ້ເສຍຄ່າຕອບແທນທີ່ມີລາຄາແພງ.

ໜ້າທີ່ຂອງໄລຍະຂ້າມຜ່ານນັ້ນ ຈະໄດ້ຮັບການປະຕິບັດແນວໃດ? ໜ້າທີ່ດັ່ງກ່າວ ຈະສາມາດເຮັດໄດ້ກໍແຕ່ໃນກໍລະນີທີ່ວ່າ ຊາວຜູ້ອອກແຮງງານນັ້ນ ຍຶດເອົາອຳນາດໄວ້ໃນກຳມືຂອງຕົນ, ສ້າງຕັ້ງການຄອບຄອງ ທາງການເມືອງເຊິ່ງໄດ້ແກ່ພະເດັດການຂອງຕົນນັ້ນຂຶ້ນ. ປະຈຸບັນນີ້ມີຫລາຍທິດສະດີທີ່ມີເປົ້າໝາຍທຳການບິດເບືອນພາລະບົດບາດຕົວຈິງ ຂອງພະເດັດການກຳມາຊີບ ແລະ ເຮັດໃຫ້ຄົນຜູ້ບໍ່ມີປະສົບການນັ້ນມີຄວາມຢ້ານກົວ. ເປົ້າໝາຍກັບພາຫະນະທີ່ຈະເຮັດໃຫ້ເປົ້າໝາຍດັ່ງກ່າວປະກົດເປັນຈິງນັ້ນຕ້ອງສອດຄ່ອງກັນໃນລະດັບໃດໜຶ່ງ. ການລົບລ້າງທຸກຮູບການ ຂອງການກົດຂີ່

ຂູດຮີດ, ແລະ ການໃຊ້ຄວາມຮຸນແຮງ ກໍດີ ການສ້າງພື້ນຖານຂອງສັງຄົມນິຍົມນັ້ນ ມັນບໍ່ແມ່ນເປົ້າໝາຍທີ່ມະນຸດສະທຳ ແລະຄວາມສະຫງ່າງາມບໍ? ສະນັ້ນ ພາທະນະພົນຖານໃນການປະຕິບັດໜ້າທີ່ເຫຼົ່ານີ້ ຄືອຳນາດ ຂອງຊາວຜູ້ອອກແຮງງານນັ້ນ ບໍ່ອາດຈະຝືນກັບມະນຸດສະທຳໄດ້, ອຳນາດ ດັ່ງກ່າວບໍ່ມີການປະນີປະນອມກັບພວກຊອກຫາວິທີທາງເພື່ອຮັກສາອຳນາດຂອງພວກນາຍທຶນທີ່ເຕັມໄປດ້ວຍຄວາມຮ້າຍກາດ.

ປະຫວັດສາດໄດ້ຊີ້ບອກວ່າ ມາຕະການປາບປາມຂອງລັດກຳມາຊີບນັ້ນ ແມ່ນເປັນມາຕະການອັນຈຳເປັນ. ມັນເປັນມາຕະການຕອບໂຕ້ ຕໍ່ຄວາມໂຫດຮ້າຍ, ຄວາມຮຸນແຮງ ແລະ ການກໍ່ການຮ້າຍຂອງກຳລັງທີ່ຝືນປະຕິ-ວັດ.

ລວມຄວາມວ່າ ສະໄໝຂ້າມຜ່ານແຕ່ທຶນນິຍົມ ໄປສູ່ສັງຄົມນິຍົມນີ້ເປັນໄລຍະພິເສດໜຶ່ງ ຊຶ່ງນອນຢູ່ໃນການຂະຫຍາຍຕົວຂອງສັງຄົມ.ມັນເລີ່ມຕົ້ນນັບຕັ້ງແຕ່ການຍາດເອົາອຳນາດທາງການເມືອງໂດຍຊາວຜູ້ອອກແຮງງານ ແລະ ສິ້ນສຸດລົງດ້ວຍການກໍ່ສ້າງພື້ນຖານຂອງສັງຄົມນິຍົມ. ຢູ່ໃນບົດນິພົນ "ການຕຳນິຕິຊົມໂຄງການ ໂກທາ" ນັ້ນ ກ.ມາກ ໄດ້ໃຫ້ຂໍ້ພິສູດ ທາງທິດສະດີ ແກ່ຄວາມຈຳເປັນຕ້ອງມີສະໄໝດັ່ງກ່າວນີ້. ເພິ່ນໄດ້ຂຽນວ່າ:"ລະຫວ່າງສັງຄົມທຶນນິຍົມ ກັບສັງຄົມກອມມູນິດນິຍົມນັ້ນ ມີໄລຍະແຫ່ງການ ຫັນປ່ຽນແບບປະຕິວັດຈາກສັງຄົມທີ່ໜຶ່ງ ໄປເປັນສັງຄົມທີ່ສອງ ເຊິ່ງກົງກັບໄລຍະຂ້າມຜ່ານທາງດ້ານການເມືອງ ແລະ ລັດຂອງໄລຍະນີ້ ບໍ່ອາດຈະເປັນອັນອື່ນໃດໄດ້ ນອກຈາກລັດແຫ່ງ <u>ຜະເດັດການປະຕິວັດຂອງຊົນຊັ້ນກຳມາ-ຊີບ</u>" ໑). ຊີວິດຕົວຈິງໄດ້ຢືນຢັນການຄາດຄະເນອັນນີ້. ພ້ອມກັນນັ້ນ ພຶດຕິກຳຂອງບັນດາປະຊາຊາດ ໄດ້ເຮັດໃຫ້ຄວາມສຳນຶກ ຢ່າງມີວິທະຍາສາດກ່ຽວກັບຂັ້ນຕອນທຳອິດຂອງຮູບຖານກອມມູນິດນີ້ອຸດົມຮັ່ງມີ, ລະອຽດ ແລະ ບໍລິບູນຂຶ້ນກວ່າເກົ່າ.

---

໑) ກ.ມາກ ແລະ ຟ.ອັງແກນ. ບົດນິພົນ,ເຫຼັ້ມທີ ໑໙,ໜ້າ ໒໗.

## ບັນດາຈຸດພິເສດຂອງການກໍ່ສ້າງສັງຄົມນິຍົມ

ໃນປະຈຸບັນນີ້ ຈຳນວນປະເທດທີ່ພວມ ກ້າວໄປສູ່ ສັງຄົມນິຍົມນັ້ນ ມັນ ນັບມື້ນັບຫລາຍຂຶ້ນ. ແຕ່ດ້ວຍເຫດວ່າ ປະເທດໜຶ່ງແຕກຕ່າງກັບອີກ ປະເທດໜຶ່ງ, ສະນັ້ນ ຈຶ່ງເກີດມີບັນຫາວ່າ ການຂ້າມຜ່ານໄປສູ່ສັງຄົມນິຍົມນີ້ ມີກົດເກນລວມບໍ່ ຫລືວ່າແຕ່ລະຊາດຕ້ອງກ້າວເດີນໄປສູ່ສັງຄົມນິຍົມດ້ວຍເສັ້ນທາງສະເພາະຂອງໃຜລາວ ? ອັນນີ້ເປັນຄຳຖາມທີ່ສັບສົນ ແລະ ຄຳຕອບຂອງມັນກໍ່ມີຄວາມໝາຍທາງການເມືອງ ແລະ ພຶດຕິກຳຕົວຈິງໂດຍກົງ.

ນັກທິດສະດີຈຳນວນໜຶ່ງ ພະຍາຍາມໃຫ້ເຫດຜົນວ່າ: ການກໍ່ສ້າງສັງຄົມນິຍົມ ບໍ່ມີກົດເກນລວມທີ່ເປັນອັນໜຶ່ງອັນດຽວກັນ, ແຕ່ລະປະເທດຄວນສ້າງສັງຄົມນິຍົມຕາມແບບສະບັບຂອງຕົນເອງ ແລະ ໃຫ້ສອດຄ່ອງພຽງແຕ່ກັບຈຸດພິເສດສະເພາະຊາດຂອງຕົນເທົ່ານັ້ນ. ຈາກອັນນີ້ຈຶ່ງສະຫລຸບໄດ້ວ່າ ກະໂຕສັງຄົມນິຍົມເອງ ທີ່ຈະຖືກກໍ່ສ້າງຂຶ້ນຢູ່ໃນປະເທດໜຶ່ງ ຈຳເປັນຕ້ອງໃຫ້ແຕກຕ່າງກັບສັງຄົມນິຍົມຢູ່ໃນອີກປະເທດໜຶ່ງ. ອັນນີ້ແມ່ນເປັນທິດສະດີກ່ຽວກັບ "ແມ່ແບບຂອງສັງຄົມນິຍົມ" ສະເພາະຊາດ. ແຕ່ວ່າ ຈະເປັນ-ໄປໄດ້ບໍ່ ທີ່ວ່າສັງຄົມນິຍົມ ເຊິ່ງຈະຖືກສ້າງຂຶ້ນຢູ່ໃນປະເທດຕ່າງໆນັ້ນ ຈະແຕກຕ່າງທາງດ້ານຫລັກການ ກັບສັງຄົມນິຍົມທີ່ມີຢູ່ໃນປະຈຸບັນນີ້ ?ຕໍ່ບັນຫານີ້ ຄວນໃຫ້ຄຳຕອບປະຕິເສດ. ກະໂຕສັງຄົມນິຍົມກໍ່ຄືການກໍ່ສ້າງມັນ, ເຖິງວ່າຈະສ້າງຂຶ້ນຢູ່ບ່ອນໃດກໍ່ຕາມ ລ້ວນແຕ່ດຳເນີນໄປຕາມບັນດາ ກົດເກນລວມທັງນັ້ນ.

ຍັງມີທັດສະນະໜຶ່ງອີກທີ່ບໍ່ຖືກຕ້ອງຊຶ່ງມັນປະຕິເສດຈຸດພິເສດຂອງການກໍ່ສ້າງສັງຄົມນິຍົມຢູ່ໃນແຕ່ລະປະເທດ, ບໍ່ນັບເອົາຮູບການທີ່ມີຫລາຍຮູບຫຼາຍສີຢູ່ໃນການສະແດງອອກຂອງກົດເກນລວມແຫ່ງຂະບວນວິວັດດັ່ງກ່າວ. ລັດທິກອມມູນິດວິທະຍາສາດ ປະຕິເສດທັດສະນະເຫລົ່ານີ້ຢ່າງເດັດຂາດ. ມັນຖືວ່າ ຂະບວນວິວັດແຫ່ງການກໍ່ສ້າງສັງຄົມນິຍົມຢູ່ໃນແຕ່ລະປະເທດ ແມ່ນການປະສານສົມທົບຢ່າງກາຍະວິພາຊີລະຫວ່າງອັນສະເພາະ ກັບອັນລວມ.

ສາຍເຫດທີ່ພາໃຫ້ເກີດມີຮູບການ ແລະ ວິທີການທີ່ແຕກຕ່າງກັນ ໃນ

ການກໍ່ສ້າງສັງຄົມນິຍົມມາຈາກອັນໃດແດ່? ມັນມາຈາກບ່ອນທີ່ວ່າການຂ້າມຜ່ານໄປສູ່ສັງຄົມນິຍົມແມ່ນດຳເນີນໄປຢູ່ໃນບັນດາປະເທດທີ່ມີລະດັບການຂະຫຍາຍຕົວທາງດ້ານເສດຖະກິດ, ສັງຄົມ, ການເມືອງແລະວັດທະນະທຳ ແຕກຕ່າງກັນ. ຈຸດພິເສດຂອງສະໄໝຂ້າມຜ່ານຢູ່ໃນແຕ່ລະປະເທດ ຍັງຖືກກຳນົດຂຶ້ນຈາກຄວາມແຕກຕ່າງປະຈຳຊາດ ແລະ ຄວາມບໍ່ຄ້າຍຄືກັນຂອງການຈັດຊາກຳລັງທາງດ້ານຊົນຊັ້ນພາຍໃນປະເທດ ແລະ ບົນເວທີສາກົນ. ຍ້ອນສາຍເຫດທີ່ກ່າວມາຂ້າງເທິງນັ້ນ, ປະຊາຊົນຕ່າງໆຈຶ່ງມີຮູບການສະເພາະຂອງໃຜຂອງລາວ ໃນການກ້າວໄປສູ່ສັງຄົມນິຍົມ.

ຍ້ອນເຫດນີ້ເອງ ບັນດາພັກກອມມູນິດ ຈຶ່ງໄດ້ເອົາໃຈໃສ່ ຈຸດພິເສດຂອງການກ້າວຂຶ້ນສູ່ສັງຄົມນິຍົມຂອງປະເທດຕົນ ແລະ ຊອກຄົ້ນຫາວິທີການອັນມີປະສິດທິພາບກວ່າໝູ່ ໃນການກໍ່ສ້າງສັງຄົມນິຍົມຢ່າງປະດິດສ້າງ. ເຂົາເຈົ້າໄດ້ນຳເອົາຄຳຊີ້ນຳທີ່ມີລັກສະນະຫລັກການຂອງ ເລນິນ ເຂົ້າມາໝູນໃຊ້ເຊິ່ງຄຳຊີ້ນຳນັ້ນໄດ້ກ່າວວ່າ ທິດສະດີຂອງ ມາກ "ພຽງແຕ່ຊີ້ບອກຫລັກມູນ ແຫ່ງການຊີ້ນຳນຳພາທົ່ວໄປ ເທົ່ານັ້ນ, ສ່ວນການໝູນໃຊ້ ສະເພາະຢູ່ໃນປະເທດອັງກິດ ແມ່ນຕ່າງກັບຢູ່ ຝະລັ່ງ, ຢູ່ ຝະລັ່ງ ແມ່ນຕ່າງກັບ ຢູ່ເຢຍລະມັນ ແລະ ຢູ່ ເຢຍລະມັນ ກໍແມ່ນຕ່າງກັບຢູ່ ລັດເຊຍ" ໑).

ໂດຍອີງໃສ່ຈຸດພິເສດແຫ່ງການກ້າວໄປສູ່ສັງຄົມນິຍົມຂອງປະເທດຕ່າງຕ່າງນັ້ນ, ຈຳເປັນຕ້ອງເຫັນອັນເປັນຈຸດລວມທີ່ມີຢູ່ລະຫວ່າງປະເທດ ດັ່ງກ່າວ. ອັນລວມນັ້ນ ສະແດງເຖິງເງື່ອນໄຂຕົ້ນຕໍ ແລະ ມີລັກສະນະຕັດສິນຢູ່ໃນການດັດສ້າງຊີວິດຂອງສັງຄົມ.

ຕົກມາຮອດຕອນທ້າຍຊຸມປີ ໕໐ ຂອງສະຕະວັດນີ້, ສະໄໝຂ້າມຜ່ານຢູ່ໃນບາງປະເທດສັງຄົມນິຍົມແມ່ນໄດ້ສຳເລັດໄປແລ້ວ. ສິ່ງດັ່ງກ່າວນີ້ ໄດ້ຊ່ວຍໃຫ້ບັນດາພັກກອມມູນິດ ແລະ ພັກກຳມະກອນສາມາດໄຈ້ແຍກ ແລະນິຍາມກົດເກນຂອງສະໄໝຂ້າມຜ່ານ ແຕ່ທຶນນິຍົມໄປສູ່ສັງຄົມນິຍົມ. ກົດເກນດັ່ງກ່າວນັ້ນ ມີອັນໃດແດ່? ກົດເກນລວມນັ້ນ ມີດັ່ງຕໍ່ໄປນີ້:

- ການດຳເນີນການປະຕິວັດສັງຄົມນິຍົມ ແລະ ການສ້າງຕັ້ງອຳນາດ

---

໑) ວ.ອີ.ເລນິນ. ບົດນິພົນຄົບຊຸດ, ເຫລັ້ມທີ ໔, ໜ້າ ໑໘໔.

ຂອງຊາວຜູ້ອອກແຮງງານ ຢູ່ໃນຮູບການໃດ ຫລືຮູບການໜຶ່ງ ;

– ພັນທະພາບຂອງຊົນຊັ້ນກຳມະກອນ ກັບຊາວນາສ່ວນໃຫຍ່ ແລະຊົນຊັ້ນຜູ້ອອກແຮງງານອື່ນໆ ;

– ການລົບລ້າງກຳມະສິດນາຍທຶນ ແລະ ສ້າງຕັ້ງກຳມະສິດສ່ວນລວມຕໍ່ພາຫະນະການຜະລິດຕົ້ນຕໍ ;

– ການດັດສ້າງກະສິກຳໃຫ້ໄປຕາມແບບສັງຄົມນິຍົມເທື່ອລະກ້າວ ;

– ການພັດທະນາເສດຖະກິດແຫ່ງຊາດຢ່າງມີແຜນການ ເຊິ່ງ ແນໃສ່ຍົກລະດັບຊີວິດການເປັນຢູ່ຂອງຊາວຜູ້ອອກແຮງງານໃຫ້ສູງຂຶ້ນກວ່າເກົ່າ ;

– ການດຳເນີນການປະຕິວັດສັງຄົມນິຍົມ ຢູ່ໃນຂົງເຂດແນວຄິດ ແລະ ວັດທະນະທຳ ແລະ ການກໍ່ສ້າງປັນຍາຊົນໃໝ່ ທີ່ຈົງຮັກພັກດີຕໍ່ປະຊາ ຊົນ ແລະ ພາລະກິດສັງຄົມນິຍົມ ;

– ການລົບລ້າງແອກກົດຂີ່ທາງດ້ານຊົນຊາດ ແລະ ການປະກາດ ໃຊ້ສິດທິສະເໝີພາບກັນ ແລະ ການສ້າງມິດຕະພາບຖານອ້າຍນ້ອງລະຫວ່າງບັນດາປະຊາຊາດ ;

– ການປົກປັກຮັກສາໝາກຜົນຂອງສັງຄົມນິຍົມ ຈາກການພິປອງ ທຳລາຍຂອງສັດຕູພາຍໃນ ແລະ ພາຍນອກ ;

– ຄວາມສາມັກຄີຂອງຊາວຜູ້ອອກແຮງງານປະເທດໜຶ່ງ ກັບຊາວ ຜູ້ອອກແຮງງານຂອງອີກປະເທດໜຶ່ງ ໝາຍຄວາມວ່າລັດທິສາກົນກຳມາຊີບ.

ສິ່ງທີ່ໄດ້ກ່າວມານັ້ນ ແມ່ນໜ້າທີ່ລວມຂອງສະໄໝຂ້າມຜ່ານແຕ່ທຶນນິຍົມ ໄປສູ່ສັງຄົມນິຍົມ.

## ອຳນາດການປົກຄອງຂອງຊາວຜູ້ອອກແຮງ ງານ ແລະ ຮູບການຂອງມັນ

ການສ້າງຕັ້ງອຳນາດການປົກຄອງຂອງຊົນຊັ້ນກຳມະກອນ ລືຜະເດັດການກຳມາຊີບນັ້ນ ເປັນຈຸດພິເສດອັນໜຶ່ງຂອງສະໄໝຂ້າມຜ່ານ. ຜະເດັດ

ການກຳມາຊີບນັ້ນມັນໝາຍເຖິງຫຍັງ?ມັນສະແດງອອກຢູ່ໃນຮູບການໃດແດ່?

ບັນຫາກ່ຽວກັບອຳນາດ ແມ່ນເປັນບັນຫາພື້ນຖານຂອງພຸກໆການປະຕິວັດໃນປະຈຸບັນ ກໍຄືອະມາຄິດ. ກ.ມາກ ໄດ້ຖືວ່າ ຫລັກມູນກ່ຽວກັບຄວາມຈຳເປັນໃນການສ້າງຕັ້ງພະເດັດການກຳມາຊີບ ເປັນຄືການຄົ້ນພົບອັນໜຶ່ງທີ່ມີລັກສະນະຫລັກການ. ວ.ອີ.ເລນິນ ໄດ້ຖືວ່າ ຫລັກທິດສະດີກ່ຽວກັບພະເດັດການກຳມາຊີບ ເປັນຈຸດໃຈກາງຂອງທິດສະດີມາກ.

ພະເດັດການ ກຳມາຊີບ ແມ່ນເຄື່ອງມື ແລະ ພາຫະນະອັນຈຳເປັນສຳລັບການດຳເນີນການດັດສ້າງແບບສັງຄົມນິຍົມຢູ່ໃນສະໄໝຂ້າມຜ່ານ.ກ່ອນອື່ນໝົດພະເດັດການກຳມາຊີບແມ່ນມີຄວາມຈຳເປັນສຳລັບລົບລ້າງກຳມະສິດຂອງນາຍທຶນແລະທັບມ້າງການຕ້ານຄືນຂອງຈຶ້ນຈຸ້ນຂູດຣີດຊັ່ງບາງກໍລະນີການທັບມ້າງການຕ້ານຄືນດັ່ງກ່າວນັ້ນຖືກດຳເນີນໄປໂດຍໃຊ້ຄວາມຮຸນແຮງ.

ທິດສະດີ ແລະ ພຶດຕິກຳຕົວຈິງຂອງການກໍ່ສ້າງສັງຄົມນິຍົມໄດ້ພິສູດໃຫ້ເຫັນວ່າ: ຢູ່ໃນໄລຍະເວລາແຫ່ງການຕໍ່ສູ້ເພື່ອສັງຄົມນິຍົມນັ້ນ ຖ້າບໍ່ໃຊ້ຄວາມຮຸນແຮງແລ້ວ ຈຶ້ນຈຸ້ນກຳມາຊີບກໍຈະບໍ່ສາມາດເອົາຊະນະນາຍທຶນໄດ້. ລະດັບ ແລະ ຮູບການຂອງຄວາມຮຸນແຮງ ທີ່ໃຊ້ຕ້ານຈຶ້ນຈຸ້ນຂູດຣີດນັ້ນແມ່ນຂຶ້ນກັບການຊັ່ງຊາກຳລັງທາງຈຶ້ນຈຸ້ນ ກ່ອນອື່ນໝົດ ແມ່ນຂຶ້ນກັບລະດັບການຕ້ານຄືນຂອງຈຶ້ນຈຸ້ນທີ່ເປັນສັດຕູ.

ພະເດັດການກຳມາຊີບ ບໍ່ໝາຍເຖິງພຽງແຕ່ຄວາມຮຸນແຮງ. ໜ້າທີ່ຂອງມັນມີຫລາຍດ້ານທີ່ສຸດຄື: ສ້າງຕັ້ງ ແລະ ປັບປຸງພົນທະພາບກັບຈຶ້ນຄົນຜູ້ອອກແຮງງານອື່ນໆ, ດຶງດູດເອົາບັນດານັກວິຊາການ ເຂົ້າຮັບໃຊ້ສັງຄົມນິຍົມ ແລະ ສຶກສາອົບຮົມສະຕິຕົນຕົວທາງດ້ານລະບຽບວິໄນໃຫ້ແກ່ ຈຶ້ນຈຸ້ນກຳມະກອນເອງ ກໍຄືພາລະກອນທັງໝົດ.

ຢູ່ໃນພະເດັດການກຳມາຊີບນັ້ນ ສິ່ງສຳຄັນທີ່ສຸດ ບໍ່ແມ່ນຄວາມຮຸນແຮງ, ແຕ່ແມ່ນໜ້າທີ່ ທີ່ມີລັກສະນະສ້າງສາ, ແມ່ນວຽກງານສຶກສາອົບຮົມ ແລະ ວຽກງານດ້ານເສດຖະກິດ, ແມ່ນການສ້າງຕັ້ງ ແລະ ເສີມຂະຫຍາຍການພົວພັນແບບໃໝ່ ເຊິ່ງກວມເອົາການພະລິດ ແລະ ການແຈກຢາຍຜົນພະລິດທີ່ມີຄວາມຈຳເປັນ ສຳລັບເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນຫລາຍສິບລ້ານຄົນດີຂຶ້ນ. ພະເດັດການກຳມາຊີບປະຕິບັດໜ້າທີ່ດັ່ງຕໍ່ໄປນີ້:

- ຈັດຕັ້ງເສດຖະກິດ ແລະ ສຶກສາວັດທະນະທຳ ;
- ປາບປາມການຕ້ານຄືນຂອງຊົນຊັ້ນຂູດຣີດ ;
- ປົກປ້ອງກຳມະສິດສັງຄົມນິຍົມ ແລະ ຮັກສາລະບຽບກົດໝາຍ;
- ກວດກາປະລິມານຂອງວຽກງານ ແລະ ການຊົມໃຊ້ ;
- ປ້ອງກັນປະເທດຊາດ, ປົບປຸງມິດຕະພາບ ແລະ ການຮ່ວມມື ກັບບັນດາປະເທດສັງຄົມນິຍົມອື່ນໆ.

ຜະເດັດການກຳມາຊີບ ໃນຖານະເປັນຮູບການໜຶ່ງຂອງອຳນາດຂອງຊາວຜູ້ອອກແຮງງານນັ້ນ ແມ່ນລະບົບອັນໜຶ່ງຂອງອົງການຈັດຕັ້ງ ແຫ່ງລັດ ແລະ ມະຫາຊົນ. ຢູ່ໃນນັ້ນລວມມີ: ພັກມາກ-ເລນິນ, ຊາວໜຸ່ມ ກົມໂຊໂມນ, ກຳມະບານ, ສະຫະກອນ, ສຳນັກງານສົ່ງເສີມວັດທະນະທຳ,ອົງການຈັດຕັ້ງເຕັກນິກ-ວິທະຍາສາດ, ອົງການຈັດຕັ້ງອື່ນໆ ແລະ ສະມາຄົມອາສາສະໝັກ. ລະບົບການຈັດຕັ້ງທາງການເມືອງອັນນີ້ ຍັງເປັນ ລະບົບປະຊາທິປະໄຕສັງຄົມນິຍົມ ຢູ່ໃນເງື່ອນໄຂຂອງຜະເດັດການກຳມາຊີບແລະເປັນລະບົບປະຊາທິປະໄຕກຳມາຊີບ.

ທາດແທ້ທາງດ້ານຊົນຊັ້ນອັນໃໝ່ທີ່ມີລັກສະນະຫລັກການ ຂອງຜະເດັດການກຳມາຊີບນັ້ນ ໄດ້ເຮັດໃຫ້ມັນມີປະຊາທິປະໄຕກວ້າງຂວາງກວ່າພູກ ໆ ລະບົບການເມືອງຂອງນາຍທຶນຢ່າງຂາດອັ່ນ. ໜ້າທີ່ຜະເດັດການຂອງລັດໃໝ່ນີ້ ແມ່ນໃຊ້ຕ້ານພວກຂູດຣີດ ເຊິ່ງເປັນຄົນຈຳນວນໜ້ອຍເທົ່ານັ້ນ,ແຕ່ອຳນາດໃໝ່ ຊໍ້າພັດ ໃຫ້ສິດປະຊາທິປະໄຕແກ່ປະຊາຊົນ ທີ່ເປັນຄົນ ສ່ວນໃຫຍ່ຂອງປະເທດ. ປະຊາທິປະໄຕໃດໆ ກໍ່ຕາມ ຂອງນາຍທຶນນັ້ນ ເປັນຮູບການຜະເດັດການຂອງນາຍທຶນ ເຊິ່ງແນໃສ່ຕ້ານຊາວຜູ້ອອກແຮງງານທີ່ເປັນຄົນສ່ວນໃຫຍ່, ເພາະສະນັ້ນ ປະຊາທິປະໄຕນາຍທຶນ ຈຶ່ງ ເປັນພຽງປະຊາທິປະໄຕ ທາງຮູບການຊື່ໆ. ຜະເດັດການຂອງຊົນຊັ້ນກຳມາຊີບໃນຖານະເປັນອຳນາດຂອງຄົນສ່ວນໃຫຍ່, ເປັນອຳນາດຂອງຊາວຜູ້ອອກແຮງງານ, ໝາຍຄວາມວ່າ ເປັນຂອງປະຊາຊົນ ສະນັ້ນມັນຈຶ່ງມີປະຊາທິປະໄຕອັນແທ້ຈິງ.

ການເຂົ້າໃຈ ກ່ຽວກັບ ການພົວພັນກັນ ລະຫວ່າງຜະເດັດການ ແລະປະຊາທິປະໄຕຢ່າງຖືກຕ້ອງນັ້ນ ມີຄວາມໝາຍອັນສຳຄັນສຳລັບການເຂົ້າ-

ໃຈເຖິງເນື້ອໃນຂອງສະໄໝອ້ານຜ່ານແຕ່ທຶນນິຍົມ ໄປສູ່ສັງຄົມນິຍົມ.ບາງ ຄັ້ງຄາວ ກໍຍັງມີຄວາມສຳນຶກທີ່ວ່າ ຄວາມຮຸນແຮງ ແລະ ການປາບປາມ ນັ້ນບໍ່ມີຫຍັງລວມກັບປະຊາທິປະໄຕ,ຄວາມສຳນຶກດັ່ງກ່າວແມ່ນມາຈາກຄວາມ ເຂົ້າໃຈຜິດກ່ຽວກັບປະຊາທິປະໄຕທີ່ເປັນຜົນມາຈາກການໂຄສະນາຂອງນາຍ ທຶນ. ໃນຕົວຈິງແລ້ວ ການໃຊ້ຄວາມຮຸນແຮງຂອງປະຊາຊົນ ຕໍ່ພວກຂູດຮີດ ນັ້ນເອງ ເປັນການສະແດງອອກຂອງປະຊາທິປະໄຕທີ່ເປັນອຳນາດ ອັນແທ້ ຈິງຂອງປະຊາຊົນ.

ທາງດ້ານທາດແທ້ຂອງພະເດັດການກຳມາຊີບ ແລະພາລະໜ້າທີ່ຂອງ ມັນນັ້ນ ແມ່ນເປັນອັນໜຶ່ງອັນດຽວກັນແຕ່ວ່າມັນປະກົດອອກຢູ່ໃນຮູບການ ທີ່ ແຕກຕ່າງກັນ, ເຊິ່ງຂຶ້ນກັບລັກສະນະພິເສດຂອງແຕ່ລະປະເທດ.ພວກເຮົາ ສາມາດຈຳແນກຮູບການຂອງພະເດັດການຊົນຊັ້ນກຳມະກອນອອກໄດ້ ດັ່ງຕໍ່ ໄປນີ້:

- ກອມມູນ ປາຣີ;
- ຮູບການສະພາໂຊວຽດ ;
- ຮູບການປະຊາທິປະໄຕປະຊາຊົນ.

<u>ກອມມູນປາຣີ</u> ( ໑໘ ມີນາ -໑໘ ພຶດສະພາ ປີ ໑໘໗໑ ຢູ່ຝະລັ່ງ ) ໄດ້ທັບມ້າງກົງຈັກແຫ່ງລັດເກົ່າ, ລົບລ້າງກອງທະຫານ, ຕຳຫລວດ, ສາ ລະວັດ ແລະ ສານເກົ່າ ແລະ ສ້າງຕັ້ງອົງການອຳນາດໃໝ່ຂຶ້ນ ເຊິ່ງໄດ້ ລວມເອົາໜ້າທີ່ ນິຕິບັນຍັດ ແລະ ບໍລິຫານເຂົ້າກັນ. ກອມມູນໄດ້ລົບລ້າງ ອະພິສິດຂອງຜູ້ມີຖານະຕຳແໜ່ງ. ລັດຖະກອນໄດ້ຮັບເງິນເດືອນເທົ່າທຽມ ກັນກັບເງິນເດືອນຂອງກຳມະກອນ. ອຳນາດປະຊາທິປະໄຕເປັນຂອງປະ- ຊາຊົນຜູ້ປະກອບອາວຸດໂດຍກົງ, ນັ້ນແມ່ນຈຸດພິເສດອັນໜຶ່ງ ຂອງກອມມູນ ປາຣີ. ຢູ່ໃນກອມມູນ ປາຣີ ບໍ່ມີຕຳຫລວດ, ທະຫານຫລວງ, ໜ້າທີ່ເຫຼົ່າ ນີ້ແມ່ນປະຊາຊົນເອງ ເປັນຜູ້ຮັບຜິດຊອບ.

ສ່ວນຢູ່ໃນສະຫະພາບໂຊວຽດ, ຮູບການຂອງພະເດັດການ ກຳມາຊີບ ແມ່ນມີລັກສະນະແບບອື່ນນັ້ນຄື ຮູບການ<u>ສະພາໂຊວຽດ.</u> ຈຸດພິເສດຂອງຮູບ ການສະພາໂຊວຽດແຫ່ງພະເດັດການກຳມາຊີບມີດັ່ງຕໍ່ໄປນີ້:ປະການທີໜຶ່ງ, ການກໍ່ຕັ້ງຂອງມັນແມ່ນພົວພັນກັບການລົບລ້າງສະຖາບັນແຫ່ງລັດ ແລະ ສັງ

ຄົມທັງໝົດຂອງລະບອບນາຍທຶນຢ່າງສິ້ນເຊີງ; ປະການທີສອງ, ບັນດາຕົວແທນຂອງຊົນຊັ້ນປົກຄອງ ໄດ້ຖືກຕັດສິດໃນການເລືອກຕັ້ງ; ປະການທີສາມ ໄດ້ມີຜູ້ຕາງໜ້າຂອງຊົນຊັ້ນກຳມະກອນ ແລະ ຊາວນາໃນຈຳນວນ ບໍ່ເທົ່າກັນຢູ່ໃນບັນດາອົງການຈັດຕັ້ງຂອງອຳນາດ; ປະການທີສີ່, ລະບົບພະເດັດການກຳມາຊີບແບບສະພາໂຊວຽດແມ່ນລະບົບທີ່ມີພັກການເມືອງພັກດຽວ.

ຈຸດພິເສດເຫລົ່ານີ້ ໄດ້ເກີດມາຈາກການຕໍ່ສູ້ຊົນຊັ້ນຢ່າງຮຸນແຮງ ແລະ ການຕ້ານຄືນຂອງຊົນຊັ້ນຂູດຮີດຢ່າງປ່ວງບ້າ.

ຮູບການປະຊາທິປະໄຕປະຊາຊົນຂອງພະເດັດການກຳມາຊີບ ໄດ້ເປັນຮູບເປັນຮ່າງຢູ່ໃນເງື່ອນໄຂປະຫວັດສາດອັນໃໝ່, ຫລັງຈາກການ ພ່າຍແພ້ລັດທິ ຟາຊິດ ຢູ່ໃນສົງຄາມໂລກຄັ້ງທີສອງ ( ປີ ໑໙໓໙-໑໙໔໕ ) ໃນເວລາທີ່ການຊົ່ງຊາກຳລັງທາງຊົນຊັ້ນ-ສັງຄົມໃນໂລກກໍ່ປ່ຽນແປງໂດຍເປັນຜົນດີແກ່ສັງຄົມນິຍົມຢ່າງກະທັນຫັນ. ຍ້ອນສາຍເຫດເຫລົ່ານີ້, ນັບຕັ້ງແຕ່ເບື້ອງຕົ້ນພຸ້ນ ອຳນາດຂອງຊົນຊັ້ນກຳມາຊີບຢູ່ໃນບັນດາປະເທດປະຊາທິປະໄຕປະຊາຊົນ ບໍ່ພຽງແຕ່ສາມາດອີງໃສ່ພັນທະພາບຂອງຊົນຊັ້ນ ກຳມະກອນກັບຊາວນາຜູ້ທຸກຈົນເທົ່ານັ້ນ, ແຕ່ກໍ່ຍັງສາມາດອີງໃສ່ພັນທະພາບກັບ ຊາວນາກາງນຳອີກ. ສະນັ້ນລະດັບການຕ້ານຄືນ ຕໍ່ການດັດສ້າງແບບສັງຄົມນິຍົມຂອງນາຍທຶນແຫ່ງຊາດ ຢູ່ໃນບັນດາປະເທດເຫລົ່ານັ້ນຈຶ່ງມີໜ້ອຍກວ່າ. ບັນດາປະເທດປະຊາທິປະໄຕປະຊາຊົນນັ້ນ ມີພື້ນຖານທາງສັງຄົມຂອງ ອຳນາດໃໝ່ຢ່າງກວ້າງຂວາງ ແລະ ມີສີສັນ ຫລາຍອັນ ໂດຍສະເພາະແລ້ວມັນປະກົດຕົວອອກ ຢູ່ໃນການກຳເນີດອົງການຈັດຕັ້ງການເມືອງອື່ນ ຄື: ແນວໂຮມປະຊາຊົນ, ແນວໂຮມປະເທດຊາດ ແລະ ແນວໂຮມແຫ່ງຊາດ. ຢູ່ໃນບາງປະເທດອົງການຈັດຕັ້ງເຫລົ່ານີ້ ໄດ້ເຕົ້າໂຮມເອົາພັກການເມືອງຈຳນວນໜຶ່ງທີ່ຍຶດໝັ້ນຢູ່ບົນພື້ນຖານ ແຫ່ງລັດທິສັງຄົມນິຍົມ, ຢູ່ໃນປະເທດອື່ນອີກ ແມ່ນໄດ້ເຕົ້າໂຮມເອົາອົງການຈັດຕັ້ງການເມືອງຕ່າງໆຢູ່ໃນເງື່ອນໄຂຂອງລະບົບພັກດຽວ. ຢູ່ໃນປະເທດປະຊາທິປະໄຕປະຊາຊົນນັ້ນຕົວແທນຂອງອະດີດຊົນຊັ້ນປົກຄອງ ບໍ່ໄດ້ຖືກຕັດສິດໃນການເລືອກຕັ້ງ. ຈຸດພິເສດໜຶ່ງອີກກໍ່ຄືຢູ່ໃນບາງປະເທດເຫລົ່ານີ້ ແມ່ນມີການໝູນໃຊ້ຮູບການ ຈັດຕັ້ງແຫ່ງລັດບາງຢ່າງ ທີ່ມີຢູ່ກ່ອນການປະຕິວັດນັ້ນ ໂດຍມີການປ່ຽນແປງ ເນື້ອ

ໃນຂອງມັນຢ່າງເລິກເຊິ່ງ.

ສະໄໝຂ້າມຜ່ານ ເຊິ່ງເລີ່ມຕົ້ນດ້ວຍການປະຕິວັດສັງຄົມນິຍົມແມ່ນຈະສິ້ນສຸດລົງດ້ວຍການກໍ່ສ້າງສັງຄົມນິຍົມ. ຖັດຈາກເວລານັ້ນໄປກໍເລີ່ມຕົ້ນໄລຍະໃໝ່ທີ່ສູງກວ່າ ໃນການຂະຫຍາຍຕົວຂອງລະບອບກອມມູນິດ ແລະເປົ້າໝາຍຂອງມັນ ກໍໄດ້ຮັບການປະຕິບັດໃຫ້ເປັນຈິງບໍລິບູນກວ່າ. ຄັນຊັ້ນເນື້ອໃນຂອງຂັ້ນຕອນປະຫວັດສາດອັນນີ້ ຄືຂັ້ນຕອນສັງຄົມນິຍົມທີ່ໄດ້ຮັບໄຊຊະນະແລ້ວນັ້ນ ມີແນວໃດແດ່ ?

24/VII
ຮ້ານຈຳໜ່າຍ

# ບົດທີ ໗. ບັນດາຂັ້ນຕອນຢູ່ໃນການຂະຫຍາຍຕົວ ຂອງລະບອບສັງຄົມນິຍົມ

## ການກໍ່ສ້າງພື້ນຖານຂອງລະບອບສັງຄົມນິຍົມ

ລະບອບສັງຄົມນິຍົມ ແມ່ນຂັ້ນຕອນທຳອິດຂອງລະບອບກອມມູນິດ. ຄືດັ່ງທີ່ໄດ້ເວົ້າມາຢູ່ໃນບົດກ່ອນນັ້ນ ລະບອບສັງຄົມນິຍົມ ແຕກຕ່າງທາງ ຄຸນນະພາບກັບສະໄໝອ້ານຜ່ານແຕ່ທຶນນິຍົມ ໄປສູ່ສັງຄົມນິຍົມ ໃນດ້ານ ລະບອບເສດຖະກິດ, ໂຄງປະກອບທາງສັງຄົມ, ລະບົບການເມືອງ ແລະຊີວິດຈິດໃຈຂອງສັງຄົມ. ພາຍໃຕ້ລະບອບສັງຄົມນິຍົມນີ້ ກຳມະສິດເອກະຊົນ ທຸກຢ່າງຖືກລົບລ້າງ. ບັນດາໂຮງຈັກໂຮງງານ, ທາງລົດໄຟ, ສະຖານີໄຟຟ້າ, ທີ່ດິນ, ວິສາຫະກິດການຄ້າ ແລະ ກະສິກຳແມ່ນກາຍເປັນຊັບສົມບັດຂອງປະຊາຊົນ. ກຳມະສິດສ່ວນລວມຕໍ່ພາຫະນະການຜະລິດ ແມ່ນມີ ສອງຮູບການຄື: ກຳມະສິດແຫ່ງລັດ ແລະ ກຳມະສິດແຫ່ງສະຫະກອນ.

ຍ້ອນການລົບລ້າງຊົນຊັ້ນຂູດຮີດ ແລະ ການນຳເອົາຊາວນາແລະຊ່າງຫັດຖະກຳເຂົ້າໃນສະຫະກອນລວມໝູ່ນັ້ນ, ສັງຄົມ ສັງຄົມນິຍົມ ໄດ້ກາຍເປັນສັງຄົມທີ່ບໍ່ມີຄວາມເປັນປໍລະປັກກັນທາງດ້ານໂຄງປະກອບທາງ ຊົນຊັ້ນ-ສັງຄົມຂອງມັນເອງ. ສັງຄົມ ສັງຄົມນິຍົມນັ້ນປະກອບດ້ວຍຊົນຊັ້ນ ກຳມະກອນ, ຊາວນາລວມໝູ່ ແລະ ປັນຍາຊົນ ເຊິ່ງຖືກກຳເນີດມາຈາກຊັ້ນຄົນຜູ້ອອກແຮງງານ.

ລັດ ຈະກາຍເປັນອົງການຈັດຕັ້ງການເມືອງຂອງປວງຊົນ ເຊິ່ງສະແດງເຖິງເຈດຈຳນົງ ແລະ ຜົນປະໂຫຍດຂອງສະມາຊິກທັງໝົດຢູ່ໃນສັງຄົມ ທີ່ລ້ວນແຕ່ປະກອບດ້ວຍຊາວຜູ້ອອກແຮງງານທັງນັ້ນ. ລະດັບວັດທະນະທຳແລະການສຶກສາຂອງປະຊາຊົນທັງໝົດ ຈະຖືກຍົກສູງ. ຢູ່ໃນສັງຄົມນັ້ນ ວັດທະນະທຳແບບໃໝ່ສັງຄົມນິຍົມ ກໍ່ຖືກເສີມສ້າງໃຫ້ໜັກແໜ້ນ, ໂລກະທັດວັດ

ຖູນິຍົມແບບວິທະຍາສາດ ກໍເປັນສິ່ງທີ່ຮັບຮູ້ກັນໂດຍທົ່ວໄປ.

ຢູ່ໃນສັງຄົມສັງຄົມນິຍົມນັ້ນ, ບຸກຄົນໃໝ່ສັງຄົມນິຍົມກໍຈະປະກົດຂຶ້ນແລະໄດ້ຮັບການຂະຫຍາຍຕົວ, ແບບແຜນດຳລົງຊີວິດແບບສັງຄົມນິຍົມ ທີ່ແຕກຕ່າງກັບແບບທຶນນິຍົມນັ້ນກໍຈະເປັນຮູບເປັນຮ່າງຂຶ້ນ. ຢູ່ໃນສັງຄົມທີ່ຖືກສ້າງຂຶ້ນບົນຫລັກການແຫ່ງຄວາມມີມະນຸດສະທຳນີ້ ແນວຄິດສູຂະທິດນິຍົມ, ລັດທິສາກົນນິຍົມ ແລະ ລວມໝູ່ແມ່ນນັບມື້ນັບໜັກແໜ້ນກວ່າເກົ່າ.

ສັງຄົມນິຍົມ ເປັນສັງຄົມຂອງຊາວຜູ້ອອກແຮງງານ. ພົນລະເມືອງແຕ່ລະຄົນ ທີ່ມີຄວາມສາມາດອອກແຮງງານໄດ້ ແມ່ນມີໜ້າທີ່ເຮັດວຽກ ງານຢ່າງຊື່ສັດສຸດຈະຫລິດຕາມຄວາມອາດສາມາດຂອງຕົນ. ການອອກແຮງ - ງານຂອງແຕ່ລະຄົນ ຈະຖືກຕອບແທນຕາມປະລິມານ ແລະ ຄຸນນະພາບຂອງງານ, ຕາມຄວາມຮູ້ ແລະ ຄວາມຊຳນານທີ່ຜູ້ກ່ຽວອຸທິດໃຫ້. ຫລັກການພື້ນຖານຂອງສັງຄົມນິຍົມແມ່ນ "ແຕ່ລະຄົນເຮັດຕາມຄວາມສາມາດ ແລະ ຊົມໃຊ້ຕາມແຮງງານ". ບາງເທື່ອນັ້ນ ເພື່ອອະທິບາຍເຖິງຫລັກການ ອັນນີ້ເພີ່ນຍັງນຳໃຊ້ຕຳລາທີ່ວ່າ "ໃຜບໍ່ເຮັດວຽກ ຜູ້ນັ້ນບໍ່ໄດ້ກິນ". ສັງຄົມ ສັງຄົມນິຍົມມີການຊຸກຍູ້ທາງດ້ານວັດຖຸ ແລະ ທາງດ້ານກຳລັງໃຈຕໍ່ແຮງງານທີ່ມີຄຸນນະພາບ ແລະ ປະສິດທິຜົນຂອງແຕ່ລະຄົນ. ຈາກນັ້ນ ການກວດກາຢ່າງເຂັ້ມງວດຕໍ່ປະລິມານການອອກແຮງງານ ແລະ ການຊົມໃຊ້, ການຕໍ່ສູ້ເພື່ອໃຫ້ມີລະບຽບວິໄນ ແລະ ການຈັດຕັ້ງອັນສູງກວ່າ ເຊິ່ງດຳເນີນຢູ່ໃນລະບອບສັງຄົມນິຍົມນັ້ນ ແມ່ນມີຄວາມສຳຄັນຢ່າງເດັ່ນຊັດ.

ເມື່ອປຽບທຽບໃສ່ບັນດາລະບົບຂູດຮີດແລ້ວ, ລະບອບສັງຄົມນິຍົມມີຈຸດພິເສດອັນສຳຄັນຢູ່ບ່ອນວ່າ ມັນມີການປ່ຽນແປງຢ່າງວ່ອງໄວ ແລະ ຢ່າງມີຄຸນນະພາບຢູ່ໃນຂົງເຂດເສດຖະກິດ, ວັດທະນະທຳ ແລະ ແບບແຜນ ດຳລົງຊີວິດ. ເປົ້າໝາຍຂອງມັນມີແນວໃດ ? ພາຍໃຕ້ລະບອບສັງຄົມນິຍົມ-ນັ້ນ, ເປົ້າໝາຍສຸດທ້າຍຂອງການດັດສ້າງທັງໝົດ ທີ່ຖືກດຳເນີນໄປ ກໍແມ່ນເພື່ອຍົກສູງຄວາມຢູ່ດີກິນດີຂອງປະຊາຊົນ, ສ້າງເງື່ອນໄຂດີທີ່ສຸດ ສຳລັບການຂະຫຍາຍຕົວຮອບດ້ານຂອງແຕ່ລະຄົນ, ເພາະສະນັ້ນ ຊາວຜູ້ອອກແຮງງານຈຶ່ງມີຄວາມສົນອົກສົນໃຈນຳການດັດສ້າງເຫລົ່ານີ້, ເຂົາເຈົ້າສາມາດຊ່ວຍເລັ່ງລັດຈັງຫວະຂະຫຍາຍຕົວຂອງສັງຄົມໃຫ້ໄວຂຶ້ນ ໂດຍການປະ

ກອບສ່ວນຢ່າງມີສະຕິ ແລະ ຂະຫຍັນອັນແຂງ ເຂົ້າໃນການດັດສ້າງ ດັ່ງກ່າວ.

ສັງຄົມນິຍົມ ແມ່ນເປັນລະບົບສັງຄົມ ທີ່ມີລັກສະນະ ກາວຂະຫຍາຍ. ວ.ອີ.ເລນິນ ໄດ້ຂຽນວ່າ "ມີແຕ່ຢູ່ໃນລະບອບສັງຄົມນິຍົມເທົ່ານັ້ນ ທີ່ທຸກໆຂົງເຂດຂອງຊີວິດສັງຄົມ ແລະ ສ່ວນບຸກຄົນ ເລີ່ມມີຄວາມຄືບໜ້າຢ່າງ ວ່ອງໄວ, ຢ່າງກວ້າງຂວາງ ແລະ ຢ່າງແທ້ຈິງ, ຢູ່ໃນການຄືບໜ້າ ດັ່ງກ່າວເບື້ອງຕົ້ນແມ່ນມີປະຊາຊົນສ່ວນໃຫຍ່ ເຂົ້າຮ່ວມ, ຕໍ່ຈາກນັ້ນ ກໍມີການເຂົ້າຮ່ວມຂອງປະຊາຊົນທັງໝົດ" [1]. ຫລັງຈາກທີ່ພື້ນຖານສັງຄົມນິຍົມໄດ້ຖືກສ້າງຕັ້ງຂຶ້ນແລ້ວ, ລະບອບສັງຄົມນິຍົມຈະໄດ້ຮັບການຂະຫຍາຍອອກ ທາງລວງກວ້າງ ແລະ ລວງເລິກ, ຂະບວນວິວັດແຫ່ງການບູລະນະສັງຄົມ ສັງຄົມນິຍົມ ກໍຈະດຳເນີນໄປຕາມຂັ້ນຕອນ ຂອງມັນເອງ.

## ການບູລະນະລະບອບສັງຄົມນິຍົມ

ລະດັບຄວາມສຸກງອມຂອງລະບອບສັງຄົມນິຍົມນັ້ນ ໃນທີ່ສຸດແມ່ນຖືກກຳນົດດ້ວຍການຍົກລະດັບຄວາມຢູ່ດີກິນດີຕົວຈິງຂອງຊາວຜູ້ອອກແຮງງານ ໃຫ້ສູງຂຶ້ນ ແລະ ດ້ວຍຄວາມຈິງທີ່ວ່າ ການຂະຫຍາຍຕົວຢ່າງຮອບດ້ານ ຂອງສະມາຊິກທັງໝົດໃນສັງຄົມ ໄດ້ຖືກປະຕິບັດໃຫ້ປະກົດເປັນຈິງຄືແນວໃດ . ການຮັບປະກັນໃຫ້ມີລະດັບຊີວິດການເປັນຢູ່ສູງ ແລະ ໃຫ້ມີການຂະຫຍາຍຕົວຢ່າງຮອບດ້ານຂອງແຕ່ລະຄົນນັ້ນ ແມ່ນສາມາດເຮັດໄດ້ພຽງແຕ່ຢູ່ບົນພື້ນຖານເງື່ອນໄຂອັນຈຳເປັນຕ່າງໆຄື: ເງື່ອນໄຂທາງດ້ານ ວັດຖຸ-ເຕັກນິກ, ເສດຖະກິດ, ການເມືອງ-ສັງຄົມ ແລະ ເງື່ອນໄຂທາງດ້ານຈິດໃຈ.ເປັນເລື່ອງແຈ່ມແຈ້ງແລ້ວວ່າ ການທີ່ຈະສ້າງເງື່ອນໄຂ ເຫລົ່ານີ້ຂຶ້ນນັ້ນ ແມ່ນບໍ່

---

[1] ວ.ອີ.ເລນິນ. ບົດນິພົນຄົບຊຸດ, ເຫລັ້ມທີ ໓໓, ໜ້າ ໙໙-໑໐໐.

ສາມາດເປັນໄປໄດ້ໃນທັນທີທັນໃດ. ເພື່ອຢາກເຮັດໃຫ້ໄດ້ຄືແນວນັ້ນຕ້ອງການເວລາ ແລະ ການອອກແຮງງານຢ່າງມີສະຕິ ແລະ ຊື່ສັດສຸດຈະຫລິດຂອງສະມາຊິກທັງໝົດຢູ່ໃນສັງຄົມ.

ຈາກການຫັນປ່ຽນເອົາພາຫະນະການຜະລິດມາເປັນຊັບສົມບັດຂອງປະຊາຊົນທັງໝົດນັ້ນ, ຈຶ່ງພາໃຫ້ເກີດມີຄວາມອາດສາມາດເປັນເທື່ອທຳອິດຢູ່ໃນປະຫວັດສາດ ທີ່ຈະພັດທະນາອຸດສາຫະກຳ, ກະສິກຳ, ການຄົມມະນາຄົມຂົນສົ່ງ, ພັດທະນາຂົງເຂດບໍລິການ ແລະ ອື່ນໆຕາມແຜນການ ເອກະພາບທີ່ສອດຄ່ອງກັບຜົນປະໂຫຍດ ແລະ ຄວາມຕ້ອງການຂອງມະຫາຊົນ ຜູ້ອອກແຮງງານ. ໃນເງື່ອນໄຂຂອງລະບອບສັງຄົມນິຍົມນັ້ນ ຜົນສຳເລັດທັງໝົດຂອງຄວາມກ້າວໜ້າແມ່ນເລັງໃສ່ເພື່ອສືບຕໍ່ພັດທະນາ ທຸກໆຂົງເຂດຂອງຊີວິດສັງຄົມ, ສຳລັບການສ້າງຕັ້ງພື້ນຖານວັດຖຸ ແລະ ຈິດໃຈອັນໝັ້ນທ່ຽງ ເພື່ອສືບຕໍ່ຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງສະມາຊິກທັງໝົດຢູ່ໃນສັງຄົມ, ເພື່ອທະວີຄວາມສົມບູນພູນສຸກຂອງເຂົາເຈົ້າ.

ພາຍໃຕ້ລະບອບທຶນນິຍົມນັ້ນ, ການຜະລິດຂອງສັງຄົມ ແມ່ນຂຶ້ນຢູ່ກັບເຈດຈຳນົງ ແລະ ຜົນປະໂຫຍດຂອງນາຍທຶນ. ໂຮງຈັກໂຮງງານ ຫລາຍແຫ່ງຈົນກະທັ້ງຂະແໜງການຜະລິດທັງໝົດຈະຖືກອັດ ຖ້າວ່າມັນບໍ່ນຳເອົາກຳໄລອັນຈຳເປັນມາໃຫ້ຜູ້ເປັນເຈົ້າຂອງ, ສິ່ງດັ່ງກ່າວນັ້ນ ເປັນສາຍເຫດທີ່ພາໃຫ້ຊາວຜູ້ອອກແຮງງານຫວ່າງງານ. ຜົນປະໂຫຍດຂອງນາຍທຶນໝາຍເຖິງເຄາະຮ້າຍສຳລັບມະຫາຊົນຜູ້ອອກແຮງງານ. ເພາະສະນັ້ນຈາກການຫັນເອົາພາຫະນະການຜະລິດມາເປັນກຳມະສິດຂອງປະຊາຊົນທັງໝົດນັ້ນ, ການດັດສ້າງຢູ່ໃນການຜະລິດສັງຄົມ ຈຶ່ງເປັນຄວາມຈຳເປັນທາງສັງຄົມອັນດັບໜຶ່ງ. ໂດຍສະເພາະແລ້ວ ມັນມີຄວາມສຳຄັນສຳລັບບັນດາປະເທດທີ່ມີລະດັບການຂະຫຍາຍຕົວທາງດ້ານກຳລັງການຜະລິດບໍ່ສູງ ແລະເຊິ່ງໃນໄລຍະເວລາອັນດົນນານປະເທດຕ່າງໆດັ່ງກ່າວ ໄດ້ເປັນຜູ້ເຮັດໜ້າທີ່ ສະໜອງວັດຖຸດິບ ແລະ ຜົນຜະລິດກະສິກຳໃຫ້ລັດນາຍທຶນຂະຫຍາຍຕົວ. ຢູ່ໃນບັນດາປະເທດທີ່ມີລະດັບຂະຫຍາຍຕົວບໍ່ສູງນັ້ນ ເສດຖະກິດໄດ້ຮັບການຂະຫຍາຍຕົວແບບດ້ານດຽວ, ເພາະສະນັ້ນ ຢູ່ໃນຂະບວນວິວັດ ແຫ່ງການດັດສ້າງແບບສັງຄົມນິຍົມ ຈຶ່ງເກີດມີຄວາມຈຳເປັນຕ້ອງມີການກໍ່ສ້າງຂະແໜງ

ການອຸດສາຫະກຳໃໝ່, ຂະຫຍາຍກະສິກຳ, ການຂົນສົ່ງ, ກໍ່ສ້າງ ເສັ້ນທາງລົດ ແລະ ທາງລົດໄຟ, ການຕິດຕັ້ງໄຟຟ້າ ແລະ ອາຍແກັດ. ການນຳເອົາຊາວຜູ້ອອກແຮງງານຊົນນະບົດເຂົ້າໃນສະຫະກອນ ຈະມີປະສິດທິ-ຜົນສຳລັບເສດຖະກິດ ແລະ ສັງຄົມ ກໍ່ຕໍ່ເມື່ອມີຄົນລວມໝູ່ເຫລົ່ານີ້ ໄດ້ຮັບລົດໄຖ, ລົດກ່ຽວ ແລະ ເຄື່ອງຈັກກະສິກຳອື່ນໆ, ໄດ້ຮັບຝຸ່ນວິທະຍາສາດ ແລະ ອື່ນໆຢ່າງພຽງພໍ; ບັນຫານີ້ຈະຖືກແກ້ໄຂໄດ້ກໍ່ມີແຕ່ບົນພື້ນຖານ ການຫັນເປັນອຸດສາຫະກຳສັງຄົມນິຍົມ, ບົນພື້ນຖານການຂະຫຍາຍອຸດສາຫະກຳໃຫຍ່ ແລະ ກ່ອນອື່ນແມ່ນອຸດສາຫະກຳໜັກຢ່າງມີແຜນການເທົ່ານັ້ນ.

ວ.ອີ.ເລນິນ ໄດ້ເນັ້ນວ່າ: ຖ້າປາສະຈາກ "ເຕັກນິກທີ່ຖືກສ້າງ ຂຶ້ນຕາມຜົນສຳເລັດອັນຫລ້າສຸດຂອງວິທະຍາສາດ, ຖ້າປາສະຈາກການຈັດຕັ້ງຂອງລັດແບບມີແຜນການ ທີ່ເຮັດໃຫ້ຊາວຜູ້ອອກແຮງງານຫລາຍສິບລ້ານຄົນມີມາດຖານເອກະພາບຢ່າງເຂັ້ມງວດຢູ່ໃນວຽກງານຜະລິດ ແລະແຈກຢາຍຜົນຜະລິດແລ້ວ, ສັງຄົມນິຍົມ ຈະບໍ່ສາມາດມີຂຶ້ນໄດ້" ໑).

ພາຍຫລັງການກໍ່ສ້າງພື້ນຖານ ຂອງສັງຄົມນິຍົມແລ້ວ ຈະມີການປ່ຽນແປງ ອັນໃດແດ່ເກີດຂຶ້ນ ຢູ່ໃນຊົນຊັ້ນ ແລະ ຊັ້ນຄົນຂອງສັງຄົມ? ຢູ່ໃນ ບັນດາປະເທດທີ່ມີລະດັບການຜະລິດບໍ່ສູງປານໃດນັ້ນ ຈະເຮັດໃຫ້ຊົນຊັ້ນກຳມະກອນເພີ່ມຂຶ້ນໄວສົມຄວນ ແລະ ຈຳນວນກຳມະກອນທີ່ດຳເນີນການຜະລິດຢູ່ໃນຂະແໜງການອຸດສາຫະກຳ ທີ່ທັນສະໄໝ ຈະນັບມື້ນັບເພີ່ມຂຶ້ນ. ການດຳລົງຊີວິດຂອງຊົນຊັ້ນກຳມະກອນຈະດີຂຶ້ນຄື: ຄວາມຢູ່ດີກິນດີຈະໄດ້ຮັບການຍົກສູງ, ລະດັບວັດທະນະທຳ ແລະ ລະດັບວິຊາສະເພາະເຕັກນິກກໍຈະຂະຫຍາຍຕົວອອກ, ເງື່ອນໄຂບໍລິການ ແລະ ທີ່ພັກພາອາໄສກໍດີຂຶ້ນ.

ຊີວິດ ແລະ ທາດແທ້ທາງສັງຄົມຂອງຊາວນາ ກໍປ່ຽນແປງຢ່າງ ເຖິງກົກເຖິງຮາກ, ການອອກແຮງງານຂອງຊາວນາ ກໍຈະມີລັກສະນະໃໝ່ . ຈາກການອອກແຮງງານທີ່ໜັກໜ່ວງ, ໃຊ້ແຕ່ເຫື່ອແຮງທີ່ດຳເນີນໄປແບບເອກະເທດ ມັນຈະຖືກຫັນປ່ຽນໄປເປັນການອອກແຮງງານທີ່ນຳໃຊ້ ເຄື່ອງຈັກ ແລະ ເປັນການອອກແຮງງານລວມໝູ່. ໂຮງຮຽນ, ໂຮງໝໍ, ຫໍສະ

---

໑) ວ.ອີ.ເລນິນ. ບົດນິພົນຄົບຊຸດ, ເຫລັ້ມທີ ໔໓, ໜ້າ ໔໑໐.

ໝູດ, ສະໂມສອນຈະໄດ້ຖືກສ້າງຂຶ້ນ. ແນວຄິດລວມໝູ່ຈະເຂົ້າແທນບ່ອນຂອງແນວຄິດເອກະເທດ. ຊາວນາເລີ່ມຕົ້ນຊາບຊຶ້ງຜົນປະໂຫຍດສ່ວນລວມຂອງສັງຄົມເທື່ອລະກ້າວ, ຄ່ອຍໆຮັບຮູ້ກ່ຽວກັບຜົນສຳເລດທາງດ້ານວັດທະນະທຳ ແລະ ວິທະຍາສາດ, ໄດ້ຮັບການຍົກລະດັບການສຶກສາໃຫ້ສູງຂຶ້ນກວ່າເກົ່າ.

ປັນຍາຊົນຖືກກຳເນີດມາຈາກຊັ້ນຄົນຜູ້ອອກແຮງງານ ແລະກາຍເປັນປັນຍາຊົນແທ້ຂອງປະຊາຊົນຢ່າງແທ້ຈິງ. ຈຳນວນຂອງເຂົາເຈົ້າ ກໍເພີ່ມຂຶ້ນຢ່າງບໍ່ຢຸດຢັ້ງ. ໜ້າທີ່ອັນສັບສົນທີ່ສັງຄົມສັງຄົມນິຍົມວາງອອກນັ້ນ ບໍ່ສາມາດແກ້ໄຂໄດ້ ຖ້າປາສະຈາກຖັນແຖວນັກວິຊາການຜູ້ມີລະດັບວິຊາສະເພາະສູງຄື: ນັກປາດ, ນັກວິສະວະກອນ, ຄູສອນ, ແພດ ແລະ ອື່ນໆທີ່ຈິງຮັກພັກດີ ຕໍ່ພາລະກິດຂອງປະຊາຊົນ.

ລະບົບການເມືອງຂອງສັງຄົມ ກໍໄດ້ຮັບການປັບປຸງໃຫ້ດີຂຶ້ນ. ດັ່ງໄດ້ເວົ້າມາຢູ່ຂ້າງເທິງນັ້ນ, ລັດຜະເດັດການກຳມາຊີບ ຈະຖືກຫັນໄປເປັນລັດຂອງປວງຊົນ ທີ່ສະແດງອອກເຖິງຜົນປະໂຫຍດຂອງສະມາຊິກທັງໝົດຢູ່ໃນ ສັງຄົມ. ບໍ່ພຽງແຕ່ມີການຍົກສູງບົດບາດຂອງອົງການແຫ່ງອຳນາດ ປະຊາຊົນເທົ່ານັ້ນ, ແຕ່ຍັງໄດ້ຍົກສູງບົດບາດຂອງອົງການຈັດຕັ້ງມະຫາຊົນຕ່າງໆຄື: ກຳມະບານ, ຊາວໜຸ່ມ, ສະມາຄົມປະດິດຄິດສ້າງ ແລະ ອົງການຈັດຕັ້ງອື່ນ ອື່ນດີກັນ. ສິດທິ ແລະ ພັນທະຂອງແຕ່ລະຄົນ ກໍຂະຫຍາຍຕົວກວ້າງອອກ.

ຍ້ອນວ່າ ໜ້າທີ່ຂອງສັງຄົມນັ້ນ ນັບມື້ສັບສົນ ແລະ ໃຫຍ່ໂຕກວ່າເກົ່າ, ສະນັ້ນ ບົດບາດ ແລະ ຄວາມຮັບຜິດຊອບຂອງພັກມາກ-ເລນິນທີ່ເປັນຜູ້ກຳອຳນາດກໍເພີ່ມທະວີຂຶ້ນ. ເປົ້າໝາຍອັນເປັນພື້ນຖານໃນການປັບປຸງ ລະບົບການເມືອງຂອງສັງຄົມນິຍົມ ແມ່ນການດຶງດູດເອົາມວນຊົນຊາວຜູ້ອອກແຮງງານ ເຂົ້າຮ່ວມໃນການຄຸ້ມຄອງວຽກງານຂອງສັງຄົມ ແລະ ຂອງລັດ. ລະບອບສັງຄົມນິຍົມບໍ່ພຽງແຕ່ຈະຖືກສ້າງຂຶ້ນສຳລັບຊາວຜູ້ອອກແຮງງານ ເທົ່ານັ້ນ, ແຕ່ມັນຈະຖືກສ້າງຂຶ້ນໂດຍກະໂຕຊາວຜູ້ອອກແຮງງານເອງ.

ແຕ່ວ່າ ພົນລະເມືອງຜູ້ໜຶ່ງໆ ຈະເຂົ້າຮ່ວມໃນການຄຸ້ມຄອງ ປະເທດໄດ້, ກໍຕໍ່ເມື່ອເປັນຜູ້ມີລະດັບວັດທະນະທຳ ແລະຄວາມຮູ້ອັນແນ່ນອນ. ເພື່ອວ່າຈະກໍ່ສ້າງຊີວິດໃໝ່ຢ່າງມີສະຕິ, ກ່ອນອື່ນໝົດ ຕ້ອງເປັນຜູ້ຮູ້ ໜັງສື

ແລະ ໄດ້ຮັບການສຶກສາ. ຖ້າບໍ່ດັ່ງນັ້ນ ສຳລັບຊາວຜູ້ອອກແຮງງານ ຈະມີຄວາມຫຍຸ້ງຍາກ ໃນການຈຳແນກເຫດການທີ່ເກີດຂຶ້ນ, ໃນການເຂົ້າໃຈຄວາມໝາຍຂອງລະບອບໃໝ່ ແລະ ຄວາມດີເລີດຂອງມັນເໜືອລະບອບທຶນນິຍົມ. ບໍ່ແມ່ນເລື່ອງບັງເອີນເລີຍທີ່ວ່າສັດຕູຂອງສັງຄົມນິຍົມໄດ້ສວຍໃຊ້ຄວາມໂງ່ຈ້າ, ຄວາມກີກໜັງສືຂອງມະຫາຊົນ ແລະ ໝູນໃຊ້ ການຂາດຄວາມຮອບຮູ້ຂອງເຂົາເຈົ້າ ເພື່ອຜົນປະໂຫຍດແບບເຫັນແກ່ຕົວ ແລະເພື່ອຕ້ານສັງຄົມໃໝ່. ຖ້າບໍ່ມີການຂະຫຍາຍຕົວທາງດ້ານຈິດໃຈຂອງມະຫາຊົນແລ້ວ, ສັງຄົມນິຍົມກໍຈະບໍ່ສາມາດມີຂຶ້ນໄດ້. ຖ້າວ່າພາຍຫລັງການປະຕິວັດສັງຄົມນິຍົມແລ້ວ ຄວາມບໍ່ຮູ້ໜັງສືໄດ້ຖືກລຶບລ້າງ ແລະ ໄດ້ມີການນຳເອົາລະບົບການສຶກສາຊັ້ນປະຖົມຂັ້ນບັງຄັບມາປະກາດໃຊ້ໃນທັນທີທັນໃດນັ້ນຍ່ອມໝາຍຄວາມວ່າໃນຂັ້ນຕໍ່ໄປ ຈະສາມາດວາງເປົ້າໝາຍ ທີ່ສູງຂຶ້ນກວ່ານັ້ນໄດ້, ຄືໃຫ້ພົນລະເມືອງແຕ່ລະຄົນໄດ້ຮັບການສຶກສາຊັ້ນມັດທະຍົມ. ພ້ອມກັນນັ້ນກໍຈະຕ້ອງໄດ້ປັບປຸງລະບົບການສຶກສາວິຊາຊີບ ແລະສ້າງຕາໜ່າງໂຮງຮຽນຊັ້ນຕົ້ນ, ຊັ້ນກາງ ແລະ ຊັ້ນສູງຕ່າງໆຂຶ້ນ. ສັງຄົມຈະໄດ້ເຮັດທຸກສິ່ງທຸກຢ່າງເພື່ອໃຫ້ແຕ່ລະຄົນສາມາດມີສ່ວນໃນວິທະຍາສາດ, ວັດທະນະທຳ ແລະ ສິນລະປະກຳ.

ຍ້ອນມີການດັດສ້າງທີ່ກ່າວມາຂ້າງເທິງນັ້ນ ຈຶ່ງພາໃຫ້ເກີດມີຄວາມສາມາດບູລະນະສັງຄົມນິຍົມໄດ້ຢ່າງຮອບດ້ານແລະຢ່າງເຕັມປ່ຽມ. ຜົນທີ່ໄດ້ມາຈາກການບູລະນະດັ່ງກ່າວນັ້ນກໍຄື ສັງຄົມທີ່ມີສະພາບໃໝ່ທາງດ້ານຄຸນນະພາບ, ເປັນສັງຄົມນິຍົມທີ່ສົມບູນຫລືດັ່ງທີ່ ວ.ອີ.ເລນິນ ເວົ້າວ່າ ແມ່ນ "ສັງຄົມນິຍົມອັນຄົບຖ້ວນ" ເຊິ່ງເຜີຍໃຫ້ເຫັນຢ່າງເຕັມປ່ຽມ ເຖິງຄວາມດີເລີດອັນໃຫຍ່ຫລວງຂອງຕົນຢູ່ໃນທຸກໆຂົງເຂດຂອງຊີວິດ. ສັງຄົມ ສັງຄົມນິຍົມທີ່ສົມບູນຈະພັດທະນາຂະຫຍາຍເປັນສັງຄົມກອມມູນິດໂດຍກົງ.

ມວນມະນຸດ ຈະບໍ່ສາມາດຂະຫຍາຍຕົວໄດ້ ຖ້າບໍ່ມີອຸດົມຄະຕິທາງສັງຄົມ. ສັງຄົມນິຍົມທີ່ສົມບູນແມ່ນອຸດົມຄະຕິທາງສັງຄົມ ຊຶ່ງໄດ້ຮັບການພິສູດທາງດ້ານທິດສະດີ ແລະ ຖືກປະຊາຊົນ ບັນດາປະເທດສັງຄົມນິຍົມຈຳນວນຫລວງຫລາຍນຳໄປປະຕິບັດໃຫ້ປະກົດເປັນຈິງ. ສິ່ງນີ້ຢັ້ງຢືນ ໃຫ້ເຫັນວ່າເຖິງແມ່ນມີການຕ້ານຄືນຂອງກຳລັງທີ່ເປັນສັດຕູກໍຕາມ ລະບອບສັງຄົມນິຍົມ

ກໍຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ, ສະແດງໃຫ້ໂລກທັງໝົດ ເຫັນເຖິງຄວາມດີເລີດຂອງຕົນ ເໜືອລະບອບທຶນນິຍົມ, ປະກອບສ່ວນເຮັດໃຫ້ ຊາວຜູ້ອອກແຮງງານຍົກປະສິດທິພາບຂອງການຕໍ່ສູ້ເພື່ອສັງຄົມໃໝ່ໃຫ້ສູງຂຶ້ນກວ່າເກົ່າ, ສັງຄົມ ສັງຄົມນິຍົມນີ້ເປັນລະດັບສຸດຍອດຂອງຄວາມກ້າວໜ້າທາງສັງຄົມ.

ນັກກອມມູນິດ ໄດ້ເວົ້າໃຫ້ໂລກທັງໝົດໄດ້ຍິນຢ່າງຈັດເຈນວ່າ ສັງຄົມນິຍົມອັນເປັນຈິງນັ້ນ ແມ່ນຫຍັງແທ້. ເຂົາເຈົ້າບໍ່ພຽງແຕ່ໄດ້ຊີ້ແຈງໃຫ້ເຫັນເຖິງຜົນສຳເລັດ ແລະ ໄຊຊະນະເທົ່ານັ້ນ ແຕ່ຍັງໄດ້ຊີ້ອອກໃຫ້ເຫັນບັນຫາທີ່ຈະຕ້ອງແກ້ໄຂບົນເສັ້ນທາງໄປສູ່ຂັ້ນຕອນສູງສຸດຂອງສັງຄົມນິຍົມນຳອີກ . ໃນນັ້ນ ອັນສຳຄັນແມ່ນການປະຕິບັດ ໃຫ້ປະກົດເປັນຈິງຢ່າງສົມບູນກວ່າເກົ່າກ່ຽວກັບຫລັກການຕົ້ນຕໍທີ່ມີມະນຸດສະທຳຂອງລະບອບໃໝ່ທີ່ວ່າ: "ທຸກສິ່ງທຸກຢ່າງເພື່ອມະນຸດ, ທຸກສິ່ງທຸກຢ່າງເພື່ອຄວາມສົມບູນພູນສຸກຂອງມະນຸດ" . ການດັດສ້າງທັງໝົດທີ່ດຳເນີນໄປຢູ່ໃນສັງຄົມແມ່ນແນໃສ່ເພື່ອປະຕິບັດຫລັກການດັ່ງກ່າວໃຫ້ປະກົດເປັນຈິງ.

ພວກນັກແນວຄິດນາຍທຶນ ໄດ້ສ້າງເທບນິຍາຍທີ່ວ່າ ທາດແທ້ຂອງທຶນນິຍົມ ຄືຈັ່ງວ່າຄ່ອຍໆມີການປ່ຽນແປງ ແລະ ໄດ້ກັບກາຍເປັນ "ສັງຄົມແຫ່ງຄວາມສົມບູນພູນສຸກທົ່ວໄປ". ຄວາມເປັນຈິງພິສູດໃຫ້ເຫັນວ່າ ລະບອບທຶນນິຍົມບໍ່ມີຄວາມສາມາດທີ່ຈະປົວແປງຊີວິດປະຊາຊົນໃຫ້ດີຂຶ້ນໄດ້ເລີຍ. ຍົກຕົວຢ່າງຢູ່ໃນ "ສັງຄົມແຫ່ງຄວາມສົມບູນພູນສຸກທົ່ວໄປ" ຂອງອາເມລິກາທີ່ໄດ້ຮັບການໂຄສະນາຢ່າງກວ້າງຂວາງນັ້ນ ມີຈຳນວນປະຊາຊົນທີ່ບໍ່ມີທີ່ພັກອາໄສຫລາຍກວ່າ ໓ ລ້ານຄົນ. ພຽງແຕ່ເບິ່ງຕາມສະຖິຕິທາງການເທົ່ານັ້ນກໍໄດ້ຮູ້ວ່າ ຢູ່ສະຫະລັດນັ້ນໃນແຕ່ລະ ໑໓ ຄົນໃດ ທີ່ສາມາດ ອອກແຮງງານໄດ້ແມ່ນມີຜູ້ທີ່ຫວ່າງງານໜຶ່ງຄົນ, ຕາມຂໍ້ມູນຂອງກຳມະບານນັ້ນໃນແຕ່ລະ ໖ ຄົນໃດ ແມ່ນມີຜູ້ບໍ່ມີວຽກເຮັດງານທຳໜຶ່ງຄົນ.

ລະບອບທຶນນິຍົມ ຍັງບໍ່ສາມາດແກ້ໄຂບັນຫາທີ່ສຳຄັນອື່ນໆ ໃນນັ້ນລວມທັງບັນຫາລົບລ້າງຄວາມບໍ່ຮູ້ໜັງສື. ຕາມສະຖິຕິທີ່ລົງພິມ ຢູ່ໃນໜັງສືພິມຂອງຝ່າຍຕາເວັນຕົກນັ້ນ ຢູ່ໃນຈຳນວນພົນລະເມືອງ ໔໗໐ ລ້ານຄົນ ຂອງບັນດາປະເທດຕະຫລາດຮ່ວມເອີລົບນັ້ນ ມີເກືອບ ໔໑ ລ້ານຄົນ ທີ່ກົກໜັງສືຫລືຮູ້ໜ້ອຍດຽວ. ດັ່ງທີ່ຮູ້ກັນດີວ່າ ຢູ່ໃນສະຫະພາບໂຊວຽດ ແລະບັນດາ

ປະເທດສັງຄົມນິຍົມອື່ນໆນັ້ນ ບັນຫານີ້ໄດ້ຖືກແກ້ໄຂແຕ່ດົນແລ້ວ. ພູກວັນນີ້ ໂດຍກ້າວຂຶ້ນສູ່ໄລຍະແຫ່ງການບູລະນະສັງຄົມນິຍົມຢ່າງຮອບດ້ານນັ້ນ, ສັງຄົມໂຊວຽດກໍກ້າວໄປໄກກວ່າເກົ່າອີກ. ດຽວນີ້ບັນຫາແມ່ນຢູ່ບ່ອນວ່າ ເຮັດແນວໃດເພື່ອກ້າວໄປສູ່ການບັນລຸເຖິງ "ຄວາມຢູ່ດີກິນດີຢ່າງສົມບູນ, ເຮັດໃຫ້ສະມາຊິກທັງໝົດຂອງສັງຄົມຂະຫຍາຍຕົວຢ່າງຮອບດ້ານ ແລະ ຢ່າງມີອິດສະຫລະ" ໑).

ໂດຍການບຸກບືນຮ່ວມກັນຂອງບັນດາພັກກອມມູນິດປະເທດສັງຄົມນິຍົມນັ້ນ, ທິດສະດີແຫ່ງການບູລະນະສັງຄົມນິຍົມຢ່າງຮອບດ້ານ ກໍໄດ້ຖືກ ສ້າງຂຶ້ນ. ດ້ານໜຶ່ງນັ້ນ, ທິດສະດີນີ້ແມ່ນອີງໃສ່ພຶດຕິກຳຕົວຈິງ ແລະເປັນຜູ້ສັງລວມພຶດຕິກຳຕົວຈິງນັ້ນ, ດ້ານໜຶ່ງອີກທິດສະດີດັ່ງກ່າວແມ່ນເປັນຄື ໂຄງການດຳເນີນງານ. ໃນຖານະເປັນໂຄງການດຳເນີນງານຂອງສັງຄົມນັ້ນ, ທິດສະດີດັ່ງກ່າວ ບໍ່ພຽງແຕ່ໄດ້ລະບຸຈຸດປະສົງສະເພາະໜ້າ ແລະ ຍາວນານໄວ້ເທົ່ານັ້ນ ແຕ່ຫາກຍັງກຳນົດເສັ້ນທາງ ແລະ ພາຫະນະທີ່ຊ່ວຍ ໃຫ້ບັນລຸເຖິງຈຸດປະສົງເຫລົ່ານັ້ນອີກດ້ວຍ. ຄັ່ງທີ່ຊີ້ແຈງໄວ້ຢູ່ໃນ ເອກະສານຂອງ ພກສຊ ນັ້ນ ໜຶ່ງໃນຈຳນວນຈຸດປະສົງດັ່ງກ່າວກໍແມ່ນ ການເລັ່ງລັດພັດທະນາເສດຖະກິດ–ສັງຄົມຂອງປະເທດ. ຈຸດພິເສດ ຂອງການເລັ່ງລັດພັດທະນາດັ່ງກ່າວ ແມ່ນຢູ່ບ່ອນໃດ, ບັນຫາຕົວຈິງທີ່ນັ້ນແກ້ໄຂມີອັນໃດແດ່, ພວກເຮົາຂໍໃຫ້ຄຳຕອບຕໍ່ຄຳຖາມດັ່ງກ່າວດັ່ງຕໍ່ລົງໄປນີ້.

## ການເລັ່ງລັດພັດທະນາເສດຖະກິດ–ສັງຄົມ ແມ່ນເສັ້ນທາງແຫ່ງການບູລະນະ ລະບອບ ສັງຄົມນິຍົມ

ຖ້າທຽບໃສ່ລະບອບທຶນນິຍົມແລ້ວ ລະບອບສັງຄົມນິຍົມ ມີຈັງຫວະ ຂະ

---

໑) ວ.ອີ.ເລນິນ. ບົດນິພົນຄົບຊຸດ, ເຫລັ້ມທີ ໖, ໜ້າ ໔໗໔.

ຂະຫຍາຍຕົວໄວກວ່າ. ຈຸດພິເສດອັນນີ້ຂອງສັງຄົມໃໝ່ ກໍເລີ່ມປະກົດຕົວຂຶ້ນນັບຕັ້ງແຕ່ຂັ້ນຕອນທຳອິດຂອງການຂະຫຍາຍຕົວຂອງມັນ. ໂດຍສະເພາະຢ່າງຍິ່ງ ຈຸດພິເສດດັ່ງກ່າວນີ້ແມ່ນປະກົດເປັນຈິງຢ່າງສົມບູນທີ່ສຸດ ຢູ່ບ່ອນ ທີ່ສັງຄົມນິຍົມມີຮູບການທີ່ສຸກງອມກວ່າໝູ່. ການຂະຫຍາຍຕົວທີ່ມີຈັງຫວະສູງນັ້ນແມ່ນໝາກຜົນແຫ່ງການລົບລ້າງກຳມະສິດເອກະຊົນ, ລົບລ້າງຄວາມເປັນປໍລະປັກກັນທາງຊົນຊັ້ນ, ການປັດເຂ່ຍອຸປະສັກອື່ນໆບົນເສັ້ນທາງ ແຫ່ງຄວາມກ້າວໜ້າຂອງສັງຄົມ. ພາຍໃຕ້ລະບອບສັງຄົມນິຍົມນັ້ນ ແຕ່ລະຄົນນັບມື້ນັບເຂົ້າໃຈດີຂຶ້ນວ່າ ເຂົາເຈົ້າຍິ່ງເຮັດວຽກ, ດຳເນີນທຸລະກິດດີຫຼາຍເທົ່າໃດ, ຍິ່ງປະກອບສ່ວນເຂົ້າໃນການຕັດສິນວຽກງານຂອງສັງຄົມ ແລະ ຂອງລັດຫຼາຍເທົ່າໃດ, ເງື່ອນໄຂດຳລົງຊີວິດກໍຍິ່ງດີຂຶ້ນເທົ່ານັ້ນ. ປະຫວັດສາດຊີ້ໃຫ້ເຫັນຢ່າງໜັກແໜ້ນວ່າ ໃນທຸກໆແຫ່ງທີ່ສັງຄົມນິຍົມໄດ້ຮັບ ການສ້າງຕັ້ງແລ້ວນັ້ນ, ຖານະຂອງມະຫາຊົນຜູ້ອອກແຮງງານກໍໄດ້ຮັບການປ່ຽນແປງຢ່າງເຖິງກົກເຖິງຮາກ.

ຜົນສຳເລັດໃນການກໍ່ສ້າງສັງຄົມນິຍົມທີ່ຍາດມາໄດ້ ຈົນເຖິງປະຈຸບັນນີ້ຊ່ວຍໃຫ້ ສສສຊ ສາມາດຍົກໜ້າທີ່ແຫ່ງການເລັ່ງລັດພັດທະນາເສດຖະກິດ ແລະ ສັງຄົມຂອງປະເທດທັງໝົດ ຢ່າງວ່ອງໄວຂຶ້ນເປັນໜ້າທີ່ ອັນດັບໜຶ່ງ ມີແຕ່ບົນເສັ້ນທາງເສັ້ນນີ້ເທົ່ານັ້ນ ຈຶ່ງຈະສາມາດບັນລຸເຖິງລະດັບສູງທີ່ສຸດຂອງສັງຄົມນິຍົມທີ່ສຸກງອມໄດ້ ໃນໄລຍະປະຫວັດສາດອັນສັ້ນໆແລະຈຶ່ງຈະຫຍັບເຂົ້າສູ່ສັງຄົມກອມມູນິດໄດ້.

ການເລັ່ງລັດພັດທະນາເສດຖະກິດ ແລະ ສັງຄົມຂອງສັງຄົມ ໂຊວຽດນັ້ນ ແມ່ນເລັ່ງໃສ່ການດັດສ້າງທາງດ້ານຄຸນນະພາບຂອງຊີວິດສັງຄົມ ຢ່າງຮອບດ້ານ. ກ່ອນອື່ນໝົດ ຕ້ອງກໍ່ສ້າງພື້ນຖານ ທາງດ້ານວັດຖຸ-ເຕັກນິກຂອງສັງຄົມຄືນໃໝ່ ບົນພື້ນຖານຜົນສຳເລັດຂອງການປະຕິວັດທາງດ້ານ ວິທະຍາສາດ ແລະ ເຕັກນິກ. ບັນຫາອັນຕົ້ນຕໍສຳລັບທຸກວັນນີ້ແມ່ນການຊອກຫາວິທີທາງເພື່ອເຮັດໃຫ້ປະເທດຊາດໄດ້ບັນລຸເຖິງຜະລິດຕະພາບຂອງງານທີ່ມີລະດັບສູງສຸດຂອງໂລກ. ບັນຫາທີ່ມີລັກສະນະປະຫວັດສາດດັ່ງກ່າວ ນັ້ນຈະຖືກແກ້ໄຂໄດ້ ກໍມີແຕ່ບົນພື້ນຖານແຫ່ງການເລັ່ງລັດຄວາມກ້າວໜ້າທາງດ້ານວິທະຍາສາດ ແລະ ເຕັກນິກ, ການດັດສ້າງເຕັກນິກ ແລະ ເຕັກໂນ

ໂລຊີ ໂດຍພື້ນຖານ, ການຊຸກຍູ້ປັດໄຈທັງໝົດທາງດ້ານເຕັກນິກ, ການຈັດຕັ້ງ, ເສດຖະກິດ ແລະ ສັງຄົມ.

ການເລັ່ງລັດພັດທະນາທາງດ້ານເສດຖະກິດ ແລະ ສັງຄົມຂອງສັງຄົມນັ້ນ ແມ່ນແນໃສ່ການບູລະນະການພົວພັນທາງສັງຄົມ ກ່ອນອື່ນໝົດ ແມ່ນການພົວພັນທາງເສດຖະກິດ, ເອົາໃຈໃສ່ຢ່າງຫລວງຫລາຍເປັນພິເສດ ຕໍ່ການແຈກຢາຍ, ຕໍ່ການປະຕິບັດຫລັກການແຫ່ງຄວາມຍຸດຕິທຳ ທາງສັງຄົມໃຫ້ເປັນຈິງຢ່າງສົມບູນກວ່າເກົ່າ. ການກວດກາອັດຕາອອກແຮງງານແລະອັດຕາຊົມໃຊ້ ເຊິ່ງເປັນການກະທຳທີ່ສືບທອດມາຈາກມູນມໍລະດົກທີ່ ວ.ອີ. ເລນິນ ໄດ້ມອບໄວ້ໃຫ້ນັ້ນ ເປັນການສະແດງອອກອັນຕົ້ນຕໍກ່ຽວກັບ ຄວາມຍຸດຕິທຳທາງສັງຄົມສຳລັບຊາວໂຊວຽດ.

ການເລັ່ງລັດພັດທະນາທາງດ້ານສັງຄົມ ແລະ ເສດຖະກິດຂອງສັງຄົມນັ້ນ ມີເປົ້າໝາຍເພື່ອປະຕິບັດການປ່ຽນແປງອັນເລິກເຊິ່ງຢູ່ໃນ ເນື້ອໃນ ແລະ ລັກສະນະຂອງການອອກແຮງງານ. ໃນນັ້ນ ໄດ້ແກ່ການເອົາໃຈໃສ່ເປັນພິເສດຕໍ່ການເພີ່ມທະວີຫົວຄິດປະດິດສ້າງ ແລະ ລັກສະນະ ລວມໝູ່ຂອງການອອກແຮງງານ, ຍົກລະດັບວັດທະນະທຳຂອງມັນໃຫ້ສູງຂຶ້ນ, ໄດ້ແກ່ການຍ້ອງຍໍວຽກງານອັນມີຜະລິດຕະພາບສູງ ເພື່ອຄວາມສົມບູນ ພູນສຸກຂອງສັງຄົມ. ສິ່ງເຫລົ່ານີ້ຊ່ວຍຫັນປ່ຽນການອອກແຮງງານມາເປັນ ຄວາມຕ້ອງການອັນພື້ນຖານອັນດັບໜຶ່ງຂອງທຸກໆຄົນ.

ເປົ້າໝາຍອັນຕົ້ນຕໍທາງສັງຄົມຂອງການເລັ່ງລັດພັດທະນານັ້ນ ແມ່ນການຍົກລະດັບຄວາມຢູ່ດີກິນດີຂອງຊາວໂຊວຽດໃຫ້ຂຶ້ນສູ່ຄຸນນະພາບໃໝ່ , ແມ່ນການຮັບປະກັນລະດັບ ແລະ ໂຄງປະກອບຂອງການຊົມໃຊ້ຊັບສິນທາງດ້ານວັດຖຸ, ສັງຄົມ ແລະ ວັດທະນະທຳແບບທີ່ສອດຄ່ອງກັບຈຸດປະສົງແຫ່ງການກໍ່ສ້າງບຸກຄົນ ທີ່ຂະຫຍາຍຕົວຢ່າງຮອບດ້ານ, ບຸກຄົນທີ່ມີລະດັບວັດທະນະທຳສູງນັ້ນ ໃຫ້ສົມບູນກວ່າເກົ່າ. ໝາຍຄວາມວ່າ ຕ້ອງສ້າງເງື່ອນໄຂອັນຈຳເປັນ ໃຫ້ພອນສະຫວັນ, ຄວາມສາມາດ ເບັ່ງບານອອກຢ່າງເຕັມທີ່ທັງນີ້ກໍແມ່ນເພື່ອຜົນປະໂຫຍດຂອງສັງຄົມ.

ການເລັ່ງລັດພັດທະນາທາງດ້ານເສດຖະກິດ ແລະສັງຄົມຂອງປະເທດນັ້ນ ໝາຍເຖິງວ່າ ການເຄື່ອນໄຫວຂອງລະບົບອົງການຈັດຕັ້ງການເມືອງ

ແລະມະຫາຊົນທັງໝົດຕ້ອງໄດ້ຮັບການປັບປຸງໃຫ້ດີຂຶ້ນແລະຕ້ອງເພີ່ມທະວີລະດັບຄວາມຫ້າວຫັນໃຫ້ສູງຂຶ້ນ. ອັນສຳຄັນເປັນພິເສດ ແມ່ນການເປີດກວ້າງການຄຸ້ມຄອງດ້ວຍຕົນເອງແບບສັງຄົມນິຍົມ ໂດຍຜ່ານການດຶງດູດເອົາ ປະຊາຊົນນັບມື້ນັບຫລາຍກວ່າເກົ່າ ເຂົ້າຮ່ວມໃນການຄຸ້ມຄອງວຽກງານ ຂອງສັງຄົມ ແລະ ຂອງລັດ, ແມ່ນການປັບປຸງການເຄື່ອນໄຫວຂອງອົງການອຳນາດການປົກຄອງປະຊາຊົນທີ່ໄດ້ຖືກເລືອກຕັ້ງຂຶ້ນມາ, ຍົກບົດບາດຂອງອົງການກຳມະບານ ແລະ ອົງການຈັດຕັ້ງມະຫາຊົນອື່ນໆຂອງຊາວຜູ້ອອກແຮງງານໃຫ້ສູງຂຶ້ນກວ່າເກົ່າ.

ບັນຫາອັນສັບສົນ ແລະ ຍິ່ງໃຫຍ່ດັ່ງກ່າວນີ້ ຈະຖືກແກ້ໄຂໄດ້ກໍແມ່ນບົນພື້ນຖານແຫ່ງການຍົກບົດບາດ, ສະຕິຕື່ນຕົວ ແລະ ວັດທະນະທຳຂອງ ແຕ່ລະບຸກຄົນໃຫ້ສູງຂຶ້ນ. ດັ່ງທີ່ໄດ້ຊີ້ແຈງມາແລ້ວນັ້ນ ສັງຄົມສັງຄົມນິຍົມບໍ່ອາດຈະໄດ້ຮັບການຂະຫຍາຍຕົວຢ່າງມີປະສິດທິຜົນໄດ້, ຖ້າບໍ່ຊອກຫາ ວິທີທາງອັນໃໝ່ ທີ່ເຮັດໃຫ້ມະຫາຊົນໄດ້ເສີມຂະຫຍາຍຫົວຄິດປະດິດສ້າງຢ່າງເຕັມທີ່ຢູ່ໃນທຸກໆຂົງເຂດຂອງຊີວິດສັງຄົມ. ເປົ້າໝາຍທີ່ມີລັກສະນະ ປະຫວັດສາດນັ້ນ ຍິ່ງມີຂະໜາດໃຫຍ່ເທົ່າໃດ ການປະກອບສ່ວນຂອງປະຊາຊົນນັບເປັນລ້ານໆຄົນໃນການເຮັດສຳເລັດເປົ້າໝາຍດັ່ງກ່າວ ແບບເປັນເຈົ້າຕົນເອງ, ແບບມີຄວາມຮັບຜິດຊອບ, ມີສະຕິຕື່ນຕົວ ແລະ ມີຄວາມຫ້າວຫັນກໍຍິ່ງມີຄວາມສຳຄັນຫລາຍເທົ່ານັ້ນ. ຫົວຄິດລິເລີ່ມ, ຄວາມຂະຫຍັນຂັນແຂງ, ຫົວຄິດປະດິດສ້າງອັນມີຊີວິດຊີວາຂອງຊາວຜູ້ອອກແຮງງານ, ທ່າທີແບບ ມີສະຕິຕື່ນຕົວ, ມີຄວາມສົນໃຈຕໍ່ພາລະໜ້າທີ່ກໍ່ສ້າງລະບອບໃໝ່ນັ້ນ ແມ່ນບໍ່ເກີດແຫ່ງກຳລັງແຮງ ແລະ ຄວາມມີຊີວິດຊີວາຂອງລະບອບສັງຄົມນິຍົມ, ແມ່ນການຄ້ຳປະກັນໃຫ້ແກ່ໄຊຊະນະໃນພາຍໜ້າ. ເປົ້າໝາຍອັນມີມະນຸດສະທຳທີ່ສຸດ ທີ່ພົ້ນເດັ່ນຂຶ້ນຢູ່ໃນຂະບວນວິວັດ ແຫ່ງການບູລະນະສັງຄົມນິຍົມຢ່າງຮອບດ້ານນັ້ນ ໄດ້ເລັ່ງທວງໃຫ້ມີວິທີການທີ່ມີມະນຸດສະທຳເຊັ່ນດຽວກັນເພື່ອໃຫ້ບັນລຸເປົ້າໝາຍດັ່ງກ່າວ. ການສ້າງຕັ້ງຮູບການສັງຄົມນິຍົມທີ່ມີລະດັບສູງກວ່ານັ້ນໄດ້ດຳເນີນໄປໂດຍບໍ່ແມ່ນສວຍໃຊ້ຄົນ, ໂດຍບໍ່ສ້າງຄວາມເສຍຫາຍໃຫ້ແກ່ຄົນແຕ່ກົງກັນຂ້າມ ແມ່ນອາໄສ ຄວາມອາດສາມາດປະດິດສ້າງທີ່ບົ່ມຊ້ອນ, ການເສີມຂະຫຍາຍຄວາມສາມາດ ແລະພອນສະ

ຫວັນຂອງຄົນ.

ແຕ່ວ່າ ຄວາມດີເລີດ ແລະ ຄວາມອາດສາມາດຂອງສັງຄົມນິຍົມ ຂະຫຍາຍຕົວນັ້ນ ຈະເຮັດໃຫ້ປະກົດຜົນເປັນຈິງໄດ້ ກໍ່ຕໍ່ເມື່ອມີສັນຕິພາບ ອັນຫມັ້ນຄົງເທົ່ານັ້ນ. ດ້ວຍເຫດນັ້ນ ພັກກອມມູນິດແຫ່ງສະຫະພາບ ໂຊວຽດ ແລະ ລັດໂຊວຽດ ຈຶ່ງຕໍ່ສູ້ຢ່າງສະເຫມີຕົ້ນສະເຫມີປາຍ ເພື່ອເຮັດໃຫ້ການຜ່ອນຄາຍຄວາມເຄັ່ງຕຶງນັ້ນເລິກເຊິ່ງກວ່າເກົ່າ, ເພື່ອຮັດແຫນ້ນມິດຕະ - ພາບ ແລະ ການຮ່ວມມືລະຫວ່າງບັນດາປະຊາຊາດທັງຫມົດ. ການທີ່ ປະເທດສັງຄົມນິຍົມປະເທດທຳອິດຢູ່ໃນໂລກເປັນຜູ້ສະເຫນີຂໍ້ລິເລີ່ມອັນໃຫມ່ ທີ່ແນໃສ່ປົດປ່ອຍມວນມະນຸດອອກຈາກໄພພິບັດນິວຄະເລຍ ແລະ ລົບລ້າງພົ້ນຖານທີ່ພາໃຫ້ເກີດສົງຄາມນັ້ນ ແມ່ນສິ່ງທີ່ຖືກຕ້ອງຕາມກົດເກນທີ່ສຸດ. ຂໍ້ລິເລີ່ມດັ່ງກ່າວນີ້ ສະແດງໃຫ້ຫມົດທັງໂລກເຫັນເຖິງຄວາມມີມະນຸດສະທຳອັນແທ້ຈິງຂອງລະບອບໃຫມ່ ເຊິ່ງປະກົດໃຫ້ເຫັນຢູ່ໃນນະໂຍບາຍ ການເມືອງພາຍໃນ ກໍ່ຄືພາຍນອກ, ສະແດງ ໃຫ້ເຫັນຄວາມແຕກຕ່າງ ຢ່າງຂາດຂັ້ນກັບໂລກເກົ່າ ເຊິ່ງເປັນໂລກແຫ່ງການຂູດຮີດ, ແຫ່ງຄວາມຮ້າຍກາດແລະລັດທິຊຸນເສິກ.

## ບົດທີ ໘. ແບບແຜນດຳລົງຊີວິດສັງຄົມນິຍົມ

ຢູ່ໃນຍຸກສະໄຫມຂອງສັງຄົມນິຍົມຂະຫຍາຍຕົວນັ້ນ ຍັງເກີດມີການປ່ຽນແປງຢູ່ໃນແບບແຜນດຳລົງຊີວິດຂອງຄົນຄື: ຢູ່ໃນການອອກແຮງງານ, ການເຄື່ອນໄຫວສັງຄົມ, ການສຶກສາ, ການພັກຜ່ອນ, ການບັນເທີງ, ການສຶກສາອົບຮົມເດັກນ້ອຍ ແລະ ອື່ນໆ. ຢູ່ໃນຊີວິດ ແລະ ໃນການເຄື່ອນ ໄຫວຂອງຄົນຜູ້ຫນຶ່ງໆນັ້ນ ລ້ວນແຕ່ ສະແດງອອກເຖິງຜົນສຳເລັດທັງຫມົດ ຂອງລະບອບໃຫມ່ ແລະ ສ່ອງແສງໃຫ້ເຫັນເຖິງ ດ້ານຕ່າງໆ ອັນສຳຄັນ ທີ່ສຸດຂອງຊີວິດສັງຄົມ. ແຕ່ບັນຫາທີ່ວ່າ ຄົນຜູ້ຫນຶ່ງ ຈະມີຊີວິດທີ່ອຸດົມສົມບູນ ຫລືກົງກັນຂ້າມຈະຕົກຢູ່ໃນສະພາບເປັນຄົນທີ່ເຫີນຫ່າງຈາກສັງຄົມ ແລະ ຮູ້ສຶກວ່າຕົນເອງເປັນສິ້ນສ່ວນຫນ້ອຍໆຢູ່ໃນກົນຈັກສັງຄົມນັ້ນແມ່ນບັນຫາ ທີ່ຂຶ້ນກັບລັກສະນະ ແລະ ເນື້ອໃນແຫ່ງການເຄື່ອນໄຫວຂອງເຂົາ. ແຕ່ວ່າ ແບບແຜນອັນແນ່ນອນແຫ່ງການເຄື່ອນໄຫວຂອງບຸກຄົນນັ້ນ ມັນບໍ່ພຽງແຕ່ແມ່ນຜົນຂອງການດັດສ້າງເງື່ອນໄຂດຳລົງຊີວິດຂອງເຂົາເຈົ້າເທົ່ານັ້ນ, ແຕ່ມັນຍັງແມ່ນພາຫະນະສຳລັບການສືບຕໍ່ປັບປຸງສັງຄົມ ກໍຄືປັບປຸງກະໂຕບຸກຄົນ ຜູ້ນັ້ນເອງ. ດ້ວຍເຫດນັ້ນ ບັນຫາກ່ຽວກັບແບບວິທີດຳລົງຊີວິດ ແລະເຄື່ອນໄຫວຂອງຄົນເຮົາໃນທຸກວັນນີ້ ນັບມື້ຖືກຖືເປັນບັນຫາອັນດັບ ຫນຶ່ງ ຢູ່ໃນການຕໍ່ສູ້ທາງດ້ານແນວຄິດ. ຢູ່ໃນແບບແຜນດຳລົງຊີວິດຕ່າງກັນ ຄືແບບແຜນສັງຄົມນິຍົມ ແລະ ແບບແຜນທຶນນິຍົມນັ້ນ ກໍແມ່ນສະທ້ອນໃຫ້ເຫັນເຖິງສອງໂລກ, ສອງລະບົບເສດຖະກິດ-ສັງຄົມທີ່ກົງກັນຂ້າມກັນ.

## ທຸກສິ່ງທຸກຢ່າງ ແມ່ນເພື່ອມະນຸດ

ຢູ່ໃນລະບອບສັງຄົມນິຍົມນັ້ນ ແບບແຜນດຳລົງຊີວິດໃຫມ່ ນັບມື້ ນັບໄດ້ຮັບການຂະຫຍາຍຕົວໃຫ້ບໍລິບູນກວ່າເກົ່ານັ້ນແມ່ນແນວໃດ? ນີ້ແມ່ນເປັນບັນຫາຕົ້ນຕໍ ໃນການສົມທຽບກັນລະຫວາງສອງໂລກ.

ກ່ອນອື່ນຫມົດ, ແບບແຜນດຳລົງຊີວິດສັງຄົມນິຍົມຖືກກຳນົດດ້ວຍແບບວິທີການຜະລິດທີ່ສອດຄ່ອງ. ການຂ້າມຜ່ານຈາກແບບວິທີດຳລົງຊີວິດ ແລະ ເຄື່ອນໄຫວຫນຶ່ງຂອງຄົນເຮົາໄປສູ່ແບບວິທີອື່ນອັນຫນຶ່ງນັ້ນ ສາມາດເປັນໄປໄດ້ພຽງແຕ່ຢູ່ບົນພື້ນຖານການດັດສ້າງແບບວິທີການຜະລິດອັນເກົ່າເທົ່ານັ້ນ. ແຕ່ແບບແຜນດຳລົງຊີວິດນັ້ນ ບໍ່ຄວນຈະຖືກຈຳກັດດ້ວຍພຽງແຕ່ ເງື່ອນໄຂທາງດ້ານວັດຖຸຂອງການດຳລົງຊີວິດຂອງບຸກຄົນຫລືວ່າ ປັດໄຈແຫ່ງການຄົງຕົວ ແລະ ການປະພຶດຕົວຂອງເຂົາເຈົ້າເທົ່ານັ້ນ. ລັກສະນະພິເສດ ແຫ່ງແບບແຜນດຳລົງຊີວິດສັງຄົມນິຍົມນັ້ນ ແມ່ນການເຄື່ອນໄຫວຂອງຄົນທີ່ມີຂອບເຂດອັນກວ້າງຂວາງທີ່ສຸດ.

ການເຄື່ອນໄຫວຂອງບຸກຄົນຢູ່ໃນເງື່ອນໄຂສັງຄົມນິຍົມ ແມ່ນມີ ຫລາຍດ້ານທີ່ສຸດ. ມັນລວມທັງການອອກແຮງງານ ແລະ ການເຂົ້າຮ່ວມ ຊີວິດການເມືອງ–ສັງຄົມ, ການສຶກສາປະເພດຕ່າງໆແລະ ການອອກຫົວຄິດປະດິດສ້າງທາງດ້ານສິລະປະກຳ, ຄວາມດູດດື່ມຕໍ່ຜົນງານສິລະປະກຳ, ການຕິດຕໍ່ພົວພັນກັບຄົນອື່ນ, ການເຝິກແອບກາຍະກຳ ແລະ ຫລິ້ນກິລາ ແລະ ອື່ນໆ.

ພາຍໃຕ້ລະບອບສັງຄົມນິຍົມນັ້ນ, ເນື້ອໃນຂອງການອອກແຮງງານຖືກປ່ຽນແປງຢ່າງຫລວງຫລາຍ, ມັນນັບມື້ນັບມີລັກສະນະປະດິດສ້າງ ຫລາຍກວ່າເກົ່າ, ລະດັບວິຊາສະເພາະຂອງພະນັກງານກໍຖືກຍົກສູງຂຶ້ນຢ່າງບໍ່ຢຸດຢັ້ງ. ສະຫະພາບໂຊວຽດໄດ້ເຮັດທຸກສິ່ງທຸກຢ່າງເພື່ອຫລຸດຜອນ ແລະ ໃນຂັ້ນຕໍ່ໄປກໍຈະລົບລ້າງການອອກແຮງງານດ້ວຍກຳລັງກາຍ, ດ້ວຍຕີນມືແລະ ການອອກແຮງງານບໍ່ມີວິຊາສະເພາະ.

ແບບແຜນດຳລົງຊີວິດສັງຄົມນິຍົມ, ກ່ອນອື່ນຫມົດແມ່ນແບບແຜນດຳລົງ



8–699

ຊີວິດທີ່ມີລັກສະນະອອກແຮງງານຕາມຫລັກການທີ່ວ່າ: "ແຕ່ລະຄົນ ແມ່ນເຮັດຕາມຄວາມສາມາດ, ຊົມໃຊ້ຕາມແຮງງານ".

ເມື່ອມີການຫລຸດຜ່ອນຊົ່ວໂມງເຮັດວຽກນັ້ນ ໄດ້ເຮັດໃຫ້ເວລາ ຫວ່າງຂອງຊາວຜູ້ອອກແຮງງານມີເນື້ອໃນທີ່ສົມບູນກວ່າເກົ່າ. ແຕ່ສິ່ງຕົ້ນຕໍ ແມ່ນຢູ່ບ່ອນວ່າ ການອອກແຮງງານ ແລະ ເວລາຫວ່າງ, ການເຮັດວຽກແລະການສຶກສາຮ່ຳຮຽນ, ການອອກຫົວຄິດປະດິດສ້າງ ແລະ ການບັນເທີງນັ້ນຕ່າງກໍເພີ່ມພູນຄູນສ້າງເຊິ່ງກັນ ແລະ ກັນ. ການເຄື່ອນໄຫວທຸກໆປະເພດຂອງຄົນຜູ້ໜຶ່ງນັ້ນ ໄດ້ອຳນວຍໃຫ້ເຂົາມີການຂະຫຍາຍຕົວຢ່າງເປັນອິດສະຫລະ ແລະ ເຮັດໃຫ້ພອນສະຫວັນ, ຄວາມອາດສາມາດ ທາງດ້ານກາຍແລະ ໃຈຂອງເຂົາປະກົດເປັນຈິງ. ສັງຄົມນິຍົມໄດ້ສ້າງທຸກຄວາມອາດສາມາດ ສຳລັບການຂະຫຍາຍຕົວຢ່າງຮອບດ້ານຂອງແຕ່ລະບຸກຄົນ.

ແຕ່ວ່າ ຄົນຜູ້ໜຶ່ງບໍ່ມີຈັກເທື່ອຈະເຄື່ອນໄຫວຢ່າງໂດດດ່ຽວ, ຍາມໃດເຂົາກໍ່ຕ້ອງເປັນສະມາຊິກຂອງໝູ່ຄະນະ, ເປັນຜູ້ຕາງໜ້າຂອງຊົນຊັ້ນຫລືຊົນຊາດອັນແນ່ນອນໃດໜຶ່ງ. ແບບແຜນດຳລົງຊີວິດສັງຄົມນິຍົມ ເປັນຜູ້ກຳນົດການພົວພັນເຊິ່ງກັນ ແລະ ກັນແບບພິເສດລະຫວ່າງຄົນ ໃນຖານະເປັນສະມາຊິກຂອງກຸ່ມຄົນຕ່າງໆໃນສັງຄົມ. ທາດແທ້ຂອງການພົວພັນການຜະລິດສັງຄົມນິຍົມນັ້ນ ໄດ້ເຮັດໃຫ້ເປົ້າໝາຍຂອງບຸກຄົນກົງກັບ ເປົ້າໝາຍຂອງໝູ່ຄະນະ ແລະ ຂອງສັງຄົມ. ການຍົກລະດັບຄວາມຢູ່ດີກິນດີ ທາງດ້ານວັດຖຸ ແລະ ລະດັບວັດທະນະທຳຂອງຄົນ ໃຫ້ສູງຂຶ້ນ ແລະ ການຂະຫຍາຍຕົວຢ່າງຮອບດ້ານຂອງເຂົານີ້ ແມ່ນສາມາດດຳເນີນໄປໄດ້ ບົນພື້ນຖານການເພີ່ມທະວີຄວາມອຸດົມຮັ່ງມີແຫ່ງສັງຄົມດ້ວຍການບຸກບືນ ຮ່ວມກັນຂອງຊາວຜູ້ອອກແຮງງານ. ດັ່ງນັ້ນ ພາຍຫລັງການປະຕິວັດ ສັງຄົມນິຍົມແລ້ວ ກໍເລີ່ມຕົ້ນຂະບວນວິວັດແຫ່ງການດັດສ້າງການພົວພັນລະຫວ່າງຄົນ . ແນວຄິດເອກະເທດ ນັບມື້ຖືກແນວຄິດລວມໝູ່ເຂົ້າມາສັບປ່ຽນ, ການຊິງດີຊິງເດັ່ນໄດ້ປ່ຽນແທນດ້ວຍການແຂ່ງຂັນສັງຄົມນິຍົມ, ການຮ່ວມມືແລະຊ່ວຍເຫລືອເຊິ່ງກັນ ແລະ ກັນ; ຄວາມບໍ່ເຊື່ອໝັ້ນ, ຄວາມຢ້ານກົວ ແລະຄວາມອາຄາດບາດໝາງກັນ ໄດ້ຖືກສັບປ່ຽນດ້ວຍລັດທິມະນຸດສະທຳ,ຄວາມຫວັງດີຕໍ່ກັນ ແລະ ອື່ນໆ.

ແບບແຜນດຳລົງຊີວິດສັງຄົມນິຍົມ ແມ່ນເຕັມໄປດ້ວຍບັນຍາກາດ ລວມໝູ່, ມິດສະຫາຍ, ຊ່ວຍເຫລືອເຊິ່ງກັນ ແລະ ກັນ, ຄຸນນະທຳອັນສູງສົ່ງ ແລະ ມິດຕະພາບລະຫວ່າງຊົນຊາດທັງໝົດ. ຊາວໂຊວຽດແມ່ນມີ ຄວາມພູມໃຈໃນຕົວເອງ ແລະ ພ້ອມກັນນັ້ນກໍເຄົາລົບນັບຖືປະຊາຊາດອື່ນໆ. ເຂົາເຈົ້າຍາມໃດກໍ່ຢາກຊ່ວຍເຫລືອປະຊາຊາດຜູ້ຖືກກົດຂີ່ທັງໝົດ ທີ່ກຳລັງ ຕໍ່ສູ້ເພື່ອປົດປ່ອຍຊາດ ແລະ ປົດປ່ອຍສັງຄົມ.

## ໂລກະທັດ ແລະ ແບບແຜນດຳລົງຊີວິດ

ເພື່ອໃຫ້ແບບແຜນດຳລົງຊີວິດສັງຄົມນິຍົມປະກົດຜົນເປັນຈິງໄດ້ນັ້ນ ມີແຕ່ຄວາມອາດສາມາດ ແລະ ເງື່ອນໄຂອັນດີທີ່ສຸດ ທີ່ເອື້ອອຳນວຍ ໃຫ້ຄົນເຮົາກໍ່ຍັງບໍ່ພຽງພໍເທື່ອ. ສິ່ງສຳຄັນ ແມ່ນຄຸນລັກສະນະຂອງບຸກຄົນ, ໂລກະທັດ, ແລະ ຄວາມເຊື່ອໝັ້ນຂອງເຂົາເອງ ນັ້ນມີບົດບາດສຳຄັນ ໃນການບັນລຸຈຸດປະສົງດັ່ງກ່າວ.

ສັງຄົມ ສັງຄົມນິຍົມໄດ້ສ້າງໂລກະທັດທີ່ມີວິທະຍາສາດໃຫ້ມວນຊົນ ຜູ້ອອກແຮງງານ. ພື້ນຖານຂອງມັນກໍແມ່ນທິດສະດີມາກ-ເລນິນ. ລັດທິມາກ-ເລນິນ ເປັນເຂັມຊີ້ທິດທີ່ຊີ້ບອກທາງເດີນໄປສູ່ການມີຊີວິດທີ່ເຕັມ ໄປດ້ວຍຄວາມໝາຍທາງດ້ານສັງຄົມອັນໃຫຍ່ຫລວງ ແລະ ນຳຄວາມເພິ່ງພໍໃຈມາໃຫ້ແຕ່ລະບຸກຄົນ. ລະຫວ່າງໂລກະທັດ ແລະ ລັກສະນະ ແຫ່ງການເຄື່ອນໄຫວຂອງຄົນຜູ້ໜຶ່ງນັ້ນ ແມ່ນມີສາຍພົວພັນກັນໂດຍກົງ. ຜູ້ໃດຢາກມີຊີວິດທີ່ສູງສົ່ງ ແລະ ສະຫງ່າຜ່າເຜີຍ, ຜູ້ນັ້ນຕ້ອງຄົ້ນຄວ້າທິດສະດີປະຕິວັດ ແລະ ເຂົ້າຮ່ວມການຕໍ່ສູ້ເພື່ອການປົດປ່ອຍຊາວຜູ້ອອກແຮງງານທັງໝົດ, ເພື່ອສັນຕິພາບ ແລະ ຄວາມກ້າວໜ້າທາງສັງຄົມ.

ການຄົ້ນຄວ້າລັດທິກອມມູນິດວິທະຍາສາດນັ້ນ ຈະຊ່ວຍໃຫ້ເຂົ້າໃຈ ວິທີການ ແລະ ພາຫະນະໃນການດັດສ້າງສະພາບແວດລ້ອມ, ໃນການສ້າງ-

ຕັ້ງແລະເສີມສ້າງໂລກໃໝ່ຂອງພວກເຮົາ. ແຕ່ການສ້າງໂລກະທັດກອມມູນິດທີ່ມີລັກສະນະວິທະຍາສາດນັ້ນ ບໍ່ພຽງແຕ່ແມ່ນຜົນທີ່ໄດ້ມາຈາກການຮ່ຳຮຽນທິດສະດີ ແລະ ການຄົ້ນຄິດເທົ່ານັ້ນ. ໂລກະທັດກອມມູນິດ ບໍ່ສາມາດເກີດຂຶ້ນໄດ້ ໂດຍປາສະຈາກການເຂົ້າຮ່ວມຂອງບຸກຄົນ ຢູ່ໃນການເຄື່ອນໄຫວການເມືອງ-ສັງຄົມຢ່າງຂະໜັນອັນແຂງ. ທາງດ້ານສ່ວນຕົວແລ້ວ ການຕໍ່ສູ້ຕົວຈິງ ເພື່ອລະບອບໃໝ່ນັ້ນ ຈະຊ່ວຍຍົກລະດັບທິດສະດີ-ແນວຄິດ ຂອງແຕ່ລະຄົນໃຫ້ສູງຂຶ້ນ.

ເຖິງວ່າ ຈະມີການຕ້ານຄືນຈາກໂລກເກົ່າກໍຕາມ, ແຕ່ວ່າ ລະບອບໃໝ່ກໍຂະຫຍາຍຕົວຢ່າງສະເໝີຕົ້ນສະເໝີປາຍ ແລະ ຢ່າງບໍ່ຢຸດຢັ້ງຢູ່ໃນຖັນແຖວຂອງບັນດາປະເທດເອີລົບ, ອາຊີ, ອາຟລິກາ, ອາເມລິກາ ລາຕິນ. ຄົນໃໝ່ ແມ່ນໝາກຜົນອັນຕົ້ນຕໍຂອງສັງຄົມນິຍົມ. ລະບອບສັງຄົມນິຍົມອັນເປັນຈິງ ເຊິ່ງໄດ້ກວມເອົາເນື້ອທີ່ເຖິງ ໑/໖ ຂອງໂລກແລ້ວນັ້ນໄດ້ຈັກຊວນໃຫ້ຄົນເຮົາເຊື່ອໝັ້ນວ່າ ມັນແມ່ນລະບອບທີ່ມີອະນາຄົດ ແລະ ສັງຄົມນິຍົມ ແມ່ນການມີຊີວິດອັນສົມຕິ, ມີຄວາມສຸກ, ແມ່ນຊີວິດ ທີ່ເຕັມໄປດ້ວຍຄວາມອາດສາມາດປະດິດສ້າງ. ແຕ່ເພື່ອຊີວິດດັ່ງກ່າວນີ້ ຕ້ອງໄດ້ທຳການຕໍ່ສູ້. ອິດທິກຳລັງຂອງໂລກເກົ່າ ທີ່ເປັນໂລກຂູດຣີດນັ້ນ ບໍ່ຍອມຈະໜີອອກຈາກເວທີແຫ່ງປະຫວັດສາດຢ່າງສະໝັກໃຈ. ບັນດາປະຊາຊາດ ຈະຕ້ອງລົບລ້າງມັນດ້ວຍການເຄື່ອນໄຫວສາກົນຮ່ວມກັນ.

## ບົດທີ ໙. ລະບົບສັງຄົມນິຍົມໂລກ

### ການພົວພັນສາກົນແບບໃໝ່

ການຂ້າມຜ່ານຂອງບັນດາປະຊາຊາດ ໄປສູ່ສັງຄົມນິຍົມນັ້ນ ແມ່ນຂະບວນວິວັດທາງດ້ານປະຫວັດສາດອັນຍາວນານອັນໜຶ່ງ. ໂດຍອີງໃສ່ເງື່ອນໄຂພາຍໃນ ແລະ ເງື່ອນໄຂສາກົນນັ້ນບາງປະເທດ ແລະກຸ່ມປະເທດຕ່າງຕ່າງກໍໄດ້ແຍກຕົວອອກຈາກລະບົບທຶນນິຍົມ ແລະ ກ້າວເດີນຕາມເສັ້ນທາງສັງຄົມນິຍົມ. ມະຫາປະຕິວັດສັງຄົມນິຍົມເດືອນຕຸລາຢູ່ລັດເຊຍເມື່ອປີ໑໙໑໗ ໄດ້ເປີດສາກໃຫ້ແກ່ການກໍ່ຕັ້ງລະບົບສັງຄົມນິຍົມໂລກ. ພາຍຫລັງ ສົງຄາມໂລກຄັ້ງທີສອງ, ຍ້ອນໄຊຊະນະຂອງການປະຕິວັດ, ລະບອບ ສັງຄົມນິຍົມໄດ້ຮັບການສ້າງຂຶ້ນຢູ່ຫລາຍປະເທດໃນເອີລົບ ແລະ ໃນອາຊີ. ການກໍ່ຕັ້ງລະບົບສັງຄົມນິຍົມໂລກ ໄດ້ເຮັດໃຫ້ການຊົ່ງຊາກຳລັງໃນໂລກ ມີການປ່ຽນແປງໃໝ່ຢ່າງພື້ນຖານ ໂດຍເປັນຜົນດີໃຫ້ແກ່ສັງຄົມນິຍົມ. ການປະຕິວັດສັງຄົມນິຍົມ ທີ່ລະເບີດຂຶ້ນໃນເວລາຕໍ່ມາຢູ່ໃນບັນດາປະເທດອາຊີ ແລະອາເມລິກາລາຕິນ ໄດ້ຢືນຢັນເຖິງທ່ວງທ່າແຫ່ງການຂ້າມຜ່ານຈາກທຶນນິຍົມໄປສູ່ສັງຄົມນິຍົມຂອງບັນດາລັດໜຸ່ມນ້ອຍທີ່ຫາກໍ່ປົດປ່ອຍອອກຈາກ ລັດທິລ່າເມືອງຂຶ້ນ.

ຕົກມາຮອດຕອນຕົ້ນຊຸມປີ ໕໐ ຂອງສະຕະວັດນີ້, ມວນມະນຸດຈຳນວນຫລາຍກວ່າ ໑/໓ ໄດ້ຫລຸດພົ້ນອອກຈາກການຂູດຮີດ ແລະ ການກົດຂີ່ຢ່າງສົມເຊີງ ແລະ ກ້າວຂຶ້ນບົນເສັ້ນທາງແຫ່ງການກໍ່ສ້າງສັງຄົມນິຍົມ. ບັນດາປະຊາຊາດທີ່ກ້າວໄປສູ່ລະບອບສັງຄົມນິຍົມນັ້ນ ກໍນັບມື້ນັບຫລາຍຂຶ້ນ.ລະບົບສັງຄົມນິຍົມໂລກ ກໍໄດ້ຮັບການຂະຫຍາຍຕົວ ແລະ ໄດ້ຮັບການປັບປຸງ,ອັນເປັນການສະແດງໃຫ້ເຫັນເຖິງຄວາມດີເລີດຂອງສັງຄົມໃໝ່.

ດ້ວຍບັນດາຜົນສຳເລັດຕົວຈິງນັ້ນ ລະບອບສັງຄົມນິຍົມໂລກໄດ້ພິສູດໃຫ້ເຫັນເຖິງຄວາມດີເລີດຂອງມັນເໜືອລະບອບທຶນນິຍົມ. ການຂະຫຍາຍຕົວແຫ່ງການຜະລິດຂອງສັງຄົມ ພາຍໃຕ້ລະບອບສັງຄົມນິຍົມນັ້ນ ແມ່ນດຳເນີນໄປຢ່າງມີຈັງຫວະ ເຊິ່ງລະບົບທຶນນິຍົມ ບໍ່ສາມາດເຮັດແນວນັ້ນໄດ້. ຕົວຢ່າງເຊັ່ນ, ແຕ່ປີ ໑໙໕໐ ຫາປີ ໑໙໘໔ ລາຍໄດ້ແຫ່ງຊາດຂອງບັນດາປະເທດສັງຄົມນິຍົມ ທີ່ເປັນສະມາຊິກຂອງສະພາຊ່ວຍເຫຼືອເຊິ່ງກັນແລະກັນທາງດ້ານເສດຖະກິດ ( ອົງການແຊັບ ) ໄດ້ເພີ່ມຂຶ້ນ ໓,໘ ເທົ່າ, ຍອດຜະລິດພັນອຸດສາຫະກຳເພີ່ມຂຶ້ນ ໔,໓ ເທົ່າ, ຜົນຜະລິດກະສິກຳເພີ່ມຂຶ້ນ ໒,໓ ເທົ່າ. ຍ້ອນວ່າບັນດາປະເທດສັງຄົມນິຍົມມີຈັງຫວະຂະຫຍາຍຕົວທີ່ສູງ ດັ່ງນັ້ນອັດຕາສ່ວນຂອງບັນດາປະເທດດັ່ງກ່າວຢູ່ໃນການຜະລິດ ຂອງໂລກ ຈຶ່ງເພີ່ມຂຶ້ນຢູ່ເລື້ອຍໆ, ມາຮອດຕອນກາງຂອງຊຸມປີ ໘໐,ວົງຄະນາຍາດສັງຄົມນິຍົມໄດ້ກວມເອົາ ໔໕% ຂອງລາຍໄດ້ແຫ່ງຊາດຂອງໂລກແລະກວມເອົາ ໓໓% ຂອງຜົນຜະລິດອຸດສາຫະກຳຂອງໂລກ, ພ້ອມດຽວກັນນີ້ ກໍໄດ້ບັນລຸຜົນສຳເລັດອັນຍິ່ງໃຫຍ່ຢູ່ໃນຂົງເຂດເສດຖະກິດ, ວິທະຍາສາດແລະເຕັກນິກ. ການທີ່ປະຊາຊົນໝົດທຸກຄົນມີວຽກເຮັດງານທຳ ແລະເຮັດວຽກສອດຄ່ອງກັບວິຊາການທີ່ໄດ້ຮັບ, ການສຶກສາ ແລະ ຮັບໃຊ້ທາງການແພດຢ່າງບໍ່ໄດ້ເສຍຄ່າ, ການປົກປັກຮັກສາແມ່ ແລະ ເດັກ, ການຮັບປະກັນເບ້ຍບຳນານ, ທັງໝົດເຫຼົ່ານີ້ ແລະ ໝາກຜົນອື່ນໆທາງດ້ານສັງຄົມອີກນັ້ນ ໄດ້ກາຍເປັນມາດຖານແຫ່ງການດຳລົງຊີວິດຂອງປະຊາຊາດໃນບັນດາປະເທດສັງຄົມນິຍົມ. ອຳນາດປະຊາຊົນໄດ້ຮັບປະກັນ ຄວາມສະເໝີພາບທາງດ້ານການເມືອງ ຢູ່ໃນສັງຄົມ, ໄດ້ເຮັດໃຫ້ ມີຄວາມສະເໝີພາບ ແລະ ມິດຕະພາບລະຫວ່າງຊາດ, ໄດ້ປະຕິບັດນະໂຍບາຍການເມືອງພາຍນອກທີ່ຮັກຫອມສັນຕິພາບ ໃຫ້ປະກົດເປັນຈິງ ແລະ ໄດ້ໃຫ້ການສະໜັບສະໜູນການຕໍ່ສູ້ປົດປ່ອຍຊາດ ແລະ ຕ້ານລັດທິຈັກກະພັດ ແລະ ລັດທິ ລ່າຫົວເມືອງຂຶ້ນຂອງບັນດາປະຊາຊາດ.

ຜົນສຳເລັດຂອງບັນດາປະເທດສັງຄົມນິຍົມ ຢູ່ໃນການສ້າງສາລະບອບໃໝ່ນີ້, ສ່ວນຫຼາຍແລ້ວກໍແມ່ນຍ້ອນວ່າເຂົາເຈົ້າສັງກັດຢູ່ໃນ ວົງຄະນາຍາດສັງຄົມນິຍົມໂລກ. ການຮ່ວມມືຂອງບັນດາລັດສັງຄົມນິຍົມນັ້ນມີພື້ນຖານ

ພາວະວິໄສຄື: ມີທາດແທ້ລວມທາງຈິນຈຸ້ນໃນດ້ານລະບອບເສດຖະກິດ-ສັງຄົມ ແລະ ອຳນາດແຫ່ງລັດ, ມີໂລກະທັດມາກ-ເລນິນອັນດຽວກັນ.ລະບົບສັງຄົມນິຍົມໂລກ ແມ່ນການຮ່ວມສຳພັນທາງດ້ານການເມືອງ, ເສດຖະກິດ ແລະ ສັງຄົມຂອງບັນດາປະຊາຊາດທີ່ມີເສລີພາບ ແລະ ມີອະທິປະໄຕ ທີ່ພວມກ້າວເດີນໄປຕາມເສັ້ນທາງສັງຄົມນິຍົມ ເຊິ່ງມີເຈດຈຳນົງ ແລະ ຜົນປະໂຫຍດທີ່ເປັນອັນໜຶ່ງອັນດຽວກັນ ແລະ ມີຄວາມສາມັກຄີສາກົນສັງຄົມນິຍົມອັນແໜ້ນແຟ້ນ. ລະບົບສັງຄົມນິຍົມໂລກ ແມ່ນການພົວພັນລະຫວ່າງປະເທດ ທາງດ້ານການເມືອງ ແລະ ເສດຖະກິດແບບໃໝ່.

ການພົວພັນສາກົນແບບໃໝ່ນີ້ ແມ່ນເກີດມາຈາກກະໂຕທາດແທ້ ຂອງລະບອບສັງຄົມນິຍົມ ອັນເປັນຄືລະບອບສັງຄົມໜຶ່ງນັ້ນ. ຢູ່ໃນ "ຖະແຫລງການຂອງພັກກອມມູນິດ" ນັ້ນ ກ.ມາກ ແລະ ຟ.ອັງແກນ ໄດ້ຊີ້ແຈງເຖິງຄວາມແຕກຕ່າງຢ່າງຂາດຕົວ ເມື່ອສົມທຽບການພົວພັນລະຫວ່າງບັນດາປະຊາຊາດ ພາຍໃຕ້ລະບອບສັງຄົມນິຍົມກັບການພົວພັນລະຫວ່າງລັດ ແລະຈົນຊາດໃນລະບອບນາຍທຶນ. ພວກເພິ່ນໄດ້ຂຽນວ່າ: "ການຂູດຮີດລະຫວ່າງຄົນກັບຄົນນັ້ນ ຈະຖືກລົບສູນເຖິງຂັ້ນໃດ ກໍຫມາຍເຖິງວ່າ ການກົດຂີ່ຂູດຮີດລະຫວ່າງຊາດຕໍ່ຊາດ ກໍຈະຖືກລົບສູນເຖິງຂັ້ນນັ້ນ.

ພ້ອມກັບການຫມົດສິ້ນຄວາມເປັນປໍລະປັກກັນທາງຈົນຈຸ້ນຢູ່ພາຍໃນ ຈົນຊາດນັ້ນ, ການພົວພັນທີ່ເປັນແບບສັດຕູລະຫວ່າງຈົນຊາດ ກໍຈະສູນຫາຍໄປເຊັ່ນດຽວກັນ" [໑].

ໃນເວລາຕໍ່ມາ ແມ່ນ ວ.ອິ.ເລນິນ ທີ່ໄດ້ເປັນຜູ້ສ້າງທິດສະດີກ່ຽວກັບຫລັກການພົວພັນສາກົນແບບໃໝ່.ໂດຍຄົ້ນພົບເນື້ອແທ້ຂອງລັດທິສາກົນກຳມາຊີບນັ້ນ, ເລນິນ ໄດ້ຂຽນວ່າ: "ທຶນນິຍົມເປັນກຳລັງສາກົນກຳລັງໜຶ່ງ , ເພື່ອຈະເອົາຊະນະມັນໄດ້ນັ້ນຈຳເປັນຕ້ອງຈະມີພັນທະພາບສາກົນຂອງກຳມະກອນ ແລະ ພາລະດອນພາບສາກົນຂອງເຂົາເຈົ້າ.

ພວກເຮົາ ແມ່ນຜູ້ຕ້ານຄວາມເປັນສັດຕູລະຫວ່າງຊາດ, ຄວາມອາຄາດບາດຫມາງລະຫວ່າງຊາດ ແລະ ຄວາມຢູ່ໂດດດ່ຽວຂອງແຕ່ລະຈົນ -

---

໑) ກ.ມາກ ແລະ ຟ.ອັງແກນ. ບົດນິພົນ, ເຫລັ້ມທີ ໔, ໜ້າ ໔໔໕.

ຊາດ. ພວກເຮົາແມ່ນຜູ້ສະໜັບສະໜູນຄວາມສາມັກຄີລະຫວ່າງຊາດແມ່ນ ນັກສາກົນນິຍົມ" ໑). ຢູ່ໃນເອກະສານ ກ່ຽວກັບນະໂຍບາຍຕ່າງປະເທດ ຂອງລັດຖະບານໂຊວຽດ ທີ່ລົງນາມໂດຍ ວ.ອີ.ເລນິນ ເມື່ອວັນທີ ໑໙ພະ ຈິກ ປີ ໑໙໑໙, ພາຍຫລັງໄຊຊະນະຂອງການປະຕິວັດສັງຄົມນິຍົມ ຢູ່ລັດ ເຊຍໜຶ່ງປີນັ້ນ, ການພົວພັນເຊິ່ງກັນ ແລະ ກັນ ລະຫວ່າງບັນດາປະຊາ- ຊາດ ທີ່ຖືກປົດປ່ອຍອອກຈາກການກົດຂີ່ ໄດ້ຖືກກຳນົດໄວ້ດັ່ງນີ້: "ອັນນັ້ນຈະ ແມ່ນພັນທະພາບຂອງມະຫາຊົນຜູ້ອອກແຮງງານທຸກຊາດຢູ່ໃນການຕໍ່ສູ້ ຂອງ ເຂົາເຈົ້າ ເພື່ອການສ້າງສາ ແລະ ປັບປຸງລະບອບສັງຄົມນິຍົມຢູ່ບົນ ຊາກ ສະຫລັກຫັກພັງຂອງລະບອບຂຸນເສິກ, ຈັກກະພັດ ແລະ ຄວາມເປັນທາດ ທາງດ້ານເສດຖະກິດ"໒). ເປັນເທື່ອທຳອິດໃນປະຫວັດສາດທີ່ແນວຄິດສາ ກົນກຳມາຊີບ ໄດ້ຖືກນຳມາປະຕິບັດໃຫ້ປະກົດເປັນຈິງ ຢູ່ໃນສະຫະພາບໂຊ ວຽດ ເຊິ່ງເປັນບ່ອນທີ່ລັດຂອງຫລາຍຊົນຊາດຊົນເຜົ່າ ຂອງບັນດາປະຊາ ຊາດມີສິດທິເທົ່າທຽມກັນ ໄດ້ຖືກສ້າງຂຶ້ນ ແລະ ບ່ອນທີ່ໄດ້ເກີດມີການພົວ- ພັນລະຫວ່າງຊົນຊາດທີ່ປາສະຈາກຄວາມເປັນປໍລະປັກກັນທາງຊົນຊັ້ນ ແລະ ທາງຊາດ. ມິດຕະພາບ, ການຮ່ວມມື ແລະ ການຊ່ວຍເຫລືອ ເຊິ່ງກັນ ແລະ ກັນຂອງປະຊາຊົນຢູ່ໃນສະຫະພາບໂຊວຽດນັ້ນ ເປັນສິ່ງທີ່ກຳນົດ ລັກ ສະນະຂອງການພົວພັນແບບໃໝ່ ອັນເປັນພື້ນຖານສຳລັບການເຕົ້າໂຮມກັນ ເຂົ້າ ຂອງບັນດາປະເທດໃນລະບົບສັງຄົມນິຍົມໂລກ.

ການພົວພັນລະຫວ່າງລັດສັງຄົມນິຍົມນັ້ນ ກໍແມ່ນສ້າງຂຶ້ນບົນພື້ນຖານຫຼັກ ການແຫ່ງລັດທິສາກົນສັງຄົມນິຍົມ. ອັນນີ້ມັນແມ່ນຂັ້ນຕອນໜຶ່ງຢູ່ໃນການຂະ ຫຍາຍຕົວຂອງຄວາມສາມັກຄີສາກົນໃນເມື່ອວ່າ ອຳນາດໄດ້ຕົກມາ ເປັນ ຂອງຊາວຜູ້ອອກແຮງງານ, ໃນເມື່ອພັກ ມາກ-ເລນິນ ໄດ້ກາຍເປັນພັກ ກຳອຳນາດ ແລະ ໃນເມື່ອວ່າພັກເປັນຜູ້ແກ້ໄຂບັນຫາການກໍ່ສ້າງ ສັງຄົມ ໃໝ່ໃນພາກຕົວຈິງ, ຣັດແໜ້ນການພົວພັນແບບສັງຄົມນິຍົມລະຫວ່າງລັດ,

---

໑) ວ.ອີ.ເລນິນ.ບົດນິພົນຄົບຊຸດ, ເຫລັ້ມທີ ໔໐, ໜ້າ ໔໙.

໒) "ເອກະສານການເມືອງພາຍນອກຂອງ ສສສຊ". ເຫລັ້ມທີ ໑. ມົດ ສະກູ, ປີ ໑໙໕໗, ໜ້າ ໕.

ຮ່ວມກັນປົກປັກຮັກສາວົງຄະນາຍາດສັງຄົມນິຍົມ.

ຫລັກການແຫ່ງລັດທິສາກົນສັງຄົມນິຍົມ ເຊິ່ງນອນຢູ່ບົນພື້ນຖານການພົວພັນສາກົນແບບໃຫມ່ນັ້ນ ກ່ອນອື່ນຫມົດ ແມ່ນລວມມີສິດທິຂອງຊົນຊາດ ໃນການຕັດສິນດ້ວຍຕົນເອງ, ການເຄົາລົບນັບຖືພົນແຜ່ນດິນອັນຄົບຖ້ວນ, ອະທິປະໄຕ ແລະ ຄວາມເປັນເອກະລາດ, ສິດທິເທົ່າທຽມກັນຂອງບັນດາລັດ ແລະ ການບໍ່ແຊກແຊງເຂົ້າວຽກງານພາຍໃນຂອງກັນ ແລະ ກັນ. ບັນດາປະຊາຊາດ ໄດ້ຕໍ່ສູ້ມານັບຕັ້ງແຕ່ສະໄຫມສັດຕະວັດກາງພຸ້ນ ເພື່ອໃຫ້ມີການປະຕິບັດຫລັກການທີ່ກ່າວຫມາມາເຫລົ່ານີ້ໃຫ້ປະກົດເປັນຈິງຢູ່ໃນການພົວພັນລະຫວ່າງລັດນັ້ນ. ຫລັງຈາກປະກາດຫລັກການເຫລົ່ານີ້ອອກໃນໄລຍະຂຶ້ນກຳອຳນາດຂອງຕົນນັ້ນແລ້ວ, ພວກນາຍທຶນ ບໍ່ໄດ້ມຸ່ງຫມາຍທີ່ຈະນຳເອົາຫລັກການດັ່ງກ່າວນັ້ນໄປປະຕິບັດໃນຕົວຈິງ. ການຄອບງຳຂອງຈັກກະພັດໃນຕົວຈິງແລ້ວ ແມ່ນຫມາຍເຖິງການຢຽບຢ່ຳບັນດາຫລັກການປະຊາທິປະໄຕ ໃນການພົວພັນລະຫວ່າງລັດຢ່າງບັງອາດ. ເປັນເທື່ອທຳອິດ ໃນປະຫວັດສາດທີ່ຫລັກການເຫລົ່ານີ້ ທີ່ໄດ້ຖືກປະຕິບັດໃຫ້ເປັນຈິງ ຢູ່ໃນການພົວພັນເຊິ່ງກັນ ແລະ ກັນ ລະຫວ່າງບັນດາສາທາລະນະລັດ ທີ່ປະກອບເປັນສະຫະພາບໂຊວຽດ ແລະ ບັນດາລັດທີ່ຢູ່ໃນວົງຄະນາຍາດສັງຄົມນິຍົມ.

ຫລັກການອັນເປັນພື້ນຖານກ່ຽວກັບການພົວພັນແບບໃຫມ່ຄື: ການຊ່ວຍເຫລືອເຊິ່ງກັນ ແລະ ກັນຖານອ້າຍນ້ອງ ຢູ່ໃນການກໍ່ສ້າງສັງຄົມໃຫມ່, ຢູ່ໃນການຕໍ່ສູ້ຕ້ານລັດທິຈັກກະພັດ ແລະ ຢູ່ໃນການປົກປ້ອງຫມາກຜົນຂອງລະບອບສັງຄົມນິຍົມນັ້ນ ແມ່ນຕິດພັນໂດຍກົງກັບທາດແທ້ຂອງລະບອບສັງຄົມນິຍົມ ເຊິ່ງເປັນສັງຄົມທີ່ປາສະຈາກການຂູດຮີດລະຫວ່າງຄົນກັບຄົນ ແລະລະຫວ່າງຊາດຫນຶ່ງ ກັບອີກຊາດຫນຶ່ງ.

## ການຮ່ວມມືຢ່າງສະເໝີພາບ

ການຊ່ວຍເຫລືອເຊິ່ງກັນ ແລະ ກັນ ແລະ ການຮ່ວມມືຖານອ້າຍນ້ອງອັນແໜ້ນແຟ້ນ ເຊິ່ງເປັນລັກສະນະພິເສດຂອງການພົວພັນ ລະຫວ່າງ ປະເທດສັງຄົມນິຍົມນັ້ນ ໄດ້ສ້າງເງື່ອນໄຂອັນເອື້ອອຳນວຍທາງດ້ານສາກົນສຳລັບການກໍ່ສ້າງສັງຄົມໃໝ່ຢູ່ໃນແຕ່ລະປະເທດຂອງວົງຄະນາຍາດ. ສ່ວນການຂະຫຍາຍຕົວຢ່າງຮອບດ້ານຂອງແຕ່ລະປະເທດນັ້ນໄດ້ກາຍເປັນເງື່ອນໄຂອັນຕັດສິນໃນການກ້າວໄປໜ້າ ຂອງລະບົບສັງຄົມນິຍົມໂລກ. ຜົນສຳເລັດໃນການພັດທະນາເສດຖະກິດແຫ່ງຊາດ ແລະ ການປັບປຸງການພົວພັນທາງສັງຄົມໃຫ້ດີຂຶ້ນກວ່າເກົ່າ, ຄວາມກ້າວໜ້າຂອງແຕ່ລະປະເທດອ້າຍນ້ອງນັ້ນແມ່ນຕອບສະໜອງຕໍ່ຜົນປະໂຫຍດລວມຂອງສັງຄົມນິຍົມແລະເປັນການປັບປຸງຄວາມເປັນເອກະພາບແລະຄວາມເປັນປຶກແຜ່ນຂອງເຂົາເຈົ້າ. ພັກກອມມູນິດຂອງບັນດາປະເທດໃນວົງຄະນາຍາດສັງຄົມນິຍົມຖືວ່າ ການຮ່ວມມືຂອງບັນດາລັດອ້າຍນ້ອງ ໄດ້ອຳນວຍໃຫ້ເຂົາເຈົ້າໄດ້ນຳໃຊ້ຄວາມດີເລີດ ຂອງລະບົບເສດຖະກິດສັງຄົມນິຍົມ ແລະ ການແບ່ງງານສາກົນສັງຄົມນິຍົມເຂົ້າໃນຜົນປະໂຫຍດຂອງການປັບປຸງຄວາມເຂັ້ມແຂງທາງດ້ານເສດຖະກິດແລະການປ້ອງກັນຊາດ ແລະ ຍົກລະດັບຄວາມຢູ່ດີກິນດີຂອງປະຊາຊົນໃຫ້ສູງຂຶ້ນກວ່າເກົ່າ.

ການຮ່ວມມືທາງດ້ານການເມືອງ ຂອງບັນດາປະເທດສັງຄົມນິຍົມແມ່ນມີບົດບາດສຳຄັນອັນດັບທຳອິດ. ອີງໃສ່ຄວາມເປັນອັນໜຶ່ງອັນດຽວ ທາງດ້ານຫລັກມູນທິດສະດີໃນການກໍ່ສ້າງສັງຄົມໃໝ່ ແລະ ບົນພື້ນຖານ ຄວາມເປັນເອກະພາບໃນການຕີລາຄາບັນຫາການຂະຫຍາຍຕົວຂອງສັງຄົມໃນປະຈຸບັນ ແລະ ສະເພາະໜ້ານັ້ນ, ບັນດາພັກກອມມູນິດ ແລະ ລັດຖະບານຂອງປະເທດໃນວົງຄະນາຍາດສັງຄົມນິຍົມ ໄດ້ດຳເນີນການພົບປະເຈລະຈາ ແລະ ປຶກສາຫາລືເຊິ່ງກັນ ແລະ ກັນເປັນແຕ່ລະໄລຍະ ກ່ຽວກັບ ບັນຫາການສືບຕໍ່ຮ່ວມມື. ສິ່ງທີ່ມີບົດບາດອັນສຳຄັນເປັນພິເສດນັ້ນແມ່ນການພົບປະຂອງບັນດາຜູ້ນຳພັກ ແລະ ລັດອ້າຍນ້ອງ ທີ່ໄດ້ປຶກສາຫາລືກັນເຖິງ ບັນຫາ

ອັນເປັນພື້ນຖານກ່ຽວກັບການກໍ່ສ້າງສັງຄົມນິຍົມແລະການເຮັດໃຫ້ການຮ່ວມມືເລິກເຊິ່ງກວ່າເກົ່າ, ນັບທັງບັນຫາກ່ຽວກັບການພ້ອມພຽງກັນເຄື່ອນໄຫວ ຢູ່ໃນເວທີສາກົນ. ຂໍ້ຕົກລົງຂອງການພົບປະລະດັບສູງສຸດຍອດນັ້ນ ລ້ວນແຕ່ໄດ້ຖືກນຳໄປປະຕິບັດໃຫ້ປະກົດຜົນເປັນຈິງຢູ່ໃນຂົງເຂດການເມືອງ, ແນວຄິດແລະວັດທະນະທຳ. ອົງການຈັດຕັ້ງຂອງພັກອ້າຍນ້ອງ ໄດ້ຖືກເຊື່ອມໂຍງ ເຂົ້າກັນດ້ວຍສາຍພົວພັນຮ່ວມມືກັນຫລາຍສາຍທີ່ສຸດ, ທັງຢູ່ໃນລະດັບເຂດແຄ້ວນ ແລະ ຕົວເມືອງ ກໍຄືຢູ່ໃນລະດັບຕາແສງ ແລະ ໂຮງຈັກໂຮງງານໃຫຍ່ . ເຂົາເຈົ້າ ໄດ້ແລກປ່ຽນບົດຮຽນນຳກັນ ກ່ຽວກັບວຽກງານແນວຄິດ ແລະ ການເມືອງຂອງພັກ ແລະ ກໍໄດ້ຕົກລົງກັນວາງໂຄງການຮ່ວມມືອັນລະອຽດອ່ອນ. ການຮ່ວມມືລະຫວ່າງອົງການຈັດຕັ້ງແຫ່ງລັດ, ອົງການຈັດຕັ້ງມະຫາຊົນ, ກຸ່ມສຳພັນການຜະລິດ ແລະ ໜ່ວຍງານກໍມີລັກສະນະຫລາຍດ້ານ . ພົນລະເມືອງຫລາຍລ້ານຄົນຂອງບັນດາປະເທດສັງຄົມນິຍົມ ໄດ້ເຂົ້າຮ່ວມໂດຍກົງຢູ່ໃນການແກ້ໄຂບັນຫາກໍ່ສ້າງສັງຄົມນິຍົມຮ່ວມກັນ. ອັນນີ້ ມັນໄດ້ຊ່ວຍໃຫ້ຄວາມເປັນເອກະພາບກັນລະດັບສາກົນໄດ້ຮັບການກໍ່ຮ່າງສ້າງຕົວຢູ່ໃນການປະຕິບັດນະໂຍບາຍການເມືອງພາຍໃນ ແລະ ພາຍນອກ ຂອງປະເທດສັງຄົມນິຍົມ ແລະ ຈະພາເຂົາເຈົ້າໄປສູ່ການຫຍັບເຂົ້າຫາກັນໃນທຸກໆດ້ານ.

ການຮ່ວມມືກັນທາງດ້ານເສດຖະກິດຂອງບັນດາປະເທດສັງຄົມນິຍົມນັ້ນມີຄວາມໝາຍອັນສຳຄັນຍິ່ງ. ກຳລັງການຜະລິດຂອງບັນດາປະເທດທີ່ເປັນສະມາຊິກສະພາຊ່ວຍເຫລືອເຊິ່ງກັນ ແລະ ກັນທາງດ້ານເສດຖະກິດ (ແຊັບ) ໄດ້ບັນລຸເຖິງລະດັບແຫ່ງການຂະຫຍາຍຕົວສູງ ແລະ ຢູ່ໃນປະເທດເຫລົ່ານີ້ໂຄງປະກອບຊຸດສາຂະກຳທີ່ມີຫລາຍຂະແໜງການຂອງເສດຖະກິດ ແຫ່ງຊາດ ໄດ້ຖືກສ້າງຂຶ້ນ. ພັກກອມມູນິດ ໄດ້ຖືເອົາການສົມທົບ ຄວາມດີເລີດຂອງລະບອບສັງຄົມ ສັງຄົມນິຍົມກັບຜົນສຳເລັດອັນສູງສົ່ງ ຂອງການປະຕິວັດເຕັກນິກ–ວິທະຍາສາດຢ່າງກາຍະອິນຊຸ້ມ ເປັນໜ້າທີ່ຍຸດທະສາດໃນການຂະຫຍາຍເສດຖະກິດ. ເພາະສະນັ້ນ ການຮ່ວມມືທາງເສດຖະກິດ ແລະເຕັກນິກ–ວິທະຍາສາດ ລະຫວ່າງບັນດາປະເທດທີ່ເປັນສະມາຊິກຂອງ ອົງການ ແຊັບ ນັ້ນ ຈຶ່ງໄດ້ມີການປັບປຸງ ແລະ ໄດ້ເຮັດໃຫ້ມີຄວາມເລິກເຊິ່ງ

ຢ່າງສະໝ່ຳສະເໝີ. ການປະສານສົມທົບຂອງປະເທດສັງຄົມນິຍົມ ອ້າຍນ້ອງຢູ່ໃນຂົງເຂດການຜະລິດວັດຖຸສິ່ງຂອງ ແລະ ການແລກປ່ຽນທາງການຄ້ານັ້ນ ໄດ້ສ້າງເງື່ອນໄຂໃຫ້ແກ່ການຮ່ວມສຳພັນ ເສດຖະກິດ ສັງຄົມນິຍົມ ເຊິ່ງຊ່ວຍເຮັດໃຫ້ບັນດາປະເທດຢູ່ໃນວົງຄະນາຍາດສັງຄົມນິຍົມຫຍັບໃກ້ເຂົ້າຫາກັນ.

ກ.ມາກ ແລະ ຟ.ອັງແກນ ໄດ້ຊີ້ແຈງວ່າ ຂະບວນວິວັດ ແຫ່ງການຫັນການຜະລິດໃຫ້ເປັນລັກສະນະສາກົນນັ້ນ ແມ່ນຢູ່ບົນພື້ນຖານແຫ່ງທ່າອ່ຽງກ້າວໄປສູ່ການຫັນຊີວິດສັງຄົມທັງໝົດໃຫ້ເປັນລັກສະນະສາກົນ.ຄຳເຫັນດັ່ງຕໍ່ໄປນີ້ຂອງເລນິນ ກໍໄດ້ຢືນຢັນເຖິງສິ່ງດັ່ງກ່າວນັ້ນທີ່ວ່າ "...ຕັ້ງແຕ່ ລະບອບທຶນນິຍົມພຸ້ນ ຊີວິດທັງໝົດທາງດ້ານເສດຖະກິດ, ການເມືອງແລະຈິດໃຈຂອງມະນຸດແມ່ນນັບມື້ນັບມີລັກສະນະສາກົນຫລາຍກວ່າເກົ່າແລ້ວ, ສ່ວນລະບອບສັງຄົມນິຍົມຈະເຮັດໃຫ້ມັນມີລັກສະນະສາກົນຢ່າງສົມບູນ" ໑). ເພິ່ນຍັງໄດ້ເນັ້ນເຖິງ "ທ່າອ່ຽງທີ່ກ້າວໄປສູ່ການສ້າງເສດຖະກິດຂອງໂລກ ໃຫ້ເປັນເອກະພາບກັນໝົດ ໂດຍຢູ່ໃຕ້ການບັງຄັບບັນຊາຂອງຊົນຊັ້ນກຳມາຊີບທຸກຊາດແລະປະຕິບັດໄປຕາມແຜນການລວມ,ທ່າອ່ຽງແນວນີ້ໄດ້ປະກົດຕົວຂຶ້ນຢ່າງເດັ່ນຈັດແຕ່ຕອນຢູ່ໃນລະບອບທຶນນິຍົມພຸ້ນ ແລະ ພາຍໃຕ້ລະບອບ ສັງຄົມນິຍົມ ມັນກໍຈະໄດ້ຮັບການເສີມຂະຫຍາຍຕໍ່ໄປ ແລະ ຈະສຳເລັດຜົນຄົບຖ້ວນຢ່າງບໍ່ຕ້ອງສົງໄສ" ໒).

ສິ່ງທີ່ສະແດງເຖິງທ່າອ່ຽງດັ່ງກ່າວໃນເງື່ອນໄຂປະຈຸບັນນີ້ ແມ່ນໄດ້ແກ່ໂຄງການຄົບຊຸດກ່ຽວກັບການຮ່ວມສຳພັນເສດຖະກິດສັງຄົມນິຍົມ ທີ່ໄດ້ ຮັບຮອງເອົາເມື່ອປີ ໑໙໗໑ ເຊິ່ງຄາດໝາຍໃຫ້ມີການຂະຫຍາຍຮູບການແບບໃໝ່ຂອງການຮ່ວມມືຫລືເວົ້າແນວໜຶ່ງອີກ ແມ່ນຮູບການໃໝ່ແຫ່ງການພົວພັນການຜະລິດລະຫວ່າງປະເທດທີ່ເປັນສະມາຊິກ ແຊັບ ແລະ ຕ້ອງຮັບປະກັນຄວາມສອດຄ່ອງກັບຄວາມຮຽກຮ້ອງຕ້ອງການ ໃນການພັດທະນາກຳລັງການຜະລິດໃນປະຈຸບັນຂອງເຂົາເຈົ້າໃຫ້ຫລາຍກວ່າເກົ່າ. ກອງປະຊຸມສູດຍອດ ດ້ານເສດຖະກິດຂອງບັນດາປະເທດທີ່ເປັນສະມາຊິກຂອງ ແຊັບເມື່ອ

---

໑) ວ.ອີ.ເລນິນ.ບົດນິພົນຄົບຊຸດ, ເຫຼັ້ມທີ ໒໙, ໜ້າ ໙໑໘.

໒) ວ.ອີ.ເລນິນ. ບົດນິພົນຄົບຊຸດ, ເຫລັ້ມທີ ໔໑, ໜ້າ ໑໖໔.

ປີ ໑໙໗໔ ໄດ້ກຳນົດວິທີການເຄື່ອນໄຫວຮ່ວມກັນໃນສະເພາະໜ້າຢູ່ໃນທຸກຂົງເຂດຂອງການຜະລິດວັດຖຸ. ໄດ້ມີການຮັບຮອງເອົາໂຄງການ ຄົບຊຸດ ກ່ຽວກັບຄວາມກ້າວໜ້າທາງດ້ານວິທະຍາສາດ-ເຕັກນິກຂອງບັນດາ ປະເທດສະມາຊິກ ແຊັບ ຈົນເຖິງ ປີ ໒໐໐໐, ໂຄງການດັ່ງກ່າວນີ້ ຍັງປະກອບດ້ວຍລະບົບຂໍ້ຕົກລົງ ກ່ຽວກັບການຮ່ວມງານທາງດ້ານເຕັກນິກຢູ່ໃນຂົງເຂດການຜະລິດທີ່ກ້າວໜ້າກວ່າໝູ່.

ການຮ່ວມສຳພັນເສດຖະກິດສັງຄົມນິຍົມ ແມ່ນຂະບວນວິວັດທີ່ຖືກດັດສົມຢ່າງມີແຜນການ ໃນການແບ່ງງານສາກົນສັງຄົມນິຍົມ, ການເຮັດໃຫ້ເສດຖະກິດແຫ່ງຊາດໃກ້ຄຽງກັນເຂົ້າ ແລະ ການກໍ່ຮ່າງສ້າງຕົວຂອງເສດຖະກິດສາກົນຄົບຊຸດ. ຢູ່ໃນບັນດາປະເທດທີ່ເປັນສະມາຊິກຂອງ ແຊັບ ນັ້ນໄດ້ຄ່ອຍໆມີການເຮັດໃຫ້ການຂະຫຍາຍຕົວທາງເສດຖະກິດມີລະດັບ ເທົ່າທຽມກັນ. ສາຍພົວພັນອັນໜັ້ນທ່ຽງ ແລະ ເລິກເຊິ່ງໄດ້ຖືກກໍ່ຮ່າງສ້າງຕົວຂຶ້ນຢູ່ໃນຂະແໜງການເສດຖະກິດ, ວິທະຍາສາດ ແລະ ເຕັກນິກພື້ນຖານ,ຕະຫລາດສາກົນຂອງປະເທດເຫລົ່ານີ້ ກໍຖືກເປີດກວ້າງ ແລະ ການພົວພັນສິນຄ້າ-ການເງິນ ກໍໄດ້ຮັບການປັບປຸງໃຫ້ດີຂຶ້ນ.

ຢູ່ບົນພື້ນຖານການປະສານສົມທົບແຜນການຫ້າປີ ແຫ່ງການພັດທະນາເສດຖະກິດຂອງແຕ່ລະປະເທດ ແລະ ການຮັບຮອງເອົາໂຄງການ ຮ່ວມມືຍາວນານ ຢູ່ໃນຂະແໜງການຜະລິດວັດຖຸທີ່ນຳໜ້າ ເຊິ່ງໄດ້ວາງອອກຮ່ວມກັນນັ້ນ, ບັນດາປະເທດທີ່ເປັນສະມາຊິກຂອງ ແຊັບ ກໍຍັງມີການແບ່ງການຜະລິດສະເພາະ ແລະ ການຮ່ວມງານຢູ່ໃນຂົງເຂດອຸດສາຫະກຳ ແລະກະສິກຳ, ແລະ ຢູ່ໃນວຽກງານຄົ້ນຄວ້າວິທະຍາສາດ ກໍຄືວຽກງານອອກແບບ ແລະ ທົດລອງ. ໂດຍອີງໃສ່ແຫລ່ງວັດຖຸດິບ ແລະ ຄວາມອາດສາມາດໃນການຜະລິດຂອງແຕ່ລະປະເທດຢ່າງສົມເຫດສົມຜົນນັ້ນ, ການແບ່ງງານສາກົນໄດ້ອຳນວຍຄວາມສະດວກໃຫ້ແກ່ການສຸມກຳລັງໃສ່ ຂະແໜງການເສດຖະກິດທີ່ມີທ່າຂະຫຍາຍແລະທີ່ມີຜົນທາງເສດຖະກິດຫລາຍກວ່າໄດ້ອັນທີ່ຈະພາໄປສູ່ບ່ອນປະຢັດຊັບພະຍາກອນທາງດ້ານວັດຖຸແລະຄົນໄດ້ຢ່າງຫລວງຫລາຍ. ຂະແໜງການຜະລິດສະເພາະທີ່ໄດ້ຖືກສ້າງຂຶ້ນ ແລະ ພວມໄດ້ຮັບການຂະຫຍາຍຕົວຢູ່ໃນປະເທດທີ່ເປັນສະມາຊິກຂອງ ແຊັບ ນີ້ ແມ່ນໄດ້ຮັບການປະ

ກອບເຕັກນິກທີ່ກ້າວໜ້າ ແລະ ຜະລິດຜະລິດຕະພັນອອກໃນຈຳນວນ ທີ່ຂຶ້ນກັບຄວາມຮຽກຮ້ອງຕ້ອງການຂອງປະເທດທີ່ເຂົ້າຢູ່ໃນການຮ່ວມສຳພັນນີ້ . ຄວາມເອົາໃຈໃສ່ພິເສດອັນໜຶ່ງ ກໍແມ່ນເລັງໃສ່ການຂະຫຍາຍຂະແໜງ-ການທີ່ມີບົດບາດຕັດສິນຢູ່ໃນຄວາມກ້າວໜ້າ ທາງດ້ານເຕັກນິກ- ວິທະຍາສາດໃນປະຈຸບັນຄື: ພະລັງງານປະລະມານູ, ອຸດສາຫະກຳ ເອເລັກໂຕຣນິກ ແລະ ການຜະລິດເຄື່ອງຈັກຄອມພິວເຕີ, ການປະກອບສ້າງ ຫຸ່ນຍົນ ແລະ ລະບົບອັດຕະໂນມັດເຂົ້າໃນການກໍ່ສ້າງເຄື່ອງຈັກ, ອຸດສາຫະກຳເຄມີ, ຊີວະສາດ ແລະ ຂະແໜງການອື່ນໆ.

ການປັບປຸງແລະການເຮັດໃຫ້ການຮ່ວມມືເລິກເຊິ່ງກໍຄື ການຂະຫຍາຍການຮ່ວມສຳພັນເສດຖະກິດສັງຄົມນິຍົມຂອງບັນດາປະເທດທີ່ເປັນ ສະມາຊິກຂອງແຊບ ນັ້ນແມ່ນດຳເນີນໄປຢູ່ບົນພື້ນຖານການເຄົາລົບອະທິປະໄຕແຫ່ງລັດ ແລະ ຜົນປະໂຫຍດແຫ່ງຊາດ ແລະ ບົນພື້ນຖານຄວາມສະໝັກໃຈອັນເຕັມປ່ຽມຂອງຜູ້ເຂົ້າຮ່ວມ ໂດຍບໍ່ໄດ້ແຕະຕ້ອງເຖິງ ບັນຫາການວາງແຜນພາຍໃນ, ການເຄື່ອນໄຫວທາງການເງິນ ແລະ ການໄລ່ລຽງເສດຖະກິດຂອງອົງການຈັດຕັ້ງແຫ່ງຊາດ ແຕ່ຢ່າງໃດ. ສິ່ງສຳຄັນທີ່ຕ້ອງເນັ້ນໃຫ້ເຫັນນັ້ນ ກໍຄື ແຊບ ບໍ່ໄດ້ເປັນກຸ່ມເສດຖະກິດທີ່ຄັບແຄບ. ປະເທດ ສັງຄົມນິຍົມອື່ນໆ ນັບທັງປະເທດພວມພັດທະນາ ແລະ ປະເທດທຶນນິຍົມຈຳນວນໜຶ່ງກໍໄດ້ຮ່ວມມືກັບ ແຊບ ຢ່າງຕັ້ງໜ້າ.

ການພົວພັນອັນແໜ້ນແຟ້ນ ຂອງບັນດາປະເທດສັງຄົມນິຍົມ ຢູ່ໃນ ຂົງເຂດວັດທະນະທຳ, ວິທະຍາສາດ ແລະ ການສຶກສາ ກໍໄດ້ຮັບ ການຂະຫຍາຍຕົວຢ່າງກວ້າງຂວາງ. ຄວາມຈະເລີນຮຸ່ງເຮືອງທາງດ້ານວັດທະນະທຳ ຂອງປະຊາຊາດໃນວົງຄະນາຍາດສັງຄົມນິຍົມນັ້ນ ໄດ້ເຮັດໃຫ້ວັດທະ-ນະທຳແຫ່ງຊາດຂອງແຕ່ລະປະເທດອຸດົມຮັ່ງມີຂຶ້ນ ແລະ ຫຍັບເຂົ້າມໍກັນ , ນັບມື້ນັບເຕັມໄປດ້ວຍລັກສະນະສາກົນ ເຊິ່ງເປັນລັກສະນະສະເພາະ ຂອງຄົນໃນສັງຄົມ ສັງຄົມນິຍົມ. ປັດໄຈທີ່ຊ່ວຍໃຫ້ສິ່ງດັ່ງກ່າວປະກົດ ເປັນຈິງແມ່ນການແປ້ນວັນນະຄະດີ ແລະ ວິທະຍາສາດມາເປັນພາສາ ຂອງປະເທດສັງຄົມນິຍົມອື່ນໆ, ການແລກປ່ຽນກັນໃນການວາງສະແດງວິຈິດສິນ , ການແລກປ່ຽນກອງລະຄອນ ແລະ ນັກຮ້ອງຍອດນິຍົມ ແລະ ງານມະໂຫ

ລານຮູບເງົາ ຂອງປະເທດອ້າຍນ້ອງ. ການຮ່ວມມືຢູ່ໃນຂົງເຂດສາມັນສຶກສາ, ການສຶກສາວິຊາສະເພາະຊັ້ນກາງ ແລະ ຊັ້ນສູງ ກໍໄດ້ບັນລຸເຖິງລະດັບອັນສູງ. ປະເທດໃນວົງຄະນາຍາດສັງຄົມນິຍົມ ໄດ້ສຸມເຫື່ອແຮງ ຂອງນັກປາດ ແລະ ໜ່ວຍງານວິທະຍາສາດ ເຂົ້າໃນການຄົ້ນຄວ້າບັນຫາປະຈຸບັນໃນຂົງເຂດວິທະຍາສາດ-ເຕັກນິກ, ທຳມະຊາດ ແລະສັງຄົມ. ການເປີດກວ້າງສາຍພົວພັນທາງດ້ານວັດທະນະທຳ ແລະ ວິທະຍາສາດໄດ້ເປັນການປະກອບສ່ວນເຮັດໃຫ້ບັນດາປະເທດໃນວົງຄະນາຍາດສັງຄົມນິຍົມຫຍັບເຂົ້າມໍ່ກັນໃນຫລາຍດ້ານ.

ພ້ອມກັບການຂະຫຍາຍຄວາມຮ່ວມມືແບບສັນຕິນັ້ນ, ບັນດາປະເທດວົງຄະນາຍາດສັງຄົມນິຍົມກໍຈຳຕ້ອງໄດ້ຄຳນຶງເຖິງສະຖານະການດ້ານ ທະຫານ ແລະ ດ້ານການເມືອງ ທີ່ກຳລັງປະກົດຕົວຂຶ້ນຢູ່ໃນໂລກ. ບັນດາ ປະເທດສັງຄົມນິຍົມ ໄດ້ດຳເນີນມາດຕະການອັນຈຳເປັນສຳລັບການສ້າງລະບົບປ້ອງກັນຄວາມປອດໄພລວມໝູ່ ເພື່ອພິທັກຮັກສາໄຊຊະນະຂອງປະຊາຊົນ ຂອງຕົນເອງ ຈາກການກະທຳຮຸກຮານຂອງພວກຈັກກະພັດ. ເພື່ອຕອບໂຕ້ຜູ້ຮຸກຮານນັ້ນ ລັດສັງຄົມນິຍົມຢູ່ເອີລົບໄດ້ຮ່ວມກັນເຂົ້າເປັນພັນທະພາບປ້ອງກັນຄືອົງການສົນທິສັນຍາວາກໂຊວີ ເຊິ່ງເປັນອົງການປະສານສົມທົບນະໂຍບາຍການເມືອງຢູ່ໃນດ້ານການປ້ອງກັນ ແລະ ດຳເນີນມາດຕະການຕ່າງໆ ເພື່ອປັບປຸງກຳລັງປະກອບອາວຸດຂອງຕົນໃຫ້ເຂັ້ມແຂງກວ່າເກົ່າ.

ສົນທິສັນຍາ ວາກໂຊວີ ເມື່ອປີ ໑໙໕໕ ວ່າດ້ວຍມິດຕະພາບ, ການຮ່ວມມື ແລະ ຊ່ວຍເຫລືອເຊິ່ງກັນ ແລະ ກັນນັ້ນ ເປັນມາດຕະການຕອບໂຕ້ຂອງບັນດາປະເທດສັງຄົມນິຍົມ ຕໍ່ການເຄື່ອນໄຫວຂອງກຸ່ມນາໂຕເຊິ່ງເປັນກຸ່ມຮຸກຮານຂອງບັນດາລັດຈັກກະພັດ ທີ່ຖືກສ້າງຂຶ້ນເມື່ອປີ ໑໙໔໙ ຕາມຂໍ້ລິເລີ່ມຂອງສະຫະລັດອາເມລິກາ. ເປົ້າໝາຍພື້ນຖານຂອງອົງການສົນທິສັນຍາວາກໂຊວີ ແມ່ນເພື່ອຄ້ຳປະກັນຄວາມປອດໄພຂອງປະເທດ ທີ່ເຂົ້າຮ່ວມ ແລະ ປົກປ້ອງສັນຕິພາບຢູ່ເອີລົບ. ບັນດາປະເທດທີ່ເຂົ້າຮ່ວມອົງການສົນທິສັນຍາ ວາກໂຊວີ ( ບູນກາຣີ, ຮົງກາລີ, ສປຢ, ໂປໂລຍ, ຣູມານີ , ສະຫະພາບໂຊວຽດ ແລະ ເຊັກໂກສະໂລວາກີ ) ໄດ້ໃຫ້ຄຳໝັ້ນ ສັນຍາວ່າຈະບໍ່ຂົ່ມຂູ່ດ້ວຍກຳລັງ ແລະ ຈະນຳໃຊ້ກຳລັງກໍພຽງແຕ່ໃນກໍລະນີມີການ

ຮຸກຮານທາງອາວຸດ ຕໍ່ປະເທດໃດກໍຕາມ ທີ່ເປັນສະມາຊິກຂອງອົງການນັ້ນ, ອົງການສົນທິສັນຍາດັ່ງກ່າວ ມີຫນ້າທີ່ໃຫ້ການຊ່ວຍເຫລືອດ້ວຍທຸກວິທີທາງຕາມຄວາມສາມາດຂອງເຂົາເຈົ້າ ລວມທັງການຊ່ວຍເຫລືອທາງການທະຫານແກ່ຜູ້ທີ່ຕົກເປັນເຫຍື່ອຂອງການຮຸກຮານນັ້ນ. ອົງການສົນທິສັນຍາວາກໂຊວີ ແມ່ນແຕກຕ່າງໂດຍພື້ນຖານກັບກຸ່ມອັດລັງຕິກເຫນືອ ທາງດ້ານລັກສະນະຂອງມັນ ແລະ ການເຄື່ອນໄຫວທາງການເມືອງຕົວຈິງ. ກົງກັນຂ້າມກັບແນວທາງການເມືອງຂອງກຸ່ມ ນາໂຕ ເຊິ່ງແນໃສ່ເພີ່ມທະວີຄວາມເຄັ່ງຕຶງສາກົນ, ຊ່ວງເສັງປະກອບອາວຸດ, ບັນລຸທ່າທີເຫນືອກວ່າ ທາງດ້ານການທະຫານຕໍ່ບັນດາປະເທດສັງຄົມນິຍົມ ແລະ ກໍ່ສົງຄາມນິວຄະເລຍນັ້ນ, ບັນດາປະເທດທີ່ສັງກັດຢູ່ໃນອົງການສົນທິສັນຍາ ວາກໂຊວີ ແມ່ນຕໍ່ສູ້ ຢ່າງສະເຫມີຕົ້ນສະເຫມີປາຍເພື່ອໃຫ້ມີການຮ່ວມມື ແລະ ຢູ່ຮ່ວມກັນ ຢ່າງສັນຕິລະຫວ່າງລັດທີ່ມີລະບົບການເມືອງແຕກຕ່າງກັນ, ຕໍ່ສູ້ໃຫ້ມີການຈຳກັດແລະກຳຈັດອາວຸດ, ເກືອດຫ້າມອາວຸດນິວຄະເລຍ, ອາວຸດເຄມີ ແລະ ອາວຸດເຊື້ອພະຍາດຢ່າງບໍ່ມີເງື່ອນໄຂ ແລະ ຕໍ່ສູ້ໃຫ້ມີການຄ້ຳປະກັນສັນຕິພາບແລະຄວາມປອດໄພຢູ່ໃນເອີລົບ ແລະ ໃນໂລກທັງຫມົດ. ບັນດາປະເທດສະມາຊິກຂອງອົງການສົນທິສັນຍາ ວາກໂຊວີ ໄດ້ສະເຫນີຂໍ້ລິເລີ່ມການເມືອງອັນສຳຄັນຫລາຍເທື່ອແລ້ວ, ຂໍ້ລິເລີ່ມດັ່ງກ່າວແມ່ນແນໃສ່ເຮັດ ໃຫ້ບັນຍາກາດສາກົນເປັນປົກກະຕິ, ການສະກັດກັ້ນໄພພິບັດນິວຄະເລຍ. ໂດຍສະເພາະໄດ້ມີຂໍ້ສະເຫນີໃຫ້ເຊັນສັນຍາກ່ຽວກັບການບໍ່ໃຊ້ກຳລັງທະຫານ ແລະຮັກສາສັນຕິພາບລະຫວ່າງປະເທດທີ່ເປັນສະມາຊິກຂອງກຸ່ມທະຫານນາໂຕ ກັບບັນດາປະເທດຜູ້ເປັນພາຄີຂອງສົນທິສັນຍາວາກໂຊວີ, ຕະຫລອດທັງຂໍ້ສະເຫນີໃຫ້ພິຈາລະນາຄວາມຂາດສາມາດໃນການສ້າງຕັ້ງເຂດປອດນິວຄະເລຍຂຶ້ນໃນທະວີບເອີລົບ, ຈຳກັດງົບປະມານທາງການທະຫານໄວ້ໃນລະດັບເກົ່າ ຕໍ່ຈາກນັ້ນ ກໍ່ລົງມືຫລຸດຜ່ອນງົບປະມານດັ່ງກ່າວເປັນຂັ້ນໆ, ປະກາດໂຈະທົດລອງອາວຸດນິວຄະເລຍ ແລ້ວຕໍ່ໄປກໍຢຸດເຊົາການທົດລອງນັ້ນຢ່າງສົມບູນ . ຜົນທີ່ໄດ້ມາຈາກນະໂຍບາຍຕ່າງປະເທດທີ່ຮັກຫອມສັນຕິພາບຂອງສະຫະພາບໂຊວຽດ ກໍຄືການເຊັນສັນຍາລະຫວ່າງ ໂຊວຽດ ກັບອາເມລິກາກ່ຽວກັບການກຳຈັດອາວຸດນິວຄະເລຍສອງຊະນິດຄືລູກສອນໄຟທີ່ມີໄລຍະຍິງຂະຫນາດ

ທາງ ແລະ ຂະໜາດໃກ້. ກອງປະຊຸມສະໄໝສາມັນແຫ່ງອົງການນຳສູງສຸດຂອງອົງການສົນທິສັນຍາ ວາກໂຊວີ ນັ້ນຄືຄະນະກຳມະການປຶກສາທາງດ້ານການເມືອງເຊິ່ງຈັດຂຶ້ນເມື່ອປີ ໑໙໘໙ ຢູ່ນະຄອນຫລວງ ປຣາກ ໄດ້ຮັບຮອງເອົາຖະແຫລງການການເມືອງສະບັບໜຶ່ງ ເຊິ່ງໄດ້ກາຍເປັນການ ຢືນຢັນຄັ້ງໃໝ່ ເຖິງຄວາມມຸ່ງມາດປາດຖະໜາຂອງບັນດາປະເທດສັງຄົມນິຍົມທີ່ຈະເຮັດໃຫ້ບັນຍາກາດການເມືອງຢູ່ໃນໂລກດີຂຶ້ນ ແລະ ສະກັດກັ້ນໄພພິບັດນິວຄະເລຍ. ໂດຍສະເພາະແລ້ວ ຢູ່ໃນຖະແຫລງການນັ້ນ ໄດ້ສະເໜີຂໍ້ລິເລີ່ມໃຫ້ມີການລົງນາມສົນທິສັນຍາ ວ່າດ້ວຍການບໍ່ນຳໃຊ້ກຳລັງ ທະຫານ ແລະ ການຮັກສາສາຍພົວພັນສັນຕິພາບໄວ້ ລະຫວ່າງບັນດາລັດທີ່ເປັນສະ-ມາຊິກຂອງອົງການສົນທິສັນຍາ ວາກໂຊວີ ແລະ ກຸ່ມນາໂຕ. ແຕ່ວ່າ ຂໍ້ລິເລີ່ມດັ່ງກ່າວ ກໍຄືກັນກັບຂໍ້ລິເລີ່ມສັນຕິພາບອື່ນໆ ຂອງປະເທດສັງຄົມນິຍົມນັ້ນ ບໍ່ໄດ້ຮັບການຕອບສະໜອງແບບທາງບວກຈາກຝ່າຍນາໂຕເລີຍ.

ການຮ່ວມມືທາງດ້ານການທະຫານອັນແໜ້ນແຟ້ນນັ້ນ ເປັນສິ່ງທີ່ຮັບປະກັນຄວາມປອດໄພຂອງແຕ່ລະປະເທດ ເຊິ່ງຖືກຄ້ຳປະກັນດ້ວຍແສນຍານຸ - ພາບຂອງວົງຄະນາຍາດສັງຄົມນິຍົມ. ເຫງົ້າພະລັງທາງເສດຖະກິດ, ການທະຫານຂອງສະຫະພາບໂຊວຽດ ແລະ ການຊ່ວຍເຫລືອ ຂອງສະຫະພາບໂຊວຽດ ຢູ່ໃນການສະໜອງອາວຸດ, ອາວຸດຍຸດທະພັນອັນທັນສະໄໝແລະການສ້າງພະນັກງານບັງຄັບບັນຊາແກ່ກອງທັບປະເທດສັງຄົມນິຍົມອື່ນໆ ນັ້ນແມ່ນເປັນພື້ນຖານແຫ່ງການປ້ອງກັນອັນເຂັ້ມແຂງຂອງວົງຄະນາຍາດສັງຄົມນິຍົມ. ລະບົບປ້ອງກັນຄວາມປອດໄພລວມໝູ່ນີ້ ໄດ້ເປີດໂອກາດໃຫ້ແຕ່ລະປະເທດສັງຄົມນິຍົມຫລຸດຜ່ອນການໃຊ້ຈ່າຍໃນການສ້າງກຳລັງທະຫານຂອງຕົນ ແລະ ສຸມຊັບພະຍາກອນທາງດ້ານວັດຖຸ ແລະ ກຳລັງຄົນອັນຫລວງຫລາຍໃສ່ການພັດທະນາຂະແໜງການເສດຖະກິດແຫ່ງຊາດ ເພື່ອຈຸດປະສົງ ອັນສັນຕິ. ບັນດາປະເທດສັງຄົມນິຍົມ ບໍ່ໄດ້ຢາກເພີ່ມລາຍຈ່າຍທາງດ້ານ ທະຫານ ແລະ ກໍໄດ້ຈຳກັດມັນຢູ່ໃນຂອບເຂດອັນຈຳເປັນ ສຳລັບການຮັບປະ-ກັນຄວາມອາດສາມາດ ໃນການປ້ອງກັນຂອງເຂົາເຈົ້າ. ຜົນສຳເລັດ ໃນການຂະຫຍາຍການຮ່ວມມືຂອງບັນດາປະເທດໃນວົງຄະນາຍາດສັງຄົມນິຍົມນັ້ນ ແມ່ນເປັນສັກຂີພະຍານອັນໜັກແໜ້ນແຫ່ງຄວາມສອດຄ່ອງກັນທາງດ້ານ

ພົນປະໂຫຍດອັນເປັນກົກເຄົ້າຂອງເຂົາເຈົ້າ ແລະ ຄວາມອາດສາມາດ ທີ່ຈະຜູກພັນພົນປະໂຫຍດແຫ່ງຊາດ ແລະ ສາກົນໃຫ້ແໜ້ນແຟ້ນ.

## ການພົວພັນເຊິ່ງກັນ ແລະ ກັນລະຫວ່າງສິ່ງທີ່ມີລັກສະນະສະເພາະຊາດ ແລະ ສິ່ງທີ່ມີລັກສະນະສາກົນ

ການລົມທົບພົນປະໂຫຍດແຫ່ງຊາດຂອງແຕ່ລະປະເທດ ເຂົ້າກັບພົນປະໂຫຍດຂອງວົງຄະນາຍາດທັງໝົດໃນລະດັບສູງສຸດນັ້ນ ເປັນຫລັກການໜຶ່ງຢູ່ໃນການພົວພັນເຊິ່ງກັນ ແລະ ກັນຂອງບັນດາປະເທດສັງຄົມນິຍົມ. ສາຍພົວພັນເຊິ່ງກັນ ແລະ ກັນລະຫວ່າງອັນທີ່ມີລັກສະນະສະເພາະຊາດ ແລະ ອັນທີ່ມີລັກສະນະສາກົນ ຢູ່ໃນລະບົບສັງຄົມນິຍົມໂລກນັ້ນ ມີອັນໃດແດ່ ?

ຈະເປັນການຜິດພາດ ຖ້າຖືວ່າ ຄວາມສຳນຶກກ່ຽວກັບ "ອັນທີ່ມີລັກສະນະສະເພາະຊາດ" ແລະ "ອັນທີ່ມີລັກສະນະສາກົນ" ນັ້ນເປັນສິ່ງທີ່ກົງກັນຂ້າມກັນ, ເພາະວ່າ ຢູ່ໃນເງື່ອນໄຂສັງຄົມນິຍົມນັ້ນ, ພົນປະໂຫຍດ ແຫ່ງຊາດ ແລະ ພົນປະໂຫຍດສາກົນອັນເປັນກົກເຄົ້າ ແມ່ນສອດຄ່ອງກັນ. ການສຳນຶກກ່ຽວກັບ "ອັນທີ່ມີລັກສະນະສາກົນ" ແມ່ນກໍຮາງສ້າງຕໍ່ມາຈາກພົນປະໂຫຍດ, ຄວາມມຸ່ງໝາຍ ແລະ ເຈດຈຳນົງລວມຂອງປະຊາຊາດ ໃນບັນດາປະເທດສັງຄົມນິຍົມ. ແຕ່ກໍຈະເປັນການບໍ່ຖືກຕ້ອງ ຖ້າເຂົ້າໃຈກ່ຽວກັບ "ອັນທີ່ມີລັກສະນະສາກົນ" ວ່າມັນແມ່ນຜົນບວກຂອງພົນປະໂຫຍດແຫ່ງຊາດເທົ່ານັ້ນ ເພາະວ່າທິດທາງ ແລະ ເປົ້າໝາຍລວມແຫ່ງການຕໍ່ສູ້ຂອງສັງຄົມນິຍົມໂລກ ບໍ່ແມ່ນສອດຄ່ອງກັບໜ້າທີ່ ແລະ ຄວາມມຸ່ງໝາຍປະຈຳວັນຂອງແຕ່ລະຊາດສະເໝີໄປ. ຕົວຢ່າງເຊັ່ນ ເຖິງແມ່ນວ່າມີປະເທດສັງຄົມນິຍົມບາງປະເທດທີ່ບໍ່ລົມໃຈນຳການສະໜັບສະໜູນຊາວຜູ້ອອກແຮງ - ງານ ອັບການິສະຖານ, ກຳປູເຈຍ, ອັງໂກລາ ແລະ ນີກາລາກົວຍອມພົນປະໂຫຍດ ສະເພາະຊາດຂອງຕົນເອງ, ແຕ່ວ່າພົນປະໂຫຍດລວມສາ

ກົນຂອງເຂົາເຈົ້າ ທີ່ຜູກພັນກັບການຂະຫຍາຍຕົວຂອງຂະບວນວິວັດ ແຫ່ງການປະຕິວັດໂລກ ແມ່ນຮຽກຮ້ອງໃຫ້ມີການສະໜັບສະໜູນສາກົນເຊັ່ນນີ້. ອີກປະການໜຶ່ງ ຜົນປະໂຫຍດແຫ່ງຊາດບາງອັນຂອງແຕ່ລະປະເທດ ກໍບໍ່ແມ່ນວ່າຈະກົງກັບຜົນປະໂຫຍດທຸກຢ່າງຂອງປະເທດອື່ນໆ ແລະຂອງລະບົບສັງຄົມນິຍົມທັງມວນສະເໝີໄປ.

ກ່ອນອື່ນໝົດ ຈະສາມາດອະທິບາຍການກໍ່ຮູບກໍ່ຮ່າງຂອງຜົນປະໂຫຍດອັນມີລັກສະນະສະເພາະຊາດຂອງແຕ່ລະປະເທດສັງຄົມນິຍົມນີ້ໄດ້ ດ້ວຍບັນດາສາຍເຫດທາງປະຫວັດສາດ. ການຂ້າມຜ່ານຂອງປະຊາຊາດ ແລະປະເທດໜຶ່ງໆໄປສູ່ສັງຄົມນິຍົມ ແມ່ນເລີ່ມຕົ້ນຈາກລະດັບແຫ່ງການຂະຫຍາຍຕົວທາງດ້ານເສດຖະກິດ, ສັງຄົມ, ການເມືອງ ແລະ ວັດທະນະທຳ ທີ່ແຕກຕ່າງກັນ. ເມື່ອຍາດແຍ່ງເອົາໄຊຊະນະຂອງການປະຕິວັດສັງຄົມນິຍົມແລ້ວ, ແຕ່ລະປະຊາຊາດ ກໍໄດ້ມີປະສົບການຂອງປະຫວັດສາດທີ່ເປັນ ອັນສະເພາະຂອງໃຜລາວ. ຢູ່ໃນແຕ່ລະປະເທດ, ການປະຕິວັດສັງຄົມນິຍົມກໍເກີດຂຶ້ນຢູ່ໃນສະພາບການສາກົນທີ່ມີການປ່ຽນແປງ. ເນື່ອງຈາກສິ່ງ ດັ່ງກ່າວນີ້, ແຕ່ລະປະເທດ ຈຶ່ງແກ້ໄຂບັນຫາທີ່ລວມ (ສາກົນ) ກໍຄືບັນຫາສະເພາະ ( ແຫ່ງຊາດ ) ຢູ່ໃນການສ້າງສາສັງຄົມນິຍົມ. ການເຮັດໃຫ້ບັນຫາລວມປະກົດຜົນເປັນຈິງ ໃນການກໍ່ສ້າງສັງຄົມໃໝ່ ສຳລັບປະເທດ ທັງໝົດນັ້ນ ກໍດຳເນີນໄປພາຍໃຕ້ຮູບການສະເພາະຂອງໃຜລາວເອງຢູ່ໃນປະເທດດັ່ງກ່າວ. ເລນິນ ໄດ້ຊີ້ບອກວ່າ: "ທຸກໆຊາດ ຈະກ້າວໄປສູ່ລະບອບສັງຄົມນິຍົມ, ອັນນີ້ເປັນສິ່ງທີ່ຫລີກລ່ຽງບໍ່ໄດ້, ແຕ່ທັງໝົດນັ້ນ ບໍ່ແມ່ນ ວ່າຈະກ້າວໄປຄືແບບດຽວກັນອ້ອຍຕ້ອຍ, ແຕ່ລະຊາດຈະນຳເອົາຈຸດພິເສດເຂົ້າໃນຮູບການນີ້ຫລືຮູບການອື່ນຂອງປະຊາທິປະໄຕ, ເຂົ້າໃນປະເພດນີ້ຫລືປະເພດອື່ນ ຂອງຜະເດັດການກຳມາຊີບ ແລະ ເຂົ້າໃນຈັງຫວະນີ້ຫລືຈັງຫວະອື່ນຂອງການດັດສ້າງແບບສັງຄົມນິຍົມດ້ານຕ່າງໆ ຢູ່ໃນຊີວິດສັງຄົມ"[1].

ຄວາມແຕກຕ່າງກັນທາງດ້ານເງື່ອນໄຂ, ທິດທາງ, ຮູບການ, ວິທີການ ແລະຈັງຫວະຂອງການກໍ່ສ້າງສັງຄົມນິຍົມນັ້ນ ເປັນຜູ້ກຳນົດ ການພົວພັນຂອງປະເທດໜຶ່ງ ກັບປະເທດອື່ນໆຢູ່ໃນລະບົບສັງຄົມນິຍົມໂລກແລະສະ

໑) ວ.ອີ.ເລນິນ. ບົດນິພົນຄົບຊຸດ, ເຫລັ້ມທີ ໓໐, ໜ້າ ໑໘໓.

ແດງເຖິງຄວາມບໍ່ລົງລອຍກັນ ທາງດ້ານຜົນປະໂຫຍດ ແລະທັດສະນະຂອງເຂົາເຈົ້າ ຕໍ່ບັນຫາການຮ່ວມມືເຊິ່ງກັນ ແລະ ກັນ. ຂະບວນວິວັດ ແຫ່ງການເຮັດໃຫ້ການຂະຫຍາຍຕົວທາງເສດຖະກິດຂອງບັນດາປະເທດສັງຄົມນິຍົມມີລະດັບເທົ່າທຽມກັນ ຊ່ວຍໃຫ້ສາມາດຜ່ານຜ່າຄວາມຫຍຸ້ງຍາກ ທີ່ມີມັນ. ກົງກັນຂ້າມກັບໂລກທຶນນິຍົມ ເຊິ່ງວ່າ ລັດຈັກກະພັດ ແລະ ບໍລິສັດຜູກຂາດເປັນຜູ້ກົດຂີ່ຂົ່ມເຫັງບັນດາປະເທດທີ່ຫລ້າຫລັງ ແລະ ທີ່ມີລະດັບການ ຂະຫຍາຍຕົວຕ່ຳກວ່ານັ້ນ, ລະບົບສັງຄົມນິຍົມແຫ່ງໂລກ ບໍ່ພຽງແຕ່ເຮັດໃຫ້ສິດທິທາງການເມືອງຂອງບັນດາລັດ ທີ່ສັງກັດຢູ່ໃນນັ້ນເທົ່າທຽມກັນເທົ່ານັ້ນ , ແຕ່ຍັງເຮັດໃຫ້ທຸກປະເທດຂອງວົງຄະນາຍາດສັງຄົມນິຍົມບັນລຸເຖິງ ຄວາມສະເໝີພາບກັນຢ່າງແທ້ຈິງ. ຜົນທີ່ໄດ້ມາຈາກນະໂຍບາຍການເມືອງ ສາກົນເຊັ່ນນີ້ ກໍຄືຫລຸດຜ່ອນການຜິດໂຕນກັນທາງດ້ານລະດັບການຜະລິດ ທີ່ສະເລ່ຍໃສ່ພົນລະເມືອງຢູ່ໃນປະເທດສັງຄົມນິຍົມລົງເລື້ອຍໆ. ປະຈຸບັນນີ້ ຂະບວນວິວັດທີ່ເຮັດໃຫ້ບັນດາປະເທດສັງຄົມນິຍົມຫຍັບເຂົ້າຫາກັນເທື່ອລະກ້າວນັ້ນ ໄດ້ກາຍເປັນກົດເກນແລ້ວ. ລະດັບການຂະຫຍາຍຕົວທາງສັງຄົມຂອງປະເທດສັງຄົມນິຍົມຍິ່ງສູງ ແລະ ຍິ່ງຫຍັບມໍ່ກັນເທົ່າໃດ ເຂົາເຈົ້າກໍຍິ່ງຈະມີຄວາມເຂົ້າໃຈເຊິ່ງກັນ ແລະ ກັນຫລາຍຂຶ້ນ ແລະ ການຮ່ວມມືຂອງເຂົາເຈົ້າກໍຍິ່ງຈະເລິກເຊິ່ງ ແລະ ຕິດພັນຢ່າງກາຍະອິນຊີກວ່າເກົ່າເທົ່ານັ້ນ . ແນ່ນອນແລ້ວວ່າ ສ່ວນໃຫຍ່ແລ້ວ ມັນກໍຂຶ້ນກັບນະໂຍບາຍການເມືອງ ຂອງພັກ ມາກ-ເລນິນ ທີ່ເປັນຜູ້ນຳພາ, ຂຶ້ນກັບຄວາມຊຳນານ ຂອງເຂົາເຈົ້າໃນການປົກປັກຮັກສາຄວາມເປັນເອກະພາບກັນ, ການຕໍ່ສູ້ຕ້ານກັບ ຄວາມຄັບແຄບແລະຄວາມຢູ່ໂດດດ່ຽວທາງດ້ານຊົນຊາດ ໂດຍຄຳນຶງເຖິງໜ້າທີ່ສາກົນ ກໍຄື ການເຄື່ອນໄຫວເພື່ອປະຕິບັດໜ້າທີ່ເຫລົ່ານີ້ໃຫ້ເປັນຈິງ ສ່ວນຄວາມບໍ່ລົງລອຍກັນໃນບັນຫາໃດບັນຫາໜຶ່ງ ທີ່ເກີດຂຶ້ນນັ້ນ ກໍສາມາດ ລົບລ້າງໄດ້ ແລະ ຈະລົບລ້າງໄດ້ດ້ວຍວິທີການປຶກສາຫາລືກັນສອງຝ່າຍ ຫລືຫລາຍຝ່າຍໂດຍອີງໃສ່ຫລັກໝັ້ນແຫ່ງລັດທິມາກ-ເລນິນ ແລະ ລັດທິສາກົນກຳມະຊີບ.

ພວກຈັກກະພັດ ສວຍໃຊ້ທຸກຄວາມອາດສາມາດຢ່າງຕັ້ງໃຈ ເພື່ອຍຸຍົງໃຫ້ເກີດລັດທິຊາດນິຍົມ ແລະ ການສ້າງຄວາມແຕກແຍກຂຶ້ນຢູ່ໃນວົງຄະນາ

ຍາດສັງຄົມນິຍົມ. ສັດຕູຕົວເປີດເຜີຍ ແລະ ປິດລັບຂອງສັງຄົມນິຍົມ ໄດ້ຖື ເອົາລັດທິຕ້ານໂຊວຽດເປັນພື້ນຖານລວມເພື່ອຊອກຫາວິທີທາງຍຸຍົງໃຫ້ເກີດ ລັດທິຊາດນິຍົມ. ການທີ່ພວກສັດຕູຂອງສັງຄົມນິຍົມມີຄວາມມຸ່ງໝາຍ ຢາກ ຈະຫັນເອົາລັດທິຊາດນິຍົມ ໄປເປັນການຕ້ານໂຊວຽດນັ້ນ, ກໍເປັນສິ່ງ ທີ່ບໍ່ ແປກປະຫລາດຫຍັງດອກ ເພາະວ່າມັນຕັ້ງແມ່ນສະຫະພາບໂຊວຽດ ເປັນ ບ່ອນອີງທາງດ້ານການເມືອງ, ເສດຖະກິດ ແລະ ການທະຫານ ອັນເຂັ້ມ ແຂງຂອງລະບອບສັງຄົມນິຍົມໂລກ. ສະນັ້ນ ເພື່ອຈະໂມ່ງບາດຄ້ອນ ອັນ ໜັກໜ່ວງໃສ່ສັງຄົມນິຍົມໃຫ້ແມ່ນຢຳກວ່ານັ້ນ, ລັດທິຈັກກະພັດ ຈຶ່ງພະຍາ ຍາມຫັນເອົາລັດທິຊາດນິຍົມໄປຕ້ານໂຊວຽດຢ່າງບໍ່ລົດລະ. ປະຫວັດ ສາດ ແຫ່ງການພົວພັນເຊິ່ງກັນ ແລະ ກັນຂອງບັນດາປະເທດສັງຄົມນິຍົມໄດ້ພິສູດ ຢ່າງໜັກແໜ້ນວ່າ ນະໂຍບາຍການເມືອງທີ່ສ້າງຂຶ້ນບົນຫລັກການ ສາກົນ ສັງຄົມນິຍົມນັ້ນ ແມ່ນນະໂຍບາຍທີ່ບໍ່ຕ້ອງປະນີປະນອມກັບລັດທິ ຊາດນິຍົມ ແລະ ກັບລັດທິຕ້ານໂຊວຽດ. ການຜິດເຂວບໍ່ວ່າແນວໃດກໍຕາມ ອອກຈາກ ຫລັກການນີ້ ລ້ວນແຕ່ເປັນໄພຂື່ມຂູ່ຕໍ່ໝາກຜົນຂອງການປະຕິວັດຢູ່ໃນ ປະ ເທດທີ່ແຍກຕົວອອກຈາກວົງຄະນາຍາດສັງຄົມນິຍົມ.

ບົດຮຽນຕ່າງໆໄດ້ຢືນຢັນ ໃຫ້ເຫັນວ່າ ຄວາມຈົງຮັກພັກດີຕໍ່ຫລັກການ ແຫ່ງລັດທິສາກົນກຳມາຊີບນັ້ນ ໄດ້ຊ່ວຍເຮັດໃຫ້ມີການສົມທົບ ຜົນປະໂຫຍດ ແຫ່ງຊາດ ແລະ ຜົນປະໂຫຍດລວມຂອງບັນດາລັດສັງຄົມນິຍົມຢ່າງຖືກຕ້ອງ ໄດ້. ໂດຍເຮັດໃຫ້ລະບອບໃໝ່ ເຊິ່ງເປັນລະບອບທີ່ກ້າວໜ້າກວ່າປະກົດ ເປັນຈິງນັ້ນ, ບັນດາປະເທດສັງຄົມນິຍົມ ກໍສົ່ງຜົນສະທ້ອນທີ່ນັບມື້ ນັບເຕີບ ຕົວຂຶ້ນຈັກໄຊ້ຕໍ່ການຂະຫຍາຍຕົວຂອງໂລກປະຈຸບັນ.

# ບົດທີ ໑໐. ການຕໍ່ສູ້ຊົນຊັ້ນຢູ່ໃນປ້ອມ ປາການຂອງ ຈັກກະພັດນິຍົມ

## ລະບອບທຶນນິຍົມໃນວັນນີ້

ການແຜ່ຂະຫຍາຍອິດທິພົນຂອງສັງຄົມນິຍົມຢູ່ໃນໂລກ, ການຕໍ່ສູ້ຕ້ານຈັກກະພັດຂອງປະເທດທີ່ໄດ້ຮັບການປົດປ່ອຍອອກຈາກລັດທິລ່າຫົວເມືອງຂຶ້ນ ຂະບວນການປະຊາທິປະໄຕອັນກວ້າງຂວາງ, ສິ່ງເຫລົ່ານີ້ແລະປະກົດການສັງຄົມອື່ນໆ ລ້ວນແຕ່ສົ່ງຜົນສະທ້ອນຕໍ່ການຕໍ່ສູ້ ຂອງຊາວຜູ້ອອກແຮງງານຢູ່ໃນບັນດາປະເທດທຶນນິຍົມທີ່ນຳໜ້າໝູ່ ເພື່ອໃຫ້ມີການດຳເນີນ ການດັດສ້າງປະຊາທິປະໄຕ ຊຶ່ງຈະເປີດເສັ້ນທາງໄປສູ່ລະບອບສັງຄົມນິຍົມ. ແຕ່ບໍ່ແມ່ນມີພຽງແຕ່ສິ່ງເຫລົ່ານີ້ເທົ່ານັ້ນ. ຈຸດພິເສດແຫ່ງການຂະຫຍາຍຕົວຂອງລະບອບທຶນນິຍົມ ຢູ່ໃນໄລຍະປະຈຸບັນກໍ່ມີບົດບາດອັນເດັ່ນຈັດຂອງມັນອີກ.

ກ່ອນອື່ນໝົດ ແມ່ນການປະຕິວັດທາງດ້ານເຕັກນິກ-ວິທະຍາສາດ ຊຶ່ງພຸ່ງຂຶ້ນມາແຕ່ຊຸມປີ ໕໐ ຂອງສະຕະວັດນີ້ ທີ່ໄດ້ດັດສ້າງກຳລັງ ການຜະລິດບົນພື້ນຖານການເຊື່ອມຕໍ່ວິທະຍາສາດກັບເຕັກນິກ ແລະ ການຜະລິດ ເຂົ້າກັນ. ຄວາມກ້າວໜ້າທາງດ້ານເຕັກນິກ-ວິທະຍາສາດ ໄດ້ແຜ່ຂະຫຍາຍອອກໃນຈັງຫວະທີ່ບໍ່ເຄີຍມີມາກ່ອນຄື: ຫັນການຜະລິດໃຫ້ເປັນລັກສະນະອັດຕະໂນມັດ, ກວດກາ ແລະ ຄຸ້ມຄອງໂດຍອາໄສການຊ່ວຍເຫລືອ ຂອງເຄື່ອງຈັກຄອມພິວເຕີ, ການນຳໃຊ້ພະລັງງານຊະນິດໃໝ່ລວມທັງ ພະລັງງານປະລະມານູ, ການຫັນເອົາການຜະລິດກະສິກຳໃຫ້ເປັນລັກສະນະ ອຸດສາຫະກຳ, ການນຳໃຊ້ເຄື່ອງຈັກຄິດໄລ່ເອເລັກໂຕຣນິກເຂົ້າໃນ ທຸກຂົງເຂດເສດຖະກິດ, ການສ້າງລູກສອນໄຟ ແລະ ອາວຸດນິວເຄລຍ ແລະ ການເລີ່ມຕົ້ນບຸກເບີກອະວະກາດ.

ຜົນສະທ້ອນຂອງການປະຕິວັດທາງດ້ານເຕັກນິກ-ວິທະຍາສາດໄດ້ສ່ອງ

ແສງໃຫ້ເຫັນເຖິງຊີວິດຮອບດ້ານຂອງສັງຄົມ. ອາຊີບ ແລະວິຊາສະເພາະໃໝ່ ທີ່ມີລັກສະນະມະຫາຊົນກໍ່ປະກົດຕົວຂຶ້ນ. ຄວາມຮຽກຮ້ອງເຖິງລະດັບການສຶກສາ, ວິຊາສະເພາະ ແລະວັດທະນະທຳກໍ່ສູງຂຶ້ນກວ່າເກົ່າ.ຄວາມຮຽກຮ້ອງຕໍ່ເງື່ອນໄຂການດຳລົງຊີວິດກໍ່ມີລະດັບສູງກວ່າເກົ່າ,ອັນນັ້ນນຳໄປສູ່ການຍົກລະດັບຊີວິດການເປັນຢູ່ ຂອງຄົນສ່ວນໃຫຍ່ ຢູ່ໃນໝູ່ປະຊາຊົນໃຫ້ສູງຂຶ້ນກວ່າເກົ່າ.

ແຕ່ວ່າ ພາຍໃຕ້ລະບອບທຶນນິຍົມນັ້ນ, ຜົນສຳເລັດ ຂອງຄວາມກ້າວໜ້າທາງດ້ານເຕັກນິກ-ວິທະຍາສາດ ກ່ອນອື່ນໝົດ ແມ່ນຖືກນຳໃຊ້ ເພື່ອຜົນປະໂຫຍດຂອງບໍລິສັດຜູກຂາດ ແລະ ກຸ່ມສຳພັນຊຸດສາຫະກຳທາງ ທະຫານ. ດັ່ງນັ້ນ ຈຶ່ງເກີດມີຄວາມບໍ່ສອດຄ່ອງກັນລະຫວ່າງການຂະຫຍາຍຕົວຢ່າງເປັນອິດສະຫລະຂອງວິທະຍາສາດ ແລະ ກຳລັງການຜະລິດກັບ ການພົວພັນການຜະລິດທຶນນິຍົມ ອັນເປັນສາຍເຫດທີ່ເຮັດໃຫ້ຄວາມຂັດແຍ່ງທາງເສດຖະກິດ ແລະ ການປະທະກັນທາງສັງຄົມພຸ່ງຂຶ້ນຢ່າງຮຸນແຮງ.

ພ້ອມກັນນັ້ນ ອິດທິພົນຂອງບໍລິສັດຜູກຂາດຂອງຈັກກະພັດ ຕໍ່ການເມືອງພາຍໃນ ແລະ ພາຍນອກຂອງລັດກໍ່ເຕີບຕົວອອກ. ຊົນຊັ້ນນາຍທຶນຊຶ່ງເປັນຜູ້ກຳອຳນາດ ກໍ່ກ້າວໄປສູ່ການໃຊ້ກົນອຸບາຍປະຈົບປະແຈງທາງສັງຄົມ,ເຫັນດີຜ່ອນຜັນບາງປະການໃຫ້ແກ່ຊາວຜູ້ອອກແຮງງານ ແລະ ຊອກຫາວິທີທາງທຳການປະນີປະນອມທາງການເມືອງ ແລະ ທາງຊົນຊັ້ນ. ແຕ່ວ່າໃນດ້ານນີ້ ພວກຈັກກະພັດ ພັດມີຄວາມອາດສາມາດອັນຈຳກັດ, ຈາກນັ້ນຈຶ່ງມີການທະວີຄວາມເປັນປະຕິການຂອງມັນໃນທຸກທິດທາງ. ກົງຈັກປາບປາມ ແມ່ນເປັນເຄື່ອງມືອັນສຳຄັນໃນການຕໍ່ສູ້ກັບຂະບວນການກຳມະກອນ ແລະປະຊາທິປະໄຕ, ລັດທິຕ້ານກອມມູນິດ ກໍ່ໄດ້ກາຍເປັນ ມະໂຍບາຍການເມືອງທາງການຂອງລັດຖະບານ.ຢູ່ເບື້ອງຫລັງຄັນຕາລະບັດທີ່ວ່າ ມີຄວາມຈຳເປັນເພື່ອ "ປົກປ້ອງຈາກການຂົ່ມຂູ່ຂອງລັດທິກອມມູນິດ" ນັ້ນ, ລັດທິຈັກກະພັດໄດ້ດຳເນີນການຫັນເອົາເສດຖະກິດ, ມະໂຍບາຍການເມືອງ ແລະ ແນວຄິດໄປເປັນລັກສະນະການທະຫານ, ຂະຫຍາຍກຳລັງປະກອບອາວຸດ ແລະເປີດກວ້າງການເຄື່ອນໄຫວຂອງກຸ່ມສຳພັນຊຸດສາຫະກຳທາງທະຫານ.

ເພື່ອເປົ້າໝາຍມອມເມົາແນວຄິດຂອງປະຊາຊົນນັ້ນ,ລະບົບຕາໜ່າງ

ສື່ມວນຊົນ ກໍ່ຖືກສ້າງຕັ້ງຂຶ້ນ. ການຂະຫຍາຍລະບົບໂທລະພາບ, ວິທະຍຸ ແລະ ການພິມຈຳໜ່າຍ ກໍເຮັດສຸດຄວາມອາດສາມາດ ເພື່ອນຳເອົາຂ່າວທີ່ພວກເຂົາຕ້ອງການນັ້ນ ໄປເຖິງມະຫາຊົນອັນກວ້າງຂວາງຢ່າງທັນການ.

ທິດທາງທີ່ເປັນພື້ນຖານໃນການມອມເມົາແນວຄິດຂອງຊາວຜູ້ອອກແຮງ ງານ ຢູ່ໃນປະເທດທຶນນິຍົມນັ້ນມີອັນໃດແດ່ ?

ພວກເຂົາໂຄສະນາແບບແຜນດຳລົງຊີວິດຂອງນາຍທຶນ, ສ້າງເທບນິ-ຍາຍກ່ຽວກັບອັນທີ່ເອີ້ນວ່າ ລັດປະຊາທິປະໄຕ, ເຊິ່ງເໝືອນດັ່ງວ່າມັນຕັ້ງຢູ່ສູງກວ່າຜົນປະໂຫຍດຂອງຊົນຊັ້ນ ແລະ ຂອງກຸ່ມຄົນຕ່າງ ໃນສັງຄົມແລະເໝືອນດັ່ງວ່າມັນຮັບປະກັນໃຫ້ໝົດທຸກຄົນມີ "ຄວາມອາດສາມາດ ເທົ່າທຽມກັນ", ເພີ່ມທະວີການໂຄສະນາບິດເບືອນເປົ້າໝາຍຂອງ ຂະບວນການກອມມູນິດ ກໍ່ຄືລັດທິສັງຄົມນິຍົມອັນເປັນຈຸດອອກແຮງໂຄສະນາແນວຄິດກະຫາຍສົງຄາມຢ່າງປ່ວງບ້າໂດຍຢູ່ພາຍໃຕ້ຂໍ້ອ້າງທີ່ວ່າ ມີການຂົ່ມຂູ່ "ຮຸກຮານຂອງກອມມູນິດ", ທັງນີ້ກໍ່ເພື່ອແກ້ຕາງໃຫ້ແກ່ການກະກຽມສົງຄາມຂອງພວກຈັກກະພັດ.

ລະບອບທຶນນິຍົມສະໄໝປະຈຸບັນ ໄດ້ໃຊ້ທຸກຄວາມອາດສາມາດ ເພື່ອຮັກສາການຄົງຕົວຂອງຕົນ. ດ້ວຍເຫດນັ້ນ ໃນຫລາຍສິບປີຜ່ານມາ ຈຶ່ງສັງເກດເຫັນວ່າ ມັນມີການເຕີບຕົວບາງຢ່າງທາງດ້ານການຜະລິດ. ແຕ່ວ່າຈຸດພິເສດດັ່ງກ່າວ ແຫ່ງການຂະຫຍາຍຕົວຂອງລະບອບທຶນນິຍົມໃນປະຈຸບັນນີ້ ບໍ່ໄດ້ປ່ຽນແປງທາດແທ້ຂອງມັນ ໃນການເປັນລະບອບໜຶ່ງທີ່ສ້າງຂຶ້ນບົນພື້ນຖານຂອງການຂູດຮີດແຮງງານວ່າຈ້າງ ແລະ ບໍ່ສາມາດລົບລ້າງ ໄພຫວ່າງງານ ເຊິ່ງໄດ້ກາຍເປັນພະຍາດຊຳເຮື້ອ, ບໍ່ໄດ້ລົບລ້າງຄວາມບໍ່ສະເໝີພາບທາງສັງຄົມ, ຄວາມເປັນປະຕິການທາງການເມືອງ ແລະການຂົ່ມຂູ່ຢ່າງເປັນປະຈຳຂອງສົງຄາມແຕ່ປະການໃດ. ຍິ່ງໄປກວ່ານັ້ນຊ້ຳພັດສະແດງ ໃຫ້ເຫັນຢ່າງຊັດແຈ້ງວ່າ ຄວາມຂັດແຍ່ງຂອງລະບອບທຶນນິຍົມນັບມື້ຮ້າຍແຮງກວ່າເກົ່າ ແລະ ມີຜົນສະທ້ອນອັນໜັກໜ່ວງກວ່າເກົ່າ.

ຄວາມບໍ່ມີສະຖຽນລະພາບ ໃນການຂະຫຍາຍຕົວທາງເສດຖະກິດຂອງບັນດາລັດຈັກກະພັດຍິ່ງທະວີຂຶ້ນ. ໃນຊຸມປີ ໗໐ ຫາຕອນຕົ້ນຂອງຊຸມປີ ໘໐ ນັ້ນ, ລະບອບທຶນນິຍົມ ໄດ້ປະສົບກັບໄລຍະທີ່ການຜະລິດຕົກຕ່ຳເຖິງສີ່ເທື່ອ.

ວິກິດການທາງດ້ານເສດຖະກິດ ໃນຊຸມປີ ໗໐-໘໐ ແມ່ນຖື້ອນກ່ວາແຕ່ກ່ອນ ແລະ ມັນແຊກຊຶມເອົາທຸກປະເທດທຶນນິຍົມອະທຍາຍຕົວ ແລະ ມີລັກສະນະທຳລາຍ ແລະ ຄວັດເລິກກ່ວາ. ການຫລຸດຜ່ອນການຜະລິດໄດ້ຕິດຕາມໄປດ້ວຍວິກິດການທາງດ້ານເງິນຕາ, ວັດຖຸດິບ ແລະ ພະລັງງານເຊື້ອໄຟ . ໄພເງິນເຟີ້, ອັດຕາແລກປ່ຽນເງິນຕາທີ່ບໍ່ມີສະຖຽນລະພາບ, ສະພາບຕິດໜີ້ຕ່າງປະເທດນັ້ນເປັນສິ່ງທີ່ເຮັດໃຫ້ວິກິດການເຫລົ່ານີ້ຮ້າຍແຮງ ເປັນພິເສດ.

ລະບອບທຶນນິຍົມ ໄດ້ຊອກຫາທາງອອກຈາກຄວາມຂັດແຍ່ງຢູ່ບົນ ການສືບຕໍ່ຫັນເສດຖະກິດໄປເປັນລັກສະນະການທະຫານ. ລາຍຈ່າຍທາງ ການທະຫານເຕີບຕົວຂຶ້ນຢ່າງບໍ່ເຄີຍມີມາກ່ອນ. ນັບຕັ້ງແຕ່ປີ ໑໙໔໗ຫາປີ໑໙໗໘ ນັ້ນ ສະຫະລັດອາເມລິກາ ໄດ້ໃຊ້ຈ່າຍເງິນເຂົ້າໃນການທະຫານພັນຕື້ກ່ວາໂດລາ, ໝາຍຄວາມວ່າ ຫລາຍກ່ວາໃຊ້ຈ່າຍເຂົ້າໃນສົງຄາມໂລກ ຄັ້ງທີສອງ ເຖິງສອງເທົ່າກ່ວາ. ພຽງແຕ່ໃນໄລຍະແຕ່ປີ ໑໙໘໑ ຫາປີ ໑໙໘໕ ງົບປະມານທີ່ອອກໃຫ້ແກ່ເປົ້າໝາຍທາງການທະຫານໄດ້ເພີ່ມຂຶ້ນແຕ່ ໑໕໐ ເຖິງ ໓໐໐ ຕື້ໂດລາ ຫລືເທົ່າກັບ ໑,໘ ເທື່ອ. ການຫັນເປັນ ລັກສະນະການທະຫານນັ້ນ ໄດ້ນຳໄປສູ່ການເຮັດໃຫ້ເພີ່ມທະວີໄພເງິນເຟີ້ແລະຄວາມບໍ່ໝັ້ນຄົງຂອງເສດຖະກິດ ແລະ ພາໄປສູ່ການຫລຸດຜ່ອນການຜະລິດ ແລະ ເສຍບ່ອນທຳງານຂອງກຳມະກອນຢູ່ໃນຂະແໜງການທີ່ບໍ່ມີລັກສະນະ ການທະຫານ.

ທັງໝົດນີ້ ໄດ້ເຮັດໃຫ້ຊາວຜູ້ອອກແຮງງານປະສົບເຄາະຮ້າຍທາງສັງຄົມ, ປະສົບກັບຄວາມຂາດເຂີນທາງດ້ານວັດຖຸ ແລະ ຈິດໃຈ ຢ່າງໜັກໜ່ວງ. ລາຍຈ່າຍຂອງລັດເຂົ້າໃນການສຶກສາ, ສາທາລະນະສຸກ, ສະຫວັດດີການ ແລະ ການສ້າງທີ່ພັກພາອາໄສກໍ່ຖືກຫລຸດຜ່ອນລົງ. ຄ່າແຮງງານຂອງພວກກຳມະກອນ ແລະ ລັດຖະກອນກໍ່ຈຳກັດຢູ່ໃນລະດັບເກົ່າ ຫລືລົດຜ່ອນລົງ. ໄພຫວ່າງງານ ຊຶ່ງກວມເອົາເກືອບວ່າທຸກປະເພດຂອງຊາວຜູ້ອອກແຮງງານນັ້ນ ແມ່ນເປັນບັນຫາອັນຮ້າຍແຮງທີ່ສຸດສຳລັບການຂະຫຍາຍຕົວທາງສັງຄົມຂອງບັນດາປະເທດທຶນນິຍົມ. ກຳລັງພົນທີ່ບໍ່ມີວຽກເຮັດງານທຳຢູ່ໃນ ໘໔ ປະເທດທຶນນິຍົມຂະຫຍາຍຕົວ ໃນປີ ໑໙໘໓ ໄດ້ທະວີ ຂຶ້ນ

ເຖິງ ມມ ລ້ານຄົນ.

ສຳລັບສັງຄົມນາຍທຶນສະໄໝນີ້ ຄວາມບໍ່ມີສະຖຽນລະພາບ ທາງດ້ານການເມືອງທີ່ນັບມື້ນັບຮ້າຍແຮງຂຶ້ນ ຊຶ່ງສະແດງຕົວອອກຢູ່ໃນການຍຸບລັດຖະບານ ແລະ ໃນການດຳເນີນການເລືອກຕັ້ງລັດຖະສະພາກ່ອນກຳນົດເວລານັ້ນ ແມ່ນເປັນລັກສະນະສະເພາະຂອງລັດນາຍທຶນ. ວິກິດການໄດ້ແຜ່ລາມໄປຮອດອົງການອຳນາດການປົກຄອງແລະພັກການເມືອງນາຍທຶນ ມີການເຜີຍແບການສໍ້ໂກງແລະຄວາມຫລອກລວງແບບອາດຊະຍາກຳໄດ້ກາຍເປັນເຄື່ອງໝາຍອັນຕັດແຍກບໍ່ໄດ້ຈາກຊີວິດການເມືອງຢູ່ໃນປະເທດທຶນນິຍົມ . ລະບົບການເລືອກຕັ້ງຂອງນາຍທຶນກໍ່ພວມປະສົບກັບວິກິດການ ອັນເລິກເຊິ່ງເຊັ່ນດຽວກັນ.ຜູ້ເລືອກຕັ້ງທັງຫລາຍຕ່າງກໍ່ຢືນຢັນວ່າການສັບປ່ຽນພັກກຸ່ມອຳນາດນັ້ນບໍ່ໄດ້ນຳໄປສູ່ການປ່ຽນແປງຢູ່ໃນການເມືອງອັນໃຫຍ່ຫລວງແຕ່ຢ່າງໃດ,ສ່ວນຄຳໝັ້ນສັນຍາ ແລະ ໂຄງການທີ່ໃຫ້ຄຳໝັ້ນໝາຍໄວ້ກ່ອນການເລືອກຕັ້ງສ່ວນຫລວງຫລາຍກໍ່ບໍ່ຖືກນຳໄປປະຕິບັດ.

ຕອນຕົ້ນຂອງຊຸມປີ ໗໐ ນັ້ນ ທ່ວງທ່າປະຕິການ, ອະນຸລັກນິຍົມ ແລະ ຟາຊິດແບບໃໝ່ແມ່ນພົ້ນເດັ່ນຂຶ້ນຢູ່ໃນປະເທດທຶນນິຍົມຂະຫຍາຍຕົວ. ຈັກກະພັດນິຍົມ ໄດ້ລົງມືປະຕິບັດແນວທາງປະເຊີນໜ້າ ກັບຊາວຜູ້ອອກແຮງງານໂດຍນຳໃຊ້ເຄື່ອງມືປາບປາມ, ໃຊ້ອຳນາດທາລຸນ ແລະ ວິທີການທຸກຢ່າງເພື່ອປົກປ້ອງຜົນປະໂຫຍດຂອງຕົນ. ແນວທາງເພີ່ມທະວີຄວາມເຄັ່ງຕຶງສາກົນ, ການຊວງເສັງປະກອບອາວຸດ, ການສ່ຽງໄພທາງທະຫານແລະການກະກຽມເຮັດສົງຄາມນິວຄະເລຍຢ່າງເປີດແປນ ແມ່ນປະກົດການ ທີ່ອັນຕະລາຍກວ່າໝູ່ ຢູ່ໃນຄວາມເປັນປະຕິການຂອງຈັກກະພັດນິຍົມ.

ການທະວີທ່ວງທ່າປະຕິການ ຍັງສະແດງຕົວອອກຢູ່ໃນແນວຄິດ ຂອງພວກຈັກກະພັດນິຍົມນັ້ນຄືລັດທິຕ້ານກອມມູນິດ. ແນວຄິດຕ້ານກອມມູນິດ ໄດ້ຊຶມເລິກໄປທົ່ວຊີວິດຈິດໃຈຂອງໂລກນາຍທຶນ ໂດຍສະແດງອອກຢູ່ໃນ ຮູບການຕ່າງໆ. ລັດທິຕ້ານກອມມູນິດ ແມ່ນເປັນການສະແດງ ເຖິງຄວາມເປື່ອຍເຍື່ອຍຂອງແນວຄິດນາຍທຶນ ແລະ ຄວາມບໍ່ອາດສາມາດຂອງມັນ ທີ່ຈະຍົກເອົາທິດສະດີອັນໃດຂຶ້ນມາ ເພື່ອເປັນຜົນດີໃຫ້ແກ່ການຂະຫຍາຍຕົວຂອງສັງຄົມປະຈຸບັນ. ການຜິດໂຕນກັນທີ່ນັບມື້ເຕີບໃຫຍ່ລະຫວ່າງຄວາມເປັນຈິງ ແຫ່ງ

ການຂະຫຍາຍຕົວທາງເສດຖະກິດ, ສັງຄົມ ແລະ ການເມືອງ ກັບ ທິດສະດີກ່ຽວກັບການຂະຫຍາຍຕົວທາງສັງຄົມ ຂອງນາຍທຶນນັ້ນ ໄດ້ເຮັດໃຫ້ຄວາມສົນໃຈຕໍ່ທິດສະດີ ມາກ ແລະ ເລນິນ ແລະ ລັດທິກອມມູນິດວິທະຍາສາດ ນັບມື້ນັບເພີ່ມທະວີຂຶ້ນ.

ການເພີ່ມທະວີລັກສະນະຣຸກຣານ ແລະ ຄວາມເປັນປະຕິການຂອງຈັກກະພັດນິຍົມ, ການເພີ່ມທະວີລັກສະນະຕ້ານມະນຸດສະທຳ ແລະ ຕ້ານປະ-ຊາຊົນຢູ່ໃນການເມືອງຂອງມັນນັ້ນ ແມ່ນສະແດງໃຫ້ເຫັນເຖິງຄວາມປະລາໄຊຂອງມັນ. ທາງອອກທີ່ເປັນໄປຕາມປະຫວັດສາດໃນການອອກຈາກຄວາມຈົນຕາແຈຂອງສັງຄົມນາຍທຶນນັ້ນ ແມ່ນພົວພັນກັບການຂະຫຍາຍຕົວ ຂອງການຕໍ່ສູ້ຂອງຊາວຜູ້ອອກແຮງງານຢູ່ໃນປະເທດທຶນນິຍົມ ທີ່ຕ້ານກັບອຳນາດຜູກຂາດອັນບໍ່ມີຂອບເຂດ, ເພື່ອສັນຕິພາບ, ປະຊາທິປະໄຕ ແລະ ການປົດປ່ອຍສັງຄົມ.

## ຕ້ານການຜູກຂາດ, ເພື່ອສັນຕິພາບ ແລະປະຊາ ທິປະໄຕ

ຊົນຊັ້ນກຳມະກອນ ຢູ່ໃນບັນດາປະເທດທຶນນິຍົມຂະຫຍາຍຕົວແມ່ນເປັນກຳລັງສັງຄົມອັນສຳຄັນທີ່ຕ້ານຢັນກັບລັດທິທຶນນິຍົມຜູກຂາດ. ຊົນຊັ້ນ ກຳມະກອນໄດ້ຕິດພັນກັບພື້ນຖານການຜະລິດວັດຖຸ ແລະ ເຕັກນິກອັນກ້າວໜ້າຂອງໂລກປະຈຸບັນ ແລະ ໄດ້ດຳເນີນການຕໍ່ສູ້ຊົນຊັ້ນຢູ່ໃນປ້ອມປາການ ຂອງຈັກກະພັດນິຍົມ ແລະ ຢູ່ໃນບັນດາສູນກາງອັນເປັນພື້ນຖານຂອງລະບົບທຶນນິຍົມໂລກ.

ຊົນຊັ້ນກຳມະກອນ ຢູ່ໃນປະເທດທຶນນິຍົມຂະຫຍາຍຕົວ ແມ່ນເປັນຜູ້ຜະລິດຊັບສິນວັດຖຸຜູ້ສຳຄັນ, ແຕ່ວ່າເຂົາເຈົ້າຊ້ຳພັດຍັງຖືກຕັດຂາດ ອອກຈາກພາຫະນະການຜະລິດຢູ່, ດຳລົງຊີວິດຢູ່ດ້ວຍການຂາຍແຮງງານຂອງຕົນ ,

ຕົກເປັນຜູ້ຖືກຂູດຮີດ ແລະ ໄດ້ຮັບລາຍໄດ້ທີ່ບໍ່ສົມກັບແຮງງານທີ່ລາວ ຊຸທົດອອກ. ພ້ອມດຽວກັນນັ້ນ ປະກົດການໃໝ່ທີ່ເກີດມີຂຶ້ນຢູ່ໃນບັນດາປະເທດ-ທຶນນິຍົມປະຈຸບັນ ໄດ້ປ່ຽນແປງສ່ວນປະກອບທາງຄຸນນະພາບ ແລະ ປະລິມານຂອງຊົນຊັ້ນກຳມະກອນຢ່າງຫລວງຫລາຍ. ຊົນຊັ້ນກຳມາຊີບອຸດສາຫະກຳ ແມ່ນເປັນແກນກາງ ຂອງຊົນຊັ້ນກຳມະກອນ, ທັງເປັນຊົນຊັ້ນ ທີ່ມີປະສົບການ, ມີການຈັດຕັ້ງ ແລະ ຄວາມເປັນນ້ຳໜຶ່ງໃຈດຽວກັນທີ່ສຸດ. ພາກສ່ວນກຳມະກອນທີ່ມີຈຳນວນຫລາຍກວ່າໝູ່ ແມ່ນກຳມະກອນ ຂອງຂົງເຂດທີ່ບໍ່ຜະລິດ. ສ່ວນຫລາຍຢູ່ໃນນັ້ນ ແມ່ນເປັນຜູ້ຖືກຳເນີດຈາກຊົນຊັ້ນທີ່ບໍ່ແມ່ນກຳມາຊີບ. ຕາມລັກສະນະການອອກແຮງງານ, ລະດັບການສຶກສາ, ເງິນເດືອນ, ຖານະທາງສັງຄົມ ແລະ ເງື່ອນໄຂດຳລົງຊີວິດແລ້ວ ເຂົາເຈົ້າແມ່ນເປັນພາກສ່ວນໜຶ່ງຂອງຊົນຊັ້ນກຳມະກອນທີ່ໄດ້ຮັບຄ່າຈ້າງໜ້ອຍກວ່າໝູ່. ເນື່ອງມາຈາກການສຸມການຜະລິດທາງດ້ານກະສິກຳເຂົ້າກັນນັ້ນຈຶ່ງໄດ້ເກີດມີການຫລຸດຜ່ອນປະເພດຊາວກະສິກອນລົງ.

ໂຄງປະກອບທາງດ້ານວິຊາສະເພາະ ແລະ ອາຊີບຂອງຊົນຊັ້ນກຳມະກອນ ກໍ່ຖືກປ່ຽນແປງ. ອັດຕາສ່ວນຂອງອາຊີບທີ່ນິຍົມກັນຢ່າງກວ້າງຂວາງ ແລະ ທີ່ເຄີຍເຮັດຈົນເປັນປະເພນີນັ້ນ ( ຊ່າງສ້ອມ, ຊ່າງຈອດ ແລະອື່ນອື່ນ) ກໍ່ຫລຸດໜ້ອຍລົງ ແລະ ຈຳນວນກຳມະກອນອາຊີບໃໝ່ຄື: ຜູ້ວາງໂຄງການສຳລັບເຄື່ອງຈັກຄອມພິວເຕີ, ຜູ້ບັນຊາຈັກຄິດໄລ່ເອເລັກໂຕຣນິກ, ຜູ້ປະກອບເຄື່ອງຈັກ ແລະ ອື່ນໆພັດເພີ່ມຂຶ້ນ. ດ້ວຍເຫດວ່າວຽກງານຂອງເຂົາເຈົ້າບໍ່ໜັກໜ່ວງທາງຮ່າງກາຍໃຫຍ່ຫລວງປານໃດ, ສະນັ້ນ ນັກສະຖິຕິນາຍທຶນ ຈຶ່ງໄດ້ຖືວ່າກຳມະກອນເຫລົ່ານີ້ເປັນປະເພດດຽວກັນກັບລັດຖະກອນ ແລະ ອີງໃສ່ພື້ນຖານອັນນີ້ເອງ ພິສູດໃຫ້ເຫັນວ່າມີການຫລຸດຜ່ອນຈຳນວນກຳມະກອນລົງ.

ຄວາມເຂັ້ມງານເພີ່ມທະວີຂຶ້ນຢ່າງກະທັນຫັນ. ການຂະຫຍາຍຂະບວນວິວັດແຫ່ງການຜະລິດຢ່າງສົມເຫດສົມຜົນ ແລະ ໄປຕາມລວງເລິກນັ້ນ ໄດ້ເຮັດໃຫ້ລະດັບການຂູດຮີດແຮງງານກຳມະກອນເພີ່ມຂຶ້ນຢ່າງໄວວາ. ການເພີ່ມທະວີການຂູດຮີດຊາວຜູ້ອອກແຮງງານ ໄດ້ເຮັດໃຫ້ເງື່ອນໄຂການອອກແຮງງານ, ການດຳລົງຊີວິດ, ສະຫວັດດີການ ແລະ ສະພາບ ຂອງເຂົາ

ເຈົ້າຢູ່ໃນສັງຄົມຂີ້ຮ້າຍລົງ. ລະດັບຊີວິດການເປັນຢູ່ຂອງຊາວຜູ້ອອກແຮງງານຫລຸດລົງ, ໄພເງິນເຟີ້ ແລະ ລາຄາຖີບຕົວຂຶ້ນໄດ້ນຳໄປສູ່ການເຮັດໃຫ້ເງິນເດືອນຕົວຈິງຂອງກຳມະກອນຮັບຈ້າງທຸກປະເພດລົດລົງ. ໂດຍສະເພາະຢ່າງຍິ່ງ ການຫລຸດຜ່ອນງົບປະມານທາງດ້ານສັງຄົມນັ້ນ ໄດ້ສົ່ງຜົນສະທ້ອນຢ່າງໜັກໜ່ວງຕໍ່ສະພາບຂອງຊັ້ນຄົນຜູ້ທຸກຈົນ.

ໂດຍຢ້ານກົວຕໍ່ການປະທະກັນທາງຊົນຊັ້ນທີ່ເປັນສິ່ງຫລີກບໍ່ໄດ້ນັ້ນ, ບໍລິສັດຜູກຂາດທີ່ໄດ້ຮັບການຊ່ວຍເຫລືອຈາກລັດຖະບານ ກໍ່ເປີດສາກ ບຸກລຸກເຂົ້າໃສ່ສິດທິທາງດ້ານການເມືອງ ແລະ ສັງຄົມຂອງຊາວຜູ້ອອກແຮງງານ. ບໍລິສັດຜູກຂາດບີບບັງຄັບໃຫ້ກຳມະບານຮັບເອົາສັນຍາລວມໝູ່ທີ່ມີເງື່ອນໄຂອັນບໍ່ເປັນຜົນດີໃຫ້ແກ່ພວກກຳມະກອນ, ຊອກຫາວິທີທາງລຶບລ້າງ ບາງອົງການກຳມະບານ ແລະ ຍຸບເລີກບັນດາມາດຕະການ ວ່າດ້ວຍການປ້ອງກັນແຮງງານ ແລະ ຄວາມປອດໄພທາງດ້ານເຕັກນິກ ຢູ່ໃນໂຮງຈັກໂຮງງານຢູ່ໃນອົງກິດ, ລັດຖະບານຂອງພວກອະນຸລັກນິຍົມ ໄດ້ຮັບຮອງເອົາ ກົດໝາຍ "ວ່າດ້ວຍການມີວຽກເຮັດງານທຳ" ຊຶ່ງໃຫ້ສິດແກ່ຜູ້ກຳອຳນາດຈັບກຸມຫລັກແຫລ່ງກຳມະບານ, ພວກແທ່ຂະບວນປະທ້ວງເຂົ້າຄຸກໄດ້. ເຈົ້າຂອງວິສາຫະກິດກໍ່ໄດ້ຮັບສິດໃນການຟ້ອງກຳມະບານຂຶ້ນສານຍ້ອນ "ການຢຸດງານບໍ່ຖືກຕ້ອງຕາມກົດໝາຍ" ແລະ ລົງໂທດເອົາເຈົ້າດ້ວຍການ ປັບໃໝຢ່າງໜັກ. ຢູ່ໃນ ສສ ເຢຍລະມັນ ໃຕ້ຂໍ້ອ້າງທີ່ວ່າຮັບປະກັນ"ຄວາມປອດໄພພາຍໃນ" ວົງກຳອຳນາດໄດ້ບັນລຸເຖິງການຈຳກັດສິດທິ ໃນການເດີນຂະບວນປະທ້ວງ ແລະ ເຮັດໃຫ້ນະໂຍບາຍການເມືອງແຕ່ງ " ການເກືອດຫ້າມອາຊີບ" ຮ້າຍກາດຂຶ້ນຕື່ມ. ຕາມກົດໝາຍ "ວ່າດ້ວຍ ການເກືອດຫ້າມອາຊີບ" ນັ້ນ, ບັນດາສະມາຊິກພັກກອມມູນິດ ແລະບັນດາບຸກຄົນ "ຜູ້ບໍ່ໜ້າໄວ້ວາງໃຈ" ບໍ່ມີສິດດຳລົງຕຳແໜ່ງເປັນລັດຖະກອນຄື: ຄູສອນ, ພະນັກງານໄປສະນີ, ຄົນມະນາຄົມ ແລະ ຂະແໜງອື່ນໆ. ໂດຍປະຕິບັດຕາມກົດໝາຍອັນນີ້, ທຸກໆເດືອນ ຈຶ່ງມີປະຊາຊົນເກືອບ ໔ ລ້ານຄົນຈຳຕ້ອງໄດ້ໄປສະເໜີຕົວຢູ່ຕາມສະຖານີຕຳຫລວດ. ສ່ວນຢູ່ໃນ ສະຫະລັດອາເມລິກາ, ຍີ່ປຸ່ນ, ສະວິດ, ການຢຸດງານຂອງລັດຖະກອນ ແມ່ນຖືກເກືອດຫ້າມ ແລະ ບໍ່ອະນຸຍາດໃຫ້ເອົາເຈົ້າສ້າງອົງການກຳມະບານຂຶ້ນຢ່າງ

ເດັດຂາດ. ວ.ອິ.ເລນິນ ໄດ້ນິຍາມສາຍເຫດທາງສັງຄົມ ຂອງສະພາບການດັ່ງກ່າວດີແນວນີ້: "ຢູ່ໃນສັງຄົມທີ່ຖືກສ້າງຂຶ້ນບົນອຳນາດຂອງເງິນ, ຢູ່ໃນສັງຄົມ ຊຶ່ງວ່າຢູ່ຫັ້ນ ມະຫາຊົນຜູ້ອອກແຮງງານຕົກທຸກໄດ້ຍາກແລະພວກຮັ່ງມີພຽງຢິບມືດຽວ ພັດເກາະຫ້ອຍກິນນຳຜູ້ອື່ນນັ້ນບໍ່ສາມາດມີ "ເສລີພາບ" ຢ່າງແທ້ຈິງ ແລະ ຢ່າງສັກສິດໄດ້" ໑).

ວິກິດການທາງດ້ານເສດຖະກິດ, ການທີ່ບໍລິສັດຜູກຂາດຢຽບຢ່ຳ ສິດທິຂອງຊາວຜູ້ອອກແຮງງານນັ້ນ ໄດ້ກໍ່ໃຫ້ເກີດມີການຕໍ່ສູ້ທາງດ້ານຊົນຊັ້ນຢ່າງດຸເດືອດຂຶ້ນ ແລະ ມີມະຫາຊົນເຂົ້າຮ່ວມຢ່າງກວ້າງຂວາງ. ສິ່ງເຫລົ່າ ນີ້ສະແດງອອກຢ່າງເດັ່ນຊັດກວ່າໝູ່ຢູ່ໃນຂະບວນການນັດຢຸດງານອັນທີ່ແຜ່ຂະຫຍາຍອອກ. ຈຳນວນຜູ້ເຂົ້າຮ່ວມການຢຸດງານໃນຊຸມປີ ໗໐ ມີເຖິງ໔໕໐ລ້ານຄົນ. ຂະບວນການຢຸດງານໃນເບື້ອງຕົ້ນຂອງຊຸມປີ ໘໐ ກໍ່ຍິ່ງມີຄວາມແຂງແຮງ. ລະດັບການຈັດຕັ້ງໃນການຕໍ່ສູ້ຊົນຊັ້ນ ກໍ່ໄດ້ຍົກສູງຂຶ້ນ. ອັນນີ້ ກ່ອນອື່ນໝົດ ແມ່ນສະແດງອອກຢູ່ໃນການປະສານສົມທົບການເຄື່ອນໄຫວ ຂອງໜ່ວຍງານກຳມະກອນ ຢູ່ໃນຂອບເຂດໂຮງຈັກໂຮງງານ, ບໍລິສັດ, ຂະແໜງການ, ເຂດແຄວ້ນ ແລະ ຢູ່ໃນຂອບເຂດທົ່ວປະເທດ. ການຕໍ່ສູ້ແບບຢຸດງານ ມີຍຸດທະວິທີທີ່ຄ່ອງແຄ້ວຫລາຍກວ່າເກົ່າ, ມີວິທີການ ແລະ ຮູບການຫລາຍຮູບຫລາຍສີກວ່າເກົ່າ. ການຢືນປະທ້ວງທີ່ມີລັກສະນະມະຫາຊົນ, ການປິດລ້ອມໂຮງຈັກໂຮງງານ ແລະ ວິທີການອື່ນໆພວມຖືກໝູນໃຊ້ ຢ່າງກວ້າງຂວາງ. ຍຸດທະວິທີອັນຄ່ອງແຄ້ວໃນການຢຸດງານເພື່ອຕໍ່ສູ້ນັ້ນໄດ້ເຮັດໃຫ້ປະສິດທິພາບຂອງບັ້ນລົບຊົນຊັ້ນກັບນາຍທຶນຜູກຂາດສູງຂຶ້ນ ແລະ ອຳນວຍຄວາມສະດວກໃຫ້ຊາວຜູ້ອອກແຮງງານບັນລຸເຖິງການປົກປ້ອງຜົນປະໂຫຍດຂອງຕົນໄດ້ ໂດຍມີຜົນເສຍຫາຍໜ້ອຍກວ່າ.

ການຕໍ່ສູ້ຂອງຊາວຜູ້ອອກແຮງງານ ກໍ່ນັບມື້ນັບມີລັກສະນະບຸກຍິ່ງຂຶ້ນ ມີລັກສະນະດຸເດືອດ ແລະ ລັກສະນະສູ້ຮົບ. ການເດີນຂະບວນປະທ້ວງ, "ມື້ແຫ່ງການຕໍ່ສູ້", "ມື້ເຄື່ອນໄຫວແຫ່ງຊາດ" ແລະຂະບວນການປະທ້ວງຕ່າງໆທີ່ມີລັກສະນະມະຫາຊົນຂອງຊາວຜູ້ອອກແຮງງານນັ້ນ ແມ່ນເປັນອັນ ຢັ້ງຢືນ

---

໑) ວ.ອິ.ເລນິນ. ບົດນິພົນຄົບຊຸດ, ເຫລັ້ມທີ ໑໔, ໜ້າ ໑໐໓.

ເຖິງສິ່ງດັ່ງກ່າວ. ຢູ່ຍີ່ປຸ່ນ ໃນທຸກໆປີເລີ່ມແຕ່ປີ ໑໙໕໔ ເປັນຕົ້ນມາ ຊາວຜູ້ອອກແຮງງານໄດ້ດຳເນີນການຕໍ່ສູ້ເພື່ອສິດທິຂອງຕົນ ໃນຂອບເຂດທົ່ວປະເທດໃຕ້ຮູບການ "ການບຸກໃນລະດູບານໃໝ່" ແລະ "ການບຸກໃນລະດູໃບໄມ້ຫລົ່ນ". ຜູ້ເຂົ້າຮ່ວມຢູ່ໃນບັ້ນລົບເຫລົ່ານີ້ ອັນໄດ້ແກ່ການເດີນຂະບວນປະທ້ວງ, ມິດຕິງ, ຢຸດງານ ແມ່ນກຳມະກອນທີ່ມາຈາກໂຮງຈັກໂຮງງານຫລາຍແຫ່ງ. ຢູ່ໃນສະຫະລັດອາເມລິກາ ກ່ອນໄລຍະການເຊັນສັນຍາລວມໝູ່ນັ້ນ, ອົງການກຳມະບານໄດ້ດຳເນີນການຢຸດງານ ຢ່າງດົນນານເພື່ອເປົ້າໝາຍຢາກຈຳໃຫ້ເຈົ້າຂອງວິສາຫະກິດຮັບຮອງເອົາຄຳຮຽກຮ້ອງໃໝ່ຂອງກຳມະກອນ. ອົງການກຳມະບານຂອງກຳມະກອນຂະແໜງການຜະລິດລົດ, ຫລອມເຫລັກ, ຜະລິດນ້ຳມັນ ແລະ ຂະແໜງການອື່ນໆກໍໄດ້ດຳເນີນການປະທ້ວງແບບດຽວກັນນັ້ນ. ໃນຫລາຍກໍລະນີກຳມະກອນກໍຍາດໄດ້ໄຊຊະນະ. ບົດຮຽນໄດ້ຊີ້ບອກວ່າ ການບຸກເຊັ່ນນີ້, ໂດຍສະເພາະຖ້າມັນມີຂະໜາດຍິ່ງໃຫຍ່ຢູ່ໃນຂອບເຂດທົ່ວປະເທດນັ້ນ ແມ່ນສາມາດ ສ້າງ "ຄວາມກົດດັນຈາກເບື້ອງລຸ່ມ" ຢ່າງຈິງຈັງ ໄດ້ບໍ່ພຽງແຕ່ຕໍ່ບໍລິສັດ ຜູກຂາດແຕ່ກໍ່ຕໍ່ການເມືອງຂອງລັດຖະບານນຳອີກ.

ຢູ່ໃນຊຸມປີຫລັງນີ້ການຕໍ່ສູ້ອັນນັ້ນ ນັບມື້ນັບມີລັກສະນະການເມືອງ ຢ່າງຈະແຈ້ງ. ປະການທີໜຶ່ງ ອັນນີ້ສະແດງອອກໃນການຕໍ່ສູ້ຂອງຊາວ ຜູ້ອອກແຮງງານຕ້ານການຊ່ວງແຂ່ງປະກອບອາວຸດ ແລະ ການອື່ມຂູ່ຂອງສົງຄາມນິວຄະເລຍລະດັບໂລກ,ຕ້ານການເຄື່ອນໄຫວຮຸກຮານຂອງຈັກກະພັດ,ຕ້ານພວກປະຕິການ ແລະ ລັດທິຟາຊິດ ກໍຄື ຢູ່ໃນການສະໜັບສະໜູນ ກຳລັງປະຊາທິປະໄຕແລະຂະບວນການຕໍ່ສູ້ປົດປ່ອຍຊາດ;ປະການທີສອງ ແມ່ນສະແດງອອກຢູ່ໃນການລຸກຮືຂຶ້ນທົ່ວປະເທດຂອງຊາວຜູ້ອອກແຮງງານ ຕ້ານນະໂຍບາຍການເມືອງພາຍໃນທີ່ປະຕິການຂອງລັດຖະບານ,ຕ້ານການປາບປາມ ແລະ ການຂ້າຟັນລັ້ນແຫງຂອງຕຳຫລວດ ແລະ ເພື່ອໃຫ້ມີການ ປ່ຽນແປງໂຄງປະກອບທາງການເມືອງ ແລະ ເສດຖະກິດຂອງສັງຄົມນາຍທຶນ ຢ່າງເຖິງກົກເຖິງຮາກ. ໂດຍຍົກເອົາຂໍ້ຮຽກຮ້ອງໃຫ້ມີການໂອນເປັນຂອງຊາດແບບປະຊາທິປະໄຕ, ຈັດໃຫ້ມີການກວດກາຂອງກຳມະກອນຢູ່ໃນການຜະລິດ, ຮັບປະກັນສິດທິຕົວຈິງໃນການອອກແຮງງານ, ຈຳກັດອຳນາດອັນບໍ່ມີ

ຂອບເຂດຂອງບໍລິສັດຜູກຂາດ ແລະ ອື່ນໆນັ້ນ ຊາວຜູ້ອອກແຮງງານ ກໍໄດ້ເຮັດໃຫ້ມີການປ່ຽນແປງບາງຢ່າງຢູ່ໃນໂຄງປະກອບຂອງລະບອບເສດຖະກິດ-ສັງຄົມ ທີ່ພວມດຳລົງຄົງຕົວຢູ່ນັ້ນ. ການຕໍ່ສູ້ຕ້ານກົດໝາຍທີ່ຕ້ານ ກັບຊົນຊັ້ນກຳມະກອນ ແລະ ອົງການກຳມະບານແມ່ນມີລັກສະນະຄືແນວນັ້ນ.

ລະດັບຄວາມສຸກງອມທາງດ້ານການເມືອງ ແລະ ຄວາມຂະຫຍັນ ອັນແຂງຂອງຊົນຊັ້ນກຳມະກອນ ແມ່ນສະແດງອອກຢູ່ໃນການເຄື່ອນໄຫວ ຂອງພັກຂອງເຂົາ, ເຊິ່ງແມ່ນພັກມາກ-ເລນິນ ກໍຄືພັກປະຕິຮູບນິຍົມ. ພັກກອມມູນິດຝະລັ່ງ, ອີຕາລີ, ປອກຕຸຍການ, ຍີ່ປຸ່ນ ພວມເປັນຜູ້ມີອິດທິພົນ ຢູ່ໃນຊີວິດການເມືອງຂອງປະເທດຕົນ. ນັກສັງຄົມນິຍົມຍີ່ປຸ່ນ, ອົດສະຕຣາລີ, ເບັກ, ແຟງລັງ ແລະ ຂອງບັນດາປະເທດສະກັງດີນາວ ກໍພວມຕໍ່ສູ້ ເພື່ອສັນຕິພາບ ແລະ ການຜ່ອນຄາຍຄວາມເຄັ່ງຕຶງສາກົນຢ່າງຫ້າວຫັນ.

ການຕໍ່ສູ້ຂອງຊົນຊັ້ນກຳມະກອນ ຕ້ານລະບົບຜູກຂາດແຫ່ງລັດ ໄດ້ດູດດຶງເອົາບັນດາຊັ້ນຄົນຜູ້ອອກແຮງງານຊັ້ນຄົນໃໝ່ຄື: ພະນັກງານ ໃນອົງເຂດບໍລິການ, ພະນັກງານແພດໝໍ, ຄູສອນ, ລັດຖະກອນ,ຊາວນາແລະແມ່ນແຕ່ນັກສຶກສາ, ແມ່ເຮືອນ ແລະ ຜູ້ກິນເບ້ຍບຳນານເຂົ້າຮ່ວມນັບມື້ນັບຫລາຍຂຶ້ນ. ອັນນັ້ນບໍ່ແມ່ນເລື່ອງບັງເອີນ, ທັງນີ້ກໍຍ້ອນວ່າ ເຂົາເຈົ້າ ຮູ້ສຶກວ່າມີແອກໜັກໜີບເຕັງຂອງບໍລິສັດຜູກຂາດ ແລະ ການຂົ່ມຂູ່ຈາກຜົນ ສະທ້ອນຂອງວິກິດການ. ເຂົາເຈົ້າທັງໝົດ ລ້ວນແຕ່ສົນໃຈນຳການຄ້ຳປະກັນສັນຕິພາບ ແລະ ການຢຸດຕິການຊ່ວງເສັງປະກອບອາວຸດ. ຕົວຈິງແລ້ວຢູ່ໃນສັງຄົມນາຍທຶນນັ້ນ ບໍ່ມີຜົນປະໂຫຍດຂອງກຸ່ມຄົນໃດໃນສັງຄົມອີກແລ້ວທີ່ຈະບໍ່ຂັດແຍ່ງກັບລະບົບຜູກຂາດແຫ່ງລັດ.

### ຕໍ່ສູ້ຢູ່ໃນຖັນແຖວດຽວກັນ

ການຕ້ານຍັນກັນລະຫວ່າງຜົນປະໂຫຍດຂອງກຸ່ມຄົນຜູ້ປົກຄອງກັບຜົນປະ

ໂຫຍດຂອງປະຊາຊົນສ່ວນໃຫຍ່ ຢູ່ໃນບັນດາປະເທດທຶນນິຍົມ ຂະຫຍາຍຕົວນັ້ນໄດ້ກາຍເປັນປະກົດການທີ່ເດັ່ນຊັດທີ່ສຸດ ຈົນເຮັດໃຫ້ພື້ນຖານທາງສັງຄົມຂອງຈັກກະພັດນິຍົມຖືກກູດທຣົມ ແລະ ຫລຸດພ່ອນລົງຢ່າງໄວວາ. ຂະນະດຽວກັນນັ້ນ ທຶນນິຍົມຜູກຂາດ ກໍຍັງສືບຕໍ່ຄົງຕົວ ແລະ ເຄື່ອນໄຫວ.ປະກົດການອັນນີ້ ມັນແມ່ນຍ້ອນສາຍເຫດອັນໃດ ?

ສາຍເຫດທີ່ຊ່ວຍຮັກສາການປົກຄອງຂອງລະບົບຈັກກະພັດໄວ້ນັ້ນ ແມ່ນມີຫລາຍສິ່ງຫລາຍຢ່າງ. ກ່ອນອື່ນໝົດ ແມ່ນຍ້ອນວ່າການແບ່ງກຳລັງການເມືອງ ແລະ ຊົນຊັ້ນອອກເປັນສອງສົ້ນທີ່ກົງກັນຂ້າມກັນນັ້ນ ບໍ່ແມ່ນຈະ ໄປຕາມເສັ້ນຊື່ ແລະ ໄປຕາມແບບດຽວກັນໝົດ. ພາຍໃນຊົນຊັ້ນ ແລະ ກຸ່ມຄົນໃນສັງຄົມ ທີ່ປະເຊີນໜ້າກັບບັນດາບໍລິສັດຜູກຂາດນັ້ນກໍມີການແບ່ງແຍກຍ້ອນວ່າເຂົາເຈົ້າມີສ່ວນປະກອບທາງສັງຄົມທີ່ມີຫລາຍສີສັນ, ມີສິດຜົນ ປະໂຫຍດທາງເສດຖະກິດທີ່ບໍ່ກົງກັນ, ມີທັດສະນະແນວຄິດ ແລະ ການເມືອງທີ່ແຕກຕ່າງກັນ ແລະ ມີຄວາມຈົງຮັກພັກດີຈົນກາຍເປັນປະເພນີຕໍ່ພັກ ການເມືອງໃດ ພັກການເມືອງໜຶ່ງ. ໂດຍອີງໃສ່ນະໂຍບາຍການເມືອງ ແບບປະຕິຮູບນິຍົມ ແລະ ພາຫະນະນອມເນົາແນວຄິດນັ້ນ, ນາຍທຶນຜູກຂາດ ກໍໄດ້ສ້າງລະບົບສະຫະພັນສັງຄົມຂອງຕົນຂຶ້ນ ຊຶ່ງໃຊ້ເປັນບ່ອນອີງໃຫ້ແກ່ການປົກຄອງຂອງມັນ. ບໍ່ພຽງແຕ່ຊົນຊັ້ນນາຍທຶນນ້ອຍ ແລະ ນາຍທຶນກາງເທົ່ານັ້ນ, ແຕ່ປັນຍາຊົນ, ລັດຖະກອນ ແລະ ແມ່ນແຕ່ຊາວນາທີ່ຢູ່ພາຍໃຕ້ການໜີບເຕັງຂອງທຶນຜູກຂາດຢ່າງເປັນປະຈຳອີກດ້ວຍທີ່ ເອົາອະນາຄົດ ຂອງຕົນເອງ ໄປຕິດພັນກັບນາຍທຶນຜູກຂາດ. ພາຍໃນຊົນຊັ້ນກຳມະກອນ ກໍຍັງບໍ່ທັນມີຄວາມເປັນເອກະພາບ. ກຳມະກອນພາກສ່ວນໜຶ່ງໄປນຳນັກກອມມູນິດ, ພາກສ່ວນໜຶ່ງອີກ ພັດສະໜັບສະໜູນນັກສັງຄົມປະຊາທິປະໄຕພາກສ່ວນທີສາມ ພັດຈຳກັດການເຄື່ອນໄຫວຂອງຕົນຢູ່ພຽງແຕ່ການຮ່ວມຢູ່ໃນອົງການກຳມະບານເທົ່ານັ້ນ, ກຸ່ມທີສີ່ ພັດໄປນຳພັກ ແລະ ອົງການຈັດຕັ້ງຂອງນາຍທຶນລວມທັງຈຳພວກທີ່ເປັນປະຕິການຢ່າງເປີດແປນ ແລະກຸ່ມທີ່ຫາເວົ້າລວມແລ້ວ ແມ່ນຖືວ່າຕົນຢືນຢູ່ "ນອກການເມືອງ". ທັງໝົດນີ້ ໄດ້ສ້າງຄວາມຫຍຸ້ງຍາກໃຫ້ແກ່ການເຕີບຕົວຂອງຂະບວນກຳມະກອນ ແລະເຮັດໃຫ້ປະສິດທິຜົນຂອງການຕໍ່ສູ້ຂອງຊາວຜູ້ອອກແຮງງານຫລຸດພ່ອນລົງຢ່າງຫລວງ

ຫລາຍ. ການລົບລ້າງຄວາມແຕກແຍກ ແລະການເຮັດໃຫ້ຊາວຜູ້ອອກແຮງງານທັງໝົດເຄື່ອນໄຫວຢູ່ບົນພື້ນຖານປະຕິວັດອັນໜຶ່ງອັນດຽວກັນນັ້ນ ແມ່ນເປັນ ແລະ ພວມເປັນບັນຫາໃຈກາງຂອງຂະບວນການກຳມະກອນຢູ່ໃນປະເທດທຶນນິຍົມຂະຫຍາຍຕົວ. ມີແຕ່ສ້າງຄວາມເປັນເອກະພາບຂຶ້ນຢູ່ໃນ ຖັນແຖວຂອງຕົນເທົ່ານັ້ນ ຊົນຊັ້ນກຳມະກອນ ຈຶ່ງຈະສາມາດເຕົ້າໂຮມ ພາກສ່ວນໃຫຍ່ໃນຝ່າຍປະຊາທິປະໄຕໄວ້ອ້ອມຂ້າງຕົນໄດ້ ແລະ ຈຶ່ງຈະສາມາດສ້າງທ່າແຮງຕົວຈິງຢູ່ໃນການຕໍ່ສູ້ຕ້ານລະບົບຜູກຂາດແຫ່ງລັດໄດ້.

ໂດຍຢືນຢູ່ບົນທັດສະນະຄືແນວນີ້ເອງທີ່ບັນດາພັກກອມມູນິດພວມມອງເຫັນທ່າຂະຫຍາຍໃນອະນາຄົດຂອງຂະບວນວິວັດ ແຫ່ງການປະຕິວັດຢູ່ໃນ ພາກສ່ວນນີ້ຂອງໂລກ. ຫລັກທິດສະດີມາກ-ເລນິນ ກ່ຽວກັບການປະຕິວັດສັງຄົມນິຍົມ ແລະ ການຂະຫຍາຍທິດສະດີປະຕິວັດຢ່າງປະດິດສ້າງໃຫ້ເໝາະສົມກັບເງື່ອນໄຂປະຫວັດສາດອັນໃຫຍ່ ແລະ ບົດຮຽນໃໝ່ໃນການຕໍ່ສູ້ ຊົນຊັ້ນນັ້ນ ແມ່ນເປັນພື້ນຖານທິດສະດີຢູ່ໃນການເຄື່ອນໄຫວຂອງເຂົາເຈົ້າ.

ວ.ອີ.ເລນິນ ໄດ້ຄາດຄະເນໄວ້ວ່າ ຈະມີຄວາມຫຍຸ້ງຍາກ ອັນຫລວງຫລາຍ ຢູ່ບົນເສັ້ນທາງແຫ່ງການປະຕິວັດ ຢູ່ໃນປະເທດທີ່ມີການ ຂະຫຍາຍຕົວສູງ ເຖິງແມ່ນວ່າບັນດາປະຖົມປັດໄຈທາງດ້ານວັດຖຸສຳລັບກ້າວຂຶ້ນ ສັງຄົມນິຍົມຢູ່ໃນບັນດາປະເທດເຫລົ່ານັ້ນ ໄດ້ສຸກງອມແລ້ວກໍຕາມ. ເພິ່ນຮັບຮູ້ວ່າ ຢູ່ນີ້ຜູ້ຕ້ານຢັນກັບຊາວຜູ້ອອກແຮງງານນັ້ນ ແມ່ນນາຍທຶນທີ່ເຂັ້ມແຂງ ທີ່ສຸດ, ທີ່ມີການຈັດຕັ້ງ ແລະມີປະສົບການທີ່ສຸດ [໑)]. ສະນັ້ນບັນຫາ ທີ່ຫຍຸ້ງຍາກກວ່າໝູ່ໝົດຂອງຊົນຊັ້ນກຳມາຊີບຢູ່ໃນປະເທດທຶນນິຍົມຂະຫຍາຍຕົວນັ້ນ ເຄີຍເປັນແລະຍັງເປັນບັນຫາກ່ຽວກັບການໂຄ່ນລົ້ມອຳນາດ ຂອງນາຍທຶນຜູກຂາດ ແລະ ການດຳເນີນການປະຕິວັດສັງຄົມນິຍົມໃຫ້ສຳເລັດຜົນນັ້ນເອງ. ໃນເວລາມອບໜ້າທີ່ວາງຍຸດທະສາດ ແລະ ຍຸດທະວິທີແຫ່ງການຕໍ່ສູ້ປະຕິວັດຢ່າງປະດິດສ້າງໃຫ້ແກ່ຜູ້ສືບທອດຂອງເພິ່ນນັ້ນ ເລນິນ ໄດ້ສອນວ່າ : "ຕ້ອງຊອກຄົ້ນຫາ, ສຳຜັດ ແລະ ກຳນົດວິທີການຕົວຈິງ ຫລືເຫດການຢ່າງຄ່ອງແຄ້ວ ເພື່ອນຳເອົາມະຫາຊົນເຂົ້າສູ່ການຕໍ່ສູ້ປະຕິວັດອັນແທ້ຈິງ, ເດັດຂາດ, ສຸດທ້າຍ ແລະ ຍິ່ງໃຫຍ່, ອັນນີ້ເອງ ທີ່ເປັນໜ້າທີ່ອັນສຳຄັນຂອງ

໑) ວ.ອີ.ເລນິນ. ບົດນິພົນຄົບຊຸດ, ເຫລັ້ມທີ ໓໙, ໜ້າ ໔໓໑.

ລັດທິກອມມູນິດໃນສະໄໝປະຈຸບັນ ຢູ່ໃນເອີລົບຕາເວັນຕົກ ແລະ ອາເມລິກາ" ໑).

ວ.ອີ.ເລນິນ ບໍ່ເຄີຍຖືຈັກເທື່ອວ່າ ການປະຕິວັດສັງຄົມນິຍົມແມ່ນ ສິ່ງດຽວກັນກັບການລຸກຮື້ຂຶ້ນປະກອບອາວຸດ. ເພິ່ນໄດ້ຊີ້ບອກເຖິງຮູບການ ທີ່ມີຫລາຍຮູບຫລາຍສີ ໃນການຂ້າມຜ່ານໄປສູ່ສັງຄົມນິຍົມ ແລະສອນໃຫ້ຮູ້ກ່ຽວກັບການພົວພັນເຊິ່ງກັນ ແລະ ກັນລະຫວ່າງການປະຕິວັດ ແລະ ການປະຕິ-ຮູບ. ໂດຍຕໍ່ສູ້ຕ້ານພວກປະຕິຮູບອຽງຊ້າຍຢ່າງເດັດຂາດນັ້ນ, ເລນິນ ໄດ້ເນັ້ນເຖິງຄວາມແຕກຕ່າງທາງຄຸນນະພາບ ແລະ ຄວາມກົງກັນຂ້າມ ອັນເດັ່ນຈຸດລະຫວ່າງການປະຕິຮູບ ແລະ ການປະຕິວັດວ່າ: "ບັນດາການປະຕິຮູບ ແມ່ນຍອມຮັບເອົາການຜ່ອນສັ້ນຜ່ອນຍາວຈາກຊົນຊັ້ນປົກຄອງ ຢູ່ໃນເງື່ອນໄຂທີ່ພວກເຂົາຮັກສາການປົກຄອງຂອງມັນໄວ້. ການປະຕິວັດ ແມ່ນການໂຄ່ນລົ້ມຊົນຊັ້ນປົກຄອງ" ໒). ແຕ່ວ່າ ເລນິນ ບໍ່ໄດ້ໄປເຖິງບ່ອນວ່າຫລັກມູນດັ່ງກ່າວແມ່ນມີລັກສະນະສຳບູນແຕ່ຢ່າງໃດ. ໂດຍຄົ້ນພົບ ຄວາມແຕກຕ່າງດ້ານຄຸນນະພາບ ລະຫວ່າງການປະຕິຮູບກັບການປະຕິວັດນັ້ນເພິ່ນໄດ້ຂຽນວ່າ: "ການຫລົງລືມຄວາມກົງກັນຂ້າມກັນອັນນີ້, ການຫລົງລືມສິ່ງທີ່ຂີດຂັ້ນສອງຄວາມສຳນຶກດັ່ງກ່າວນັ້ນ ແມ່ນຈະນຳໄປສູ່ຄວາມຜິດພາດ ອັນຮ້າຍແຮງຢູ່ເລື້ອຍໆ ຢູ່ໃນທຸກໆການອະພິປາຍກ່ຽວກັບປະຫວັດສາດ. ແຕ່ຄວາມກົງກັນຂ້າມອັນນີ້ ກໍ່ບໍ່ແມ່ນສິ່ງສຳບູນ, ສິ່ງທີ່ຂີດຂັ້ນກໍ່ບໍ່ແມ່ນຕາຍຕົວ, ແຕ່ມີຊີວິດຊີວາ, ເປັນສິ່ງທີ່ຂີດຂັ້ນຊຶ່ງຕ້ອງຮູ້ກຳນົດມັນຢູ່ໃນແຕ່ລະກໍລະນີອັນລະອຽດ" ໓). ລັດທິມາກ ທັງບໍ່ຕີລາຄາສູງ ທັງບໍ່ຖືເບົາຄວາມໝາຍຂອງການປະຕິຮູບ. ວ.ອີ.ເລນິນ ໄດ້ຕ້ານກັບພວກປະຕິຮູບອຽງຂວາໃນລະດັບບໍ່ໜ້ອຍໄປກວ່າທີ່ເພິ່ນຕ້ານຢ່າງເຄັ່ງຂຶມກັບພວກສວຍໂອກາດອຽງຊ້າຍຊຶ່ງເປັນຝ່າຍທີ່ຮັບຮູ້ພຽງແຕ່ "ຮູບການປະຕິວັດ" ຢູ່ໃນການດັດສາງ ສັງຄົມໂດຍບໍ່ຄຳນຶງເຖິງວ່າປະຖົມປັດໄຈອັນຈຳເປັນສຳລັບການດຳເນີນການປະຕິ

---

໑) ວ.ອີ.ເລນິນ. ບົດນິພົນຄົບຊຸດ, ເຫລັ້ມທີ ໔໑, ໜ້າ ໗໒.

໒) ວ.ອີ.ເລນິນ. ບົດນິພົນຄົບຊຸດ, ເຫລັ້ມທີ ໓໙, ໜ້າ ໑໑໓.

໓) ວ.ອີ.ເລນິນ. ບົດນິພົນຄົບຊຸດ, ເຫລັ້ມທີ ໒໐, ໜ້າ ໑໖໗.

ວັດນັ້ນສູກວອນແລ້ວຫລືຍັງ.

ປະສົບການແຫ່ງການຕໍ່ສູ້ຂອງຊາວຜູ້ອອກແຮງງານ ໄດ້ຊີ້ບອກວ່າການປະຕິຮູບນັ້ນ ບໍ່ແມ່ນມີຄວາມໝາຍດຽວ: ມັນສາມາດພາໄປເຖິງບ່ອນເຮັດໃຫ້ການອ້ານຜ່ານໄປສູ່ການດັດສ້າງປະຕິວັດນັ້ນຍູດສະວັກໄດ້ເທົ່າໆກັນກັບສາມາດເລັ່ງລັດຂະບວນວິວັດດັ່ງກ່າວ. ລວງເລິກແລະພົນສະທ້ອນທາງສັງຄົມຂອງການປະຕິຮູບແມ່ນຂຶ້ນກັບສິ່ງທີ່ວ່າແມ່ນໃຜດຳເນີນການປະຕິຮູບ: ແມ່ນຊົນຊັ້ນປົກຄອງເອງເປັນຜູ້ດຳເນີນການປະຕິຮູບເພື່ອຜົນປະໂຫຍດຮັກສາລະບຽບການທີ່ພວມຄຳລົງຄົງຕົວຢູ່ນັ້ນ ຫລືວ່າການປະຕິຮູບນັ້ນດຳເນີນໄປພາຍໃຕ້ການກົດດັນຂອງຊາວຜູ້ອອກແຮງ ງານ ທັງໆທີ່ມີການຕ້ານຄືນ ຂອງຊົນຊັ້ນປົກຄອງກໍ່ຕາມ. ໃນກໍລະນີທຳອິດນັ້ນແມ່ນຢາກເວົ້າເຖິງການປະຕິຮູບ ທີ່ຊົນຊັ້ນປົກຄອງນຳໃຊ້ສຳລັບການຕໍ່ສູ້ກັບຂະບວນການກຳມະກອນ. ຕົວຢ່າງອີກອັນໜຶ່ງ ແມ່ນການປະຕິຮູບປະຊາທິປະໄຕຊຶ່ງດຳເນີນໄປຍ້ອນມີຂະບວນການກຳມະກອນອັນແຂງແຮງ, ຍ້ອນມີຄວາມກົດດັນຈາກເບື້ອງລຸ່ມເຖິງວ່າຈະມີການຕ້ານຍັນຄືນຈາກຝ່າຍຊົນຊັ້ນປົກຄອງກໍ່ຕາມ. ບັນດາການປະຕິຮູບປະເພດນີ້, ພັກກອມມູນິດຖືວ່າ ມັນເປັນຂັ້ນຕອນ ຢູ່ລະຫວ່າງກາງ ຂອງການຕໍ່ສູ້ ເພື່ອເປົ້າໝາຍສຸດທ້າຍຂອງຊາວຜູ້ອອກແຮງງານ ແລະຖືວ່າມັນເປັນພາຫະນະເພື່ອດຶງດູດເອົາມວນຊົນເຂົ້າສູ່ການດັດສ້າງແບບປະຕິວັດ.

ຢູ່ໃນຊີວິດການເມືອງຂອງປະເທດທຶນນິຍົມຂະຫຍາຍຕົວນັ້ນ ມີຂະບວນການປະຊາທິປະໄຕອັນກວ້າງຂວາງພົ້ນເດັ່ນຂຶ້ນ. ຈຸດພິເສດຢູ່ໃນຊີວິດການເມືອງຂອງປະເທດທຶນນິຍົມຂະຫຍາຍຕົວທີ່ນັກກອມມູນິດ ເອົາໃຈໃສ່ນັ້ນ ຄື: ຄວາມຈິງຮັກພັກດີຂອງປະຊາຊົນຕໍ່ປະເພນີການມີລັດຖະສະພາ ແລະປະຊາທິປະໄຕ, ລະບົບຫລາຍພັກ, ຕໍ່ການມີພັກປົກຄອງ ແລະ ພັກຝ່າຍຄ້ານແລະອື່ນໆ. ຄວນເນັ້ນວ່າ ສິດປະຊາທິປະໄຕແມ່ນຖືກຍາດມາໄດ້ ຍ້ອນການຕໍ່ສູ້ອັນທໍລະຫົດອົດທົນ ແລະ ດົນນານ, ສະນັ້ນການປົກປ້ອງໝາກຜົນຂອງມັນຈາກການບຸກໂຈມຕີຂອງບໍລິສັດຜູກຂາດຈຶ່ງເປັນໜ້າທີ່ອັນພົ້ນຖານຂອງ ຂະບວນການປະຊາທິປະໄຕ. ໂດຍປ້ອງກັນສິດປະຊາທິປະໄຕແບບນາຍທຶນນັ້ນ, ພັກກອມມູນິດກໍ່ມອງເຫັນວ່າ ການນຳໃຊ້ມັນກໍ່ອຳນວຍຄວາມສະດວກໃຫ້ແກ່ການກ້າວໄປສູ່ການຂະຫຍາຍປະຊາທິປະໄຕອັນໃຫມ່ທີ່ສູງກວ່າ ໂດຍອີງໃສ່

ການຈຳກັດອຳນາດ ແລະ ຕໍ່ໄປກໍແມ່ນບັດຂໍ້ອຍນາຍທຶນຜູກຂາດ ອອກຈາກອຳນາດດັ່ງກ່າວ.

ໂດຍອີງໃສ່ການຕີລາຄາທ່າຂະຫຍາຍຕົວໃນອະນາຄົດຂອງການປະຕິວັດປະຊາທິປະໄຕດີແນວນີ້ ພັກກອມມູນິດ ກໍໄດ້ນຳເອົາຫລັກມູນ ກ່ຽວກັບການຂ້າມຜ່ານໄປສູ່ສັງຄົມນິຍົມແບບສັນຕິວິທີ ແລະ ແບບໃຊ້ລັດຖະສະພານັ້ນ ເຂົ້າບັນຈຸໃນໂຄງການດຳເນີນງານຂອງຕົນ ໂດຍອີງອາໄສໃສ່ ການຍາດແຍ່ງເອົາຜູ້ເລືອກຕັ້ງສ່ວນໃຫຍ່ ມາເຂົ້າຂ້າງຝ່າຍຊົນຊັ້ນກຳມະກອນແລະ ພັນທະມິດຂອງເຂົາ. ເອກະສານການເມືອງເຫລົ່ານີ້ ໄດ້ກາຍເປັນໂຄງການແຫ່ງ "ການເຄື່ອນໄຫວເພື່ອການປ່ຽນແປງໄປທາງດີ" ຊຶ່ງແມ່ນບັນດາພັກກອມມູນິດຂອງປະເທດທຶນນິຍົມຂະຫຍາຍຕົວໃນຊຸມປີ ໗໐ ແລະຕອນຕົ້ນຂອງຊຸມປີ ໘໐ ເປັນຜູ້ສະເຫນີອອກ. ໂດຍອີງໃສ່ເງື່ອນໄຂ ຂອງແຕ່ລະປະເທດນັ້ນພັກກອມມູນິດໄດ້ສະເຫນີຂໍ້ຮຽກຮ້ອງໃຫ້ມີການໂອນ ເປັນຂອງລັດແບບປະຊາທິປະໄຕ, ການວາງແຜນຂະຫຍາຍເສດຖະກິດແບບປະຊາທິປະໄຕ ຊຶ່ງມີການເຂົ້າຮ່ວມຢ່າງກວ້າງຂວາງຂອງກຳມະກອນ ຢູ່ໃນການຄຸ້ມຄອງການຜະລິດ, ການຮັບຮອງເອົາ ມາດຕະການພິເສດທີ່ແນໃສ່ຈັດບ່ອນເຮັດວຽກເພີ່ມຕື່ມ ເພື່ອເປົ້າຫມາຍຫລຸດຜ່ອນການຫວ່າງງານແລະການແບ່ງປັນລາຍໄດ້ແຫ່ງຊາດ ເພື່ອຜົນປະໂຫຍດ ຂອງຊາວຜູ້ອອກແຮງງານ. ຢູ່ໃນໂຄງການ "ການເຄື່ອນໄຫວເພື່ອການປ່ຽນແປງໄປໃນທາງດີ" ນັ້ນ ກໍໄດ້ບັນຈຸຂໍ້ສະເຫນີຕົວຈິງທີ່ແນໃສ່ດັດສ້າງລະບົບການສຶກສາ, ສາທາລະນະສຸກ, ພາຫະນະສື່ມວນຊົນແບບປະຊາທິປະໄຕ ແລະ ແນໃສ່ການຕໍ່ສູ້ກັບການສໍ້ລາດບັງຫລວງ, ການກໍ່ອາດຊະຍາກຳ, ກໍ່ການຮ້າຍ, ຢາເສບຕິດ ແລະ ຕ້ານກັບການຈຳແນກຜິວພັນ. ຂໍ້ຮຽກຮ້ອງ ແລະ ຂໍ້ສະເຫນີ ທີ່ບັນຈຸຢູ່ໃນໂຄງການເຫລົ່ານີ້ ແມ່ນຕອບສະຫນອງຜົນປະໂຫຍດຂອງກຸ່ມແລະຊັ້ນຄົນ ໃນສັງຄົມສ່ວນຫລວງຫລາຍ ແລະ ດ້ວຍເຫດນັ້ນ ມັນຈຶ່ງ ສາມາດເປັນພື້ນຖານສຳລັບການເຄື່ອນໄຫວຮ່ວມກັນຂອງເຂົາເຈົ້າ.

ອີກສິ່ງຫນຶ່ງທີ່ມີຄວາມສຳຄັນບໍ່ຫນ້ອຍກໍ່ແມ່ນການເຄື່ອນໄຫວຕົວຈິງທາງດ້ານການເມືອງແລະການຈັດຕັ້ງເພື່ອປະຕິບັດໂຄງການທີ່ພັກກອມມູນິດວາງອອກນັ້ນໃຫ້ປະກົດເປັນຈິງ. ການເຄື່ອນໄຫວນີ້ແມ່ນແຜ່ຂະຫຍາຍຢູ່ໃນບ່ອນທີ່

ມີນັກກອມມູນິດສັງກັດຢູ່ໃນລັດຖະບານປະສົມການເມືອງຫລືຢູ່ໃນບ່ອນທີ່ເຂົາເຈົ້າເປັນຫົວໜ້າເຫດສະບານເມືອງ ຫລືອຳນາດການປົກຄອງທ້ອງຖິ່ນ . ເມື່ອດຳເນີນການດັດສ້າງ ແບບປະຊາທິປະໄຕ ຢ່າງສູດຄວາມສາມາດຂອງຕົນ, ນັກກອມມູນິດກໍ່ເອົາພຶດຕິກຳຕົວຈິງເປັນສິ່ງເພີຍໃຫ້ເຫັນວ່າການພົວພັນແບບທຶນນິຍົມບໍ່ສອດຄ່ອງກັບຄວາມອາດສາມາດອັນໃໝ່ໃນການ ຂະຫຍາຍຕົວຂອງຄົນ ແລະ ຂອງການຜະລິດ, ໂດຍການພິສູດເຖິງຄວາມຈຳເປັນທີ່ຈະຕ້ອງຂ້າມຜ່ານໄປສູ່ສັງຄົມນິຍົມ.

## ບົດທີ ໑໑. ການປົດປ່ອຍບັນດາປະຊາຊາດທີ່ຖືກ ກົດຂີ່ທາງຊາດ ແລະ ທາງສັງຄົມ

### ເພື່ອເອກະລາດ ແລະ ອະທິປະໄຕ

ຢູ່ໃນຍຸກສະໄໝປະຈຸບັນ ມະຫາຊົນຈຳນວນມະຫາສານຊຶ່ງເປັນນັກຕໍ່ສູ້ຕ້ານແອກກົດຂີ່ຂອງນາຍທຶນ ແລະ ຕ້ານການເມືອງທີ່ເປັນປໍລະປັກຕໍ່ປະຊາຊົນຂອງພວກປະຕິການຈັກກະພັດນັ້ນ ໄດ້ເຂົ້າຮ່ວມໃນຂະບວນວິວັດ ແຫ່ງການດັດສ້າງໂລກທາງສັງຄົມ. ການຕໍ່ສູ້ປົດປ່ອຍຊາດໄດ້ກາຍເປັນຂະບວນການປະຕິວັດທີ່ເຕົ້າໂຮມເອົາມະຫາຊົນຈຳນວນຫລວງຫລາຍກວ່າໝູ່. ປະຊາຊົນຫລາຍລ້ານຄົນ ຢູ່ໃນບັນດາປະເທດອາຊີ, ອາຟລິກາ ແລະ ອາເມລິກາລາຕິນ ໄດ້ເຂົ້າຮ່ວມໃນການຕໍ່ສູ້ ຕ້ານຈັກກະພັດນິຍົມ, ເພື່ອການປົດປ່ອຍຊາດ.

ຜົນສຳເລັດຂອງຂະບວນການປົດປ່ອຍຊາດສະໄໝນັ້ມີການພົວພັນຢ່າງສະໜິດແໜ້ນ ກັບການແຜ່ຂະຫຍາຍແນວຄິດສັງຄົມນິຍົມຢູ່ໃນໂລກ. ລະບອບທຶນນິຍົມບໍ່ພຽງແຕ່ເປັນລະບົບຂູດຮີດລະຫວ່າງຄົນກັບຄົນເທົ່ານັ້ນ, ແຕ່ມັນຍັງເປັນລະບົບແອກກົດຂີ່ຊົນຊາດ ແລະ ເປັນລະບົບຂູດຮີດຂອງປະຊາ-ຊາດຈຳນວນໜຶ່ງຕໍ່ອີກປະຊາຊາດໜຶ່ງ. ເລນິນ ໄດ້ເນັ້ນວ່າມາຮອດຕອນຕົ້ນຂອງສະຕະວັດທີ ໒໐ ລະບອບທຶນນິຍົມ ໄດ້ເຕີບໃຫຍ່ເປັນລະບົບ ແຫ່ງໂລກ ທີ່ທຳການກົດຂີ່ຫົວເມືອງຂຶ້ນ ແລະ ມີການບີບຄັ້ນທາງການເງິນຂອງບັນດາປະເທດ "ທີ່ກ້າວໜ້າ" ພຽງຍິບມືດຽວຕໍ່ປະຊາຊົນ ຈຳນວນມະຫາສານຂອງໂລກ" ໑). ການແບ່ງໂລກອອກເປັນບັນດາປະເທດຜູ້ກົດຂີ່ພຽງຍິບມືດຽວ ແລະ ປະເທດຫົວເມືອງຂຶ້ນທີ່ຖືກກົດຂີ່ເປັນຈຳນວນຫລວງຫລາຍ

---

໑) ວ.ອີ.ເລນິນ. ບົດນິພົນຄົບຊຸດ, ເຫລັ້ມທີ ໒໗, ໜ້າ ໓໐໕.

ນັ້ນ ແມ່ນເປັນລັກສະນະພື້ນຖານໜຶ່ງຂອງຈັກກະພັດນິຍົມ.

ການຕໍ່ສູ້ຂອງບັນດາປະຊາຊາດເພື່ອການປົດປ່ອຍຊາດນັ້ນ ໄດ້ກາຍເປັນຂະບວນການຕ້ານຈັກກະພັດທີ່ມີລັກສະນະມະຫາຊົນ. ຂະບວນວິວັດແຫ່ງການປົດປ່ອຍຫົວເມືອງຂຶ້ນ ແລະ ປະເທດທີ່ບໍ່ເປັນເອກະລາດອອກຈາກ ແອກຂອງຈັກກະພັດນິຍົມນັ້ນ ແມ່ນຂຶ້ນກັບການຊັ່ງຊາກຳລັງຢູ່ໃນເວທີສາກົນ , ໝາຍຄວາມວ່າ ລະຫວ່າງສັງຄົມນິຍົມ ແລະ ທຶນນິຍົມ. ການພັງທະລາຍຂອງລະບົບຫົວເມືອງຂຶ້ນຂອງຈັກກະພັດ ແລະ ການກໍ່ຮ່າງສ້າງຕົວຂອງລັດໜຸ່ມນ້ອຍຈຳນວນຫລວງຫລາຍນັ້ນເປັນຜົນທີ່ໄດ້ມາຈາກການຕໍ່ສູ້ຂອງຂະບວນປົດປ່ອຍຊາດ. ສຳລັບບັນດາປະເທດເຫລົ່ານີ້, ການມີອະທິປະໄຕ ແຫ່ງຊາດແມ່ນໄຊຊະນະອັນໃຫຍ່ຫລວງທີ່ມີເໜືອລັດທິຈັກກະພັດນິຍົມແລະເປັນ ຂີດໝາຍແຫ່ງຜົນສຳເລັດ ຂອງໄລຍະທຳອິດ ຢູ່ໃນການປະຕິວັດປົດປ່ອຍຊາດ. ການຍາດເອົາເອກະລາດທາງດ້ານການເມືອງມາໄດ້ນັ້ນໄດ້ອຳນວຍ ໃຫ້ບັນດາປະຊາຊາດອະດີດຫົວເມືອງຂຶ້ນກ້າວຂຶ້ນສູ່ເວທີແຫ່ງການຕໍ່ສູ້ທາງດ້ານການເມືອງຢ່າງຂະຫຍັນຂັນແຂງ ແລະ ກາຍເປັນກຳລັງຕ້ານຈັກກະພັດຢ່າງ ປະຈັກຕາ.

ການປົດປ່ອຍອອກຈາກແອກລ່າຫົວເມືອງຂຶ້ນນັ້ນ ໄດ້ເປີດໂອກາດ ໃຫ້ປະຊາຊາດອາຊີ, ອາຟລິກາ ແລະ ອາເມລິກາລາຕິນ ລົງມືດັດສ້າງເສດຖະກິດ-ສັງຄົມ ຊຶ່ງແນໃສ່ລົບລ້າງຄວາມທຸກຍາກກາກກຳ ແລະ ຄວາມຫຼ້າຫລັງຂອງມະຫາຊົນ ທີ່ມີມາແຕ່ດົນນານ, ລົບລ້າງລະບອບສັກດີນາ ແລະ ເຄິ່ງສັກດີນາ ແລະ ກຳຈັດການຄອບງຳທາງເສດຖະກິດ ຂອງຈັກກະພັດນິຍົມ. ການປະຕິບັດໜ້າທີ່ເຫລົ່ານີ້ ຢູ່ໃນຫລາຍປະເທດ ແມ່ນດຳເນີນ ໄປບົນພື້ນຖານຂອງໂຄງການປະຊາທິປະໄຕ-ປະຕິວັດ ຊຶ່ງເລັງໃສ່ລົບລ້າງທຸກຮູບການຂອງການຂູດຮີດ. ຄວາມມຸ່ງມາດປາຖະໜາຂອງປະເທດທີ່ໄດ້ຮັບການປົດປ່ອຍແລ້ວທີ່ຢາກຈະຍາດເອົາຄວາມເປັນເອກະລາດອັນແທ້ຈິງແລະການຂະຫຍາຍຕົວຢ່າງຮອບດ້ານຢູ່ບົນເສັ້ນທາງຂ້າມຜ່ານໄປຫາສັງຄົມນິຍົມນັ້ນ ແມ່ນທ່ວງທ່າອັນກ້າວໜ້າ ຂອງຂະບວນການປົດປ່ອຍຊາດ ໃນຍຸກປະຈຸບັນ.

ຈຸດພິເສດຂອງສະພາບການທາງດ້ານເສດຖະກິດ ແລະ ການເມືອງ

ຂອງບັນດາປະເທດທີ່ປົດປ່ອຍອອກຈາກລັດທິລ່າຫົວເມືອງຂຶ້ນນັ້ນ ມີແນວໃດແດ່ ? ຜົນປະໂຫຍດແຫ່ງນະໂຍບາຍການເມືອງພາຍນອກ ຂອງລັດໜຸ່ມນ້ອຍ ທີ່ເປັນເອກະລາດ ແມ່ນສອດຄ່ອງກັບຜົນປະໂຫຍດ ຂອງບັນດາປະເທດໃນລະບົບສັງຄົມນິຍົມແຫ່ງໂລກ ຢ່າງພາວະວິໄສ. ກ່ອນອື່ນໝົດ ນັ້ນແມ່ນການຕໍ່ສູ້ ຕ້ານຈັກກະພັດນິຍົມ, ເພື່ອການລົບລ້າງລັດທິລ່າຫົວເມືອງຂຶ້ນຢ່າງສິ້ນເຊີງ, ເພື່ອສັນຕິພາບ ແລະ ມິດຕະພາບລະຫວ່າງປະຊາຊາດ. ບັນດາປະເທດສັງຄົມນິຍົມ ແລະ ລັດ ທີ່ມີເອກະລາດແຫ່ງຊາດ ໄດ້ມີການສ້າງຕັ້ງສາຍພົວພັນມິດຕະພາບ ທີ່ເທົ່າທຽມກັນຂຶ້ນ.

ສ່ວນຢູ່ໃນການພົວພັນດ້ານເສດຖະກິດນັ້ນ ລັດເຫຼົ່ານີ້ແມ່ນຍັງຢູ່ ໃນຂອບເຂດຂອງເສດຖະກິດໂລກທຶນນິຍົມ ຊຶ່ງບໍ່ມີສິດສະເໝີພາບ ແລະຢູ່ໃນສະພາບຖືກບີບບັງຄັບ. ລະດັບການຂະຫຍາຍຕົວທາງເສດຖະກິດລະຫວ່າງລັດຈັກກະພັດ ແລະ ອະດີດຫົວເມືອງຂຶ້ນນັ້ນ ມີການໂຕນກັນ ຢ່າງມະຫາສານ. ພວກຈັກກະພັດສືບຕໍ່ປຸ້ນສະດົມປະຊາຊາດຫລາຍສິບປະເທດຢູ່ໃນອາຊີ, ອາຟລິກາ ແລະ ອາເມລິກາລາຕິນ. ແຕ່ລະປີ ພວກເຂົາໄດ້ດຶງເອົາເງິນຈາກອະດີດຫົວເມືອງຂຶ້ນ ແລະ ປະເທດທີ່ບໍ່ມີເອກະລາດເຖິງຫລາຍຕື້ໂດລາ. ເພື່ອກຳຈັດການຂູດຮີດຂອງລັດຈັກກະພັດນັ້ນ ບັນດາປະເທດພວມພັດທະນາຈຳເປັນຕ້ອງຍາດເອົາຄວາມເປັນເອກະລາດ ທາງເສດຖະກິດ, ຖ້າບໍ່ດັ່ງນັ້ນ ກໍ່ຈະບໍ່ສາມາດຟື້ນຟູຊາດ ແລະ ສ້າງຕັ້ງອະທິປະໄຕທາງການເມືອງໄດ້. ເພາະສະນັ້ນ ການຕໍ່ສູ້ເພື່ອຄວາມເປັນເອກະລາດ ທາງເສດຖະກິດ ແລະ ເພື່ອການດັດສ້າງສັງຄົມ ຢ່າງເຖິງກົກເຖິງຮາກຈຶ່ງກາຍເປັນເນື້ອໃນແຫ່ງໄລຍະການຂະຫຍາຍຕົວປະຈຸບັນຂອງການປະຕິວັດປົດປ່ອຍຊາດ.

ນະໂຍບາຍການເມືອງລ່າຫົວເມືອງຂຶ້ນແບບໃໝ່ຂອງພວກຈັກກະພັດນິຍົມ ເປັນສິ່ງທີ່ກີດຂວາງການດຳເນີນໜ້າທີ່ດັ່ງກ່າວ. ລັດທິລ່າຫົວເມືອງຂຶ້ນແບບໃໝ່ໄດ້ໃຊ້ກົນອຸບາຍທີ່ມີຫລາຍຮູບຫລາຍແບບ ຄື: ນັບແຕ່ການຮຸກຮານໂດຍກົງ ແລະ ການຜູກມັດເຂົ້າກັບກຸ່ມທະຫານ, ການຊື້ຈ້າງເອົານັກເຄື່ອນໄຫວການເມືອງໄປຈົນເຖິງການຈັດຕັ້ງການຄົບຄິດກະບົດ ແລະ ລັດຖະປະຫານ ຕ້ານລັດຖະບານທີ່ພວກເຂົາບໍ່ເພິ່ງປາດຖະໜາ ແລະ ອື່ນໆ. ແຕ່ວ່າເນື້ອໃນຂອງນະໂຍບາຍການເມືອງລ່າຫົວເມືອງຂຶ້ນແບບໃໝ່ ແມ່ນ

ບໍ່ມີຫຍັງປ່ຽນແປງເຊັ່ນ: ຈອງດຶງເອົາບັນດາປະເທດພວມພັດທະນາໄວ້ໃນວົງຈອນແຫ່ງການຄອບຄອງຂອງຈັກກະພັດ, ຖ່ວງດຶງຄວາມກ້າວໜ້າທາງດ້ານສັງຄົມ ແລະ ວັດທະນະທຳ ກໍຄື ຖ່ວງດຶງການບັນລຸເຖິງຄວາມ ເປັນເອກະລາດແຫ່ງຊາດ ອັນແທ້ຈິງຂອງເຂົາເຈົ້າ.

ຈັກກະພັດນິຍົມ ບໍ່ພຽງແຕ່ຊອກຫາວິທີທາງຮັກສາຄວາມບໍ່ເປັນເອກະ-ລາດທາງດ້ານເສດຖະກິດຂອງບັນດາປະເທດພວມພັດທະນາເທົ່ານັ້ນ, ແຕ່ຫາກຍັງເສີມສ້າງການພົວພັນແບບທຶນນິຍົມຢູ່ໃນປະເທດເຫລົ່ານີ້ ໃຫ້ໜັກແໜ້ນ. ບັນດາລັດຈັກກະພັດໄດ້ປະຕິບັດໜ້າທີ່ອັນນີ້ແບບພໍໃຜພໍມັນກໍຄືໂດຍຮ່ວມກັບປະເທດອື່ນໆ. ການມີສ່ວນພົວພັນ ລະຫວ່າງກຸ່ມປະເທດ ຂອງຕະຫລາດຮ່ວມເອີລົບ ກັບ ໕໔ ປະເທດພວມພັດທະນາ ແມ່ນເປັນແບບຢ່າງໜຶ່ງຂອງນະໂຍບາຍການເມືອງລວມໝູ່ ຂອງລັດທິລ່າທັບເມືອງຂຶ້ນແບບໃໝ່.ຕາມເຈຕະນາລົມຂອງພວກຈັກກະພັດນັ້ນການມີສ່ວນພົວພັນ ດັ່ງກ່າວແມ່ນເພື່ອຈະຜູກມັດບັນດາປະເທດພວມພັດທະນາເຂົ້າກັບ ກຸ່ມປະເທດຕະຫລາດຮ່ວມເອີລົບໃຫ້ແໜ້ນແຟ້ນຍິ່ງຂຶ້ນ ແລະ ດ້ວຍເຫດນັ້ນ ກໍ່ສ້າງອິດທິພົນທີ່ມີລັກສະນະຕັດສິນຕໍ່ການກໍ່ຮ່າງສ້າງຕົວຂອງໂຄງປະກອບເສດຖະກິດທີ່ບໍ່ມີລັກສະນະເອກະລາດຂຶ້ນ ຢູ່ໃນບັນດາປະເທດເຫລົ່ານັ້ນ.

ຫລັກຖານຕົວຈິງໄດ້ຢືນຢັນວ່າ ໃນໄລຍະຫລາຍສິບປີພາຍຫລັງການປົດປ່ອຍສະພາບຂອງອະດີດທັບເມືອງຂຶ້ນ ແລະ ເຄິ່ງເມືອງຂຶ້ນລວມຫລວງຫລາຍທີ່ຍັງຄ້າງຢູ່ໃນລະບົບເສດຖະກິດທຶນນິຍົມນັ້ນ ບໍ່ໄດ້ມີການປ່ຽນແປງ ທາງດ້ານເສດຖະກິດ-ສັງຄົມອັນໃຫຍ່ຫລວງແຕ່ຢ່າງໃດ. ແຕ່ຕັ້ງແມ່ນ ສະພາບເສດຖະກິດ ທີ່ຊຸດໂຊມລົງນັ້ນເອງ ທີ່ກະຕຸ້ນໃຫ້ປະເທດພວມພັດທະນາ ດຳເນີນການຕໍ່ສູ້ຕ້ານລັດທິຈັກກະພັດ ແລະລັດທິລ່າທັບເມືອງຂຶ້ນແບບໃໝ່ຢ່າງຫ້າວຫັນກວ່າເກົ່າ. ປະສົບການຂອງເຂົາເຈົ້າກໍ່ໄດ້ຊີ້ໃຫ້ເຫັນວ່າ ປະເທດເຫລົ່ານີ້ສາມາດໝູນໃຊ້ອະທິປະໄຕຂອງຕົນ ແລະ ເງື່ອນໄຂອັນເອື້ອ ອຳນວຍຂອງສາກົນໄດ້ຢ່າງມີຜົນສຳເລັດສຳລັບການບຸກໂຈມຕີທີ່ຈັງຂອງຈັກກະພັດນິຍົມ ແລະ ການປັບປຸງຄວາມເປັນເອກະລາດທາງດ້ານເສດຖະກິດ . ຍົກຕົວຢ່າງເຊັ່ນຊຸມປີ ໗໐ ໄດ້ຖືກຈັດໄວ້ໃນປະຫວັດສາດວ່າ ເປັນຄືໄລຍະແຫ່ງ "ການປະຕິວັດທາງດ້ານລາຄານ້ຳມັນ" ຊຶ່ງເປັນໝາກຜົນຂອງການ

ເຄື່ອນໄຫວຮ່ວມກັນຂອງບັນດາປະເທດພວມພັດທະນາທີ່ເປັນຜູ້ຜະລິດນ້ຳມັນ.
ໂດຍເດີນຕາມແບບຢ່າງຂອງປະເທດທີ່ຜະລິດນ້ຳມັນນັ້ນ, ລັດພວມພັດທະນາ
ອື່ນໆກໍໄດ້ເພີ່ມທະວີຄວາມຫ້າວຫັນໃນການປົກປ້ອງທີ່ຕັ້ງຂອງຕົນ ໃນຖານະ
ເປັນຜູ້ສະໜອງວັດຖຸດິບອັນເປັນພື້ນຖານທາງດ້ານກະສິກຳ ແລະ ແຮ່ທາດ
ຢູ່ໃນຕະຫລາດໂລກ. ໂດຍຄຳນຶງເຖິງຄວາມຈິງທີ່ວ່າ ບັນດາປະເທດຈັກ-
ກະພັດທີ່ຈະເລີນແລ້ວຂຶ້ນກັບປະເທດຜູ້ຜະລິດວັດຖຸດິບ, ບັນດາປະເທດ ດັ່ງ
ກ່າວນີ້ ຈຶ່ງຮຽກຮ້ອງໃຫ້ມີການພິຈາລະນາຄືນໃໝ່ ກ່ຽວກັບເງື່ອນໄຂ ຂຸດ
ຄົ້ນແຮ່ທາດ, ການຂຶ້ນລາຄາຜົນຜະລິດທີ່ສົ່ງອອກ, ຮັບເອົາມາຕະການ
ກ່ຽວກັບການຮັກສາຊັບພະຍາກອນທຳມະຊາດທີ່ແຮໄວ້ ແລະສະພາບ ແວດ
ລ້ອມ. ດັ່ງນັ້ນ ບັນດາປະເທດພວມພັດທະນາ ຈຶ່ງຕໍ່ສູ້ເພື່ອໃຫ້ມີການສ້າງ-
ຕັ້ງລະບຽບການເສດຖະກິດສາກົນໃໝ່ຂຶ້ນ.

ບັນດາປະເທດສັງຄົມນິຍົມ ຮັບຮູ້ເຖິງຄວາມຈຳເປັນທີ່ຈະຕ້ອງ ໃຫ້ມີ
ການດັດແປງການພົວພັນເສດຖະກິດສາກົນ ບົນພື້ນຖານປະຊາທິປະໄຕແລະ
ປະກອບສ່ວນເຮັດໃຫ້ການດັດແປງຖືກນຳມາປະຕິບັດໃຫ້ເປັນຈິງ. ປະເທດ
ສັງຄົມນິຍົມໄດ້ສ້າງຕັ້ງການພົວພັນທາງເສດຖະກິດອັນສະເໝີພາບ ກັບບັນ
ດາປະເທດພວມພັດທະນາ ຊຶ່ງມັນຮັບໃຊ້ຜົນປະໂຫຍດ ໃນການຂະຫຍາຍ
ເສດຖະກິດຂອງອະດີດຫົວເມືອງຂຶ້ນ. ນອກຈາກມີການຄ້າຂາຍ ຊຶ່ງຕ່າງ
ຝ່າຍຕ່າງມີຜົນປະໂຫຍດນັ້ນ, ບັນດາປະເທດສັງຄົມນິຍົມ ຍັງໄດ້ໃຫ້ ການ
ຊ່ວຍເຫລືອຢ່າງຫລວງຫລາຍ ໃນການຟື້ນຟູຂະແໜງການເສດຖະກິດແຫ່ງ
ຊາດ ທີ່ເປັນກຸນແຈຂອງບັນດາລັດໜຸ່ມນ້ອຍ. ຍົກຕົວຢ່າງ, ເຊັ່ນໃນຕອນ
ຕົ້ນຂອງຊຸມປີ ໗໐ ບັນດາປະເທດທີ່ເປັນສະມາຊິກຂອງອົງການ ແຊັບ ໄດ້
ໃຫ້ການຊ່ວຍເຫລືອທາງເສດຖະກິດ ແລະ ເຕັກນິກໃຫ້ແກ່ ໖໔ ປະເທດທີ່
ພວມພັດທະນາ. ຍ້ອນການຊ່ວຍເຫລືອດັ່ງກ່າວ, ໂຄງການກໍ່ສ້າງ ເກືອບ
໕.໐໐໐ ໂຄງການໄດ້ຖືກກໍ່ສ້າງແລ້ວ ຫລືພວມກໍ່ສ້າງຂຶ້ນ ຢູ່ໃນບັນດາປະ
ເທດເຫລົ່ານີ້. ໂດຍມຸ່ງໝາຍຍາກຈະມ້າງຄວາມວາງໄວ້ໃຈຂອງລັດໜຸ່ມ
ນ້ອຍ ທີ່ມີຕໍ່ຄ່າຍສັງຄົມນິຍົມນັ້ນ, ພວກນັກແນວຄິດນາຍທຶນ ໄດ້ອະທິບາຍ
ຄວາມຂັດແຍ່ງຕົວຈິງ ລະຫວ່າງປະເທດພວມພັດທະນາ ແລະ ຈັກກະພັດນິ
ຍົມ ດ້ວຍການແບ່ງໂລກອອກເປັນ "ພາກເໜືອຮັ່ງມີ" ແລະ "ພາກໃຕ້

ທຸກຍາກ". ເລ່ກົນທາງການເມືອງອັນນີ້ ແມ່ນມີເປົ້າໝາຍໂຍນຄວາມຮັບຜິດຊອບກ່ຽວກັບການຂະຫຍາຍຕົວອັນຫຍຸ້ງຍາກທາງດ້ານເສດຖະກິດ ຂອງປະຊາຊາດ ທີ່ຫາກໍ່ປົດປ່ອຍນັ້ນໃສ່ບັນດາປະເທດວົງຄະນາຍາດສັງຄົມນິຍົມ, ໂດຍອາດພາບັນດາປະເທດສັງຄົມນິຍົມໃຫ້ເປັນຄືຜູ້ສົມຮູ້ຮ່ວມຄິດກັບລະບົບສາກົນ ແຫ່ງການຂູດຮີດຂອງຈັກກະພັດ. ການເຮັດໃຫ້ ມີຄວາມປັ່ນປ່ວນທາງດ້ານແນວຄິດເຊັ່ນນີ້ ແມ່ນມີເປົ້າໝາຍຢາກຈະແບ່ງແຍກບັນດາກຳລັງທີ່ປະເຊີນໜ້າກັບຈັກກະພັດອອກຈາກກັນ. ການກະຕຸ້ນໃຫ້ປະເທດຈຳນວນໜຶ່ງໄປຕ້ານກັບປະເທດອີກຈຳນວນໜຶ່ງນັ້ນ ແມ່ນເລ່ຫຼ່ຽມຂອງພວກ ຈັກກະພັດທີ່ແຜ່ຂະຫຍາຍຢ່າງກວ້າງຂວາງ. ຫາກເມື່ອໃດພວກເຂົາບັນລຸ ຜົນສຳເລັດໄດ້ ມັນກໍ່ຈະສ້າງຄວາມເສຍຫາຍອັນໃຫຍ່ຫຼວງໃຫ້ແກ່ພາລະກິດຕໍ່ສູ້ເພື່ອຜົນປະໂຫຍດແຫ່ງຊາດຂອງບັນດາປະເທດພວມພັດທະນາ. ດ້ວຍເຫດນັ້ນ ໃນເວລາເພີຍແບການເຄື່ອນໄຫວສ້າງຄວາມແຕກແຍກຂອງພວກປະຕິການຈັກກະພັດນັ້ນ ບັນດາກຳລັງທີ່ກ້າວໜ້າໄດ້ຮັດແໜ້ນຄວາມສາມັກຄີລະຫວ່າງບັນດາປະເທດພວມພັດທະນາ ກັບ ປະເທດສັງຄົມນິຍົມ ບົນພື້ນຖານແຫ່ງການຕ້ານຈັກກະພັດ.

ຂະບວນການບໍ່ຮ່ວມກຸ່ມ ແມ່ນໄດ້ຊ່ວຍຮັດແໜ້ນຄວາມສາມັກຄີ ລະຫວ່າງປະເທດພວມພັດທະນາ. ຂະບວນການບໍ່ຮ່ວມກຸ່ມເປັນການຮ່ວມສຳພັນແບບປະຊາທິປະໄຕສາກົນອັນໃຫຍ່ໂຕຂອງລັດທີ່ຫາກໍ່ປົດປ່ອຍ. ປະຈຸບັນຢູ່ໃນຂະບວນການນີ້ ມີເກືອບ ໑໐໐ ລັດ ທີ່ມີປະຊາກອນຫຼາຍກວ່າເຄິ່ງຄົນ. ຫຼັກການອັນສຳຄັນຂອງຂະບວນການນີ້ ແມ່ນໄດ້ຖືກກຳນົດໄວ້ ຢູ່ໃນໂຄງການດຳເນີນງານ, ນັ້ນແມ່ນການບໍ່ເຂົ້າຮ່ວມໃນກຸ່ມການເມືອງ- ການທະຫານ, ນັ້ນແມ່ນການຕໍ່ສູ້ເພື່ອເສີມກຳລັງໃຫ້ແກ່ສັນຕິພາບ ແລະ ຄວາມປອດໄພສາກົນ, ຕ້ານລັດທິຈັກກະພັດ ແລະ ລັດທິລ່າຫົວເມືອງຂຶ້ນ ແບບໃໝ່ ແລະ ເກົ່າ. ກ່ຽວກັບບັນຫາອັນເປັນກົກເຄົ້າຂອງຍຸກສະໄໝ ຄືບັນຫາການຕໍ່ສູ້ຕ້ານຈັກກະພັດນິຍົມ, ເພື່ອສັນຕິພາບອັນໝັ້ນຄົງ ແລະ ຄວາມຍຸດຕິທຳນັ້ນ, ບັນດາປະເທດວົງຄະນາຍາດສັງຄົມນິຍົມ ແລະ ລັດບໍ່ຮ່ວມກຸ່ມ ແມ່ນມີທັດສະນະລວມ ຫຼື ກໍ່ໃກ້ຄຽງກັນ.

# ໃຜເປັນຜູ້ນຳພາ ?

ການປະຕິວັດປົດປ່ອຍຊາດຢູ່ໃນຍຸກສະໄຫມປະຈຸບັນ ຕ້ອງປະຕິບັດສອງຫນ້າທີ່. ຫນ້າທີ່ ທີຫນຶ່ງ ແມ່ນລົບລ້າງການຄອບຄອງຂອງພວກລ່າຫົວເມືອງຂຶ້ນ, ລະບອບສັກດີນາ ແລະ ກ່ອນສັກດີນາ ແລະ ກົງຈັກປົກຄອງ ທີ່ສືບທອດມາຈາກພວກລ່າຫົວເມືອງຂຶ້ນ ແລະ ລົບລ້າງຄວາມອາຄາດ ບາດຫມາງທາງຊົນຊາດ, ຊົນເຜົ່າ, ສາສະຫນາ ແລະ ອື່ນໆ. ນີ້ແມ່ນການ-ປະຕິບັດຫນ້າທີ່ປະຊາທິປະໄຕຂອງການປະຕິວັດ. ຫນ້າທີ່ ທີສອງ ແມ່ນ ມີຄວາມຈຳເປັນຮັບປະກັນເງື່ອນໄຂອັນອຳນວຍໃຫ້ແກ່ການຂະຫຍາຍການຜະລິດອັນທັນສະໄຫມໃຫ້ວ່ອງໄວກວ່າເກົ່າ, ການຍົກລະດັບວັດທະນະທຳຂອງປະຊາຊົນໃຫ້ສູງຂຶ້ນກວ່າເກົ່າ ແລະ ການລົບລ້າງຄວາມແຕກຕ່າງກັນທາງສັງຄົມ. ມີຄວາມຈຳເປັນຂ້າມຜ່ານໄປສູ່ການພົວພັນສັງຄົມທີ່ປາສະຈາກກຳມະສິດເອກະຊົນ ແລະ ການຂູດຣີດລະຫວ່າງຄົນດ້ວຍກັນ. ອັນນີ້ແມ່ນການປະຕິບັດຫນ້າທີ່ສັງຄົມນິຍົມຂອງການປະຕິວັດ.

ດັ່ງນັ້ນ ການປະຕິວັດປົດປ່ອຍຊາດ ຈຶ່ງເປັນຂະບວນວິວັດທາງປະຫວັດສາດແຫ່ງການປົດປ່ອຍປະເທດ ທີ່ບໍ່ມີເອກະລາດ ແລະ ຫົວເມືອງຂຶ້ນ, ປົດປ່ອຍບັນດາປະຊາຊາດທັງຫມົດທີ່ບໍ່ມີສິດສະເຫມີພາບ. ອອກຈາກແອກກົດຂີ່ຂອງຈັກກະພັດນິຍົມ, ເປັນຂະບວນວິວັດແຫ່ງປະຫວັດສາດຂອງການຕັດສິນດ້ວຍຕົນເອງ ແລະ ການນຳໃຊ້ອະທິປະໄຕທີ່ຍາດເອົາມາໄດ້ ສຳລັບ ດຳເນີນການດັດສ້າງເສດຖະກິດ-ສັງຄົມ. ຕາມເນື້ອໃນຂອງມັນເອງແລ້ວມັນເປັນການປະຕິວັດຕ້ານຈັກກະພັດ ແລະ ຕ້ານສັກດີນາ. ຢູ່ໃນການປະຕິບັດຫນ້າທີ່ການປະຕິວັດປົດປ່ອຍຊາດນັ້ນ ຈະມີສອງທ່າອຽງທີ່ປະເຊີນຫນ້າກັນຄື: ຂ້າມຜ່ານໄປສູ່ການພົວພັນສັງຄົມແບບທຶນນິຍົມ ຫລືຂ້າມຜ່ານໄປສູ່ການພົວ-ພັນແບບສັງຄົມນິຍົມ.

ການເລືອກເອົາເສັ້ນທາງນີ້ ຫລືເສັ້ນທາງນັ້ນ ແມ່ນ ຂຶ້ນກັບເງື່ອນໄຂສາກົນ ຢູ່ໃນການຂະຫຍາຍຕົວຂອງການປະຕິວັດປົດປ່ອຍຊາດ ກໍ່ຄືການຊັ່ງຊາກຳລັງທາງຊົນຊັ້ນ, ສັງຄົມ ແລະ ການເມືອງຢູ່ພາຍໃນຂອງແຕ່ລະ

ປະເທດ. ສ່ວນປະກອບ ແລະ ລັກສະນະຂອງກຳລັງຊຸກດັນຂອງການປະຕິວັດ ແມ່ນຖືກກຳນົດດ້ວຍລັກສະນະສະເພາະໃນສ່ວນປະກອບທາງຊົນຊັ້ນ - ສັງຄົມ ຂອງປະຊາຊົນຢູ່ໃນແຕ່ລະປະເທດພວມພັດທະນາ.

ຕົວຢ່າງ, ບັນດາປະເທດອາເມລິກາລາຕິນ ສ່ວນຫລວງຫລາຍ ແມ່ນຍາດເອົາອະທິປະໄຕທາງການເມືອງມາໄດ້ ນັບຕັ້ງແຕ່ຕອນຕົ້ນຂອງສະຕະວັດທີ່ຜ່ານມານັ້ນ, ແຕ່ໃນທັນໃດກໍ່ຕົກຢູ່ໃນຄວາມບໍ່ເປັນເອກະລາດ ທາງເສດຖະກິດ ແລະ ການເມືອງ, ໂດຍສະເພາະແມ່ນຈາກສະຫະລັດອາເມລິກາ. ເຖິງຢ່າງໃດກໍ່ດີ ບັນດາປະເທດອາເມລິກາລາຕິນ ກໍ່ຍັງພົ້ນ ເດັ່ນຂຶ້ນດ້ວຍລະດັບການຂະຫຍາຍຕົວທາງເສດຖະກິດ ແລະ ການເມືອງອັນສູງ. ຊົນຊັ້ນກຳມາຊີບໃນຕົວເມືອງ ແລະ ໃນຊົນນະບົດຈຳນວນຫລວງຫລາຍຊຶ່ງກວມເຖິງ ໑/໔ ຂອງປະຊາຊົນ ໄດ້ຮັບການປັບປຸງ ແລະ ຂະຫຍາຍຕົວ. ຊາວນາເຊິ່ງມີຈຳນວນເຖິງເຄິ່ງໜຶ່ງຂອງພົນລະເມືອງ ກໍ່ເປັນພັນທະມິດຂອງຊົນຊັ້ນກຳມະກອນ. ກຸ່ມນາຍທຶນຜູກຂາດປະຕິການ ແລະ ເຈົ້າທີ່ດິນ-ຄະນາທິປະໄຕ ການເງິນຈຳນວນບໍ່ຫລາຍ ທີ່ໝູນໃຊ້ການສະໜັບສະໜູນທາງເສດຖະກິດ ແລະ ການເມືອງຈາກຈັກກະພັດນັ້ນ ແມ່ນພວກທີ່ຕ້ານຢັນກັບຊັ້ນຄົນຜູ້ອອກແຮງງານອັນກວ້າງຂວາງ. ຕາມທຳມະດາແລ້ວບັນດາຊົນຊັ້ນປົກຄອງຢູ່ໃນປະເທດເຫລົ່ານີ້ ເປັນອິດທິກຳລັງທີ່ຕ້ານປະຊາຊົນແລະໄປຕາມຫລັງຈັກກະພັດ. ດ້ວຍເຫດນັ້ນ ການຕໍ່ສູ້ເພື່ອຄວາມເປັນ ເອກະລາດທາງດ້ານເສດຖະກິດ ແລະ ອະທິປະໄຕແຫ່ງຊາດອັນແທ້ຈິງ ຈຶ່ງສົບປົນກັນກັບການຕໍ່ສູ້ຊົນຊັ້ນຢ່າງຂຽວຂາດ ຕ້ານການຂູດຮີດຂອງນາຍທຶນ, ຕ້ານບໍລິສັດຜູກຂາດພາຍໃນ ແລະ ຕ່າງປະເທດ. ພັກກອມມູນິດໄດ້ເປັນຜູ້ນຳພາທີ່ສະເໝີຕົ້ນສະເໝີປາຍກວ່າໝູ່ຢູ່ໃນການຕໍ່ສູ້ດັ່ງກ່າວ. ປະເທດສ່ວນຫລວງຫລາຍຢູ່ອາເມລິກາລາຕິນ ມີປະຖົມປັດໄຈທາງດ້ານວັດຖຸທີ່ສຸກງອມມາແລ້ວສຳລັບການຂ້າມຜ່ານໄປສູ່ລະບອບສັງຄົມນິຍົມ. ບົດຮຽນຂອງການປະຕິວັດຢູ່ກູບາ ແລະ ນິກາລາກວາ ເປັນສິ່ງຢືນຢັນເຖິງສິ່ງດັ່ງກ່າວ. ປະຈຸບັນ ຢູ່ໃນພາກພື້ນນີ້ຂອງໂລກ ຂະບວນການທີ່ດຳເນີນການຕໍ່ສູ້ເພື່ອປະຊາທິປະໄຕ ແລະ ຕ້ານຈັກກະພັດ ເຊິ່ງເປັນຜູ້ເປີດເສັ້ນທາງໃຫ້ປະຊາຊາດກ້າວສູ່ ສັງຄົມນິຍົມນັ້ນ ພວມໄດ້ຮັບການຂະຫຍາຍຕົວ.

ຢູ່ໃນບັນດາປະເທດອາຟລິກາເໜືອ, ຕາເວັນອອກໃກ້, ອາຊີ ພາກໃຕ້ ແລະ ຕາເວັນອອກສ່ຽງໃຕ້, ໃນເວລາທີ່ເອົາເຈົ້າຍາດເອົາ ເອກະລາດແຫ່ງຊາດໄດ້ນັ້ນ, ຄຽງຂ້າງກັບການພົວພັນແບບທຶນນິຍົມ ກໍຍັງມີການພົວພັນແບບສັກດີນານຳອີກ. ການແບ່ງສັງຄົມອອກເປັນຊົນຊັ້ນຢູ່ໃນ ສັງຄົມແມ່ນສອດຄ່ອງກັບການຂະຫຍາຍຕົວຂອງລະບອບຈັກກະພັດນິຍົມຄື: ມີນາຍທຶນແຫ່ງຊາດ ( ນາຍທຶນຕົວເມືອງ ແລະ ຊົນນະບົດ ), ຊົນຊັ້ນກຳມາ-ຊີບອຸດສາຫະກຳ ແລະ ກະສິກຳ, ຊ່າງຫັດຖະກຳ ແລະ ຊາວນາຖືກແບ່ງອອກເປັນເຈົ້າກຳມະສິດນ້ອຍ ແລະ ປານກາງ, ຜູ້ເຊົ່າທີ່ດິນ ແລະ ບ່າວນາ. ຊົນຊັ້ນສັກດີນາ ຍັງແມ່ນເປັນບ່ອນອີງຂອງພວກປະຕິການພາຍໃນ . ຊາວນາເປັນຊົນຊັ້ນທີ່ໃຫຍ່ກວ່າໝູ່ ເຊິ່ງກວມເອົາເຖິງ ໗໐–໗໕ % ຂອງຈຳນວນປະຊາຊົນທັງໝົດ. ຢູ່ໃນຫລາຍກໍລະນີ ຊົນຊັ້ນນາຍທຶນ ແຫ່ງຊາດເປັນຜູ້ນຳພາການຕໍ່ສູ້ ເພື່ອເອກະລາດ. ຊົນຊັ້ນກຳມະກອນໜຸ່ມນ້ອຍເຖິງແມ່ນວ່າຈຳນວນພົນບໍ່ຫລວງຫລາຍກໍ່ຕາມ ແຕ່ມີບົດບາດອັນສຳຄັນ ຢູ່ໃນຂະບວນການປົດປ່ອຍນັ້ນ ເພາະມັນເປັນກ້ອນກຳລັງຂອງຊາວຜູ້ອອກແຮງງານທີ່ມີການຈັດຕັ້ງ ແລະ ມີສະຕິກວ່າໝູ່.

ຢູ່ໃນສ່ວນໃຫຍ່ຂອງບັນດາປະເທດອາຟລິກາເຂດຮ້ອນ, ແຫລມອາຣາວີ ແລະ ໂອເຊອານີ ເສດຖະກິດຍັງມີລັກສະນະຫລາຍພາກສ່ວນ ທີ່ແຕກຕ່າງກັນ. ປະຊາຊົນສ່ວນໃຫຍ່ກໍ່ແມ່ນຊາວນາທີ່ພວມຢູ່ໃນໄລຍະຕ່າງໆແຫ່ງການພັງທະລາຍຂອງການພົວພັນແບບສັກດີນາ ແລະ ແບບເຈົ້າກົກ ເຈົ້າເຫລົ່າ. ຜູ້ນຳພາຢູ່ໃນຂະບວນການປົດປ່ອຍຂອງປະເທດເຫລົ່ານີ້ແມ່ນເປັນຜູ້ຕາງໜ້າຂອງຊົນຊັ້ນ ແລະ ກຸ່ມຄົນຕ່າງໆໃນສັງຄົມ, ສ່ວນຫລາຍ ແມ່ນເປັນຜູ້ມາຈາກປັນຍາຊົນຜູ້ໜຸ່ມນ້ອຍ.

ແຕ່ລະປະເທດພວມພັດທະນາແມ່ນມີບັນດາຈຸດພິເສດທາງເສດຖະກິດ-ສັງຄົມ ແລະ ປະຫວັດສາດສະເພາະຂອງໃຜມັນ, ສະນັ້ນຢູ່ໃນການໄຈແຍກບັນດາກຳລັງຊຸກດັນຂອງການປະຕິວັດປົດປ່ອຍຊາດນັ້ນຈຳເປັນຕ້ອງເອົາໃຈໃສ່ຈຸດພິເສດເຫລົ່ານີ້. ກຸ່ມຄົນໃນສັງຄົມ ທີ່ມີຄວາມສົນໃຈຢ່າງພາວະວິໄສຕໍ່ການປົດປ່ອຍຊາດນັ້ນ ແມ່ນປະຊາຊົນສ່ວນຫລວງຫລາຍ ເຊິ່ງລວມມີຊາວນາ, ຊົນຊັ້ນກຳມະກອນ, ນາຍທຶນແຫ່ງຊາດ, ປັນຍາຊົນ ແລະຊັ້ນຄົນລະ

ຫວ່າງກາງອື່ນໆ. ແຕ່ວ່າຢູ່ໃນເງື່ອນໄຂຂອງແຕ່ລະປະເທດນັ້ນ,ບົດບາດ ແລະ ຄວາມໝາຍຂອງມັນແມ່ນແຕກຕ່າງກັນ.

ຍົກຕົວຢ່າງເຊັ່ນ ນາຍທຶນແຫ່ງຊາດ ຢູ່ໃນປະເທດພວມພັດທະນາ ນັ້ນ ຕາມສ່ວນປະກອບ ແລະ ຄວາມມຸ່ງມາດປາຖະໜາທາງການເມືອງ ຂອງມັນແລ້ວ, ແມ່ນບໍ່ເປັນເນື້ອດຽວກັນ. ລະດັບ ແລະ ການຊັ່ງຊາອິດທິພົນ-ທາງດ້ານການເມືອງຂອງແຕ່ລະກຸ່ມນາຍທຶນແຫ່ງຊາດ ຢູ່ໃນປະເທດຕ່າງໆ ກໍ່ຕ່າງກັນ. ລະດັບຄວາມຮຸນແຮງຂອງຄວາມຂັດແຍ່ງລະຫວ່າງ ນາຍທຶນແຫ່ງຊາດ ກັບສັກດີນາ ແລະ ກັບທຶນຕ່າງປະເທດ ກໍ່ມີຄວາມແຕກຕ່າງກັນ. ຢູ່ໃນຂະບວນວິວັດແຫ່ງການຂະຫຍາຍຕົວຂອງການປະຕິວັດປົດປ່ອຍຊາດນັ້ນ ບົດບາດຂອງນາຍທຶນແຫ່ງຊາດ ກໍ່ມີການປ່ຽນແປງ. ຢູ່ໃນໄລຍະທຳອິດຂອງການປະຕິວັດນັ້ນ ອັນສຳຄັນສຳລັບພວກນາຍທຶນແຫ່ງຊາດ ແມ່ນຄວາມຂັດແຍ່ງກັບພວກລ່າເມືອງຂຶ້ນ ແລະ ສັກດີນາ. ແຕ່ພາຍຫລັງ ການຂຶ້ນກຳອຳນາດແລ້ວ ອັນສຳຄັນພັດແມ່ນຄວາມຂັດແຍ່ງກັບພົນທະມິດເກົ່ານັ້ນຄືກັບຊາວຜູ້ອອກແຮງງານ. ນາຍທຶນຄືຈັ່ງວ່າ "ໄດ້ປ່ຽນແນວຄິດ" ໂດຍຈາກ ການເປັນກຳລັງກ້າວໜ້າກາຍໄປເປັນກຳລັງປະຕິການ. ໃນບາງກໍລະນີບາງກຸ່ມນາຍທຶນແຫ່ງຊາດທີ່ກຳອຳນາດນັ້ນແມ່ນເດີນຕາມເສັ້ນທາງແຫ່ງການຮ່ວມມື ອັນແໜ້ນແຟ້ນກັບປະຕິການພາຍໃນແລະພາຍນອກ. ສ່ວນໃນອີກບາງ ປະເທດນັ້ນ ຊົນຊັ້ນນາຍທຶນແລະກຸ່ມທີ່ມີອິດທິພົນຂອງມັນພັດໄປນຳປະຊາຊົນໃນການຕໍ່ສູ້ຕ້ານຈັກກະພັດ, ເພື່ອປະຊາທິປະໄຕ ແລະ ໄດ້ມີບົດບາດອັນກ້າວໜ້າຢູ່ໃນຂະບວນການປົດປ່ອຍຊາດ. ຢູ່ໃນຫລາຍປະເທດເກີດມີການແຕກ ແຍກກັນຂຶ້ນຢູ່ພາຍໃນກຸ່ມນາຍທຶນແຫ່ງຊາດ ຊຶ່ງພາໃຫ້ມີການແບ່ງກຸ່ມ ແລະ ຊັ້ນຄົນຕ່າງໆຂອງມັນອອກເປັນສອງສັ້ນ ທີ່ກົງກັນຂ້າມກັນທາງດ້ານການເມືອງ. ລັກສະນະສະເພາະສອງຢ່າງຂອງນາຍທຶນແຫ່ງຊາດນັ້ນ ແມ່ນສະແດງອອກຕ່າງກັນຄື: ຢູ່ໃນບັນດາປະເທດຈຳນວນໜຶ່ງມັນພັດມີລັກສະນະຕ້ານຈັກກະພັດ ເພື່ອປະຊາທິປະໄຕ, ຢູ່ໃນອີກບາງປະເທດນັ້ນ ຊົນຊັ້ນນາຍທຶນໄດ້ ປະຖິ້ມລັກສະນະກ້າວໜ້າ, ສະນັ້ນຈຶ່ງບໍ່ສາມາດເປັນກຳລັງນຳພາ ຢູ່ໃນການປະຕິວັດປົດປ່ອຍຊາດໄດ້, ຢູ່ໃນກຸ່ມປະເທດທີສາມນັ້ນ ຢູ່ໃນນະໂຍບາຍ ການເມືອງມັນຊ້ຳພັດມີທັງທ່າອຽງກ້າວໜ້າ ແລະ ປະຕິການໄປພ້ອມໆກັນ.

ຊົນຊັ້ນກຳມະກອນຂອງບັນດາປະເທດພວມພັດທະນາ ກໍ່ມີຄວາມ ແຕກຕ່າງກັນເຊັ່ນດຽວກັນ. ຢູ່ໃນປະເທດຈຳນວນໜຶ່ງ ຊົນຊັ້ນກຳມະກອນແມ່ນຊົນຊັ້ນກຳມາຊີບຢູ່ໃນສູນກາງອຸດສາຫະກຳອັນໃຫຍ່ໂຕເປັນຕົ້ນຕໍ ຊຶ່ງນຳພາໂດຍພັກມາກ-ເລນິນ ແລະ ເປັນກອງລະວັງໜ້າຂອງຂະບວນການ ປົດປ່ອຍຊາດ. ຢູ່ໃນອີກບາງປະເທດນັ້ນ ຊົນຊັ້ນກຳມະກອນຍັງໜຸ່ມນ້ອຍ ຫາກໍ່ພຽງແຕ່ກໍ່ຮ່າງສ້າງຕົວ, ສ່ວນຫລວງຫລາຍ ກໍ່ແມ່ນກຳມະກອນ ທີ່ເຮັດວຽກຕາມລະດູການ, ຊາວກະສິກອນ ແລະ ນາຍຊ່າງກໍ່ສ້າງທີ່ຍັງບໍ່ທັນສາມາດເປັນກຳລັງການເມືອງ ທີ່ເປັນເຈົ້າຕົນເອງໄດ້.

ບົດຮຽນໄດ້ຊີ້ບອກວ່າ ທ່າຂະຫຍາຍຕົວທາງສັງຄົມ ແມ່ນອິງກັບ ທ່າອຽງການເມືອງຂອງກອງທັບເປັນຕົ້ນຕໍ. ຢູ່ໃນບາງປະເທດໃນອາຊີ, ອາຟລິກາ, ອາເມລິກາລາຕິນ ຜູ້ຕາງໜ້າກອງທັບໄດ້ແບກຫາບໜ້າທີ່ເປັນຜູ້ປົກຄອງລັດ ໂດຍເປັນຕົວແທນຂອງຜົນປະໂຫຍດຂອງກຳລັງຊົນຊັ້ນ-ສັງຄົມຕ່າງໆຄື: ຢູ່ໃນປະເທດຈຳນວນໜຶ່ງ ແມ່ນເປັນຕົວແທນແຫ່ງຜົນປະໂຫຍດຂອງປະຕິການພາຍໃນ ແລະ ສາກົນ, ໃນອີກປະເທດຈຳນວນໜຶ່ງໆ ພັດເປັນຕົວແທນແຫ່ງຜົນປະໂຫຍດຂອງກຳລັງປະຊາທິປະໄຕທີ່ກ້າວໜ້າ.

ບັນຫາສຳຄັນ ຢູ່ໃນການຕໍ່ສູ້ທາງການເມືອງຂອງບັນດາປະເທດທີ່ຫາກໍ່ປົດປ່ອຍນັ້ນ ກໍຄືບັນຫາທີ່ວ່າຢູ່ໃນການປະຕິວັດປົດປ່ອຍຊາດນັ້ນ ແມ່ນທ່າຂະຫຍາຍຕົວອັນໃດທີ່ຈະເປັນຜູ້ຊະນະ ແມ່ນທ່າຂະຫຍາຍຕົວແບບທຶນນິຍົມ ຫລືວ່າແມ່ນທ່າຂະຫຍາຍທີ່ມີການພົວພັນກັບການຂ້າມຜ່ານໄປສູ່ສັງຄົມນິຍົມ.

"ການຂະຫຍາຍຕົວແບບທຶນນິຍົມ" ຕົກຢູ່ໃນສະພາບຈົນຕາແຈ

ລັດທີ່ໄດ້ຮັບການປົດປ່ອຍສ່ວນຫລວງຫລາຍ ແມ່ນກ້າວເດີນໄປ ຕາມເສັ້ນທາງຂະຫຍາຍຕົວແບບທຶນນິຍົມ. ເຖິງແມ່ນວ່ານະໂຍບາຍການເມືອງຈະມີຄວາມແຕກຕ່າງກັນກໍ່ຕາມ ແຕ່ວ່ານາຍທຶນແຫ່ງຊາດທີ່ເປັນຜູ້ ກຳອຳ

ມາດນັ້ນ ຕ່າງກໍມຸ່ງໝາຍຢາກຈະເສີມສ້າງການປົກຄອງທາງຊົນຊັ້ນ ຂອງຕົນໃຫ້ໜັກແໜ້ນ ໂດຍການສ້າງຕັ້ງລະບຽບການແບບນາຍທຶນ. ແນ່ນອນວ່າ ຖ້າທຽບກັບລະບອບສັກດີນາ ແລະ ຍິ່ງໄປກວ່ານັ້ນ ກັບລະບອບ ເຈົ້າກົກ-ເຈົ້າເຫລົ່າແລ້ວ, ລະບອບທຶນນິຍົມ ກໍເປັນຂັ້ນຕອນໜຶ່ງ ຢູ່ໃນ ການຂະຫຍາຍຕົວຂອງສັງຄົມທີ່ສູງກວ່າ. ແຕ່ວ່າ ການຂະຫຍາຍຕົວຂອງທຶນນິ-ຍົມ ຢູ່ໃນບັນດາປະເທດເຫລົ່ານີ້ ມີລັກສະນະຈຳກັດ, ບໍ່ສົມສ່ວນ ແລະ ມີລັກສະນະຂັດແຍ່ງທີ່ສຸດ. ສິ່ງດັ່ງກ່າວນີ້, ປະການທີໜຶ່ງ ແມ່ນຍ້ອນເງື່ອນໄຂປະຫວັດສາດໃນການຂ້າມຜ່ານໄປຫາລະບອບທຶນນິຍົມຂອງປະເທດ ຫົວເມືອງຂຶ້ນ ແລະ ປະເທດທີ່ບໍ່ມີເອກະລາດ ແລະ ປະການທີສອງແມ່ນຍ້ອນຜົນປະໂຫຍດທາງຊົນຊັ້ນຂອງກຸ່ມຜູ້ປົກຄອງທີ່ແມ່ນນາຍທຶນແຫ່ງຊາດ.

ການຂະຫຍາຍຕົວ "ທີ່ຊັກຊ້າ" ຂອງລະບອບທຶນນິຍົມ ໄດ້ເຮັດໃຫ້ອະດີດຫົວເມືອງຂຶ້ນຕົກຢູ່ໃນສະພາບເສຍປຽບ ແລະ ບໍ່ມີສິດເທົ່າທຽມກັນເມື່ອທຽບໃສ່ລັດຈັກກະພັດ. ຄວາມຫລ້າຫລັງດ້ານເສດຖະກິດ ໄດ້ຈຳກັດຄວາມອາດສາມາດເຕີບໃຫຍ່ຂອງການທຶນເປັນທຸລະກິດແບບນາຍທຶນ. ຕົວຢ່າງເພື່ອຈະສ້າງໂຮງຈັກໂຮງງານໃໝ່ບ່ອນໜຶ່ງ ແລະ ຈັດຕັ້ງການຜະລິດ ຢູ່ໃນນັ້ນຂຶ້ນ, ບໍ່ພຽງແຕ່ຈຳເປັນຕ້ອງມີຕົ້ນທຶນອັນເໝາະສົມເທົ່ານັ້ນ, ແຕ່ຍັງຕ້ອງມີການສະໜອງວັດຖຸພັນກໍ່ສ້າງ, ໄຟຟ້າ, ນ້ຳ, ທາງ, ພາຫະນະ-ຂົນສົ່ງ, ວັດຖຸດິບ ແລະ ອື່ນໆໃຫ້ແກ່ໂຮງງານອີກ, ຕະຫລອດທັງການ ຊື້ເຄື່ອງຈັກ ແລະ ເຄື່ອງອຸປະກອນຕ່າງໆຈາກຕ່າງປະເທດ. ແຕ່ວ່າ ໃນເງື່ອນໄຂຂອງຄວາມຫລ້າຫລັງນັ້ນ ສິ່ງເຫລົ່ານີ້ກໍແມ່ນຂາດເຂີນທີ່ສຸດ.ນອກຈາກນັ້ນແລ້ວ ກໍຈະເກີດມີຄວາມຫຍຸ້ງຍາກໃນການສະໜອງທາງດ້ານ ກຳມະກອນຜູ້ຊຳນິຊຳນານ, ພະນັກງານເຕັກນິກ, ວິສະວະກອນ ແລະ ຜູ້ຄຸ້ມຄອງໃຫ້ໂຮງງານນັ້ນອີກ. ຕາມທຳມະດາແລ້ວ ຄວາມອາດສາມາດທີ່ຈະກໍ່ສ້າງເຂົາເຈົ້າຢູ່ກັບທີ່ແມ່ນຈຳກັດຫລືບໍ່ມີເລີຍ, ຖ້າຈັດສົ່ງພວກເຂົາເຈົ້າໄປຮຽນຢູ່ຕ່າງປະເທດພັດຮຽກຮ້ອງໃຫ້ມີເວລາ ແລະ ລາຍຈ່າຍເພີ່ມຕື່ມ ຈຳນວນບໍ່ໜ້ອຍ. ການບໍ່ຂະຫຍາຍຕົວຂອງຕະຫລາດພາຍໃນຈະເຮັດໃຫ້ໂຮງຈັກໂຮງງານໃໝ່ນັ້ນຕົກຢູ່ໃນສະພາບໂດດດ່ຽວ, ເຮັດໃຫ້ການນຳໃຊ້ສະມັດຖະພາບບໍ່ໄດ້ຢ່າງເຕັມທີ່, ດ້ວຍເຫດນັ້ນກໍຈະພາໄປສູ່ການຂາດທຶນ ແລະໄປ

ສູ່ການປະລາໄຊຢູ່ໃນການແຂ່ງຂັນກັບຄູ່ແຂ່ງຂັນທີ່ເຂັ້ມແຂງກວ່າ.

ໃນຕົວຈິງແລ້ວ, ຄວາມຫລ້າຫລັງທາງດ້ານເສດຖະກິດ ຈະຊ່ວຍ ໃຫ້ຈັກກະພັດແຜ່ຂະຫຍາຍນະໂຍບາຍລ່າຫົວເມືອງຂຶ້ນແບບໃໝ່ ທີ່ຊອກຫາວິທີທາງຮັກສາຄວາມບໍ່ເປັນເອກະລາດຂອງປະເທດເມືອງຂຶ້ນໄວ້ ແລະ ເຮັດໃຫ້ເຂົາເຈົ້າຕ້ອງຢູ່ໃຕ້ການຄອບຄອງຂອງຈັກກະພັດ.

ຢູ່ໃນປະເທດໃດ ທີ່ພວກນາຍທຶນໃຫຍ່ຄອບຄອງ, ຄວາມຂັດແຍ່ງ ລະຫວ່າງຜົນປະໂຫຍດທາງດ້ານຊົນຊັ້ນຂອງມັນກັບຜົນປະໂຫຍດຂອງມະຫາຊົນສ່ວນຫລວງຫລາຍ ກໍ່ຈະຂະຫຍາຍຕົວອອກ. ເຖິງແມ່ນວ່າຢູ່ໃນບັນດາ ປະເທດໜຸ່ມນ້ອຍທີ່ມີເອກະລາດນັ້ນ ອຳນາດແມ່ນຕົກເປັນຂອງພວກນາຍທຶນ-ນ້ອຍ ແລະ ປານກາງ ຊຶ່ງປະກາດໃຊ້ໂຄງການປະຕິຮູບຢ່າງຈິງຈັງນັ້ນ ກໍ່ຕາມ, ແຕ່ການດຳເນີນການປະຕິຮູບກໍ່ບໍ່ສຸດກົກສຸດປາຍ. ການປະຕິຮູບເຫຼົ່ານີ້ ກໍ່ບໍ່ໄດ້ປ່ຽນແປງທາດແທ້ຂອງການພົວພັນແບບທຶນນິຍົມ ທີ່ນັບມື້ນັບມີ ຖານະຄອບຄອງຫລາຍຂຶ້ນກວ່າເກົ່າ, ບໍ່ສາມາດລົບລ້າງສະພາບຂຶ້ນກັບ ຕະຫລາດໂລກທຶນນິຍົມທາງດ້ານເສດຖະກິດ. ວິກິດການ ເຊິ່ງເປັນຈຸດພິເສດຂອງລະບົບທຶນນິຍົມໂລກນັ້ນກໍ່ທະວີຂຶ້ນ. ສະພາບຂຶ້ນກັບບໍລິສັດຜູກຂາດ ລະຫວ່າງຊາດ ກໍ່ເລິກເຊິ່ງກວ່າເກົ່າ. ພວກອາດຍາສິດທັງຫລາຍຊຶ່ງເບິ່ງຕາມຜົນປະໂຫຍດຂອງມັນເອງ ແມ່ນເປັນອັນໜຶ່ງອັນດຽວກັນກັບນາຍທຶນນັ້ນກໍ່ໄດ້ຮັບການກໍ່ຮ່າງສ້າງຕົວຂຶ້ນ.

ພາກສ່ວນເສດຖະກິດ ທີ່ເປັນຂອງລັດກໍ່ຈະຖືກຫັນໄປເປັນແຫລ່ງສ້າງຮັ່ງຄູນມີສຳລັບພວກອາດຍາສິດ ແລະ ເປັນພາຫະນະສຳລັບການຮັບເອົາ ອະພິສິດຕ່າງໆ. ຍ້ອນການຄຸ້ມຄອງບໍ່ດີ ແລະ ການຜະລິດບໍ່ມີການຈັດຕັ້ງພາກສ່ວນເສດຖະກິດນີ້ ກໍ່ຄ່ອຍສູນເສຍບົດບາດ ທີ່ກ້າວໜ້າຂອງຕົນ ໄປເທື່ອເລັກເທື່ອນ້ອຍ. ການດຳເນີນການປະຕິຮູບທີ່ດິນບໍ່ໄດ້ສຳເລັດຜົນ, ຈຳນວນຜູ້ຈັບຈອງ ຊັບສົມບັດອັນໃຫຍ່ໂຕເພີ່ມຂຶ້ນຢ່າງໄວວາ, ຂະບວນວິວັດ ເພື່ອປັບປຸງສະພາບທາງສັງຄົມຂອງກຳມະກອນ, ຊາວນາ ແລະ ຊ່າງຫັດຖະ-ກຳຖືກຖ່ວງດຶງ. ດັ່ງນັ້ນ ການຂະຫຍາຍຕົວແບບທຶນນິຍົມຈຶ່ງຈະບໍ່ນຳ ເອົາເສລີພາບມາສູ່ປະຊາຊົນ ແລະ ກໍ່ຈະບໍ່ເຮັດໃຫ້ສະພາບທາງສັງຄົມ ຂອງເຂົາເຈົ້າດີຂຶ້ນ ເພາະວ່າສິ່ງເຫລົ່ານັ້ນມັນບໍ່ແມ່ນພຽງແຕ່ ຂຶ້ນກັບການຂະ

ຫຍາຍຕົວຂອງກຳລັງການຜະລິດເທົ່ານັ້ນ, ແຕ່ມັນຍັງຂຶ້ນກັບບ່ອນວ່າ ແມ່ນປະຊາຊົນເປັນເຈົ້າຂອງມັນຫລືບໍ່. ສິ່ງທີ່ຢັ້ງຢືນໃຫ້ແກ່ເລື່ອງດັ່ງກ່າວນັ້ນ ກໍຄືສະພາບເສດຖະກິດຂອງບັນດາປະເທດອາເມລິກາລາຕິນ.

ເປັນເວລາສະຕະວັດເຄິ່ງ ພາຍຫລັງໄດ້ຮັບຄວາມເປັນເອກະລາດ ທີ່ບັນດາລັດອາເມລິກາລາຕິນ ໄດ້ເດີນຕາມເສັ້ນທາງຂະຫຍາຍຕົວແບບທຶນນິຍົມ, ແຕ່ໃນທຸກວັນນີ້ ກໍ່ຍັງຖືກຈັດເຂົ້າຢູ່ໃນຖັນແຖວຂອງປະເທດທີ່ມີ ເສດຖະກິດຫລ້າຫລັງ. ສະພາບຄືແນວນີ້ກໍ່ຍ້ອນວ່າ ປະເທດເຫລົ່ານີ້ຂຶ້ນກັບ ສະຫະລັດອາເມລິກາ ແລະ ລັດຈັກກະພັດອື່ນໆຢ່າງຫລວງຫລາຍ, ເປັນເວລາຫລາຍຟ້າຫລາຍປີ ທີ່ນາຍທຶນຕ່າງປະເທດໄດ້ຂູດຮີດເອົາຊັບພະຍາກອນທຳມະຊາດຂອງເຂົາເຈົ້າຢ່າງປ່າເຖື່ອນ. ສະພາບດັ່ງກ່າວນີ້ ໄດ້ຖ່ວງດຶງການຂະຫຍາຍຕົວທາງດ້ານອຸດສາຫະກຳຂອງບັນດາປະເທດອາເມລິກາ ລາຕິນໄວ້ຕັ້ງຫລາຍສິບປີ, ໄດ້ອຳນວຍໃຫ້ແກ່ການຮັກສາການພົວພັນແບບເຄິ່ງສັກດີນາໄວ້ຢູ່ໃນຊົນນະບົດ ແລະ ເຮັດໃຫ້ມີການບໍ່ສົມດູນທາງເສດຖະກິດແລະຄວາມແຕກຕ່າງກັນທາງສັງຄົມຂະຫຍາຍຕົວອອກ. ຍ້ອນວ່າຈັກກະພັດນິຍົມບໍ່ສາມາດສູ້ຢັນກັບການຕໍ່ສູ້ຊົນຊັ້ນຂອງຊາວຜູ້ອອກແຮງງານ ທີ່ຕ້ານກັບແອກຄອບຄອງຂອງບໍລິສັດຜູກຂາດຕ່າງປະເທດໄດ້, ມັນຈຶ່ງຕ້ອງກ້າວໄປສູ່ການກໍ່ຕັ້ງລະບອບຜະເດັດການຟາຊິດ–ການທະຫານຂຶ້ນ ແລະ ກ້າວໄປສູ່ ການແຊກແຊງຢ່າງເປີດແປນເຂົ້າໃນວຽກງານພາຍໃນຂອງປະເທດເຫລົ່ານີ້ຢ່າງລຽນຕິດ.

ຢູ່ໃນເງື່ອນໄຂທີ່ຂະບວນການປົດປ່ອຍຊາດພຸ່ງຂຶ້ນນັ້ນ, ປະຊາຊາດອາເມລິກາລາຕິນ ໄດ້ເຂົ້າຮ່ວມຢູ່ໃນຂະບວນວິວັດປະຕິວັດນັບມື້ນັບຂະຫຍັນຂັນແຂງ. ຊາວຜູ້ອອກແຮງງານຢູ່ໃນປະເທດຕ່າງໆຂອງທະວີບນີ້ ພ້ອມຕໍ່ສູ້ເພື່ອຄວາມເປັນເອກະລາດແຫ່ງຊາດຢ່າງແທ້ຈິງ ແລະ ເພື່ອລົບລ້າງ ທຸກຮ່ອງຮອຍຂອງການຂູດຮີດ. ແນວໂຮມອັນກວ້າງຂວາງຂອງກຳລັງຮັກຊາດ ແລະ ປະຊາທິປະໄຕທັງໝົດ ຈຶ່ງໄດ້ເຕົ້າໂຮມເອົາບໍ່ພຽງແຕ່ຊາວຜູ້ ອອກແຮງງານເທົ່ານັ້ນ, ແຕ່ກໍ່ຍັງໄດ້ເຕົ້າໂຮມເອົາຕົວແທນທີ່ບໍ່ແມ່ນຊົນຊັ້ນ ກຳມາຊີບນຳກັນນັ້ນ ໄດ້ກາຍເປັນພື້ນຖານຂອງການຕໍ່ສູ້ການເມືອງອັນນີ້. ວິກິດການທາງດ້ານການເມືອງໃນຊຸມປີ ໖໐–໗໐ ຈຶ່ງໄດ້ກວມເອົາບັນດາ ປະ

ເທດອາເມລິກາກາງ ແລະ ອ່າວທະເລກາລິເບທັງໝົດນັ້ນ ໄດ້ຢັ້ງຢືນອີກ ເທື່ອໜຶ່ງວ່າ "ການຂະຫຍາຍຕົວແບບທຶນນິຍົມ" ທີ່ເປັນການຂະຫຍາຍຕົວ ແບບບໍ່ມີເອກະລາດນັ້ນ ໄດ້ໝົດສະໄໝຂອງມັນແລ້ວ ຢູ່ໃນອາເມລິກາລາ ຕິນ ແລະ ໄດ້ເຮັດໃຫ້ບັນດາປະເທດຢູ່ໃນທະວີບນີ້ ມີຄວາມຈຳເປັນ ທີ່ຈະ ຕ້ອງແຍກຕົວອອກຈາກທຶນນິຍົມ ແລະ ຂ້າມຜ່ານໄປສູ່ສັງຄົມນິຍົມ.

## ເສັ້ນທາງໄປສູ່ສັງຄົມນິຍົມ

ຢູ່ໃນການຕໍ່ສູ້ຕ້ານຈັກກະພັດ, ເພື່ອຄວາມເປັນເອກະລາດ ທາງການ ເມືອງ ແລະ ເສດຖະກິດນັ້ນ ກໍ່ມີບັນດາລັດທີ່ໄດ້ຂະຫຍາຍຕົວໄປຕາມເສັ້ນ ທາງສັງຄົມນິຍົມ ເປັນກອງລະວັງໜ້າ. ປະສົບການຂອງຕົນເອງແລະປະ ສົບການຂອງປະເທດອື່ນ ໄດ້ເຮັດໃຫ້ບັນດາປະຊາຊາດທີ່ໄດ້ຮັບການປົດ - ປ່ອຍຮູ້ວ່າ ທຶນນິຍົມບໍ່ສາມາດຮັບປະກັນຄວາມກ້າວໜ້າທາງເສດຖະກິດ, ບໍ່ ສາມາດຮັບປະກັນການລົບລ້າງຄວາມອຶດຫິວ ແລະ ຄວາມທຸກຍາກກາກກຳ ໄດ້. ເພາະສະນັ້ນ ຈຳນວນປະເທດທີ່ໄດ້ຮັບການປົດປ່ອຍທີ່ມຸ່ງໝາຍ ແກ້ ໄຂບັນດາບັນຫາເສດຖະກິດ-ສັງຄົມຂອງເຂົາເຈົ້າຢູ່ບົນເສັ້ນທາງຂ້າມຜ່ານ ໄປສູ່ສັງຄົມນິຍົມນັ້ນ ຈຶ່ງມັກມີນັບຫລາຍຂຶ້ນ.

ວ.ອີ.ເລນິນ ໄດ້ໃຫ້ຄຳນິຍາມແກ່ຫລັກມູນກ່ຽວກັບຄວາມອາດສາມາດ ທີ່ນການປະຕິວັດປົດປ່ອຍຊາດ ໄປເປັນການປະຕິວັດສັງຄົມນິຍົມ. ເພິ່ນໄດ້ ຄາດຄະເນໄວ້ວ່າ ການຕໍ່ສູ້ຂອງມວນມະນຸດສ່ວນຫລວງຫລາຍ ຕ້ານ ແອກ ລ່າຫົວເມືອງຂຶ້ນ, ຄວາມບໍ່ເປັນເອກະລາດ ແລະ ຄວາມຫລ້າຫລັງນັ້ນຈະ ກາຍໄປເປັນການຕໍ່ສູ້ຕ້ານຈັກກະພັດ. ຢູ່ໃນການຕໍ່ສູ້ນັ້ນ, ປະຊາຊາດ ທີ່ ດ້ອຍພັດທະນາຈະສາມາດອີງໃສ່ບັນດາປະເທດສັງຄົມນິຍົມ. ວ.ອີ.ເລນິນ ໄດ້ໃຫ້ຂໍ້ສະຫລຸບວ່າ: "ດ້ວຍການຊ່ວຍເຫລືອຂອງຈຸີນຈຸ້ນກຳມາຊີບຢູ່ໃນບັນ ດາປະເທດທີ່ກ້າວໜ້ານັ້ນ, ບັນດາປະເທດທີ່ດ້ອຍພັດທະນາກໍ່ຈະ ສາມາດ

ກ້າວໄປຫາລະບອບໂຊວຽດ ແລະ ຜ່ານບັນດາຂັ້ນຕອນແຫ່ງການຂະຫຍາຍຕົວອັນແນ່ນອນແລ້ວ ກໍ່ກ້າວໄປສູ່ລະບອບກອມມູນິດນິຍົມ ໂດຍບໍ່ຜ່ານໄລຍະຂະຫຍາຍຕົວແບບທຶນນິຍົມ" [1]. ປະສົບການທາງປະຫວັດສາດ ໄດ້ຢືນຢັນການຄາດຄະເນດັ່ງກ່າວ. ປະຊາຊາດຢູ່ໃນບັນດາສາທາລະນະລັດ ໂຊວຽດ ເຊິ່ງແມ່ນເຂດຫລ້າຫລັງໃນອະດີດຂອງລັດເຊຍສະໄໝພະເຈົ້າຊາກໍ່ໄດ້ກ້າວຂຶ້ນ ສັງຄົມນິຍົມ ໂດຍບໍ່ຜ່ານໄລຍະແຫ່ງການຂະຫຍາຍຕົວແບບທຶນນິຍົມ. ໂດຍມີພັນທະພາບອັນແໜ້ນແຟ້ນກັບ ສສສຊ ນັ້ນ, ປະຊາຊົນ ມົງໂກລີ ກໍ່ໄດ້ຜ່ານເສັ້ນທາງຈາກລະບອບສັກດີນາ ໄປສູ່ລະບອບສັງຄົມນິຍົມ. ປະຈຸບັນ ກຸ່ມປະເທດສ່ວນໃຫຍ່ຢູ່ໃນທະວີບອາຟລິກາ ແລະ ອາຊີ ກໍ່ພວມເດີນຕາມທາງອຽງສັງຄົມນິຍົມ.

ໃນຍຸກສະໄໝປະຈຸບັນ, ອະດີດຫົວເມືອງຂຶ້ນກໍ່ບໍ່ຈຳເປັນຈະລໍຖ້າ ວ່າເມື່ອໃດທຶນນິຍົມຈະສ້າງເງື່ອນໄຂທາງດ້ານວັດຖຸ ແລະ ຈິດໃຈໃຫ້ແກ່ ສັງຄົມນິຍົມນັ້ນ, ເຂົາເຈົ້າສາມາດກ້າວຂຶ້ນສັງຄົມນິຍົມ ໂດຍບໍ່ຜ່ານໄລຍະແຫ່ງການຂະຫຍາຍຕົວແບບທຶນນິຍົມ.

ເສັ້ນທາງທີ່ບໍ່ແມ່ນທຶນນິຍົມ ເປັນໄລຍະຂະຫຍາຍຕົວອັນຈຳເປັນໃນປະຫວັດສາດສຳລັບປະຊາຊາດ ແລະ ປະເທດດ້ອຍພັດທະນາທີ່ມຸ່ງໝາຍຢາກຂ້າມຜ່ານໄປສູ່ສັງຄົມນິຍົມ ໂດຍບໍ່ຜ່ານໄລຍະແຫ່ງການຂະຫຍາຍຕົວ ແບບທຶນນິຍົມ. ຢູ່ໃນໄລຍະນີ້ ແມ່ນເປັນເວລາສ້າງປະຖົມປັດໄຈທາງດ້ານວັດຖຸ ແລະ ຈິດໃຈສຳລັບຜົນສຳເລັດຂອງການປະຕິວັດສັງຄົມນິຍົມ ແລະກໍ່ນຳໃຊ້ອຳນາດແຫ່ງລັດເພື່ອເປົ້າໝາຍເຫລົ່ານີ້ຢ່າງຂະຫຍັນຂັນແຂງ.

ເຖິງແມ່ນວ່າ ປະເທດຫົວເມືອງຂຶ້ນໃນອະດີດນັ້ນ ຈະຢູ່ໃນໄລຍະແຫ່ງການຂະຫຍາຍຕົວລະດັບໃດກໍ່ຕາມ ກໍ່ມີການດຳເນີນມາຕະການທີ່ມີທ່າອຽງສັງຄົມນິຍົມ.

ຢູ່ໃນຂົງເຂດການເມືອງ ແມ່ນປັດເຂຍກຳລັງປະຕິການ ແລະ ໄມ້ມືຂອງຈັກກະພັດອອກຈາກອຳນາດ ແລະ ເລີ່ມກໍ່ຕັ້ງລະບອບປະຊາທິປະໄຕ-ປະຕິວັດຂຶ້ນຊຶ່ງເປັນຕົວແທນໃຫ້ແກ່ຜົນປະໂຫຍດຂອງປະຊາຊົນແລະອີງໃສ່ມະ

---

໑) ວ.ອີ.ເລນິນ. ບົດນິພົນຄົບຊຸດ, ເຫລັ້ມທີ ໔໑, ໜ້າ ໒໔໖.

ທາຊົນຜູ້ອອກແຮງງານ, ທັນເອົາກົງຈັກຄຸ້ມຄອງແຫ່ງລັດເປັນປະຊາທິປະ-ໄຕ. ການຕໍ່ສູ້ກັບຈັກກະພັດຢ່າງບໍ່ຢຸດຢັ້ງຖືກດຳເນີນໄປ. ການພົວພັນ ມິດຕະພາບ ແລະ ການຮ່ວມມືກັບບັນດາປະເທດສັງຄົມນິຍົມຖືກສ້າງຕັ້ງຂຶ້ນ.

ຢູ່ໃນຂົງເຂດເສດຖະກິດ ແມ່ນສ້າງຊຸດສາຫະກຳທັນສະໄໝທີ່ເປັນກຳມະສິດແຫ່ງລັດຂຶ້ນ, ໂອນບັນດາວິສາຫະກິດຕ່າງປະເທດມາເປັນຂອງລັດ, ດຳເນີນການປະຕິຮູບທີ່ດິນ ເພື່ອຜົນປະໂຫຍດຂອງຊາວນາ ຢ່າງເຖິງກົກເຖິງຮາກ, ສ້າງຕັ້ງການກວດກາຂອງລັດຕໍ່ການພົວພັນເສດຖະກິດກັບພາຍນອກ. ລັດດຳເນີນການກວດກາລວມຕໍ່ການພັດທະນາເສດຖະກິດທັງໝົດ, ວາງແຜນເສດຖະກິດ, ຊອກວິທີທາງປົດປ່ອຍປະເທດອອກຈາກສະພາບຂຶ້ນກັບບັນດາບໍລິສັດຜູກຂາດຂອງຈັກກະພັດທາງດ້ານເສດຖະກິດເທື່ອລະນ້ອຍ.

ຢູ່ໃນຂົງເຂດສັງຄົມນັ້ນ ໜ້າທີ່ອັນສຳຄັນແມ່ນການປັບປຸງສະພາບທາງດ້ານວັດຖຸ ແລະ ວັດທະນະທຳຂອງຊາວຜູ້ອອກແຮງງານໃຫ້ດີຂຶ້ນ, ການກໍ່ຮ່າງສ້າງຕົວຂອງຊົນຊັ້ນກຳມະກອນ, ການສ້າງອົງການກຳມະບານ ແລະ ອົງການຈັດຕັ້ງການເມືອງຂອງມັນ, ການຈັດຕັ້ງຊາວນາ ແລະ ຊ່າງຫັດຖະກຳນ້ອຍ, ດຶງດູດເອົາຊາວຜູ້ອອກແຮງງານເຂົ້າໃນການຄຸ້ມຄອງ ການຜະລິດເທື່ອລະກ້າວ. ໄປພ້ອມໆກັນນັ້ນ ກໍ່ຈຳກັດສິດຂອງນາຍທຶນໃຫຍ່ແລະສັກດີນາ.

ຢູ່ໃນຂົງເຂດແຫ່ງການຂະຫຍາຍວັດທະນະທຳນັ້ນ ແມ່ນເປີດກວ້າງການສຶກສາ, ການກໍ່ສ້າງພະນັກງານທີ່ຈົງຮັກພັກດີຕໍ່ການປະຕິວັດ, ໂຄສະນາຫຼັກການຂອງລັດທິສັງຄົມນິຍົມວິທະຍາສາດ.

ບັນຫາໜຶ່ງ ທີ່ມີຄວາມໝາຍສຳຄັນ ສຳລັບການຂະຫຍາຍຕົວ ຕາມເສັ້ນທາງໄປສູ່ສັງຄົມນິຍົມ ແມ່ນການກໍ່ຮ່າງສ້າງຕົວ ແລະ ປັບປຸງພັກ ປະຊາທິປະໄຕ-ປະຕິວັດ ທີ່ເປັນຕົວແທນໃຫ້ແກ່ຜົນປະໂຫຍດຂອງຊາວ ຜູ້ອອກແຮງງານອັນກວ້າງຂວາງ. ພັກດັ່ງກ່າວ ແມ່ນເປັນຜູ້ນຳພາທາງການເມືອງຢູ່ໃນການດັດສ້າງສັງຄົມໃຫ້ໄປຕາມແບບກ້າວໜ້າ.

ບັນຫາທີ່ສຳຄັນຂອງທຸກໆການປະຕິວັດ ແມ່ນບັນຫາກ່ຽວກັບອຳນາດລັດຢູ່ໃນບັນດາປະເທດທີ່ມີທ່າອຽງສັງຄົມນິຍົມນັ້ນ ໂດຍຂຶ້ນກັບລະດັບແຫ່ງການຂະຫຍາຍຕົວທາງດ້ານເສດຖະກິດ, ຫຼັກໝັ້ນທາງດ້ານການເມືອງ-ແນວ

ຄິດຂອງພັກປະຊາທິປະໄຕ-ປະຕິວັດແລະຄະນະນຳພາຂອງມັນຈຶ່ງມີຮູບການປົກຄອງຂອງລັດຕ່າງໆເກີດຂຶ້ນ. ເພິ່ນເອີ້ນວ່າປະຊາທິປະໄຕແຫ່ງຊາດ ຖ້າຫາກອຳນາດລັດອີງໃສ່ກຸ່ມຄົນອັນກວ້າງຂວາງຂອງກຳລັງຮັກຊາດແລະ ປະຊາທິປະໄຕ. ຖ້າວ່າອຳນາດລັດໂດຍພື້ນຖານແລ້ວ ອີງໃສ່ຊາວນາ, ນາຍທຶນຕົວເມືອງ ແລະ ຊົນນະບົດ ແລະ ກຸ່ມຄົນເຄິ່ງໆກາງໆ ຢູ່ໃນສັງຄົມ ນັ້ນເພິ່ນເອີ້ນວ່າປະຊາທິປະໄຕປະຕິວັດນາຍທຶນ. ຮູບການອຳນາດລັດແບບ ທີສາມ ແມ່ນປະຊາທິປະໄຕປະຕິວັດກຳມະຊີບ-ຊາວນາ ຊຶ່ງອີງໃສ່ ສອງຊົນຊັ້ນອັນເປັນພື້ນຖານຂອງຊາວຜູ້ອອກແຮງງານຄື: ຊົນຊັ້ນກຳມະກອນ ແລະ ຊາວນາ. ຢູ່ໃນນັ້ນພັກປະຕິວັດຜູ້ເປັນກອງລະວັງໜ້າໄດ້ຮັບເອົາລັດທິມາກ-ເລນິນ ມາເປັນພື້ນຖານດ້ານການເມືອງ-ແນວຄິດຂອງການເຄື່ອນ ໄຫວຂອງເຂົາເຈົ້າ. ບັນດາຮູບການອຳນາດລັດ ຢູ່ໃນບັນດາປະເທດ ທີ່ມີທາອຽງສັງຄົມນິຍົມ ດັ່ງວ່ານັ້ນ ຍັງບໍ່ທັນສະທ້ອນໃຫ້ເຫັນເຖິງ ຈຸດພິເສດທັງໝົດທີ່ມີຢູ່ ແລະ ຮູບແບບຕ່າງໆທັງໝົດຂອງປະຊາທິປະໄຕປະຕິວັດ.

ສະພາບການເມືອງຢູ່ໃນບັນດາປະເທດທີ່ມີທາອຽງສັງຄົມນິຍົມ ໄດ້ພົ້ນເດັ່ນຂຶ້ນດ້ວຍການປ່ຽນແປງຢ່າງໄວວາ ແລະ ບາງເທື່ອກໍ່ບໍ່ສະຖຽນລະ-ພາບ. ຢູ່ໃນນັ້ນເອງ ທີ່ສະແດງອອກເຖິງຂະບວນວິວັດແຫ່ງການພົມແຍກກຳລັງການເມືອງ ແລະຊົນຊັ້ນ-ສັງຄົມຢູ່ໃນກະແສແຫ່ງການຂະຫຍາຍຕົວຂອງການປະຕິວັດ ຊຶ່ງກວມເອົາກຸ່ມປະຊາທິປະໄຕປະຕິວັດ ທີ່ມີສ່ວນປະກອບຊົນຊັ້ນບໍ່ເປັນເນື້ອດຽວກັນ. ການດັດສ້າງແບບປະຕິວັດຍິ່ງເລິກເຊິ່ງ, ຂະບວນວິວັດອັນນັ້ນຍິ່ງເພີ່ມຂຶ້ນຫລາຍເທົ່ານັ້ນ, ສະນັ້ນບໍ່ສາມາດຈະກະຕວງລ່ວງໜ້າໄດ້ວ່າ ແມ່ນກຳລັງການເມືອງໃດຈະເປັນຜູ້ກຳອຳນາດ.

ບັນດາປະເທດສັງຄົມນິຍົມ ສະໜັບສະໜູນຂະບວນການ ແລະກຳລັງປະຊາທິປະໄຕ-ປະຕິວັດ ແລະ ກຳລັງທີ່ກ້າວໜ້າທີ່ໄດ້ເລືອກເອົາທິດໄປສູ່ສັງຄົມນິຍົມ ແລະ ລົງມືປະຕິບັດໃຫ້ບັນລຸຜົນ. ການພົວພັນເສດຖະກິດພາຍນອກ ກັບບັນດາປະເທດເຫລົ່ານີ້ ຂະຫຍາຍຕົວອອກ, ການຊ່ວຍເຫລືອທາງດ້ານເສດຖະກິດ ແລະ ເຕັກນິກກໍເພີ່ມຂຶ້ນ.

## ຂໍ້ສະຫລຸບ

ໃນການດັດສ້າງສັງຄົມຢູ່ໃນໂລກນັ້ນ ມີການເຂົ້າຮ່ວມ ຂອງປະຊາຊົນຫລາຍລ້ານຄົນ, ຂອງນັກກອມມູນິດ, ນັກປະຕິວັດ ແລະ ນັກຕໍ່ສູ້ເພື່ອອິດສະຫລະພາບຢູ່ໃນບັນດາປະເທດຕ່າງໆຂອງທຸກທະວີບຈຳນວນຫລາຍ ຮ້ອຍພັນຄົນ. ໂລກໄດ້ຫຍັບເຂົ້ານໍ່ກັບຄວາມສີວິໄລໃຫມ່ຢ່າງເດັ່ນຈັດເຊິ່ງມະຫາປະຕິວັດສັງຄົມນິຍົມເດືອນຕຸລາຢູ່ລັດເຊຍ ໄດ້ເປັນຜູ້ໄຂສັງກາດ. ກຳລັງວັງຊາຂອງທິດສະດີປະຕິວັດຂອງ ກ.ມາກ, ຟ.ອັງແກນ ແລະ ວ.ອີ.ເລນິນ ເຊິ່ງເປັນຜູ້ສ້າງຕັ້ງລັດທິກອມມູນິດວິທະຍາສາດນັ້ນ ແມ່ນພວມ ໄດ້ຮັບການຢືນຢັນຢູ່ໃນພຶດຕິກຳຕົວຈິງ.

ວ.ອີ.ເລນິນ ໄດ້ໃຫ້ຂໍ້ສະຫລຸບວ່າ ພາຍຫລັງການປະຕິວັດ ລັດເຊຍຈະມີການປະຕິວັດສັງຄົມນິຍົມຢູ່ໃນປະເທດອື່ນໆ. ຊີວິດຕົວຈິງ ໄດ້ຢືນຢັນເຖິງຫລັກມູນອັນມີລັກສະນະຫລັກການຢູ່ໃນທິດສະດີຂອງລັດທິກອມມູນິດວິທະຍາສາດ. ປະຈຸບັນ ປະຊາຊົນຫລາຍຮ້ອຍລ້ານຄົນຢູ່ໃນທະວີບເອີລົບ, ອາຊີ, ອາຟລິກາ ແລະ ອາເມລິກາລາຕິນ ພວມກ້າວເດີນຕາມເສັ້ນທາງສັງຄົມນິຍົມ. ດ້ວຍການອອກແຮງງານທີ່ເສຍສະຫລະ ແລະ ປາສະຈາກການຂູດຮີດແຮງງານ, ປະຊາຊາດບັນດາປະເທດສັງຄົມນິຍົມ ພວມສ້າງຄວາມສີວິໄລໃຫມ່ ເຊິ່ງ ເປັນຄວາມໄຝ່ຝັນທີ່ມີມາແຕ່ດົນນານຂອງຕົວແທນ ຜູ້ດີເດັ່ນຂອງມະນຸດຊາດ ແລະ ເຊິ່ງຖືກພິສູດຢ່າງມີວິທະຍາສາດໂດຍ ກ.ມາກ, ຟ.ອັງແກນ ແລະ ວ.ອີ.ເລນິນ. ບັນດາປະເທດສັງຄົມນິຍົມທີ່ໄດ້ຮັບ ໄຊຊະນະແລ້ວນັ້ນ ພວມເປັນປັດໄຈຕັດສິນຢູ່ໃນການຂະຫຍາຍຕົວ ຂອງສັງຄົມປະຈຸບັນ ແລະ ມີທ່າດື້ອນຢູ່ໃນການແຂ່ງຂັນກັບທຶນນິຍົມນັ້ນຢ່າງບໍ່ຢຸດຢັ້ງ.



12–699

ການປະຕິວັດຢູ່ລັດເຊຍ ໄດ້ປຸກພາກຕາເວັນອອກໃຫ້ຕື່ນຂຶ້ນ, ພາໃຫ້ເກີດມີຂະບວນການປົດປ່ອຍຊາດອັນແຂງແຮງຂຶ້ນ ເຊິ່ງໄດ້ນຳໄປສູ່ການພັງທະລາຍຂອງລັດທິລ່າຫົວເມືອງຂຶ້ນ. ຢູ່ໃນຫລາຍປະເທດ ການຕໍ່ສູ້ປົດປ່ອຍຊາດໄດ້ກາຍເປັນການຕໍ່ສູ້ ເພື່ອຂ້າມຜ່ານໄປສູ່ສັງຄົມນິຍົມ. ອະດີດ ຫົວເມືອງຂຶ້ນໄດ້ປ່ຽນມາເປັນກຳລັງພື້ນຖານຫນຶ່ງຂອງຂະບວນວິວັດແບບປະຕິ-ວັດແຫ່ງຍຸກສະໄຫມ.

ຊີວິດທາງດ້ານເສດຖະກິດ ແລະ ສັງຄົມປະຈຸບັນນີ້ ແມ່ນຂະຫຍາຍຕົວໄປຕາມທິດທາງທີ່ລັດທິມາກ-ເລນິນ ໄດ້ພິສູດ ແລະ ຄາດຄະເນທາງດ້ານທິດສະດີໄວ້ກ່ອນແລ້ວ, ອັນນີ້ບໍ່ແມ່ນການກົງກັນໂດຍບັງເອີນ. ລັດທິກອມມູນິດວິທະຍາສາດ ບໍ່ພຽງແຕ່ຄົ້ນພົບລັກສະນະກົດເກນພາວະວິໄສໃນການຂະຫຍາຍຕົວຂອງສັງຄົມເທົ່ານັ້ນ, ແຕ່ຍັງເປັນຜູ້ຊີ້ບອກວ່າ ແມ່ນຊົນຊັ້ນ ແລະ ກຳລັງການເມືອງໃດທີ່ຈະເປັນຜູ້ແບກຫາບ ແລະ ຜູ້ປະດິດສ້າງຄວາມກ້າວຫນ້າຂອງຍຸກສະໄຫມດຽວນີ້ ແລະ ແມ່ນກຳລັງໃດທີ່ຕ້ານຢັນກັບມັນ.

ການປະຕິວັດທາງດ້ານເຕັກນິກ-ວິທະຍາສາດ ເຊິ່ງແມ່ນສິ່ງວິເສດ ຢູ່ໃນຫ້າສິບປີທ້າຍຂອງສະຕະວັດທີ ໒໐ ນັ້ນໄດ້ໄຂຄວາມອາດສາມາດອັນບໍ່ມີຂອບເຂດໃນການພັດທະນາກຳລັງການຜະລິດ, ເຕັກນິກ ແລະ ວິທະຍາ-ສາດ. ແຕ່ວ່າຢູ່ໃນບັນດາປະເທດທຶນນິຍົມຂະຫຍາຍຕົວນັ້ນ ມັນຊ້ຳພັດ ພາໄປສູ່ໄພຫວ່າງງານ, ການສົມເນື້ອປະດາຕົວ ແລະ ຄວາມທຸກຍາກ ກ່າກກຳສຳລັບຄົນຜູ້ຊຶ່ງໄດ້ກາຍເປັນ "ສ່ວນເກີນ" ຈຳນວນຫລາຍລ້ານຄົນ.ບັນຫາອັນຮ້າຍແຮງທີ່ສຸດຂອງໂລກທຶນນິຍົມ ກໍ່ແມ່ນບັນຫາຄວາມອຶດຫິວ.ປະຊາຊົນຫລາຍລ້ານຄົນຢູ່ໃນບັນດາປະເທດນາຍທຶນບໍ່ມີເຮືອນຢູ່ ແລະ ໄດ້ພັກພາອາໄສຢູ່ຕາມແຫລ່ງເຊື່ອມໂຊມ ຫລືຢູ່ຕາມສະຖານທີ່ຊຶ່ງບໍ່ເຫມາະສົມສຳລັບການຢູ່ອາໄສ. ເພື່ອຫາກຳໄລຢ່າງດຽວເທົ່ານັ້ນ, ບໍລິສັດຜູກຂາດຕ່າງ ກໍ່ທຳລາຍສິ່ງແວດລ້ອມຄື: ທົ່ງ, ປ່າໄມ້, ທະເລ ແລະ ມະຫາສະຫມຸດ , ອາກາດ ແລະ ຊັບໃນດິນສິນໃນນ້ຳຢ່າງບໍ່ອີດູກູນາ.

ຄົນເຮົາສາມາດທີ່ຈະສ້າງເງື່ອນໄຂທາງສັງຄົມທີ່ຕອບສະຫນອງຜົນປະໂຫຍດຂອງຊາວຜູ້ອອກແຮງງານຫລາຍລ້ານຄົນ ແລະ ມວນມະນຸດທັງຫມົດຢູ່ໃນໂລກໄດ້ບໍ ? ຕໍ່ບັນຫານີ້ລັດທິກອມມູນິດວິທະຍາສາດບໍ່ພຽງແຕ່ ຈະໃຫ້

ຄຳຕອບໄປໃນທາງບວກ, ແຕ່ຫາກຍັງຊີ້ບອກອີກວ່າ: ຈະເຮັດດ້ວຍວິທີໃດ
ແລະ ດ້ວຍພາຫະນະໃດ ເພື່ອແກ້ໄຂບັນຫາດັ່ງກ່າວ. ແນ່ນອນແລ້ວວ່າລັດ
ທິກອມມູນິດວິທະຍາສາດ ບໍ່ໄດ້ແມ່ນຕຳລາສຳເລັດຮູບທີ່ໃຫ້ຄຳຕອບຕໍ່ທຸກບັນ
ຫາໃນຊີວິດປະຈຸບັນແບບທີ່ຕຽມໄວ້ແລ້ວ. ລັດທິມາກ-ເລນິນ ບໍ່ແມ່ນຄຳພີ,
ແຕ່ແມ່ນເຂັມທິດໃນການເຄື່ອນໄຫວຕົວຈິງ. ໃນທຸກວັນນີ້ ຊາວກອມມູນິດ-
ທັງຫລາຍຕ່າງກໍ່ອອກແຮງປ່າງປະດິດສ້າງເພື່ອຂະຫຍາຍທິດສະດີປະຕິ ວັດ
ຂອງຕົນ ໂດຍການສັງລວມຂໍ້ມູນ ແລະ ປະກົດການ ກໍ່ຄື ປະສົບການໃຫມ່
ໃນການຕໍ່ສູ້ເພື່ອດັດສ້າງໂລກທາງສັງຄົມ.

ການເຄື່ອນໄຫວເພື່ອສ້າງສາຂອງມວນມະນຸດເຮົານັ້ນ ຈະສາມາດດຳ
ເນີນໄປໄດ້ ກໍ່ຕໍ່ເມື່ອຢູ່ໃນເງື່ອນໄຂທີ່ມີສັນຕິພາບເທົ່ານັ້ນ. ຄຸນງາມຄວາມ
ດີອັນສຳຄັນໃນການປົກປັກຮັກສາສັນຕິພາບ ໃນທຸກວັນນີ້ແມ່ນເປັນຂອງ ສັງ
ຄົມນິຍົມໂລກ ແລະ ກ່ອນອື່ນໝົດແມ່ນເປັນຂອງສະຫະພາບໂຊວຽດ.ການ
ເຄື່ອນໄຫວເພື່ອເປັນຜົນດີຂອງອົງການສະຫະປະຊາຊາດ, ຂະບວນການ ບໍ່
ຮ່ວມກຸ່ມ ແລະ ຂະບວນການປະຊາທິປະໄຕຕ້ານສົງຄາມ ກໍ່ມີບົດບາດ ອັນ
ໃຫຍ່ຫລວງຢູ່ໃນພາລະກິດອັນສະຫງ່າງາມນີ້. ນັກກອມມູນິດທັງຫລາຍຖືວ່າ
ໃນຍຸກສະໄຫມປະຈຸບັນນີ້ ສົງຄາມແມ່ນເປັນສິ່ງທີ່ຫລີກລ່ຽງໄດ້ຢ່າງແນ່ນອນ.
ຄວາມເປັນປຶກແຜ່ນ ແລະ ການເຄື່ອນໄຫວຕ້ານສົງຄາມອັນຂະຫຍັນ ອັນ
ແຂງຂອງຊາວຜູ້ອອກແຮງງານນັ້ນຈະຕ້ອງປົກປ້ອງສັນຕິພາບໄວ້ໄດ້. ບັນ
ດາປະເທດສັງຄົມນິຍົມ ແລະ ຂະບວນການກອມມູນິດສາກົນ ຖືວ່າການ ພິ
ທັກຮັກສາສັນຕິພາບນີ້ເອງ ເປັນຫນ້າທີ່ສຳຄັນອັນດັບຫນຶ່ງ. ສ່ວນການແຂ່ງ
ຂັນອັນມີລັກສະນະປະຫວັດສາດລະຫວ່າງສອງລະບົບໂລກ ຄວນແກ້ໄຂດ້ວຍ
ສັນຕິວິທີ ຢູ່ບົນພື້ນຖານນະໂຍບາຍແຫ່ງການຢູ່ຮ່ວມກັນໂດຍສັນຕິ. ສັງຄົມນິ
ຍົມ ບໍ່ໄດ້ຢ້ານກົວການແຂ່ງຂັນເຊັ່ນນີ້ ເພາະວ່າມັນເຊື່ອໝັ້ນໃນໄຊຊະນະ
ສຸດທ້າຍຂອງຕົນ.

## ບົດອະທິບາຍສັບ

<u>ການປະຕິວັດເຕັກນິກ</u>–<u>ວິທະຍາສາດ</u> ແມ່ນການດັດສ້າງກຳລັງການຜະລິດ–ຢ່າງເຖິງກົກເຖິງຮາກ ທາງດ້ານຄຸນນະພາບ ຢູ່ບົນພື້ນຖານ ການເຊື່ອມຕໍ່ຜົນສຳເລັດໃໝ່ອັນກ້າວໜ້າຂອງເຕັກນິກ ແລະ ວິທະຍາສາດເຂົ້າກັບການຜະລິດ.

<u>ການປະຕິຮູບ</u> ແມ່ນການປ່ຽນແປງ ແລະ ດັດສ້າງຊີວິດສັງຄົມດ້ານໃດໜຶ່ງຢູ່ໃນຂອບເຂດລະບົບສັງຄົມທີ່ມີຢູ່ ຊຶ່ງບໍ່ໄດ້ນຳໄປສູ່ການປ່ຽນແປງລັກສະນະຈຸດພື້ນຂອງມັນ.

<u>ການພົວພັນການຜະລິດ</u> ແມ່ນການພົວພັນຂອງຄົນ ຢູ່ໃນຂະບວນວິວັດ ແຫ່ງການຜະລິດຂອງສັງຄົມ, ການແລກປ່ຽນ ແລະ ການແຈກຢາຍ ຜົນຜະລິດ. ຄົນຜະລິດວັດຖຸສິ່ງຂອງບໍ່ແມ່ນແບບໂດດດ່ຽວແຕ່ແມ່ນ ແບບລວມໝູ່ ແລະ ຢູ່ໃນຂະບວນວິວັດແຫ່ງການຜະລິດ, ຄົນເຮົາ ກໍ່ມີການພົວພັນອັນແນ່ນອນໃດໜຶ່ງ ທີ່ບໍ່ຂຶ້ນກັບເຈດຈຳນົງ ແລະ ຄວາມມຸ່ງໝາຍຂອງເຂົາເຈົ້າ.

<u>ກອມມູນິດນິຍົມ</u> ແມ່ນລະບອບເສດຖະກິດ–ສັງຄົມໜຶ່ງ ທີ່ເປັນຜູ້ປ່ຽນແທນລະບອບທຶນນິຍົມ. ຂັ້ນທຳອິດຂອງລັດກອມມູນິດນິຍົມ ແມ່ນສັງຄົມນິຍົມ. ພາຍຫລັງທີ່ເສດຖະກິດ ແລະ ສັງຄົມຂອງສັງຄົມນິຍົມສູກງອມແລ້ວ ສັງຄົມນິຍົມຈຶ່ງຄ່ອຍກາຍເປັນກອມມູນິດນິຍົມ. ຢູ່ໃນຂະບວນວິວັດດັ່ງກ່າວກ່ອນອື່ນໝົດແມ່ນປະກອບດ້ວຍ: ການສ້າງພື້ນຖານວັດຖຸ–ເຕັກນິກຂອງກອມມູນິດນິຍົມ, ການເສີມຂະຫຍາຍການພົວພັນທາງສັງຄົມແບບກອມມູນິດນິຍົມ, ການກ້າວຈາກລັດສັງຄົມນິຍົມໄປເປັນສັງຄົມ

ກອມມູນິດທີ່ປົກຄອງດ້ວຍຕົນເອງ, ການສ້າງຄົນໃໝ່ ຄືບຸກຄົນທີ່ຂະຫຍາຍຕົວຢ່າງຮອບດ້ານ.

<u>ກຳລັງການຜະລິດ</u> ແມ່ນພາຫະນະການຜະລິດ ແລະ ຄົນຊຶ່ງເປັນຜູ້ພາໃຫ້ມີການເຄື່ອນເໜັງ. ບໍ່ວ່າສັງຄົມໃດ ກຳລັງການຜະລິດ ທີ່ສຳຄັນແມ່ນຊາວຜູ້ອອກແຮງງານທີ່ມີຄວາມຮູ້, ພອນສະຫວັນ ແລະ ຄວາມຊິນເຄີຍອັນແນ່ນອນ.

<u>ຄະນາທິປະໄຕເງິນ</u> ແມ່ນກຸ່ມນາຍທຶນໃຫຍ່ ແລະ ນາຍທຶນຜູກຂາດ ຈຳນວນບໍ່ຫລາຍທີ່ຮັ່ງມີກວ່າໝູ່ ທັງເປັນເຈົ້າຂອງທຶນການເງິນ.

<u>ຄວາມຂັດແຍ່ງທີ່ເປັນປໍລະປັກ</u> ແມ່ນສິດຜົນປະໂຫຍດທີ່ປະນີປະນອມ ບໍ່ໄດ້ຂອງຊົນຊັ້ນ, ກຸ່ມ ແລະ ກຳລັງໃນສັງຄົມ ທີ່ເປັນສັດຕູກັນ ເຊິ່ງຈະຖືກແກ້ໄຂໄດ້ດ້ວຍການຕໍ່ສູ້ຊົນຊັ້ນ.

<u>ຈັກກະພັດນິຍົມ</u> ແມ່ນທຶນນິຍົມຜູກຂາດ, ເປັນໄລຍະສູງສຸດ ແລະ ໄລຍະສຸດທ້າຍຂອງທຶນນິຍົມ, ແມ່ນລະບົບຄອບງຳຂອງບັນດາລັດຈັກກະພັດແລະ ບໍລິສັດຜູກຂາດທີ່ນຳໜ້າຢູ່ໃນພາກສ່ວນໜຶ່ງຂອງໂລກທີ່ມີການຂູດຣີດ.

<u>ຈິດຕະນິຍົມ</u> ແມ່ນກະແສ ໜຶ່ງຢູ່ໃນປັດຊະຍາ ທີ່ຕ້ານກັບວິທະຍາສາດແລະວັດຖຸນິຍົມ. ຈິດຕະນິຍົມຮັບຮູ້ວ່າແມ່ນຈິດໃຈ, ແນວຄິດ, ຈິດສຳນຶກເກີດກ່ອນ, ສ່ວນທຳມະຊາດ, ວັດຖຸ, ການຄົງຕົວແມ່ນເກີດຕາມຫລັງ.

<u>ສະໄໝຂ້າມຜ່ານຈາກທຶນນິຍົມ</u> <u>ໄປສູ່ສັງຄົມນິຍົມ</u> ແມ່ນສະໄໝແຫ່ງການດັດສ້າງສັງຄົມນາຍທຶນໄປເປັນສັງຄົມນິຍົມແບບປະຕິວັດ, ເລີ່ມ ຕົ້ນຈາກການຍາດເອົາອຳນາດທາງດ້ານການເມືອງຂອງຊົນຊັ້ນ ກຳມະກອນ ແລະ ຈະສິ້ນສຸດລົງດ້ວຍການສ້າງພື້ນຖານສັງຄົມນິຍົມ.

<u>ສັງຄົມນິຍົມ</u> ແມ່ນລະບອບສັງຄົມໜຶ່ງ ທີ່ມາສືບປ່ຽນລະບອບທຶນນິຍົມ, ແມ່ນຂັ້ນຕອນທຳອິດຂອງລະບອບກອມມູນິດນິຍົມ. ມັນມີລັກສະນະດັ່ງນີ້: ກຳມະສິດສ່ວນລວມ ຕໍ່ພາຫະນະການຜະລິດ, ບໍ່ມີການຂູດຣີດ ລະຫວ່າງຄົນກັບຄົນ, ມີຄວາມເປັນມິດລະຫວ່າງຊັ້ນຄົນ ແລະ ຊົນຊັ້ນຜູ້ອອກແຮງງານ, ມີອຳນາດທີ່ເປັນຂອງປະຊາຊົນ, ມີການຂະຫຍາຍເສດຖະກິດຢ່າງມີແຜນການ. ເປົ້າໝາຍສຳຄັນຂອງລະບອບສັງຄົມ

ນິຍົມຄື: ການຕອບສະໜອງຄວາມຕ້ອງການທາງດ້ານວັດຖຸແລະຈິດໃຈຂອງປະຊາຊົນທີ່ນັບມື້ນັບເພີ່ມທະວີຂຶ້ນນັ້ນໃຫ້ໄດ້ສົມບູນກວ່າເກົ່າ.

ເສັ້ນທາງທີ່ບໍ່ແມ່ນທຶນນິຍົມ ແມ່ນໄລຍະເວລາອັນຈຳເປັນ ໃນປະຫວັດສາດຂອງການດັດສ້າງແບບປະຊາທິປະໄຕ-ປະຕິວັດຢູ່ໃນບັນດາປະເທດທີ່ມຸ່ງໝາຍກ້າວໄປສູ່ສັງຄົມນິຍົມ ໂດຍບໍ່ຜ່ານໄລຍະແຫ່ງການ ຂະຫຍາຍຕົວແບບທຶນນິຍົມ.

ຊົນຊັ້ນກຳມະກອນ ແມ່ນເປັນຊົນຊັ້ນທີ່ນຳໜ້າ ແລະ ກ້າວໜ້າກວ່າໝູ່ຢູ່ໃນສັງຄົມຍຸກປະຈຸບັນ. ຢູ່ໃນໂລກນາຍທຶນນັ້ນຊົນຊັ້ນກຳມະກອນ ຖືກຕັດແຍກອອກຈາກພາຫະນະການຜະລິດ, ດ້ວຍເຫດນັ້ນ ຈຶ່ງຖືກນາຍທຶນຂູດຮີດ. ຢູ່ໃນປະເທດສັງຄົມນິຍົມ ຊົນຊັ້ນກຳມະກອນຊຶ່ງຢູ່ພາຍໃຕ້ການນຳພາຂອງພັກມາກ-ເລນິນ ແມ່ນເປັນກຳລັງນຳພາທີ່ຈັດຕັ້ງແລະນຳພາການກໍ່ສ້າງສັງຄົມນິຍົມ ແລະ ກອມມູນິດນິຍົມ.

ຊົນຊາດ ແມ່ນກຸ່ມຊົນທີ່ກຳເນີດຂຶ້ນໃນປະຫວັດສາດທີ່ຕັ້ງພູມລຳເນົາ ໃນເຂດດິນແດນໃດໜຶ່ງ ຊຶ່ງມີເງື່ອນໄຂດຳລົງຊີວິດເສດຖະກິດອັນດຽວກັນ, ມີພາສາດຽວ ແລະ ມີວັດທະນະທຳ ແລະ ຂະໜົບທຳນຽມທີ່ເປັນລັກສະນະສະເພາະຂອງເຂົາເຈົ້າ. ຊົນຊາດໄດ້ກໍ່ຮ່າງສ້າງຕົວຂຶ້ນ ພ້ອມກັບການກຳເນີດ ແລະ ຂະຫຍາຍຕົວຂອງທຶນນິຍົມ.

ຍຸກສະໄໝ ແມ່ນໄລຍະເວລາອັນຍາວນານ ຢູ່ໃນປະຫວັດສາດໂລກເຊິ່ງພົວພັນກັບການຂ້າມຜ່ານຂອງມະນຸດຊາດຈາກລະບອບສັງຄົມໜຶ່ງໄປຫາລະບອບສັງຄົມອື່ນ.

ທ່າອຽງສັງຄົມນິຍົມ ແມ່ນທິດທາງໜຶ່ງໃນການດັດສ້າງສັງຄົມ ທີ່ຮັບປະກັນໃຫ້ການປະຕິວັດປົດປ່ອຍຊາດກາຍເປັນການປະຕິວັດສັງຄົມນິຍົມ.

ທຶນນິຍົມ ແມ່ນລະບອບເສດຖະກິດ-ສັງຄົມໜຶ່ງ ຊຶ່ງສ້າງຂຶ້ນບົນ ພື້ນຖານການຍຶດຖືພາຫະນະການຜະລິດເປັນຂອງເອກະຊົນ ແລະຂູດຮີດແຮງງານຮັບຈ້າງ ໂດຍພວກນາຍທຶນ, ເປັນລະບອບທີ່ມາປ່ຽນແທນ ລະບອບສັກດີນາ ແລະ ເກີດກ່ອນລະບອບສັງຄົມນິຍົມ ເຊິ່ງເປັນຂັ້ນທຳອິດຂອງລະບອບກອມມູນິດ.

ທຶນນິຍົມຜູກຂາດແຫ່ງລັດ ແມ່ນໄລຍະສູງສຸດຂອງທຶນນິຍົມ ຊຶ່ງມີການ ເຕົ້າ

ໂຮມອຳນາດຂອງບໍລິສັດຜູກຂາດຈັກກະພັດ ເຂົ້າກັບສະຖາບັນ ແຫ່ງລັດນາຍທຶນ ເປັນຈຸດພິເສດຂອງໄລຍະດັ່ງກ່າວ.

<u>ນະໂຍບາຍການເມືອງ</u> ແມ່ນຂົງເຂດໜຶ່ງຂອງຊີວິດສັງຄົມ ຊຶ່ງຕິດພັນ ກັບການພົວພັນລະຫວ່າງບັນດາຊົນຊັ້ນ, ກຸ່ມຄົນໃນສັງຄົມ, ຊົນຊາດແລະລະຫວ່າງລັດໃນສ່ວນທີ່ພົວພັນກັບອຳນາດລັດ, ລັກສະນະ ແລະເນື້ອໃນແຫ່ງການເຄື່ອນໄຫວຂອງອຳນາດລັດ.

<u>ນາຍທຶນ</u> ແມ່ນຊົນຊັ້ນທີ່ຄອບຄອງຢູ່ໃນສັງຄົມທຶນນິຍົມ, ເປັນຜູ້ຍຶດຖື ພາຫະນະການຜະລິດ ແລະ ຂູດຮີດແຮງງານຮັບຈ້າງ. ແຫລ່ງ ແຫ່ງລາຍໄດ້ຂອງນາຍທຶນແມ່ນມູນຄ່າສ່ວນເກີນ.

<u>ແນວຄິດ</u> ແມ່ນລະບົບທັດສະນະທາງການເມືອງ, ນິຕິທຳ, ສິນທຳ, ສາສະໜາ, ສິລະປະທັດ ແລະ ປັດຊະຍາ. ໃນສັງຄົມທີ່ມີຊົນຊັ້ນ, ແນວຄິດ ກໍ່ມີລັກສະນະຊົນຊັ້ນ.

<u>ແບບແຜນດຳລົງຊີວິດ</u> ແມ່ນລະບົບການເຄື່ອນໄຫວ, ພົວພັນ, ຕິດຕໍ່ ແລະປະພຶດຂອງຄົນ ຊຶ່ງກຳນົດດ້ວຍທາດແທ້ຂອງລະບອບສັງຄົມທີ່ພວມຄົງຕົວຢູ່ນັ້ນ ແລະ ຊຶ່ງສະແດງອອກດ້ວຍແບບວິທີອັນແນ່ນອນໃດໜຶ່ງໃນຂົງເຂດຊີວິດ ການເຄື່ອນໄຫວຕ່າງໆຂອງເຂົາເຈົ້າ ( ການອອກ-ແຮງງານ, ການດຳລົງຊີວິດ, ການພັກຜ່ອນ...)

<u>ແບບແຜນດຳລົງຊີວິດສັງຄົມນິຍົມ</u> ແມ່ນລະບົບການເຄື່ອນໄຫວ, ພົວພັນຕິດຕໍ່ ແລະ ປະພຶດຂອງຄົນທີ່ຖືກກຳນົດດ້ວຍເນື້ອໃນຂອງລັດທິສັງຄົມນິ-ຍົມ ແລະ ແນໃສ່ເພື່ອເຮັດໃຫ້ສັງຄົມ ແລະ ບຸກຄົນໄດ້ຮັບ ການຂະຫຍາຍຕົວ.

<u>ແບບວິທີການຜະລິດ</u> ແມ່ນແບບວິທີການທາງດ້ານປະຫວັດສາດຢ່າງ ໃດຢ່າງໜຶ່ງ ເພື່ອໃຫ້ໄດ້ມາເຊິ່ງຊັບສິນວັດຖຸທີ່ມີຄວາມຈຳເປັນ ສຳລັບການມີຊີວິດຂອງຄົນ ແລະ ສຳລັບການຊົມໃຊ້ສ່ວນບຸກຄົນ ກໍ່ຄືສຳລັບການຜະລິດ. ມັນປະກອບເປັນຄວາມເອກະພາບ ແລະ ກະທົບຊຶ່ງກັນ ແລະ ກັນຢ່າງສັດຈະວິພາກ ລະຫວ່າງກຳລັງການຜະລິດ ແລະການພົວພັນການຜະລິດ. ພາກສ່ວນທີ່ປະຕິວັດ ແລະ ເປັນຕົວຕັ້ງຕົວຕີກວ່າໝູ່ ຢູ່ໃນແບບວິທີການຜະລິດໜຶ່ງໆນັ້ນ ແມ່ນກຳລັງ ການ

ພະລິດ, ການຂະຫຍາຍຕົວຂອງມັນ ພາໃຫ້ມີການປ່ຽນແປງການພົວພັນການພະລິດ.

<u>ບໍລິສັດຜູກຂາດ</u> ແມ່ນ ສະຫະບໍລິສັດອັນໃຫຍ່ໂຕ ຂອງພວກນາຍທຶນ ເຊິ່ງດຳເນີນການກວດກາຜົນພະລິດ ແລະ ການຈຳໜ່າຍຜົນພະລິດ ໃດໜຶ່ງຢູ່ໃນຕະຫລາດ ເພື່ອເປົ້າໝາຍຫາກຳໄລຜູກຂາດ. ແມ່ນແບບແຜນພື້ນຖານແຫ່ງວິສາຫະກິດຂອງນາຍທຶນຢູ່ໃນລະບອບຈັກກະພັດນິຍົມ.

<u>ປະຊາທິປະໄຕ</u> ແມ່ນຮູບການແຫ່ງລັດແບບໜຶ່ງ ທີ່ສ້າງຂຶ້ນບົນການ ຮັບຮູ້ຄວາມຈິງທີ່ວ່າ ອຳນາດເປັນຂອງປະຊາຊົນ, ທັງປະກາດຮັບຮູ້ແລະ ນັບຖືເສລີພາບ ແລະ ສິດທິພົນລະເມືອງ. ໃນລັດທີ່ມີຊົນຊັ້ນ,ປະຊາທິປະໄຕ ກໍມີລັກສະນະຊົນຊັ້ນ.

<u>ປັດໄຈພາວະວິໄສຂອງປະຫວັດສາດ</u> ແມ່ນການເຄື່ອນໄຫວຂອງເຈົ້າກຳມະຫາຊົນ, ຊົນຊັ້ນ, ພັກ, ບຸກຄົນ ) ຊຶ່ງແນໃສ່ໃຫ້ມີການປ່ຽນແປງ, ການຂະຫຍາຍຫລືການຮັກສາບັນດາເງື່ອນໄຂພາວະວິໄສແຫ່ງສັງຄົມ

<u>ພະເດັດການຂອງຊົນຊັ້ນກຳມາຊີບ</u> ແມ່ນອຳນາດຂອງຊົນຊັ້ນກຳມະກອນ ທີ່ໄດ້ຮັບການສ້າງຕັ້ງຂຶ້ນ ຍ້ອນໄຊຊະນະຂອງການປະຕິວັດສັງຄົມນິຍົມ ເປັນສິ່ງຈຳເປັນໃນປະຫວັດສາດສຳລັບການລົບລ້າງການຂູດຮີດ ລະຫວ່າງຄົນກັບຄົນ ແລະ ພູກງຮູບການແຫ່ງແອກກົດຂື່ທາງສັງຄົມແລະທາງຊາດ ແລະ ສຳລັບການກໍ່ສ້າງສັງຄົມນິຍົມ.

<u>ພະລິດຕະພັນລວມຍອດຂອງສັງຄົມ</u> ແມ່ນຍອດພະລິດພັນ ແລະ ຜົນພະລິດທັງໝົດທີ່ສັງຄົມພະລິດອອກໃນໄລຍະເວລາໃດໜຶ່ງ ( ຕາມທຳມະດາແລ້ວແມ່ນໄລ່ເປັນປີ ).

<u>ໄພເງິນເຟີ້</u> ແມ່ນການລົ້ນເຫລືອຂອງເງິນເຈ້ຍຢູ່ໃນການໝູນວຽນ ຍ້ອນການຈຳໜ່າຍເງິນເຈ້ຍອອກເຫລືອປະມານ ເຊິ່ງພາໃຫ້ລາຄາ ສິນຄ້າສູງຂຶ້ນ ແລະ ເງິນເດືອນຕົວຈິງຕົກຕ່ຳລົງ.

<u>ລະດັບຊີວິດການເປັນຢູ່</u> ແມ່ນລະດັບການຕອບສະໜອງຄວາມຮຽກຮ້ອງ - ຕ້ອງການທາງດ້ານວັດຖຸ ແລະ ຈິດໃຈຂອງຄົນຫລືສັງຄົມຊຶ່ງສາມາດວັດແທກເປັນຈຳນວນໄດ້ ໂດຍກົງຜ່ານຫົວໜ່ວຍການເງິນຫລື ຫົວ

ໜ່ວຍວັດຖຸ.

ລະບອບສັກດີນາ ແມ່ນລະບອບເສດຖະກິດ-ສັງຄົມໜຶ່ງ ທີ່ສືບປ່ຽນ ລະ
ບອບຂ້າທາດ ຫຼືສະຫະຊີບປະຖົມບູຮານ ແລະ ເປັນຜູ້ໃຫ້ກຳເນີດ-
ທຶນນິຍົມ. ກຳມະສິດຂອງສັກດີນາ, ເຈົ້າທີ່ດິນຕໍ່ດິນ ແລະ ກຳມະ
ສິດບໍ່ສົມບູນຕໍ່ຊາວນາແມ່ນທາດແທ້ຂອງລະບອບສັກດີນາ. ຮ່ອງຮອຍ
ເສດເຫຼືອຂອງການພົວພັນແບບສັກດີນາຢູ່ໃນບັນດາປະເທດພວມພັດ
ທະນາແມ່ນເປັນອຸປະສັກກີດຂວາງຄວາມກ້າວໜ້າຂອງບັນດາປະຊາ
ຊາດເຫຼົ່ານັ້ນ, ຖ່ວງດຶງການຕໍ່ສູ້ເພື່ອຟື້ນຟູຊາດ ແລະ ຄວາມເປັນ
ເອກະລາດທາງເສດຖະກິດຂອງເຂົາເຈົ້າ.

ລະບອບເສດຖະກິດ-ສັງຄົມ ແມ່ນຂັ້ນຕອນແຫ່ງການຂະຫຍາຍຕົວຂອງສັງ
ຄົມ ຊຶ່ງມີຈຸດພິເສດຢູ່ໃນແບບວິທີການຜະລິດ, ລະບອບ ການເມືອງ
ແລະ ບັນດາຮູບການຈິດສຳນຶກສັງຄົມຂອງມັນເອງ. ປະຫວັດ ສາດ
ຂອງມວນມະນຸດ ແມ່ນການສືບປ່ຽນລະບອບຕ່າງໆຢ່າງຕໍ່ເນື່ອງກັນຄື:
ລະບອບສະຫະຊີບປະຖົມບູຮານ, ຂ້າທາດ, ສັກດີນາ,ນາຍທຶນແລະ
ກອມມູນິດ.

ລັດທິແກ້ ແມ່ນການດັດແກ້ຫຼັກມູນລັດທິມາກ-ເລນິນ ຢ່າງຝືນວິທະຍາສາດ.
ລັດທິແກ້ "ອຽງຂວາ" ແມ່ນສືບປ່ຽນລັດທິມາກ-ເລນິນ ດ້ວຍທິດສະ
ນະແບບປະຕິຮູບນາຍທຶນ, ລັດທິແກ້ "ອຽງຊ້າຍ" ແມ່ນປ່ຽນ ແທນ
ລັດທິມາກ-ເລນິນ ດ້ວຍແນວຄິດອະນາທິປະໄຕທີ່ມີລັກສະນະປະຕິວັດ
"ເໜືອຂັ້ນ".

ລັດທິຊຸນເສິກ ແມ່ນນະໂຍບາຍການເມືອງແຫ່ງການເພີ່ມທະວີແສນຍານຸພາບ
ທາງທະຫານຂອງລັດຈັກກະພັດເພື່ອເປົ້າໝາຍກະກຽມສົງຄາມແລະ
ດັບມອດການຕໍ່ສູ້ຂອງຊາວຜູ້ອອກແຮງງານພາຍໃນປະເທດ.

ລັດທິສັງຄົມນິຍົມແບບໄຟຝັນລອຍເມກ ແມ່ນທິດທາງໜຶ່ງ ຢູ່ໃນຄວາມ ນຶກ
ຄິດຂອງສັງຄົມ ຊຶ່ງໄດ້ສະເໜີອຸດົມຄະຕິຂອງລະບອບສັງຄົມໜຶ່ງ ທີ່
ສ້າງຂຶ້ນ ບົນພື້ນຖານຄວາມສະເໝີພາບ, ກຳມະສິດລວມໝູ່ ແລະ
ທຸກຄົນມີໜ້າທີ່ອອກແຮງງານ.

ລັດທິສາກົນນິຍົມ ແມ່ນຄວາມສາມັກຄີສາກົນຂອງຊົນຊັ້ນກຳມະກອນແລະນັກ

ກອມມູນິດຂອງທຸກໆປະເທດຢູ່ໃນການຕໍ່ສູ້ເພື່ອເປົ້າໝາຍລວມ, ແມ່ນການສະໜັບສະໜູນຂອງເຂົາເຈົ້າໃຫ້ແກ່ການຕໍ່ສູ້ຂອງບັນດາປະຊາຊາດເພື່ອການປົດປ່ອຍຊາດ ແລະ ເພື່ອຄວາມກ້າວໜ້າທາງສັງຄົມ.

ລັດທິສວຍໂອກາດ ແມ່ນທິດສະດີ ແລະ ພຶດຕິກຳແບບປະນີປະນອມ ແລະ ການຮ່ວມມືລະຫວ່າງກຳມະກອນກັບນາຍທຶນ ຊຶ່ງໄດ້ຮັບການ ແຜ່ຂະຫຍາຍຢູ່ໃນການເຄື່ອນໄຫວຂອງບັນດາພັກ ແລະ ອົງການ ກຳມະບານທີ່ຍຶດຖືການປະຕິຮູບ. ຢູ່ໃນຂະບວນກຳມະກອນທິດສະດີນີ້ ແມ່ນຕ້ານຍັນກັບແນວທາງປະຕິວັດ.

ລັດທິຊາດນິຍົມ ແມ່ນນະໂຍບາຍການເມືອງ ແລະ ແນວຄິດ ຂອງນາຍທຶນ ແລະ ນາຍທຶນນ້ອຍ ທີ່ພົວພັນກັບແນວຄິດຖືຊາດຕົນດີເລີດ ແລະ ພິເສດກວ່າໝູ່ ເປັນການຕ້ານກັບສິດຜົນປະໂຫຍດຂອງຊາດຕົນ ແລະ ຊາດອື່ນໆ.

ລັດທິຕ້ານກອມມູນິດ ແມ່ນທິດທາງອັນສຳຄັນ ຢູ່ໃນແນວຄິດ ແລະ ນະໂຍບາຍການເມືອງຂອງລັດທິຈັກກະພັດໃນການຕໍ່ສູ້ຕ້ານກັບກຳລັງປະຕິວັດ ແລະ ກຳລັງທີ່ກ້າວໜ້າ.

ລັດທິລ່າຫົວເມືອງຂຶ້ນແບບໃໝ່ ແມ່ນລະບົບການພົວພັນອັນບໍ່ສະເໝີພາບທີ່ລັດຈັກກະພັດໃຊ້ບັງຄັບບັນດາປະເທດອະດີດຫົວເມືອງຂຶ້ນ ແລະເຄິ່ງຫົວເມືອງຂຶ້ນ ເພື່ອຮັບປະກັນການກອບໂກຍທາງດ້ານເສດຖະກິດແລະການເມືອງແບບທາງອ້ອມ.

ລັດທິວັດຖຸນິຍົມ ແມ່ນທິດທາງວິທະຍາສາດຢູ່ໃນປັດຊະຍາ. ກົງກັນຂ້າມກັບລັດທິຈິດຕະນິຍົມນັ້ນ, ລັດທິວັດຖຸນິຍົມ ໄດ້ຢືນຢັນວ່າ ຕາມທຳມະຊາດຂອງມັນແລ້ວ ໂລກມີລັກສະນະເປັນວັດຖຸ, ໂລກດຳລົງຄົງຕົວຢູ່ໂດຍບໍ່ຂຶ້ນກັບຈິດໃຈ ຂອງຄົນ, ຄົນເຮົາ ສາມາດຮັບຮູ້ ໂລກໄດ້, ວັດຖຸແມ່ນເກີດກ່ອນ, ສ່ວນຈິດໃຈ ແມ່ນເກີດຕາມຫລັງ.

ລາຍໄດ້ແຫ່ງຊາດ ແມ່ນຄຸນຄ່າສົດ ( ເຊິ່ງບໍ່ນັບການໃຊ້ຈ່າຍດ້ານ ວັດຖຸເຂົ້າໃນການຜະລິດມັນນັ້ນ ) ທີ່ຖືກສ້າງຂຶ້ນມາອີກໃນຮອບໜຶ່ງປີ ຢູ່ໃນຂົງເຂດການຜະລິດວັດຖຸສິ່ງຂອງ.

ວິກິດການສິ່ງແວດລ້ອມ ແມ່ນການທີ່ສິ່ງແວດລ້ອມ ຕົກຢູ່ໃນສະພາບອັນຕະລາຍ ເຊິ່ງຂຶ້ນຢູ່ກັບການດຳລົງຊີວິດ ຂອງມວນມະນຸດ, ເປັນຜົນ ທີ່ສືບເນື່ອງມາຈາກການນຳໃຊ້ຊັບພະຍາກອນທຳມະຊາດຕົ້ນຕໍຢ່າງບໍ່ມີຄວາມຮັບຜິດຊອບ ກໍ່ຄື ການເຮັດໃຫ້ສິ່ງແວດລ້ອມ ເປື້ອນເປິ ຢູ່ໃນເງື່ອນໄຂເສດຖະກິດແຫ່ງທຶນນິຍົມ.

ວິກິດການຂອງທຶນນິຍົມ ແມ່ນຄວາມຮ້າຍແຮງຂອງການຂັດແຍ່ງ ທາງດ້ານເສດຖະກິດ, ສັງຄົມ, ການເມືອງ ທີ່ເປັນລັກສະນະສະເພາະຂອງທຶນນິຍົມ.

ອະທິປະໄຕແຫ່ງລັດ ແມ່ນຄວາມເປັນເອກະລາດຂອງລັດຢູ່ໃນກິດຈະການ-ພາຍໃນ ແລະ ພາຍນອກ.

## ສາລະບານ


ໜ້າ

ຄຳນຳ .................................... 3

ບົດທີ ໑. ລັດທິສັງຄົມນິຍົມແບບໄຝ່ຝັນລອຍເມກ ແມ່ນການຊອກຄົ້ນຫາຄວາມຍຸດຕິທຳ ........................ 5

ນັກສັງຄົມນິຍົມຜູ້ທຳອິດໄຝ່ຝັນເຖິງຫຍັງ ? ........ 6

ຜູ້ເປີດສາກສັງຄົມໃໝ່ ........................ 17

ເປັນຫຍັງ ເຂົາເຈົ້າຈຶ່ງເປັນນັກໄຝ່ຝັນລອຍເມກ .... 21

ບົດທີ ໒. ການສ້າງລັດທິກອມມູນິດວິທະຍາສາດ ............ 25

ຈາກຄວາມໄຝ່ຝັນລອຍເມກ ກ້າວໄປສູ່ວິທະຍາສາດ .. 27

ຈະກໍ່ສ້າງສັງຄົມໃໝ່ແນວໃດ ? ................ 34

ຫລັກທິດສະດີທີ່ມີລັກສະນະສາກົນ ............ 39

ເຄື່ອງມືຂອງການດັດສ້າງໂລກແບບປະຕິວັດ ....... 42

ບົດທີ ໓. ເນື້ອໃນພື້ນຖານຂອງຍຸກສະໄໝປະຈຸບັນ .......... 46

ຍຸກສະໄໝແມ່ນຫຍັງ ? ........................ 48

ແບບຢ່າງທີ່ສ່ອງແສງເຖິງແນວຄິດນາຍທຶນ ........ 53

ບັນດາຈຸດພິເສດຂອງຍຸກສະໄໝປະຈຸບັນ .......... 57

ບົດທີ ໔. ທິດສະດີມາກ-ເລນິນ ກ່ຽວກັບການປະຕິວັດສັງຄົມນິຍົມ. 63

ການປະຕິວັດທາງສັງຄົມ ແມ່ນສິ່ງທີ່ຫລີກລ່ຽງບໍ່ໄດ້ ທາງປະຫວັດສາດ ........................ 64

ການປະຕິວັດສັງຄົມນິຍົມ ແມ່ນການປະຕິວັດທາງສັງຄົມແບບໜຶ່ງ ........................ 66

ໜ້າ


ລັກສະນະກິດເກນ ອັນເປັນພື້ນຖານຂອງການປະຕິວັດ
ສັງຄົມນິຍົມ ........................ 69
ບົດທີ ໕. ບັນດາຈຸດພິເສດຂອງລະບອບກອມມູນິດ .......... 79
ຄວາມສືວໄລໃນລະດັບສູງສຸດ .............. 80
ການກໍ່ຕັ້ງ ແລະ ຂະຫຍາຍຕົວຂອງສັງຄົມໃໝ່ ..... 86
ບົດທີ ໖. ສະໄໝຂ້າມຜ່ານຈາກທຶນນິຍົມ ຂຶ້ນໄປສູ່ລັດທິສັງຄົມນິຍົມ 88
ສະໄໝຂ້າມຜ່ານ ເປັນສິ່ງຈຳເປັນ ............ 88
ບັນດາຈຸດພິເສດຂອງການກໍ່ສ້າງສັງຄົມນິຍົມ ....... 91
ອຳນາດການປົກຄອງຂອງຊາວຜູ້ອອກແຮງງານ ແລະຮູບ
ການຂອງມັນ ........................ 93
ບົດທີ ໗. ບັນດາຂັ້ນຕອນຢູ່ໃນການຂະຫຍາຍຕົວຂອງລະບອບສັງຄົມ
ນິຍົມ ........................... 99
ການກໍ່ສ້າງພື້ນຖານຂອງລະບອບສັງຄົມນິຍົມ ....... 99
ການບູລະນະລະບອບສັງຄົມນິຍົມ ............. 101
ການເລັ່ງລັດພັດທະນາເສດຖະກິດ-ສັງຄົມ ແມ່ນເສັ້ນ
ທາງແຫ່ງການບູລະນະລະບອບສັງຄົມນິຍົມ......... 107
ບົດທີ ໘. ແບບແຜນດຳລົງຊີວິດສັງຄົມນິຍົມ.......... 112
ທຸກສິ່ງທຸກຢ່າງແມ່ນເພື່ອມະນຸດ ............ 113
ໂລກະທັດ ແລະ ແບບແຜນດຳລົງຊີວິດ .......... 113
ບົດທີ ໙. ລະບົບສັງຄົມນິຍົມໂລກ .............. 117
ການພົວພັນສາກົນແບບໃໝ່ ................ 117
ການຮ່ວມມືຢ່າງສະເໝີພາບ .............. 122
ການພົວພັນເຊິ່ງກັນ ແລະ ກັນລະຫວ່າງສິ່ງທີ່ມີລັກສະນະ
ສະເພາະຊາດ ແລະ ສິ່ງທີ່ມີລັກສະນະສາກົນ ...... 130
ບົດທີ ໑໐. ການຕໍ່ສູ້ຊຸ້ນຊຸ້ນຢູ່ໃນປ້ອມປາການຂອງຈັກກະພັດນິຍົມ .. 134
ລະບອບທຶນນິຍົມໃນວັນນີ້ ............... 134
ຕ້ານການຜູກຂາດ, ເພື່ອສັນຕິພາບ ແລະ ປະຊາທິປະ

ໜ້າ


ໄຕ ........................... 139

ຕໍ່ສູ້ຢູ່ໃນຖຸ້ມແຖວດຽວກັນ .................. 144

ບົດທີ ໑໑. ການປົດປ່ອຍບັນດາປະຊາຊາດທີ່ຖືກກົດຂີ່ທາງຊາດ ແລະ

ທາງສັງຄົມ ........................ 151

ເພື່ອເອກະລາດ ແລະ ອະທິປະໄຕ ............ 151

ໃຜເປັນຜູ້ນຳພາ ? .................... 157

"ການຂະຫຍາຍຕົວແບບທຶນນິຍົມ" ຕົກຢູ່ໃນສະພາບ

ຈົນຕາແຈ ......................... 161

ເສັ້ນທາງໄປສູ່ສັງຄົມນິຍົມ ................ 165

ຂໍ້ສະຫລຸບ ........................... 169

ບົດອະທິບາຍສັບ ........................ 172

ພື້ນຖານ
**ຄວາມຮູ້** ທາງດ້ານສັງຄົມ-ການເມືອງ

ໃນປື້ມຊຸດ "ພື້ນຖານຄວາມຮູ້ທາງດ້ານສັງຄົມ-ການເມືອງ" ທີ່ສຳນັກພິມ "ກ້າວໜ້າ" ພິມຈຳໜ່າຍອອກນີ້ ໂດຍອີງໃສ່ທັດສະນະຂອງລັດທິມາກ ຈະໄດ້ເຜີຍໃຫ້ເຫັນເນື້ອໃນຂອງວິທະຍາສາດຕ່າງໆ ເຊັ່ນ ປັດຊະຍາ, ເສດຖະສາດການເມືອງ, ລັດທິກອມມູນິດວິທະຍາສາດ.

ບັນດາຜູ້ແຕ່ງປື້ມ ໄດ້ໃຊ້ຮູບການ ທີ່ເຂົ້າໃຈໄດ້ງ່າຍ ນຳເອົາຜູ້ອ່ານເຂົ້າສູ່ສິ່ງທີ່ຍັງເປັນບັນຫາກ່ຽວກັບ ລັດທິກອມມູນິດວິທະຍາສາດ, ຊີ້ໃຫ້ເຫັນ ຄວາມສຳຄັນ ແລະ ຄວາມສັບສົນ ຂອງບັນຫາທີ່ຖືກນຳມາພິຈາລະນາ, ໃຫ້ການແນະນຳລວມໆ ກ່ຽວກັບ ວິທະຍາສາດຂະແໜງນີ້, ກ່ຽວກັບວິທີການ ແລະ ພາຫະນະ ໃນການເຊື່ອມຊຶມເອົາມັນ.

ຢູ່ໃນປື້ມຫົວນີ້ມີຄວາມຮູ້ພື້ນຖານອັນຈຳເປັນເພື່ອໃຫ້ຮຽນຮູ້ລັດທິກອມມູນິດວິທະຍາສາດ ໃນຈຸດປະສົງເພື່ອຢາກເຂົ້າໃຈເຫດການ ຢູ່ໃນຊີວິດສາກົນ, ມີຂໍ້ຄິດກ່ຽວກັບບັນຫາອັນກວມລວມ ຢູ່ໃນການຂະຫຍາຍຕົວຂອງສັງຄົມຍຸກປະຈຸບັນ, ຊຶ່ງພົວພັນເຖິງສະພາບ ແລະ ແນວຂະຫຍາຍຕົວຂອງການສູ້ຢັນກັນ ລະຫວ່າງສອງລະບົບຂອງໂລກ.

ISBN 5-01-000967-6